# TA9136: ນະໂຍບາຍສົ່ງເສີມເສດຖະກິດລາວ ເພື່ອເພີ່ມຜະລິດຕະພາບທຸລະກິດ ແລະ ການຈ້າງງານ

## ບົດປະເມີນຂະແໜງການຄ້າ ແລະ ການລົງທຶນ

*ສາລະບານ*


***ການຮັບຮູ້***........................................................................................................ **1**

***ພາກສະເໜີ***...................................................................................................... **3**

***ການຟື້ນຕົວ***...................................................................................................... **4**

ຜົນສຳເລັດໄວ .......................................................................................................... 6

***ໄລຍະຟື້ນຟູ***...................................................................................................... **11**

1) ການສ້າງຄວາມເຂັ້ມແຂງໃຫ້ແກ່ບັນດາຫົວໜ່ວຍທຸລະກິດພາຍໃນ........................................ 12

2) ການສ້າງຄວາມໄດ້ປຽບ............................................................................................ 17

3) ການສ້າງສະພາບແວດລ້ອມເພື່ອສົ່ງເສີມທຸລະກິດ............................................................ 22

***ໄລຍະການຂະຫຍາຍຕົວ***........................................................................................ **28**

1. ການສວຍໃຊ້ໂອກາດທາງການຄ້າ ແລະ ການລົງທຶນ........................................................ 28

2. ການສືບຕໍ່ປະຕິບັດຕາມແຜນທີ່ຜ່ານມາ........................................................................ 34

3. ການປັບປຸງ-ຜັນຂະຫຍາຍຄຳຄິດເຫັນຕ່າງໆຮ່ວມກັບພາກເອກະຊົນ, ຜູ້ໃຫ້ການຊ່ວຍເຫຼືອດ້ານທຶນຮອນ ແລະ ພາກສ່ວນຜູ້ສ້າງນະໂຍບາຍ..................................................................................... 36

4. ການຮ່ວມມືດ້ານນະໂຍບາຍ........................................................................................ 38

***ແຜນວາດຄວາມສຳເລັດ***........................................................................................ **40**

***ເອກະສານຊ້ອນທ້າຍ 1: ແຜນວາດຄຳແນະນຳ***.......................................................... **42**

***ເອກະສານຊ້ອນທ້າຍ 2: ແຜນວາດຄຳແນະນຳໂດຍແບ່ງຕາມກະຊວງ***................................ **43**

***ເອກະສານຊ້ອນທ້າຍ 3: ແຜນຊີ້ນຳທຸລະກິດກາເຟຂອງກະຊວງແຜນການ ແລະ ການລົງທຶນ***......... **44**

***ເອກະສານຊ້ອນທ້າຍ 4: ກໍລະນີສຶກສາກ່ຽວກັບການສົ່ງເສີມການຂະຫຍາຍຕົວຂອງຈຸນລະວິຫາທະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງໃນອຸດສາຫະກຳກະສິກຳປອດສານພິດ***................................ **45**

***ເອກະສານຊ້ອນທ້າຍ 5: ແຜນພັດທະນາວິສາຫະກິດໂດຍກະຊວງອຸດສາຫະກ□າ ແລະ ການຄ້າ***..... **36**

***ເອກະສານຊ້ອນທ້າຍ 6: ການປະສານງານ ລະຫວ່າງກະຊວງອຸດສາຫະກຳ ແລະ ການຄ້າ ແລະ ກະຊວງແຜນການ ແລະ ການລົງທຶນ***........................................................................................ **36**

***ເອກະສານຄັດຕິດ A:***.............................................................................................. **37**

## *ການຮັບຮູ້*

*ພວກເຮົາ ຂໍສະແດງຄວາມຂອບໃຈເປັນຢ່າງສູງມາຍັງບັນດາອົງການຈັດຕັ້ງ, ສະພາການຄ້າ ແລະ ທຸລະກິດ ສໍາລັບການປະກອບສ່ວນ, ຖ້າບໍ່ມີສ່ວນຮ່ວມຈາກຂະແໜງການພວກທ່ານ ບົດປະເມີນຜົນສະບັບນີ້ ກໍບໍ່ສາມາດທີ່ຈະຂຽນໃຫ້ສໍາເລັດໄດ້.*

**<u>ບັນດາກະຊວງ</u>**

**ກະຊວງແຜນການ ແລະ ການລົງທຶນ (ກະຊວງ ຜທ)**

ກົມແຜນການ

ກົມສົ່ງເສີມການລົງທຶນ

ຫ້ອງການຄຸ້ມຄອງ ແລະ ສົ່ງເສີມເຂດເສດຖະກິດພິເສດ (SEZO)

**ກະຊວງກະສິກໍາ ແລະ ປ່າໄມ້**

ພະແນກຄຸ້ມຄອງກະສິກໍາ

ພະແນກແຜນການ ແລະ ການຮ່ວມມື

**ກະຊວງການເງິນ**

ກົມພາສີ

**ກະຊວງແຮງງານ ແລະ ສະຫວັດດີການສັງຄົມ (MLSW)**

ກົມພັດທະນາສີມືແຮງງານ

**ກະຊວງອຸດສາຫະກໍາ ແລະ ການຄ້າ (ກະຊວງ ອຄ)**

ກົມນະໂຍບາຍການຄ້າຕ່າງປະເທດ

ກົມການຄ້າພາຍໃນ

ກົມອຸດສາຫະກໍາ ແລະ ຫັດຖະກໍາ

ກົມແຜນການ ແລະ ການຮ່ວມມື

ກົມສົ່ງເສີມການຄ້າ

ກົມສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ

- ພະແນກພັດທະນາວິສາຫະກິດ
- ພະແນກສັງລວມ

ກົມການນໍາເຂົ້າ ແລະ ສົ່ງອອກ

ພະແນກອໍານວຍຄວາມສະດວກທາງດ້ານການຄ້າ

**ກະຊວງໂຍທາທິການ ແລະ ຂົນສົ່ງ**

ກົມຂົນສົ່ງ

**<u>ທະນາຄານ</u>**

ສະມາຄົມການເງິນຈຸລະພາກລາວ

**<u>ອົງການ/ສະຖາບັນເສດຖະກິດ</u>**

ກົມສະຖິຕິແຫ່ງຊາດລາວ

ສະຖາບັນຄົ້ນຄວ້າເສດຖະກິດອຸດສາຫະກໍາ ແລະ ການຄ້າ

ສະຖາບັນຄົ້ນຄ້ວາເສດຖະກິດແຫ່ງຊາດ

**<u>ສະພາການຄ້າ</u>**

ສະພາການຄ້າອິດສະຕາລີ ປະຈໍາ ລາວ

ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ, ມະຫາວິທະຍາໄລແຫ່ງຊາດລາວ

ສະພາການຄ້າ ແລະ ອຸດສາຫະກໍາ ຍີປຸ່ນ ທີ່ວຽງຈັນ (JCCIV)

ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ (LNCCI)

**<u>ບັນດາບໍລິສັດເອກະຊົນ</u>**

Emerging Markets Consulting

ກຸ່ມບໍລິສັດ ອິນທິຣາ

**TA9136:** ນະໂຍບາຍສົ່ງເສີມເສດຖະກິດລາວ ເພື່ອເພີ່ມຜະລິດຕະພາບທຸລະກິດ ແລະ ການຈ້າງງານ

ບົດປະເມີນຂະແໜງການຄ້າ ແລະ ການລົງທຶນ

## *ພາກສະເໜີ*

ຄ້າຍໆກັບຫລາຍປະເທດໃນໂລກ, ສປປ ລາວ ຖືກຕັດຂາດໂດຍລະດັບຜົນກະທົບຂອງວິກິດ ໂຄວິດ 19 ແລະ ສົ່ງຜົນຕໍ່ເສດຖະກິດ-ສັງຄົມ. ສິ່ງທີ່ຮີບດ່ວນທີ່ສຸດ ແມ່ນການຈັດຕັ້ງປະຕິບັດຜົນກະທົບຂອງໂຄວິດ 19 ຕ້ອງໄດ້ຮັບການຈັດຕັ້ງໂດຍທັນທີ. ຫລັງຈາກນັ້ນ, ຈຶ່ງສາມາດປະເມີນຜົນກະທົບຂອງໂຄວິດ 19 ທີ່ສົ່ງຜົນກະທົບຕໍ່ກັບລະດັບບູລິມະສິດໃນຂະໜາດຈຸລະພາກ, ຊຶ່ງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ 8 (2016-2020) ກໍໃກ້ຈະສິ້ນສຸດ ແລະ ກໍຈະເລີ່ມສ້າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ 9. ໃນຂັ້ນພື້ນຖານທີ່ສຸດ, ສປປ ລາວ ຕ້ອງສືບຕໍ່ເດີນໜ້າໃນວຽກງານການຫລຸດພົ້ນອອກຈາກສະຖານະຄວາມດ້ອຍພັດທະນາໃນປີ 2024 ໃນຂະນະທີ່ ສປປ ລາວ ສ້າງເສດຖະກິດຄືນໃໝ່ຫລັງໂຄວິດ 19. ໝາຍຄວາມວ່າ ສປປ ລາວ ຕ້ອງປະຕິບັດຕາມຂັ້ນຕອນທີ່ມີຢູ່ ແລະ ສຸມໃສ່ການຟື້ນຟູໃນໄລຍະທັນທີ (6ເດືອນ). ຄຽງຄູ່ກັນນັ້ນ, ກໍຍັງຈະວາງພື້ນຖານທີ່ເຂັ້ມແຂງ ເພື່ອເສີມສ້າງຄວາມຫຍືດຫຍຸ່ນພາຍໃນ (6ເດືອນ ຫາ 2ປີ), ແລະ ດຳເນີນການຕໍ່ໄປເພື່ອບັນລຸການຂະຫຍາຍຕົວທີ່ຍືນຍົງໄລຍະຍາວ (2ປີ ແລະ ຫລາຍກວ່ານັ້ນ). ຜົນສຳເລັດດັ່ງກ່າວ ແມ່ນຮຽກຮ້ອງການມີສ່ວນຮ່ວມຂອງຫລາຍກະຊວງ, ທຸກກະຊວງໃນຂົງເຂດລັດຖະບານ.




ກ່ອນໜ້ານີ້, ການຊ່ວຍເຫລືອດ້ານວິຊາການຂອງທະນາຄານພັດທະນາອາຊີ ໃນວຽກງານນະໂຍບາຍເສດຖະກິດເພື່ອເພີ່ມຜະລິດຕະພາບການຜະລິດ ແລະ ວຽກເຮັດງານທຳ (2018) ໄດ້ນຳສະເໜີໃນການປັບປຸງຂົງເຂດນະໂຍບາຍການລົງທຶນຂອງ ສປປ ລາວ ເພື່ອຂະຫຍາຍກິດຈະການເສດຖະກິດທີ່ບໍ່ແມ່ນຂະແໜງຊັບພະຍາກອນທຳມະຊາດ. ສ່ວນນຶ່ງໃນໄລຍະທີ 1, ບົດລາຍງານຜົນໄດ້ຮັບທີ 1 ໄດ້ລວມເອົານະໂຍບາຍການລົງທຶນຂອງພາກເອກະຊົນທີ່ມີຢູ່ ແລະ ແຮງຈູງໃຈ ລວມທັງລະບຸການຈັດຕັ້ງປະຕິບັດທີ່ດີໃນການສົ່ງເສີມການລົງທຶນໃນ ສປປ ລາວ. ໃນໄລຍະທີ 2, ບົດປະເມີນຂະແໜງ ການຄ້າ ແລະ ການລົງທຶນຂອງທະນາຄານພັດທະນາອາຊີ ໂດຍພື້ນຖານໄດ້ລວມ

ເອົາລະດັບການຂະຫຍາຍຕົວທີ່ມີຢູ່, ການລະບຸສິ່ງທ້າທາຍ ແລະ ກໍານົດແຜນອາດຂໍ້ສະເໜີລວມທັງການເພີ່ມປະສິດທິພາບດ້ານນະໂຍບາຍການປະສານງານລະຫວ່າງ ກະຊວງແຜນການ ແລະ ການລົງທຶນ ແລະ ກະຊວງອຸດສາຫະກໍາ ແລະ ການຄ້າ.

## *ການຟື້ນຕົວ*

ຜົນກະທົບຂອງໂຄວິດ 19, ທະນາຄານໂລກ ໄດ້ມີການດັດປັບການຄາດຄະເນອັດຕາການເພີ່ມຂື້ນຂອງເສດຖະກິດ ສປປ ລາວ ໃນປີ 2020 ໃນເບື້ອງຕົ້ນຈາກ 6,2% ທີ່ກໍານົດໃນປີ 2019 ມາເປັນ 3,5%, ແຕ່ຕໍ່ມາໄດ້ມີການຫລຸດອັດຕາການຂະຫຍາຍຕົວມາເປັນ 1% ແລະ ຄາດວ່າແນວໂນ້ມການຂະຫຍາຍຕົວຈະຫລຸດລົງ 1,8% ໃນເດືອນມິຖຸນາ 2020. ບົດລາຍງານການສໍາຫລວດປີ 2020 ຂອງສະພາການຄ້າສະຫະພາບເອີຣົບຢູ່ລາວ ຄາດວ່າຂາດລາຍຮັບຫລາຍກວ່າ 50% ໃນການສໍາຫລວດ 7 ໃນ 10 ຜູ້ທີ່ຖືກສອບຖາມ; ເພີ່ມເຕີມ 4 ຫາ 6 ເດືອນ ຄາດວ່າເປັນຊ່ວງທີ່ຈະຟື້ນຕົວ. ນອກຈາກນີ້, ເສດຖະກິດໂລກ ແລະ ພາກພື້ນທີ່ບໍ່ແນ່ນອນ ກໍສາມາດຄາດໄດ້ວ່າລາຍຈ່າຍຈະຫລຸດລົງຮອດ 50% ແລະ ຫລຸດການໄຫລເຂົ້າຂອງການລົງທຶນ ເນື່ອງຈາກທຶນຂອງຖົງເງິນ.

ຂະແໜງທີ່ຖືກລະບຸໄດ້ຮັບຜົນກະທົບໜັກ ໃນເບື້ອງຕົ້ນແມ່ນຂະແໜງທີ່ມີແຮງຈູງໃຈດ້ານແຮງງານທີ່ຕິດພັນກັບຕ່ອງໂສ້ມູນຄ່າໂລກ. ອຸດສາຫະກໍາການທ່ອງທ່ຽວ, ຊຶ່ງກວມເອົາ 12% ຂອງຍອດຜະລິດຕະພັນພາຍໃນ ແລະ 10% ຂອງວຽກເຮັດງານທໍາໃນປີ 2018 ຖືກກະທົບທັນທີຜົນມາຈາກການຈໍາກັດການເດີນທາງຂອງໂຄວິດ 19. ຄວາມຕ້ອງການດ້ານການທ່ອງທ່ຽວ ແລະ ມາດຕະການຈໍາກັດພາຍໃນປະເທດ ໄດ້ນໍາໄປສູ່ຜົນກະທົບຕໍ່ຂະແໜງທີ່ໄດ້ຮັບການສະໜັບສະໜູນຈາກການທ່ອງທ່ຽວ ເຊັ່ນ ອຸດສາຫະກໍາໂຮງແຮມ, ຮ້ານອາຫານ ແລະ ເຄື່ອງດື່ມ. ອຸດສາຫະກໍາການຜະລິດ ກໍໄດ້ຮັບຜົນກະທົບເຊັ່ນກັນຈາກການໂຈະຂອງຕ່ອງໂສ້ສາກົນໃນການສະໜອງນໍາເຂົ້າວັດຖຸດິບທີ່ຈໍາເປັນ ແລະ ການທິດຕົວພ້ອມກັນຂອງພາກເອກະຊົນ ແລະ ຄວາມຕ້ອງການຈາກພາຍນອກ. ສຸດທ້າຍແລ້ວ, ການປິດພາຍໃນປະເທດຈາກເດືອນເມສາ ຫາ ພຶດສະພາ 2020 ແລະ ການປິດຊາຍແດນຂອງປະເທດລາວກໍໄດ້ສົ່ງຜົນກະທົບໃນວຽກງານຂອງຂະແໜງກໍ່ສ້າງ.

ເຖິງແມ່ນວ່າ ສປປ ລາວ ໄດ້ຈັດຕັ້ງປະຕິບັດ 13 ມາດຕະການກະຕຸ້ນເສດຖະກິດ ແລະ ງົດການຈ່າຍອາກອນລາຍຮັບສ່ວນບຸກຄົນ ແລະ ສໍາລັບຈຸນລະວິສາຫະກິດ ເພື່ອຄຸ້ມຄອງການໝູນວຽນເງິນຕາ ແລະ ຮັກສາວຽກເຮັດງານທໍາຂອງປະຊາຊົນ, ແຕ່ການຈັດຕັ້ງປະຕິບັດວຽກງານດັ່ງກ່າວຄວນຈະຖືກປະຕິບັດໃຫເໄດ້ໃນທຸກຂະແໜງການທົ່ວລະບົບເສດຖະກິດ ທັງນີ້ກໍ່ເພື່ອເປັນການກະຕຸກຊຸກຍູ້ທຸກຂະແໜງການເສດຖະກິດໃນທົ່ວລະບົບໄປຄຽງຄູ່ກັນ.

ມາດຕະການທໍາອິດ, ການໂຈະຕ່ອງໂສ້ການສະໜອງທີ່ເປັນຜົນເນື່ອງມາຈາກຈາກການປິດປະເທດເພື່ອຮັກສາຄວາມປອດໄພຂອງປະຊາຊົນນັ້ນຖືວ່າເປັນສິ່ງທີ່ທ້າທາຍທີ່ສຸດແກ່ຄວາມໝັ້ນຄົງ ແລະ ພຽງພໍດ້ານສະບຽງອາຫານ. ສະນັ້ນເພື່ອເປັນການຍຸດຕິຂໍ້ທ້າທາຍດັ່ງກ່າວ ສປປ ລາວຈະຕ້ອງໄດ້ມີການນໍາສະເໜີ ຫຼື ນໍາໃຊ້ມາດຕະການສ້າງຄວາມສະຖຽນລະພາບດ້ານຕ່ອງໂສ້ສະບຽບອາຫານເຊິ່ງປະກອບດ້ວຍຫຼາຍປັດໄຈເປັນຕົ້ນແມ່ນການເຂົ້າຫາບັນດາຜູ້ສະໜອງທັງລາຍເກົ່າ ແລະ ລາຍໃຫມ່ໃຫ້ຫຼາຍກວ່າເດີມ, ນໍາໃຊ້ວຽກງານການຜະລິດ ແລະ ຂົນສົ່ງໃຫ້ເກີດປະໂຫຍດ ແລະ ຄຸ້ມຄອງບັນດາຄວາມຕ້ອງການ ແລະ ອຸປະກອນຮັບໃຊ້ຕ່າງໆ.

ມາດຕະການທີ່ 2, ຂະແໜງການທ່ອງທ່ຽວ ແລະ ຂະແໜງການຕັດຫຍິບເຊິ່ງເປັນຂະແໜງທີ່ໄດ້ຮັບຜົນກະທົບຢ່າງໜັກໜ່ວງທີ່ສຸດນັ້ນ ເຊິ່ງນອກຈາກການຊ່ວຍກະຕຸກຊຸກຍູ້ທີ່ຂອງລັດທີ່ມີຢູ່ແລ້ວ ຂະແໜງການດັ່ງກ່າວແມ່ນມີຄວາມຕ້ອງການການສະໜັບສະໜູນຊ່ວຍເຫຼືອເພີ່ມເຕີມໃນຫຼາຍໆດ້ານຕື່ມເຊັ່ນ: ມາດຕະການຜ່ອນຜັນດ້ານອາກອນ ແລະ ການເລື່ອນການຊໍາລະອາກອນທີ່ດົນ. ລວມໄປເຖິງການຫຼຸດລາຄາຄ່າໄຟຟ້າ ແລະ ບໍລິການອິນເຕີເນັດໃຫ້ແກ່ຄົວເຮືອນ ແລະ ທຸລະກິດ.
ມາດຕະການທີ່ 3, ເພື່ອຮັບມືກັບບັນຫາໄພຫວ່າງງານທີ່ເພີ່ມຂຶ້ນ, ສປປ ລາວ ຄວນພິຈາລະນາກ່ຽວກັບມາດຕະການຜ່ອນພັນ ແລະ ຫຼຸດອາກອນລາຍຮັບໃຫ້ແກ່ບັນດາຂະແໜງການທີ່ໄດ້ຮັບຜົນກະທົບໂດຍສະເພາະຂະແໜງທີ່ໄດ້ຮັບຜົນກະທົບໜັກ. ມາດຕະການຈັດຫາງານຊົ່ວຄາວແມ່ນມາດຕະການທີ່ສາມາດນໍາໃຊ້ເພື່ອຊ່ວຍເຫຼືອຜູ້ປະສົບບັນຫາໃນພາວະວິກິດຄັ້ງນີ້. ວຽກບໍລິການຂົນສົ່ງເປັນວຽກໜຶ່ງທີ່ພວມຂະຫຍາຍຕົວ ແລະ ມີຄວາມຕ້ອງການສູງ. ສະນັ້ນ, ລັດຖະບານກໍ່ຄວນທັນທີດມາສົ່ງເສີມວຽກດັ່ງກ່າວນີ້ໃຫ້ບັນດາແຮງງານລາວທີ່ກັບເຂົ້າມາໃນປະເທດ ແລະ ຍັງບໍ່ສາມາດອອກໄປຕ່າງປະເທດໄດ້ເທື່ອ ເພື່ອຊ່ວຍຫຼຸດຜ່ອນຜົນກະທົບຈາກການຂາດລາຍຮັບຂອງພວກເຂົາ. ນອກນີ້, ລັດຖະບານຄວນຖືເອົາໂອກາດນີ້ຈັດຝຶກອົບຮົມໃຫ້ແກ່ແຮງງານທີ່ປະສົບໄພຫວ່າງງານ ໂດຍສະເພາະແຮງງານທີ່ອາໄສຢູ່ເຂດເສດຖະກິດພິເສດ ເພື່ອກະກຽມຄວາມພ້ອມຢູ່ສະເໝີຫາກສະຖານະການດີຂຶ້ນ. ພ້ອມນີ້, ໃນໄລຍະດັ່ງກ່າວນີ້ ສປປ ລາວ ຄວນມີການລະດົມໃຫ້ບັນດາຫົວໜ່ວຍທຸລະກິດສືບຕໍ່ຈ້າງງານພະນັກງານຂອງຕົນໄວ້ ແລະ ຊ່ວຍໃນການສົ່ງເສີມ-ພັດທະນາຄວາມສາມາດ ແລະ ຝີມື ເພື່ອເພີ່ມປະສິດທິພາບການຜະລິດພາຍຫຼັງວິກິດຄັ້ງນີ້.

ມາດຕະການທັງໝົດທີ່ກ່າວມາຂ້າງເທິງນັ້ນລ້ວນແຕ່ແມ່ນສິ່ງທີ່ລັດຖະບານຄວນສະດຸ້ງໄວ, ນອກນີ້, ການຕັ້ງຈຸດໃຫ້ຄວາມຊ່ວຍເຫຼືອແບບລວມສູນ ແລະ ການສື່ສານ-ແຈ້ງການໃຫ້ກັບບັນດາເຈົ້າຂອງກິດຈະການ ຫຼື ຫົວໜ່ວຍທຸລະກິດພາຍໃນລວມໄປເຖິງບັນດານັກລົງທຶນຕ່າງປະເທດທັງພາສາທ້ອງຖິ່ນ ແລະ ພາສາຕ່າງປະເທດແມ່ນສິ່ງທີ່ຄວນປະຕິບັດ, ເຊິ່ງວຽກງານດັ່ງກ່າວນີ້ ກະຊວງອຸດສາຫະກໍາ ແລະ ການຄ້າ ແລະ ກະຊວງແຜນການ ແລະ ການລົງທຶນຄວນຈະເປັນພາກສ່ວນຫຼັກໃນການຊີ້ນໍາ ແລະ ເປັນເຈົ້າການໃນການຈັດຕັ້ງປະຕິບັດ.

ນອກນີ້, ສປປ ລາວ ຕ້ອງປັບໂຕໃຫ້ເຂົ້າກັບແນວທາງຂອງ "ວິຖີຊີວິດແບບໃໝ່". ໃນໄລຍະເບື້ອງຕົ້ນນີ້, ການບໍລິໂພກສິນຄ້າຈາກປະເທດຄູ່ຄ້າຫຼັກຂອງ ສປປ ລາວເຊັ່ນ: ຈີນ, ໄທ ແລະ ຫວຽດນາມ ແມ່ນຄາດວ່າຈະມີການການຫຼຸດລົງ ແລະ ພາວະດັ່ງກ່າວນີ້ກໍ່ມີແນວໂນ້ມວ່າຈະເກີດຂຶ້ນໃນທຸກປະເທດໃນທົ່ວໂລກ. ດັ່ງນັ້ນ, ສປປ ລາວຄວນຈະມີການສຶກສາ ແລະ ຊອກຫາປະເທດຄູ່ຄ້າລາຍໃໝ່ເພີ່ມເຕີມນອກເໜືອຈາກປະເທດຈີນ ແລະ ສປປ ລາວຄວນຈະມີການຄັດເລືອກຂະແໜງການໃໝ່ທີ່ມີທ່າແຮງໃນການທີ່ຈະໄປກະຕຸ້ນວຽກງານການຄ້າຂອງປະເທດ
ໂດຍລວມ. ທັງນີ້ ການນໍາເຂົ້າສິນຄ້າທີ່ຊ້າກວ່າປົກກະຕິກໍ່ເປັນເງື່ອນໄຂດີອັນໜຶ່ງທີ່ຊ່ວຍໃຫ້ຜູ້ບໍລິໂພກພາຍໃນຫັນມາບໍລິໂພກສິນຄ້າ-ຜະລິດຕະພັນພາຍໃນໃຫ້ເພີ່ມຂຶ້ນ. ຕໍ່ກັບສະພາບການດັ່ງກ່າວນີ້ກໍ່ຖືວ່າຍັງເປັນໂອກາດອັນດີໃຫ້ລັດຖະບານໃນການສົ່ງເສີມການລົງທຶນພາຍໃນ ເຊິ່ງຈະເປັນການຊ່ວຍສົ່ງເສີມທຸລະກິດພາຍໃນອື່ນໆເປັນຕົ້ນແມ່ນຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງໄປໃນໂຕ ເຊິ່ງໂດຍປົກກະຕິແລ້ວກຸ່ມທຸລະກິດດັ່ງກ່າວແມ່ນຈະຍັງມີການຮ້ອງຂໍໃຫ້ມີການສືບຕໍ່ຊ່ວຍເຫຼືອພວກເຂົາຢູ່ແລ້ວ. ປະຈຸບັນນີ້ ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງແມ່ນກວມເອົາ 90% ຂອງທຸລະກິດທັງໝົດທີ່ໄດ້ລົງທະບຽນໃນ ສປປ ລາວ. ນອກຈາກການຊ່ວຍເຫຼືອອຸ້ມຊູທາງການເງິນ ເຊິ່ງມີຈໍານວນຫຼາຍກວ່າ 100 ຕື້ກີບ (11.2 ລ້ານໂດລາສະຫະລັດ) ໃຫ້ແກ່ບັນດາທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ, ສປປ ລາວ ຄວນພິຈາລະນາການຊ່ວຍເຫຼືອດ້ານອື່ນທີ່ບໍ່ແມ່ນການຊ່ວຍເຫຼືອດ້ານງົບປະມານເພີ່ມເຕີມ ທັງນີ້ກໍ່ເພື່ອຊ່ວຍຫຼຸດຜ່ອນບັນຫາໄພຫວ່າງງານ ແລະ

ການສູນເສຍກ່ອນການລົງທຶນ. ສຸດທ້າຍນີ້, ໂຄວິດ-19 ໄດ້ເຮັດໃຫ້ຮູ້ວ່າການນໍາໃຊ້ເຕັກໂນໂລຢີສາມາດເຮັດໃຫ້ການປະກອບທຸລະກິດໃນລະບົບເສດຖະກິດຂອງລາວສາມາດດໍາເນີນໄປຕໍ່ໄດ້. ເຖິງວ່າຄວາມອາດສາມາດໃນການນໍາໃຊ້ເຕັກໂນໂລຊີດັ່ງກ່າວອາດຈະບໍ່ສາມາດປະຕິບັດໄດ້ທັງໝົດໃນໄລຍະອັນສັ້ນແຕ່ ສປປ ລາວ ແມ່ນຄວນຮັບຮູ້ ແລະ ເຫັນໄດ້ວ່າວິກິດໂລກລະບາດຄັ້ງນີ້ໄດ້ເຮັດໃຫ້ພຶດຕິກໍາຂອງຜູ້ບໍລິໂພກປ່ຽນຮູບແບບໄປ. ສະນັ້ນ, ລັດຖະບານ ສປປ ລາວ ຄວນຈະມີການກະກຽມຄວາມພ້ອມໃນເພື່ອກ້າວເຂົ້າສູ່ຍຸກສະໄໝທີ່ມີການຄ້າຂາຍກັນຜ່ານທາງອີເລັກໂຕນິກເພື່ອຫຼຸດຜ່ອນການພົບປະກັນລະຫວ່າງຄົນກັບຄົນ.

## ຜົນສໍາເລັດໄວ

ເພື່ອເລັ່ງຫຼຸດຜ່ອນຜົນກະທົບ, ລັດຖະບານລາວຕ້ອງໄດ້ປ້ອງກັນໃຫ້ມີການສືບຕໍ່ຈັດຕັ້ງປະຕິບັດບາງວຽກງານທີ່ກະຊວງແຜນການ ແລະ ການລົງທຶນໄດ້ຈັດຕັ້ງປະຕິບັດຢູ່ກ່ອນໜ້ານັ້ນແລ້ວ ເຊິ່ງກໍ່ກົງກັນກັບບັນດາຂໍ້ແນະນໍາຈາກບົດລາຍງານຜົນໄດ້ຮັບທີ 1 (ຕາມເອກະສານຊ້ອນທ້າຍ A). ບາງວຽກງານ ສປປ ລາວ ແມ່ນໄດ້ຮ່ວມເຮັດວຽກກັບທະນາຄານພັດທະນາອາຊີຢູ່ແລ້ວໃນຕະຫຼອດໄລຍະເວລາ 2 ປີທີ່ຜ່ານມາ ຫຼື ຕັ້ງແຕ່ກ່ອນມີການລະບາດຂອງໂຄວິດ-19, ໃນນັ້ນກໍ່ລວມມີການສ້າງຄູ່ມືເພື່ອພັດທະນາການສົ່ງເສີມການລົງທຶນ ທີ່ຮ່າງຂຶ້ນເພື່ອລັບພະນັກງານຜູ້ຮັບຜິດຊອບວຽກງານສົ່ງເສີມການລົງທຶນສະເພາະ, ລວມໄປເຖິງການຈັດຝຶກອົບຮົມໃຫ້ແກ່ພະນັກງານດັ່ງກ່າວໂດຍກໍ່ຖືວ່າເປັນການເລີ່ມຕົ້ນທີ່ດີໃນການທີ່ຈະສ້າງຄວາມເຂັ້ມແຂງໃຫ້ກັບອະນາຄົດ.




*ທີ່ປຶກສາຈະໃຫ້ຄໍາປຶກສາ ແລະ ການຊ່ວຍເຫຼືອໃນການຈັດຕັ້ງປະຕິບັດ

**ທີ່ປຶກສາອາດຈະໃຫ້ຄໍາປຶກສາ ແລະ ການຊ່ວຍເຫຼືອໃນການຈັດຕັ້ງປະຕິບັດ

ເພື່ອເລີ່ມກະຕຸ້ນການປະຕິບັດຕາມແນວທາງດັ່ງກ່າວ ແລະ ເພື່ອໃຫ້ໄດ້ຮັບຜົນສຳເລັດໄວ, ກະຊວງແຜນການ ແລະ ການລົງທຶນແມ່ນສາມາດລິເລີ່ມວຽກງານທີ່ນອນໃນຄຳແນະນຳຂ້າງເທິງບາງຂໍ້ກ່ອນໃນຊ່ວງ 6 ເດືອນທີ່ຈະມາເຖິງນີ້. ທັງນີ້ກໍ່ເພື່ອສ້າງຄວາມໝັ້ນໃຈໃຫ້ແກ່ນັກລົງທຶນ, ຫ້ອງການບໍລິການປະຕູດຽວຕ້ອງໄດ້ຮັບການຟື້ນຟູ-ເຮັດໃຫ້ມີຄວາມເຂັ້ມແຂງ ແລະ ໃຫ້ມີການສືບຕໍ່ສົ່ງເສີມການລົງທຶນໃຫ້ມີການຜະລິດ ແລະ ສ້າງຍີ່ຫໍ້ຜະລິດຕະພັນຂອງລາວ.

## 1. ການຟື້ນຟູການບໍລິການປະຕູດຽວ

ໃນການປະຕິບັດກົດໝາຍສົ່ງເສີມການລົງທຶນສະບັບປັບປຸງ ປີ 2017, ບັນດານັກລົງທຶນກໍ່ຊອກຫາຊ່ອງທາງທີ່ຈູງໃຈພວກເຂົາໃນດ້ານການລົງທຶນ. ຕົວຢ່າງເຊັ່ນ: ພາຍໃຕ້ກົດໝາຍສົ່ງເສີມການລົງທຶນສະບັບດັ່ງກ່າວໄດ້ລະບຸໄວ້ວ່າ ບັນດາທຸລະກິດທີ່ເນັ້ນການອະນຸລັກສິ່ງແວດລ້ອມ ແລະ ຄວາມຍືນຍົງ, ອຸດສາຫະກຳພັດທະນາການທ່ອງທ່ຽວທາງວັດທະນະທຳ ແລະ ດ້ານປະຫວັດສາດແມ່ນກາທຸລະກິດທີ່ມີສິດໄດ້ຮັບສິດທິພິເສດ. ແຕ່ເຖິງຢ່າງໃດກໍ່ຕາມ, ໃນກົດໝາຍກໍ່ບໍ່ໄດ້ລະບຸຈະແຈ້ງເຖິງລັກສະນະຂອງທຸລະກິດທີ່ເປັນມິດຕໍ່ສິ່ງແວດລ້ອມ ແລະ ຄວາມຍືນຍົງໄວ້ລະອຽດ ຫຼື ການທ່ອງທ່ຽວແບບໃດທີ່ເອີ້ນວ່າການທ່ອງທ່ຽວທາງທຳມະຊາດ, ວັດທະນະທຳ ແລະ ປະຫວັດສາດ. ເຖິງວ່າແຮງຈູງໃຈດັ່ງກ່າວແມ່ນເນັ້ນໃສ່ການໃຫ້ລາງວັນ ຫຼື ຜົນຕອບແທນແກ່ການລົງທຶນທີ່ຍືນຍົງ, ການຂາດຄຳນິຍາມທີ່ຊັດເຈນກໍ່ເຮັດໃຫ້ນັກລົງທຶນບໍ່ສາມາດຮັບສິດທິພິເສດໃນນະໂຍບາຍຕ່າງໆໄດ້. ສະນັ້ນ, ບັນດາທຸລະກິດແມ່ນບໍ່ຮູ້ໄດ້ເລີຍວ່າທຸລະກິດຂອງຕົນສາມາດໄດ້ຮັບສິດຫຍັງແດ່ ຫຼື ມີສິດໃນການດຳເນີນງານດ້ານໃດແດ່, ເຊິ່ງພວກເຂົາຈະຕ້ອງໄດ້ອາໄສການປຶກສາຫາລືແບບຊ້ອງໜ້າກັບບັນດາເຈົ້າໜ້າທີ່ຂອງພາກລັດທີ່ກ່ຽວຂ້ອງ.

ແຜນວາດ: ຫ້ອງການບໍລິການປະຕູດຽວ (OSS Centre)




ດ້ວຍເຫດຜົນດັ່ງກ່າວນີ້ ກະຊວງແຜນການ ແລະ ການລົງທຶນຈຶ່ງໄດ້ສ້າງຕັ້ງຫ້ອງການບໍລິການປະຕູດຽວ (OSS) ຂຶ້ນເພື່ອເຮັດໃຫ້ຂັ້ນຕອນການປະສານງານລະຫວ່າງບັນດານັກລົງທຶນ ແລະ ກະຊວງຕ່າງໆທີ່ກ່ຽວຂ້ອງນັ້ນງ່າຍ ແລະ ສະດວກສະບາຍຂຶ້ນກວ່າເດີມ. ເຖິງຢ່າງໃດກໍ່ຕາມ, ປະຈຸບັນມີພຽງຫ້ອງການບໍລິການປະຕູດຽວເຂດເສດຖະກິດພິເສດທີ່ຕັ້ງຢູ່ເຊໂນ ແຂວງສະຫວັນນະເຂດ ທີ່ໄດ້ຈັດຕັ້ງປະຕິບັດຕາມຄຳສັ່ງນາຍົກລັດຖະມົນຕີ ສະບັບເລກທີ 177 ແລ້ວ, ສ່ວນຫ້ອງການບໍລິການປະຕູດຽວແຫ່ງອື່ນໃນປະເທດລາວພັດມີທ່າອ່ຽງວ່າຈະເຮັດໃຫ້ການເຂົ້າເຖິງຂໍ້ມູນມີຂັ້ນຕອນເພີ່ມເຕີມແທນທີ່ຈະເປັນສູນສະໜອງຂໍ້ມູນຂ່າວສານ ຫຼື ເປັນໜ່ວຍງານທີ່ພິຈາລະນາອະນຸມັດໜັງສືສະເໜີທີ່ກ່ຽວຂ້ອງ.

ບັນຫາດັ່ງກ່າວໄດ້ເຮັດໃຫ້ການປະຕິບັດໂຄງການຫຼາຍໆໂຄງການຫຼ້າຊ້າ, ບໍ່ເປັນໄປຕາມໄລຍະເວລາທີ່ກຳນົດ ເຊິ່ງຫຼາຍໆໂຄງການຕ້ອງຂະຫຍາຍເວລາໄປໂດຍບໍ່ຈຳເປັນ. ເຫດຜົນໜຶ່ງທີ່ເຮັດໃຫ້ເກີດບັນຫາດັ່ງກ່າວແມ່ນ

ຍ້ອນການຕີຄວາມໝາຍ ແລະ ຄວາມເຂົ້າໃຈຕໍ່ກົດໝາຍຂອງບັນດາກະຊວງຕ່າງໆບໍ່ກົງກັນ. ສໍາລັບປະເດັນດັ່ງກ່າວນີ້, ຢູ່ໃນກອງປະຊຸມສະໄໝສາມັນ ເທື່ອທີ່ 9 ຂອງສະພາແຫ່ງຊາດຊຸດທີ່ 8 ທີ່ຈັດຂຶ້ນໃນເດືອນມິຖຸນາ 2020 ທີ່ຜ່ານມາກໍ່ໄດ້ມີການຍົກຂຶ້ນມາ ແລະ ທ່ານ ສອນໄຊ ສີພັນດອນ, ຮອງນາຍົກລັດຖະມົນຕີ ແລະ ລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ກໍ່ໄດ້ຮັບຊາບບັນຫາດັ່ງກ່າວ. ການເຮັດໃຫ້ຂອດເອກະສານ ແລະ ຂະບວນການອະນຸມັດການປະກອບທຸລະກິດ ຫຼື ການລົງທຶນໃນ ສປປ ລາວ ມີລັກສະນະທີ່ງ່າຍດາຍຂຶ້ນແມ່ນມຄວາມຈໍາເປັນທີ່ສຸດ ແລະ ຕ້ອງໄດ້ຮັບການແກ້ໄຂເພື່ອເຮັດໃຫ້ການລົງທຶນເພີ່ມຂຶ້ນ.

| | **ຫ້ອງການບໍລິການປະຕູດຽວເຂດເສດຖະກິດພິເສດສະຫວັນເຊໂນ** | **ຫ້ອງການບໍລິການປະຕູດຽວແຫ່ງອື່ນໆ** |
|---|---|---|
| **ໄລຍະເວລາທີ່ໃຊ້ໃນການຂໍໃບອະນຸຍາດປະກອບທຸລະກິດ** | ພາຍໃນ 5 ວັນລັດຖະການ | 1-2 ອາທິດ |
| **ໄລຍະເວລາທີ່ໃຊ້ໃນການຂໍໃບອະນຸຍາດເຮັດວຽກ** | ພາຍໃນ 1 ວັນລັດຖະການ | 8 ວັນລັດຖະການ |
| **ໄລຍະເວລາທີ່ໃຊ້ໃນການຂໍໃບອະນຸຍາດນໍາເຂົ້າ-ສົ່ງອອກ** | ພາຍໃນ 2 ຊົ່ວໂມງ | ຢ່າງຕໍ່າ 5 ວັນລັດຖະການ |

*ແຫຼ່ງຂໍ້ມູນ: ກົມສົ່ງເສີມການລົງທຶນ*

ນອກເໜືອຈາກບັນຫາການອະນຸມັດເອກະສານແລ້ວ, ການບໍລິການປະຊາຊົນ ຫຼື ນັກລົງທຶນໃນການສະໜອງຂໍ້ມູນກໍ່ແມ່ນໝາກຫົວໃຈສໍາຄັນເພື່ອຮັບປະກັນວ່າໜ້າທີ່ຂອງຫ້ອງການບໍລິການປະຕູດຽວແມ່ນມີປະສິດທິພາບ ແລະ ສາມາດດຶງດູດການລົງທຶນຈາກຕ່າງປະເທດໄດ້. ສໍາລັບບາງຈຸດທີ່ຄວນເອົາໃຈໃສ່ແກ້ໄຂເພື່ອສ້າງປະສິດທິພາບຂອງການໃຫ້ບໍລິການແມ່ນປະກອບມີຄື: ປັບປຸງລະບົບ, ພັດທະນາຄວາມອາດສາມາດ ແລະ ສ້າງທັກສະໃຫ້ພະນັກງານທີ່ມີຄວາມເໝາະສົມ

**ສ້າງ ແລະ ຕໍ່ຍອດລະບົບທີ່ມີຢູ່ກ່ອນໜ້າແລ້ວ**

- ປັບປຸງວິທີການເຜີຍແຜ່ຂໍ້ມູນ ແລະ ການບໍລິການນັກລົງທຶນ
- ຈັດຕັ້ງປະຕິບັດລະບົບແບບລວມສູນເຊິ່ງປະກອບດ້ວຍຊ່ອງຊານທີ່ມີຄວາມຮູ້ຈາກບັນດາຂະແໜງການຕ່າງໆທີ່ກ່ຽວຂ້ອງສະເພາະ ພາຍໃຕ້ການສ້າງໂດຍປະທດ ຫຼື ບັນດາປະເທດໃນພາກພື້ນ

**ພັດທະນາຄວາມອາດສາມາດໂດຍການຄຸ້ມຄອງການປະຕິບັດງານ**

- ແຕ່ງຕັ້ງຜູ້ຈັດການດ້ານການບັນຊີ, ຕັ້ງເປົ້າລາຍຮັບທີ່ຊັດເຈນທັງໃນລະດັບອົງກອນ ແລະ ລະດັບບຸກຄົນ, ພ້ອມທັງສ້າງຕົວຊີ້ວັດການປະຕິບັດວຽກງານຂຶ້ນມາ (KPI)
- ສ້າງ ຫຼື ກຳນົດຜູ້ຮັບຜິດຊອບເພື່ອໃຫ້ມີການເອົາໃຈໃສ່ແນະນຳນັກລົງທຶນຢ່າງໃກ້ຊິດໃນທຸກໆຂັ້ນຕອນຂອງການລົງທຶນເພື່ອຮັບປະກັນ ຫຼື ເຮັດໃຫ້ມີບໍລິມາດການລົງທຶນທີ່ເພີ່ມຂຶ້ນ

**ມີຈັດສັນ ແລະ ການໝູນໃຊ້ພະນັກງານທີ່ມີຄວາມຮູ້-ຄວາມສາມາດ ແລະ ຄວາມເໝາະສົມກັບໜ້າວຽກ**

- ຈັດພະນັກງານໃຫ້ຖືກຕ້ອງເໝາະສົມໂດຍມີການກຳນົດພາລະບົດບາດ ແລະ ໜ້າວຽກທີ່ຊັດເຈນ
- ພ້ອມດຽວກັນນີ້ກໍ່ສົ່ງເສີມໃຫ້ມີການພັດທະນາທັກສະຜ່ານການຝຶກອົບຮົມດ້ານຕ່າງໆເຊັ່ນ: ທັກສະການໃຫ້ບໍລິການລູກຄ້າ, ທັກສະໃນການປະສານງານ-ຕິດຕໍ່ສື່ສານ ແລະ ທັກສະດ້ານການບັນຊີເປັນຕົ້ນ

ສຸດທ້າຍນີ້,ການລິເລີ່ມໃຫ້ມີການບໍລິການພາຍຫຼັງການລົງທຶນແມ່ນຈະສາມາດຮັບປະກັນວ່າຫ້ອງການບໍລິການປະຕູດຽວຈະສາມາດສະໜອງການບໍລິການແບບຮອບດ້ານ.




ເນື່ອງຈາກບັນດານັກລົງທຶນໂດຍລວມແລ້ວຈະມີການລົງທຶນໃສ່ທຸລະກິດໃໝ່ ແລະ ຕໍ່ຍອດບັນດາທຸລະກິດຂອງພວກເຂົາທີ່ມີຢູ່ແລ້ວຢ່າງຕໍ່ເນື່ອງ, ສະນັ້ນ ການບໍລິການໃຫ້ຄຳແນະນຳ ແລະ ເອົາໃຈໃສ່ນັກລົງທຶນຫຼັງຈາກທີ່ເຂົາເຈົ້າໄດ້ເຂົ້າມາເຮັດທຸລະກິດຢູ່ປະເທດລາວແລ້ວນັ້ນ ຈະເຮັດໃຫ້ການສົ່ງເສີມການລົງທຶນ ແລະ ການອຳນວຍຄວາມສະດວກນັກລົງທຶນເປັນໄປຢ່າງຕໍ່ເນື່ອງ. ທະນາຄານພັດທະນາອາຊີໄດ້ຈັດງານສຳມະນາກ່ຽວກັບການໃຫ້

ບໍລິການລູກຄ້າ, ການຄຸ້ມຄອງບັນຊີ, ການສ້າງສາຍພົວພັນ, ແລະ ການຕິດຕໍ່ສື່ສານ ແລະ ການຂາຍ ເຊິ່ງເປັນການຝຶກອົບຮົມທີ່ສ້າງຄວາມອາດສາມາດ ແລະ ທັກສະໃຫ້ແກ່ພະນັກງານ. ທັງນີ້ການສິດສອນ, ແນະນຳແນວທາງໃນການປະຕິບັດວຽກງານດ້ານຕ່າງໆຂອງພະນັກງານແມ່ນສາມາດພັດທະນາໂດຍຜ່ານການແນະນຳລະຫວ່າງຫົວໜ້າ ແລະ ພະນັກງານ ລວມໄປເຖິງຂັ້ນພະນັກງານ ແລະ ພະນັກງານດ້ວຍກັນ.

**ກໍລະນີສຶກສາ: ການເບິ່ງແຍງນັກລົງທຶນຂອງປະເທດຟິລິປິນ**

ສະພາການລົງທຶນຂອງປະເທດຟິລິປິນ (BOI) ໄດ້ສ້າງຕັ້ງສູນຊ່ວຍເຫຼືອດ້ານການລົງທຶນ (IAC) ທີ່ປະກອບດ້ວຍພະແນກບໍລິການເບິ່ງແຍງນັກລົງທຶນ (ASD). ພະແນກບໍລິການເບິ່ງແຍງນັກລົງທຶນແມ່ນໜ່ວຍງານທີ່ໃຫ້ການຊ່ວຍເຫຼືອດ້ານການລົງທຶນໃຫ້ແກ່ນັກລົງທຶນ. ສໍາລັບການຊ່ວຍເຫຼືອແມ່ນຊ່ວຍໃນການໃຫ້ແນວທາງໃນການຫຼຸດຜ່ອນອຸປະສັກທີ່ກີດຂວາງດ້ານທຸລະກິດໃຫ້ໄດ້ຮັບການແກ້ໄຂໄດ້ທັງປະເດັນ ແລະ ໄວຂຶ້ນ ເຊິ່ງປະກອບດ້ວຍການຂໍອະນຸຍາດສ້າງຕັ້ງບໍລິສັດທີ່ຍັງຄົງຄ້າງ, ການຍື່ນໜັງສືຂໍອະນຸຍາດປະກອບທຸລະກິດ, ການຊໍາລະສະສາງ, ການຕອບຂໍ້ຂ້ອງໃຈ, ລວມໄປເຖິງການໄຂຂໍ້ຂ້ອງໃຈກ່ຽວກັບນະໂຍບາຍ ແລະ ຂັ້ນຕອນກ່ຽວກັບການດໍາເນີນທຸລະກິດໃນໂດຍການໂອ້ລົມສົນທະນາກັບເຈົ້າໜ້າທີ່ຂອງລັດທີ່ເປັນໜ່ວຍງານຜູ້ຮັບຜິດຊອບໂດຍກົງລວມທັງພະນັກງານຂັ້ນເຂດແຂວງ. ພະແນກບໍລິການເບິ່ງແຍງນັກລົງທຶນຍັງເຮັດໜ້າທີ່ໃຫ້ຄໍາແນະນໍາດ້ານນະໂຍບາຍລົງທຶນລວມທັງລະບຽບການຕ່າງໆ.

## 2. ການສົ່ງເສີມການລົງທຶນໃນຍີ່ຫໍ້ການລົງທຶນລາວ

ໃນໄລຍະຜ່ານມາລັດຖະບານລາວໄດ້ມີຄວາມພະຍາຍາມໃນການປັບປຸງ ແລະ ໄດ້ມີຂະບວນການປັບປຸງເວັບໄຊທ໌ຂອງພາກລັດທີ່ກ່ຽວຂ້ອງເພື່ອແບ່ງປັນ ແລະ ນໍາສະເໜີຂໍ້ມູນຂ່າວສານໃຫ້ແກ່ບັນດານັກລົງທຶນໃຫ້ດີກວ່າເດີມ. ການປັບປຸງເວັບໄຊທ໌ເຫັນວ່າເປັນສິ່ງດີທີ່ຄວນສືບຕໍ່ພັດທະນາ ໂດຍສະເພາະໃນຍຸກປະຈຸບັນທີ່ຄວາມທັນສະໄໝທາງດ້ານເຕັກໂນໂລຢີເຂົ້າມາມີບົດບາດ ລວມໄປເຖິງສະຖານະການທີ່ພວມມີການລະບາດຂອງເຊື້ອຈຸລາໂລກສາຍພັນໃໝ່.

ເພື່ອໃຊ້ປະໂຫຍດຈາກຊ່ອງທາງດັ່ງກ່າວໃຫ້ເກີດປະໂຫຍດສູງສຸດ, ເວັບໄຊທ໌ຕ່າງໆຄວນປະກອບດ້ວຍຄຸນລັກສະນະດັ່ງນີ້:

(i) ມີຈຸດປະສົງທີ່ຊັດເຈນ ແລະ ບັນດາຂໍ້ມູນຕ່າງໆຕ້ອງມີມາດຕະຖານດຽວກັນລວມໄປເຖິງການເຂົ້າເຖິງລິ້ງຕ່າງໆກໍ່ຄວນໃຫ້ເປັນໄປໃນລວງດຽວກັນ

(ii) ຂໍ້ມູນ, ເນື້ອຫາໃນເວັບໄຊທ໌, ຮູບພາບ, ໂທນສີ ແລະ ພາບລວມທຸກຢ່າງຄວນມີລັກສະນະທີ່ສອດຄ່ອງກັນ ແລະ ສອດຄ່ອງກັບຈຸດປະສົງຂອງການສ້າງເວັບໄຊທ໌ດັ່ງກ່າວ.

(iii) ຄວນມີການກະກຽມຄໍາຕອບຕໍ່ຄໍາຖາມທີ່ນັກລົງທຶນມັກຈະຖາມເຂົ້າມາ ແລະ ໃຫ້ນໍາຄໍາຕອບດັ່ງກ່າວເຜີຍແຜ່ໃນເວັບໄຊທ໌ເພື່ອເປັນການປະຫຍັດເວລາ ແລະ ຫຼຸດຜ່ອນການຕອບຄໍາຖາມທົ່ວໄປໃນລັກສະນະຊໍ້າໆກັນ.

(iv) ຄວນມີນາຍແປພາສາເຂົ້າມາມີສ່ວນຮ່ວມເພື່ອເຮັດໃຫ້ການເຂົ້າເຖິງຂໍ້ມູນໂດຍສະເພາະແມ່ນຂໍ້ມູນທີ່ແປເປັນພາສາຕ່າງປະເທດໄດ້ຮັບການປັບປຸງ, ເຊິ່ງເຮັດໃຫ້ນັກລົງທຶນຕ່າງປະເທດສາມາເຂົ້າໃຈຕໍ່ບັນດານະໂຍບາຍ ແລະ ກົດລະບຽບຕ່າງໆໄດ້.

(v) ເນື້ອຫາ ຫຼື ຂໍ້ມູນໃນເວັບໄຊທ໌ຄວນຖືກສ້າງໃຫ້ສາມາດນໍາໃຊ້ໄດ້ກັບປຸ່ມຄົ້ນຫາ (Search) ເພື່ອຫຼຸດຜ່ອນເວລາໃນການຊອກຫາແບບທົ່ວໄປ. ພ້ອມນີ້, ຂໍ້ມູນໃນເວັບໄຊທ໌ຄວນໃຫ້ມີ Link ທີ່ສາມາດກົດ ແລະ ເຊື່ອມຕໍ່ໄປຍັງຖານຂໍ້ມູນ ຫຼື ເວັບໄຊທ໌ອື່ນໆໄດ້.

ຕິດພັນກັບການສົ່ງເສີມການລົງທຶນ, ກະຊວງແຜນການ ແລະ ການລົງທຶນຄວນມີການຍົກກໍລະນີ ຜົນສໍາເລັດຂອງ ນິຄົມສະຫວັນ ມາໂຄສະນາເຜີຍແຜ່ເພື່ອທຸກຄົນໂດຍສະເພາະແມ່ນນັກລົງທຶນສາມາດເຫັນໄດ້ເຖິງພາບລວມ ຫຼື ຈິນຕະນາການໄດ້ວ່າການລົງທຶນທີ່ ສປປ ລາວ ຈະເປັນໄປແນວໃດ ແລະ ສາມາດສ້າງຜົນປະໂຫຍດໄດ້ແນວໃດແດ່ ເຫັງນີ້ກໍ່ເພື່ອເປັນການສ້າງແຮງຈູງໃຈນັກລົງທຶນຕ່າງປະເທດໃຫ້ມາລົງທຶນທີ່ ສປປ ລາວ. ສິ່ງທີ່ຄວນຖືກນໍາສະເໜີປະກອບດ້ວຍ:

(i) ຫ້ອງການບໍລິການປະຕູດຽວທີ່ມີປະສິດທິພາບສາມາດຫຼຸດຜ່ອນຂອດເອກະສານ ແລະ ຂະບວນການທີ່ກ່ຽວຂ້ອງ

(ii) ຄວາມໃກ້ ແລະ ເຂົ້າເຖິງງ່າຍຕໍ່ການບໍລິການດ້ານໂລຈິສຕິກ

(iii) ຕົວເລກສະຖິຕິນັກລົງທຶນທີ່ປະສົບຜົນສໍາເລັດໃນການລົງທຶນທີ່ ສປປ ລາວ ລວມໄປເຖິງຂະແໜງການທີ່ສາມາດສ້າງມູນຄ່າເພີ່ມໃຫ້ແກ່ຕົນເອງ ທີ່ພວມດໍາເນີນທຸລະກິດຢູ່ເຂດເສດຖະກິດພິເສດ.

ກົມສົ່ງເສີມການລົງທຶນ ແລະ ເຂດເສດຖະກິດພິເສດສະຫວັນເຊໂນຄວນມີການປະສານງານ ແລະ ປຶກສາຫາລືກ່ຽວກັບກໍລະນີຄວາມສໍາເລັດຂອງເຂດເສດຖະກິດພິເສດດັ່ງກ່າວຢ່າງມີຍຸດທະສາດ. ການປັບປຸງປ່ຽນແປງການໂຄສະນາດັ່ງທີ່ໄດ້ລະບຸໄປແລ້ວນັ້ນແມ່ນສາມາດປະຕິບັດໄດ້ເລີຍ ແລະ ບໍ່ໄດ້ມີຄວາມຫຍຸ້ງຍາກໃນການຂໍອະນຸມັດເລີຍ. ໃນທາງກົງກັນຂ້າມ, ການປັບປຸງວຽກງານໂຄສະນາປະຊາສໍາພັນຈະເປັນການດຶງດູດໃຫ້ນັກລົງທຶນມາລົງທຶນທີ່ ສປປ ລາວ ຫຼາຍຂຶ້ນໃນອະນາຄົດ.

ພາຍຫຼັງການປັບປຸງເວັບໄຊທ໌ສໍາເລັດ, ຫຼາຍໆໜ້າວຽກທີ່ຕິດພັນກັບການອໍານວຍຄວາມສະດວກໃນການລົງທະບຽນທຸລະກິດແບບອອນໄລນ໌ເພື່ອອໍານວຍຄວາມສະດວກໃຫ້ແກ່ນັກລົງທຶນກໍ່ຈະໄດ້ຮັບການພັດທະນາ. ເຖິງການລົງທະບຽນໃນລະບົບດ້ວຍຕົນເອງນັ້ນຈະຕ້ອງໃຊ້ທັງເງິນທຶນ ແລະ ໃຊ້ທັງເວລາກໍ່ຕາມ, ຂັ້ນຕອນການປະຕິບັດວຽກງານດັ່ງກ່າວທີ່ເຄີຍໃຊ້ຊັບພະຍາກອນມະນຸດຈໍານວນຫຼາຍຄົນນັ້ນກໍ່ຈະຖືກຫຼຸດຜ່ອນລົງລົງໃນໄລຍະຍາວ. ຍິ່ງໄປກວ່ານັ້ນ, ລະບົບດັ່ງກ່າວໃນອະນາຄົດ

## *ໄລຍະຟື້ນຟູ*

ຂະບວນການ ແລະ ຄວາມພະຍາຍາມໃນການຟື້ນຟູການລົງທຶນດັ່ງທີ່ໄດ້ລະບຸໄວ້ໃນຂ້າງເທິງ, ສປປ ລາວ ຄວນຈະເລີ່ມຈັດຕັ້ງປະຕິບັດ ແລະ ນໍາເອົາຂະບວນການດັ່ງກ່າວເຂົ້າໃນແຜນເສດຖະກິດ ທັງນີ້ກໍ່ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ບັນດາຫົວໜ່ວຍທຸລະກິດທ້ອງຖິ່ນໃນ ສປປ ລາວ, ຄວນມີການນໍາໃຊ້ເສັ້ນທາງລົດໄຟ ລາວ-ຈີນ ໃຫ້ເກີດປະໂຫຍດສູງສຸດ, ກະຕຸກຊຸກຍູ້ຂະແໜງການກະສິກໍາ ແລະ ພ້ອມກັບສ້າງສະພາບແວດລ້ອມອື່ນໆທີ່ເຮັດໃຫ້ມີການຂະຫຍາຍຕົວ ຫຼື ການພັດທະນາແບບຍືນຍົງ. ພ້ອມນີ້, ພະຍາດຈຸລາໂລກສາຍພັນໃໝ່ ຫຼື Covid-19 ມີແນວໂນ້ມທີ່ຈະສືບຕໍ່ລະບາດຕໍ່ໄປ ສະນັ້ນລັດຖະບານລາວບໍ່ຄວນທີ່ຈະລໍຖ້າໃນການນໍາໃຊ້ມາດຕະການໃນໄລຍະການຟື້ນຟູຈາກພະຍາດ Covid-19. ລັດຖະບານຄວນຈະເລີ່ມປະຕິບັດນັບແຕ່ນີ້ໄປ ເຊິ່ງບັນດາມາດຕະການຟື້ນຟູທີ່ກ່າວມາຂ້າງເທິງນັ້ນຈະເຊື່ອມໂຍງ ແລະ ເປັນການປູພື້ນຖານໃຫ້ແກ່ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ 9 ເຊິ່ງຈະນໍາໄປສູ່ການພັດທະນາແບບຍືນຍົງ.

## 1) ການສ້າງຄວາມເຂັ້ມແຂງໃຫ້ແກ່ບັນດາຫົວໜ່ວຍທຸລະກິດພາຍໃນ

ການຂະຫຍາຍໂຕແບບຍືນຍົງຂອງຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ.

ຕໍ່ກັບການໃຫ້ຄວາມສຳຄັນຕໍ່ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ຕໍ່ເສດຖະກິດຂອງລາວ, ລັດຖະບານຈະຕ້ອງດຳເນີນການໃດໜຶ່ງເພື່ອຮັບປະກັນວ່າທຸລະກິດກຸ່ມດັ່ງກ່າວສາມາດພັດທະນາເຕີບໃຫຍ່ໄດ້ຢ່າງຍືນຍົງ. ປະຈຸບັນກຸ່ມທຸລະກິດດັ່ງກ່າວແມ່ນພວມພົບພໍ້ກັບສິ່ງທ້າທາຍໃນການເຂົ້າເຖິງແຫຼ່ງທຶນເຊັ່ນ: ການກູ້ຢືມຈາກທະນາຄານທຸລະກິດລວມໄປເຖິງທະນາຄານແຫ່ງ ສປປ ລາວ. ຄວາມຫຍຸ້ງຍາກສັບສົນດ້ານລະບົບ ແລະຂະບວນການ ຫຼື ຂອດເອກະສານຕ່າງໆກໍ່ເປັນອຸປະສັກທີ່ເຮັດໃຫ້ພວກເຂົາເຂົ້າຫາແຫຼ່ງທຶນໄດ້ຍາກ, ເຊິ່ງເອກະສານການຂໍກູ້ຢືມທີ່ປະກອບບໍ່ຖືກຕ້ອງ ແລະ ຄົບຖ້ວນກໍ່ເຮັດໃຫ້ກຸ່ມດັ່ງກ່າວຖືກປະຕິເສດຈາກທະນາຄານ. ສະນັ້ນ, ຕໍ່ກັບບັນຫາດັ່ງກ່າວບັນດາທະນາຄານໃນ ສປປ ລາວ ຄວນຈະມີການຜ່ອນຜັນ ຫຼື ປັບປຸງຂອດເອກະສານດ້ານການປ່ອຍກູ້ໃຫ້ກຸ່ມດັ່ງກ່າວ ເຊິ່ງກໍ່ໄປສອດຄ່ອງຕາມຈຸດປະສົງ ແລະ ໜ້າວຽກຂອງກົມສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະກາງ, ກະຊວງອຸດສາຫະກຳ ແລະ ການຄ້າ ພວມດຳເນີນການປັບປຸງຢູ່. ນອກນີ້, ການຫັນເປັນທັນສະໄໝ ທີ່ມີການນຳໃຊ້ເທັກໂນໂລຊີເຂົ້າມານຳໃຊ້ໃນຂະບວນການ ຫຼື ຂັ້ນຕອນຕ່າງໆກໍ່ຈະເຮັດໃຫ້ການດຳເນີນການ ຫຼື ການປະກອບເອກະສານງ່າຍຂຶ້ນ.

**ກໍລະນີສຶກສາ: ທຸລະກິດຂະໜາດນ້ອຍ ແລະ ກາງ ຂອງປະເທດມາເລເຊຍ**

ສຳລັບປະເທດມາເລເຊຍແລ້ວ ບັນດາທະນາຄານພາຍໃນປະເທດແມ່ນຜູ້ສະໜອງທຶນລາຍໃຫຍ່ທີ່ສຸດສຳລັບວິສາຫະກິດຂະໜາດນ້ອຍ ແລະ ກາງ. ທະນາຄານທຸລະກິດຍັງໄດ້ໃຫ້ພັນທະສັນຍາວ່າຈະເຮັດໃຫ້ອັດຕາການປະຕິເສດການຂໍກູ້ຢືມເງິນຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ຢູ່ໃນລະດັບຕໍ່າ, ທີ່ຜ່ານມາອັດຕາການຖືກປະຕິເສດການສະເໜີຂໍກູ້ເງິນຂອງບັນດາທຸລະກິດພາຍໃນມີປະມານ 20%. ອີງຕາມຜົນສຳຫຼວດເຮັດໃຫ້ຮູ້ວ່າ ວິສາຫະກິດຂະໜາດນ້ອຍ ແລະ ກາງທີ່ໄດ້ຂໍກູ້ຢືມເງິນຈາກສະຖາບັນການເງິນນັ້ນ 91% ແມ່ນໄດ້ຮັບການອະນຸມັດ, ໃນຂະນະທີ່ການຂໍກູ້ຢືມເງິນຈາກແຫຼ່ງທຶນອື່ນໆຂອງກຸ່ມທທຸລະກິດດັ່ງກ່າວ 99% ແມ່ນຖືກອະນຸມັດ. ຄວາມຫຍຸ້ງຍາກໃນການເຂົ້າຫາແຫຼ່ງທຶນແມ່ນໜຶ່ງໃນບັນດາອຸປະສັກຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ (ລຳດັບທີ 7 ຈາກທັງໝົດ 9 ຂໍ້), ສ່ວນທຸລະກິດທີ່ບໍ່ປະສົບຜົນສຳເລັດໃນການກູ້ຢືມເງິນນັ້ນເຫດຜົນຫຼັກແມ່ນຕິດພັນກັບເອກະສານບໍ່ຄົບຖ້ວນ, ກະແສເງິນສົດບໍ່ພຽງພໍທີ່ຈະສາມາດຈ່າຍຊຳລະເງິນກູ້ ແລະ ແຜນທຸລະກິດທີ່ມີນັ້ນບໍ່ມີຄວາມສອດຄ່ອງ ແລະ ຊັດເຈນພຽງພໍ. ດ້ວຍເຫດຜົນດັ່ງກ່າວບັນດາທະນາຄານກ່ຽວຂ້ອງຈຶ່ງບໍ່ສາມາດພິຈາລະນາອະນຸມັດການປ່ອຍກູ້ໄດ້.

ໃນຂັ້ນສະຖາບັນ, ສປປ ລາວ ສາມາດປັບປຸງການເຂົ້າຫາແຫຼ່ງທຶນຂອງບັນດາຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງໄດ້ໂດຍການສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບການເງິນ. ອີກວິທີການໜຶ່ງທີ່ຈະຊ່ວຍແກ້ໄຂບັນຫາດັ່ງກ່າວແມ່ນການບັງຄັບໃຊ້ບັນດາກົດໝາຍທາງການເງິນ, ເຊິ່ງປະຈຸບັນມີພຽງ 19 ຈາກທັງໝົດ 44 ທະນາຄານໃນ ສປປ ລາວ ທີ່ມີລະບົບການຕິດຕາມການຕ້ານການຟອກເງິນ. ນອກນີ້, ການສ້າງຄວາມເຂັ້ມແຂງແກ່ລະບົບການເງິນແມ່ນການຊຸກຍູ້ໃຫ້ມີການກູ້ຢືມລະຫວ່າງທະນາຄານດ້ວຍກັນ ທັງນີ້ກໍ່ເພື່ອສ້າງສະພາບຄ່ອງໃຫ້ແກ່ບັນດາທະນາຄານໃນລະບົບ. ປະຈຸບັນ ທະນາຄານໃນລາວແມ່ນມີການປ່ອຍກູ້ປະເພດທີ່ມີໄລຍະເວລາ 3-12 ເດືອນໃຫ້ແກ່ກຸ່ມທຸລະກິດປະເພດດັ່ງກ່າວ, ເຖິງຢ່າງໃດກໍ່ຕາມເຫັນວ່າຍັງບໍ່ທັນພຽງພໍເທົ່າທີ່ຄວນ. ພ້ອມນີ້, ພາກ

ລັດຖະບານຕ້ອງໄດ້ເອົາໃຈໃສ່ໃນການຊີ້ນໍາ, ເບິ່ງແຍງ ແລະ ຊ່ວຍປະສານງານລະຫວ່າງບັນດາຈຸນລະວິສາຫະກິດ, ວິສາຫະກິດຈະໜາດນ້ອຍ ແລະ ກາງ ແລະ ຜູ້ມີສ່ວນຮ່ວມອື່ນໆໃນລະບົບການເງິນເຊັ່ນ: ສະມາຄົມການເງິນຈຸລະພາກລາວ ເພື່ອເຮັດໃຫ້ບັນດາກຸ່ມຜູ້ປະກອບການຮູ້ໄດ້ວ່າທຸລະກິດຕົນເໝາະສົມກັບແຫຼ່ງທຶນປະເພດໃດ.

ນອກຈາກບັນຫາຂ້າງເທິງແລ້ວ, ບັນດາຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ຍັງມີຄວາມຫຍຸ້ງຍາກໃນການແຂ່ງຂັນທາງຕະຫຼາດທັງຕະຫຼາດພາຍໃນ ແລະ ຕ່າງປະເທດ. ສໍາລັບຕະຫຼາດພາຍໃນປະເທດ ປະຈຸບັນແມ່ນເຕັມໄປດ້ວຍສິນຄ້າຈາກປະເທດເພື່ອນບ້ານ ແລະ ທັງມີລາຄາຖືກເນື່ອງຈາກເຂົາເຈົ້າມີການຜະລິດຈໍານວນຫຼາຍ. ແຕ່ສິນຄ້າລາວທີ່ຜະລິດໂດຍກຸ່ມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງຂອງ ສປປ ລາວ ພັດບໍ່ມີຄວາມອາດສາມາດໃນການແຂ່ງຂັນ ທັງໂຄງລ່າງພື້ນຖານຕ່າງໆກໍ່ບໍ່ເອື້ອອໍານວຍ. ສະນັ້ນ, ໂດຍລວມແລ້ວຈຸນລະວິສາຫະກິດ ແລະ ວິສາຫະກິດຂະໜາດນ້ອຍ ແລະ ກາງ ເຊິ່ງກວມເອົາ 90% ທຸລະກິດທັງໝົດໃນ ສປປ ລາວ, ຕ້ອງໄດ້ມີການສຸມໃສ່ຂະຫຍາຍຕະຫຼາດພາຍໃນກ່ອນ ແລະ ສໍາລັບຕະຫຼາດຕ່າງປະເທດແມ່ນເໝາະສົມສໍາລັບວິສາຫະກິດຂະໜາດກາງ.

ຕໍ່ກັບບັນຫາການແຂ່ງຂັນໃນຕະຫຼາດຕ່າງປະເທດ ເຫັນວ່າການຮວມໂຕກັນຂອງບັນດາຂະແໜງການຕ່າງໆ ແລະ ສ້າງເປັນລະບົບ ຫຼື ສະມາຄົມໃດໜຶ່ງແບບລວມສູນຂຶ້ນມາ ແມ່ນຈະສາມາດສ້າງຄວາມສາມາດໃນການແຂ່ງຂັນໄດ້. ລະບົບລວມສູນດັ່ງກ່າວແມ່ນປະກອບດ້ວຍບັນດາທຸລະກິດ, ພໍ່ຄ້າຊາວຂາຍ ແລະ ຊ່ຽວຊານຈາກຂະແໜງການນັ້ນໆ ຫຼື ພາກພື້ນນັ້ນໆ. ລະບົບດັ່ງກ່າວນີ້ໂດຍລວມແລ້ວຈະມີການໂຮມບັນດາຊັບພະຍາກອນ ແລະ ຂໍ້ມູນຂ່າວສານທີ່ກ່ຽວຂ້ອງ ເຊິ່ງຈະເປັນປະໂຫຍດຕໍ່ສະມາຊິກ. ການຮວມສູນໃນລັກສະນະນີ້ສາມາດສ້າງໃຫ້ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງໃນ ສປປ ລາວ ສາມາດແຂ່ງຂັນໃນເວທີພາຍໃນ ແລະ ສາກົນ ແລະ ທີ່ສໍາຄັນແມ່ນມັນອໍານວຍຄວາມສະດວກໃຫ້ວຽກງານສ້າງ ແລະ ສົ່ງເສີມຍີ່ຫໍ້ຜະລິດຕະພັນລາວ.

**ກໍລະນີສຶກສາ: ລະບົບທຸລະກິດແບບລວມສູນຂອງເຝີ Kuyteav ພະນົມເປນ**

ລະບົບທຸລະກິດແບບລວມສູນຂອງເຝີ Kuyteav ແມ່ນຖືກຍ້ອງຍໍ ແລະ ສົ່ງເສີມໂດຍກະຊວງການຄ້າຂອງປະເທດກໍາປູເຈຍ ໃນການກະຕຸກຊຸກຍູ້ການຜະລິດພາຍໃນປະເທດ ແລະ ປະກອບສ່ວນຕໍ່ການຂະຫຍາຍຕົວຂອງເສດຖະກິດແຫ່ງຊາດ. ລະບົບດັ່ງກ່າວໄດ້ຖືກສ້າງຂຶ້ນໂດຍສະມາຄົມພໍ່ຄົວຂອງປະເທດກໍາປູເຈຍ ເຊິ່ງມີຈຸດປະສົງເພື່ອສົ່ງເສີມຜະລິດຕະພັນເສັ້ນເຝີທີ່ຜະລິດຢູ່ພາຍໃນປະເທດກໍາປູເຈຍ ພາຍໃຕ້ຍີ່ຫໍ້ Uy Kuyteav ແລະ ຜະລິດຕະພັນດັ່ງກ່າວແມ່ນຢູ່ພາຍໃຕ້ການຜະລິດຂອງ ບໍລິສັດ ກຸ່ມແອລມອນການໂຮງແຮມ. ພາຍຫຼັງທີ່ຍີ່ຫໍ້ສິນຄ້າດັ່ງກ່າວໄດ້ຮັບການຍອມຮັບ, ບັນດາທຸລະກິດຂະໜາດນ້ອຍພາຍໃນປະເທດແມ່ນສາມາດນໍາໃຊ້ກົນໄກການຄວບຄຸມດ້ານຄຸນນະພາບ ແລະ ມາດຕະຖານຄວາມສະອາດຂອງຜະລິດຕະພັນດັ່ງກ່າວເຂົ້າໃນການຜະລິດສິນຄ້າຂອງພວກເຂົາ. ນອກນີ້, ຜະລິດຕະພັນເສັ້ນເຝີ Kuyteav ຍັງສາມາດດຶງດູດນັກທ່ອງທ່ຽວໃຫ້ມາຊີມ ແລະ ກິນອາຫານກໍາປູເຈຍ. ສະນັ້ນ, ມັນໄດ້ເປັນການສ້າງໂອກາດອັນດີໃຫ້ແກ່ຄົນພາຍໃນໃນການສ້າງລາຍໄດ້ ແລະ ທັງເປັນການເປີດຕະຫຼາດຈໍາໜ່າຍສິນຄ້າໃຫ້ແກ່ວິສາຫະກິດພາຍໃນຊາດ.

ການໃຫ້ການຊ່ວຍເຫຼືອ ແລະ ຊີ້ນໍາແນວທາງແມ່ນມີຄວາມຈໍາເປັນທີ່ສຸດໃນການທີ່ຈະເຮັດໃຫ້ວິສາຫະກິດຂະໜາດກາງະ ເຂົ້າໃຈໄດ້ເຖິງສັກກະຍະພາບຂອງຕົນເອງ. ໃນທາງດຽວກັນນີ້, ການທີ່ຈະເລັ່ງໃຫ້ວິສາຫະກິດປະເພດດັ່ງກ່າວມີການຂະຫຍາຍຕົວເພີ່ມຂຶ້ນ ກໍ່ຄວນມີການສະໜັບສະໜຸນດ້ານທຶນຮອນເພື່ອຊ່ວຍສ້າງສິ່ງອໍານວຍຄວາມ

ສະດວກໃຫ້ບັນດາທຸລະກິດ ໃຫ້ສາມາດເຂົ້າເຖິງບັນດາຂໍ້ມູນທີ່ສຳຄັນຕ່າງໆເຊັ່ນ: ຂໍ້ມູນມາດຕະຖານຄວາມປອດໄພດ້ານດ້ານອາຫານ ແລະ ຂໍ້ຄວນປະຕິບັດພື້ນຖານມີຄືແນວໃດ ເພື່ອຈະເຮັດໃຫ້ທູລະກິດສາມາດເຂົ້າເຖິງຕະຫຼາດຕ່າງປະເທດໄດ້. ພ້ອມນີ້, ຫົວໜ່ວຍທຸລະກິດຂອງຕ່າງຊາດທີ່ມີການກູ້ຢືມເງິນສ່ວນໃຫຍ່ກໍ່ມັກໄດ້ຮັບການຂະຫຍາຍເວລາໃນການຊຳລະເງິນກູ້. ສະນັ້ນແລ້ວ ການໃຫ້ການຊ່ວຍເຫຼືອຫົວໜ່ວຍທຸລະກິດຂະໜາດກາງໃນລາວແມ່ຍັງບໍ່ພຽງພໍ, ແຕ່ຄວນດຳເນີນການໄປຄຽງຄູ່ກັບການແນະນຳໃນການດຳເນີນທຸລະກິດທີ່ເໝາະສົມ ແລະ ຊ່ວຍໃນການຮູ້ຕົວຕົນ ຫຼື ທ່າແຮງຂອງທຸລະກິດຕົນເພີ່ມຂື້ນ. ນອກນີ້, ການຮ່ວມມືດ້ານເທັກນິກກັບສະຖານບັນການເງິນຕ່າງປະເທດເຊັ່ນ: ທະນາພັດທະນາອາຊີ ລວມໄປເຖິງບັນດາປະເທດໂລກທີ່ສາມປະເທດໂລກທີ່ສາມແມ່ນອາດເປັນປະໂຫຍດຕໍ່ການປະຕິບັດວຽກດັ່ງກ່າວ.

ເພື່ອຫຼຸດຜ່ອນການເຮັດວຽກຊ້ຳຊ້ອນກັນລະຫວ່າງກະຊວງແຜນການ ແລະ ການລົງທຶນ ແລະ ກະຊວງອຸດສາຫະກຳ ແລະ ການຄ້າ ພ້ອມກັບບັນດາຜູ້ມີສ່ວນຮ່ວມອື່ນໆເປັນຕົ້ນແມ່ນສະມາຄົມການເງິນຈຸນລະພາກລາວ ເຊິ່ງເຮັດໜ້າທີ່ໃນການສົ່ງເສີມການຂະຫຍາຍຕົວຂອງຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ, ກົມສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງແມ່ນມີສັກກະຍະພາບໃນການເປັນໜ່ວຍງານທີ່ຮັບຜິດຊອບວຽກງານນຳພາບັນທດາຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງໃຫ້ມີການພັດທະນາພາຍໃຕ້ການຊີ້ນຳຂອງກະຊວງອຸດສາຫະກຳ ແລະ ການຄ້າ.

*ການເຮັດໃຫ້ເຂດເສດຖະກິດພິເສດສ້າງໂຫຍດສູງສຸດ*

ຄຽງຄູ່ກັບການຟື້ນຟູ-ປັບປຸງຫ້ອງການບໍລິການປະຕູດຽວ, ມີຫຼາຍໆຈຸດທີ່ສາມາດປະຕິບັດໄດ້ເພື່ອໃຫ້ເຮັດໃຫ້ເຂດເສດຖະກິດພິເສດຂອງລາວມີສັກກະຍະພາບ ແລະ ໃຫ້ປະໂຫຍດສູງສຸດ, ເຊິ່ງສາມາດຈັດຕັ້ງປະຕິບັດໂດຍໜ່ວຍງານສະເພາະກິດທີ່ຂື້ນກັບກະຊວງແຜນການ ແລະ ການລົງທຶນ. ອັນທຳອິດແມ່ນການໂຄສະນາປະຊາສຳພັນຂໍ້ດີຫຼັກໆຂອງການລົງທຶນໃນເຂດເສດຖະກິດພິເສດໃນເວັບໄຊທ໌ *InvestLao* ເພື່ອດຶງດູດການລົງທຶນຈາກຕ່າງປະເທດ. ອັນທີສອງແມ່ນຍົກຈຸດດີຂອງການເປັນປະເທດເຊື່ອມຕໍ່ ຫຼື ມີຊາຍແດນຕິດຈອດກັບປະເທດຕ່າງໆເປັນຕົ້ນແມ່ນຈີນ, ໄທ, ຫວຽດນາມ ແລະ ກຳປູເຈຍ ເຊິ່ງມີຂໍ້ສະດວກຫຼາຍດ້ານໃນການສົ່ງອອກສິນຄ້າສູ່ຕ່າງປະເທດ ແລະ ຈະເຮັດໃຫ້ມີຕົ້ນທຶນການຂົນສົ່ງທີ່ຕ່ຳ.

ກໍລະນີສຶກສາ: ໂມເດວ ໄທບວກໜຶ່ງ

**ການຍ້າຍຖານການຜະລິດຂອງໂຮງງານສັນຊາດຢີ່ປຸ່ນອອກຈາກປະເທດຈີນ**

ການລະບາດຂອງພະຍາດຈຸລະໂລກສາຍພັນໃໝ່ ຫຼື Covid-19 ໄດ້ເຮັດໃຫ້ຕ່ອງໂສ້ການຜະລິດຂອງປະເທດຢີ່ປຸ່ນຍຸດຊະງັກ ແລະ ເກີດຄວາມເສຍຫາຍ. ປະເທດຢີ່ປຸ່ນ ເຊິ່ງປະຈຸບັນພວມມີການປັບປຸງປ່ຽນແປງຖານການຜະລິດຂອງຕົນເອງໂດຍທີ່ບໍ່ໃຫ້ມີການສຸມໃສ່ ຫຼື ຂື້ນກັບພຽງແຕ່ປະເທດໃດໜຶ່ງເຊັ່ນປະເທດຈີນເປັນຕົ້ນ. ການອຸ້ມຊູ ຫຼື ຖົມຊຸມຂອງປະເທດຈີນໃຫ້ແກ່ໂຮງຈັກໂຮງງານສັນຊາດຢີ່ປຸ່ນເພື່ອເຮັດໃຫ້ມູນຄ່າການ

ເຄື່ອນຍ້າຍສິນຄ້າໄປສູ່ປະເທດຍີ່ປຸ່ນ ແລະ ປະເທດໃນອາຊີອາຄະເນ ຢູ່ໃນລະດັບຕໍ່າແມ່ນຈະເປັນໂອກາດໃຫ້ກັບ ສປປ ລາວໃນການໝູນໃຊ້ບົດຮຽນດັ່ງກ່າວເຂົ້າໃນໂມເດວໄທບວກໜຶ່ງ. ບັນດາຫົວໜ່ວຍທຸລະກິດສັນຊາດຍີ່ປຸ່ນແມ່ນສາມາດຖືກຈູງໃຈໃຫ້ຍ້າຍຖານການຜະລິດມາສູ່ເຂດເສດຖະກິດພິເສດຂອງປະເທດລາວໄດ້, ເຊິ່ງການຫຼຸດຜ່ອນອາກອນໃຫ້ແກ່ນັກລົງທຶນຍີ່ປຸ່ນຄືຍຸດທະສານທີ່ຈະນໍາໃຊ້ເພື່ອດຶງດູດນັກລົງທຶນ. ທັງນີ້ທີ່ຜ່ານມາສະມາຄົມຄົນຍີ່ປຸ່ນໃນລາວກໍ່ເຄີຍກ່າວວ່າການລັງຄັບໃຊ້ກົດໝາຍ ແລະ ລະບຽບຕ່າງໆໃຫ້ມີລັກສະນະເຂັ້ມແຂງຈະເຮັດໃຫ້ ສປປ ລາວ ເປັນປະເທດທີ່ດຶງດູດການລົງທຶນຈາກຕ່າງປະເທດ. ຍິ່ງໄປກວ່ານັ້ນຫ້ອງການບໍລິການປະຕູດຽວໃນບັນດາຂົງເຂດເສດຖະກິດພິເສດກໍ່ຍິ່ງຈະເປັນຈຸດທີ່ຄວນເອົາໃຈໃສ່ ເພື່ອເຮັດໃຫ້ການລົງທຶນໃນລາວມີຄວາມສະດວກສະບາຍ ແລະ ໜ້າລົງທຶນ.

**ກໍລະນີສຶກສາ: ສ້າງຄວາມເຂົ້າໃຈກ່ຽວກັບວິທີການດຶງດູດນັກລົງທຶນຕ່າງປະເທດໃນຂົງເຂດທະວີເອເຊຍຂອງປະເທດຫວຽດນາມ**

ເມື່ອບໍ່ດົນມານີ້ ປະເທດຫວຽດນາມໄດ້ກາຍເປັນປະເທດທີ່ໄດ້ຮັບຄວາມນິຍົມສໍາລັບນັກລົງທຶນຕ່າງປະເທດໃນການເຂົ້າໄປລົງທຶນທີ່ປະເທດດັ່ງກ່າວໂດຍສະເພາະແມ່ນການໄປລົງທຶນຂອງນັກລົງທຶນສັນຊາດຈີນ ທີ່ໄດ້ມີການຍ້າຍຖານການຜະລິດຈາກຈີນໄປສູ່ປະເທດຫວຽດນາມເນື່ອງຈາກຄ່າແຮງງານມີລາຄາຖືກກວ່າ, ທີ່ຕັ້ງທາງດ້ານພູມສາດກໍ່ເອື້ອອໍານວຍ ຫຼື ບໍ່ໄກຈາກປະເທດຈີນຫຼາຍ ແລະ ປະເທດຫວຽດນາມຍັງໄດ້ຮັບບູລິມະສິດດ້ານການຄ້າຈາກຫຼາຍໆປະເທດໃນໂລກ. ການເພີ່ມຂຶ້ນຂອງກະແສການລົງທຶນຈາກຕ່າງປະເທດເຂົ້າໄປໃນປະເທດຫວຽດນາມໄດ້ເຮັດໃຫ້ຫວຽດນາມກາຍເປັນປະເທດທີ່ມີອັດຕາການຂະຫຍາຍໂຕຂອງເສດຖະກິດເພີ່ມຂຶ້ນຢ່າງໄວວາ ເຊິ່ງອັດຕາການຂະຫຍາຍຕົວຂອງເສດຖະກິດໃນປີ 2019 ແມ່ນ 7%. ບັນດານັກລົງທຶນ. ສະພາບແວດລ້ອມທີ່ດີຂອງປະເທດຫວຽດນາມໄດ້ດຶງດູດນັກລົງທຶນຈາກຕ່າງປະເທດ ແລະ ນັກລົງທຶນໃນປະເທດຈີນໃຫ້ເຂົ້າໄປລົງທຶນຢູ່ຫວຽດນາມ ເຊິ່ງບັນດາປັດໄຈແມ່ນມີດັ່ງນີ້:

- ມີຄວາມໄດ້ປຽບປຽບທຽບດ້ານແຮງງານ ຫຼື ຕົ້ນທຶນດ້ານແຮງງານ ເຊິ່ງມີມູນຄ່າທີ່ຖືກທີ່ສຸດໃນຂົງເຂດ
- ມີອາກອນລາຍໄດ້ທຸລະກິດທີ່ຕໍ່າ ແລະ ຍັງກໍານົດອັດຕາອາກອນລາຍໄດ້ທຸລະກິດໃຫ້ແກ່ບາງຂະແໜງການ
- ການເກັບອາກອນແບບຊໍ້າຊ້ອນ ແລະ ສັນຍາການຄ້າເສລີລະຫວ່າງສະຫະພາບເອີຣົບ ແລະ ຫວຽດນາມກໍ່ໄດ້ຮັບການສະຫຼຸບເມື່ອບໍ່ດົນມານີ້
- ມີເຂດເສດຖະກິດຊາຍຝັ່ງທີ່ມີອັດຕາອາກອນລາຍຮັບທຸລະກິດທີ່ຕໍ່າ ແລະ ມີອາກອນມູນຄ່າເພີ່ມທີ່ຕໍ່າ
- ຫວຽດນາມຍັງຖືກຈັດອັນດັບຄວາມງ່າຍດາຍໃນການດໍາເນີນທຸລະກິດໃນອັນດັບທີ 70 ຈາກ 190 ປະເທດທົ່ວໂລກ.

ເພື່ອຮັບປະກັນຄວາມຍືນຍົງຂອງບັນດາເຂດເສດຖະກິດພິເສດ, ການຈ້າງແຮງງານພາຍໃນປະເທດຄວນຖືກສົ່ງເສີມໂດຍການສະໜັບສະໜູນນັກລົງທຶນໃຫ້ຈ້າງງານຄົນພາຍໃນ ຫຼື ທ້ອງຖິ່ນທີ່ມີຄວາມຮູ້-ຄວາມສາມາດໂດຍຜ່ານຂະບວນການຈັດຫາງານທີ່ມີປະສິດທິພາບ ແລະ ສົ່ງເສີມໃຫ້ມີການການສ້າງທັກສະ-ສີມືແຮງງານໃຫ້ແກ່ແຮງງານພາຍໃນຢ່າງຕໍ່ເນື່ອງ. ໂຄງການຂອງບັນດາກະຊວງທີ່ເຮັດຮ່ວມກັນເພື່ອການພັດທະນາລະບົບຂໍ້ມູນຂ່າວສານຕະຫຼາດແຮງງານແມ່ນຈຸດທຳອິດທີ່ຕ້ອງເລີ່ມຕົ້ນ. ການພັດທະນາດັ່ງກ່າວສາມາດສຳເລັດໄດ້ ຖ້າມີຖານຂໍ້ມູນສູນກາງທີ່ມີຂໍ້ມູນຄວາມຕ້ອງການຂອງບັນດາໂຄງການລົງທຶນ ເຊິ່ງຈະເຮັດໃຫ້ຫ້ອງການຄຸ້ມຄອງເຂດເສດຖະກິດພິເສດສາມາດລະບຸບຸກຄະລາກອນກັບທັກສະດ້ານໃດແດ່ທີ່ຈະໃຊ້ເຂົ້າໃນການດຳເນີນວຽກງານ. ຫ້ອງການຄຸ້ມຄອງເຂດເສດຖະກິດພິເສດສາມາດສ້າງຕັ້ງໂຮງຮຽນ ແລະ ສ້າງຊຸດຝຶກອົບຮົມສີມືແຮງງານສະເພາະດ້ານທີ່ແທດເໝາະກັບຄວາມຕ້ອງການໃນປະຈຸບັນໄດ້. ການຝຶກອົບຮົມໃຫ້ແຮງງານພາຍໃນປະເທດຄວນຖືກຊ່ວຍເຫຼືອຈາກພາກລັດ. ໃນໄລຍະຍາວ, ນອກຈາກຈະພຽງແຕ່ເອື່ອຍອີງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນຢ່າງດຽວ, ພັນທະເພີ່ມເຕີມວ່າດ້ວຍການຈ້າງງານຄົນທ້ອງຖິ່ນແມ່ນສາມາດເພີ່ມເຂົ້າໃນດຳລັດວ່າດ້ວຍເຂດເສດຖະກິດພິເສດເພື່ອເຮັດໃຫ້ນັກລົງທຶນຕ້ອງມີການຈ້າງງານແຮງງານພາຍໃນ.

ນອກນີ້ເພື່ອສ້າງຜົນປະໂຫຍດສູງສຸດໃຫ້ແກ່ປະເທດ, ອີກດ້ານໜຶ່ງລັດຖະບານລາວຄວນຂໍການຊ່ວຍເຫຼືອຈາກບໍລິສັດຕ່າງຊາດ ໃຫ້ມີການຖອດຖອນບົດຮຽນ ແລະ ຝຶກອົບຮົມໂດຍບໍລິສັດຕ່າງປະເທດທີ່ມີຄວາມຊ່ຽວຊານສະເພາະດ້ານ ແລະ ມີຄວາມເປັນມືອາຊີບ ໃຫ້ແກ່ແຮງງານຄົນລາວ ລວມທັງບໍລິສັດຫ້າງຮ້ານໃນປະເທດລາວ.




ຫຼັກສູດການຝຶກອົບຮົມຂອງບໍລິສັດໂຕໂຢ້ຕ້າທີ່ເປັນການຝຶກອົບຮົມດ້ານການຊ່າງກ່ອນການຈົບການສຶກສາເພື່ອເປັນການຖອດຖອນບົດຮຽນຕົວຈິງ ແລະ ກຽມຄວາມພ້ອມໃຫ້ແກ່ໄວໜຸ່ມກ່ອນທີ່ຈະກ້າວໄປເປັນພະນັກງານ ຫຼື ແຮງງານໃນອະນາຄົດ ກໍ່ ແມ່ນໜຶ່ງໃນກໍລະນີຕົວຢ່າງ ໃນການພິຈາລະນາການຮ່ວມມືດ້ານການຈັດຈ້າງແຮງງານໄວໜຸ່ມໃຫ້ແກ່ພາກລັດຖະບານ. ສຳລັບອຸປະສັກດ້ານພາສາຕ່າງປະເທດນັ້ນແມ່ນສາມາດຮັບມື ຫຼື ແກ້ໄຂໄດ້ໂດຍການລະບຸວ່າວຽກງານ ຫຼື ຂະແໜງການໃດແດ່ທີ່ຈຳເປັນຈະຕ້ອງໄດ້ປະຕິບັດຕາມຄູ່ມື-ຄຳແນະນຳ ແລະ ເຂົ້າໃຈທຸກປະໂຫຍກແບບຖືກຕ້ອງ ແລະ ຊັດເຈນທີ່ສຸດ, ໃນກໍລະນີໜ້າວຽກໃດມີຄວາມຕ້ອງການແບບນີ້ ກໍ່ໃຫ້ຈັດສັນບຸກຄະລາກອນທີ່ມີຄວາມເຂົ້າໃຈດ້ານພາສາຕ່າງໄປເທດໄປຊ່ວຍສອນ. ນອກນີ້, ນາຍແປພາສາສຳລັບແຕ່ລະຂະແໜງການທີ່ແຕກຕ່າງກັນກໍ່ໃຫ້ມີການຈັດຫາ ຫຼື ແຕ່ງຕັ້ງມາຊ່ວຍເພີ່ມເຕີມ. ສະຫຼຸບແມ່ນການຝຶກອົບຮົມ ແລະ ພັດທະນາບຸຄະລາກອນໃນລັກສະນະນີ້ຈະຊ່ວຍເຮັດໃຫ້ຂະບວນການຈັບຄູ່ວຽກງານ ຫຼື ການຊອກຫາຄົນທີ່ເໝາະກັບໜ້າວຽກນັ້ນ ຈະເປັນໄປຢ່າງມີປະສິດພາບ ແລະ ປະສິດທິຜົນເພີ່ມຂຶ້ນ.

ສຸດທ້າຍນີ້, ການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງພາຍໃນປະເທດ ຄວນເຮັດໄປຄຽງຄູ່ກັນກັບການພັດທະນາຊຸກຍູ້ບັນດາເຂດເສດຖະກິດພິເສດ. ການສົ່ງເສີມໃຫ້ວິສາຫະກິດຂະໜາດນ້ອຍ ແລະ ກາງໃຫ້ມີການ

ເຊື່ອມໂຍງເຂົ້າໄປໃນຕ່ອງໂສ້ການຜະລິດຂອງບັນດາບໍລິສັດໃນເຂດເສດຖະກິດພິເສດຈະເປັນໂອກາດອັນດີໃຫ້ແກ່ວິສາຫະກິດຂະໜາດນ້ອຍ ແລະ ກາງ ໄດ້ປັບປຸງສັກກະຍາພາບຂອງເຂົາ ແລະ ໃນຂະນະດຽວກັນກໍ່ເປັນການຫຼຸດຕົ້ນທຶນສຳລັບບັນດາໂຄງການລົງທຶນຕ່າງໆ.

ການຈ້າງງານວິສາຫະກິດຂະໜາດນ້ອຍ ແລະ ກາງຂອງບັນດານັກລົງທຶນແມ່ນຜົນດີຫຼາຍດ້ານ ແລະ ແນ່ນອນວ່າໜຶ່ງໃນນັ້ນກໍ່ແມ່ນການຈ້າງງານທີ່ເພີ່ມຂຶ້ນ. ຂັ້ນຕອນທຳອິດ ລັດຖະບານສາມາດ ແລະ ຄວນອຳນວຍຄວາມສະດວກໃນການເຊື່ອມຕໍ່-ປະສານງານລະຫວ່າງສອງຝ່າຍໃນເບື້ອງຕົ້ນເພື່ອເປັນການສົ່ງເສີມ ແລະ ຈູງໃຈໃຫ້ນັກລົງທຶນມີການຈ້າງງານວິສາຫະກິດຂະໜາດນ້ອຍ ແລະ ກາງພາຍໃນປະເທດ ເຊິ່ງປະເດັນດັ່ງກ່າວນີ້ແມ່ນເຮັດໃຫ້ເຫັນເຖິງສັກກະຍາພາບຂອງການເຮັດວຽກຮ່ວມກັນແບບລວມສູນຂອງບັນດາກະຊວງກ່ຽວຂ້ອງ. ເຖິງຢ່າງໃດກໍ່ຕາມ, ການທີ່ຈະເຮັດໃຫ້ບັນດາວິສາຫະກິດຂະໜາດນ້ອຍ ແລະ ກາງໄດ້ຮັບຜົນປະໂຫຍດສູງສຸດຈາກການເປັນຄູ່ຮ່ວມທຸລະກິດໄລຍະຍາວລະຫວ່າງສອງຝ່າຍນັ້ນ ລັດຖະບານຕ້ອງໄດ້ເພີ່ມຄວາມເອົາໃຈໃສ່ຂຶ້ນຕື່ມໃນການສົ່ງເສີມຄວາມອາດສາມາດຂອງບັນດາວິສາຫະກິດດັ່ງກ່າວໃນໄລຍະກາງ ແລະ ໄລຍະຍາວ.

## 2) ການສ້າງຄວາມໄດ້ປຽບ

*ເສັ້ນທາງລົດໄຟລາວ-ຈີນ*

ເສັ້ນທາງລົດໄຟລາວ-ຈີນ ແມ່ນໂອກາດທີ່ສຳຄັນທີ່ສຸດສຳລັບ ສປປ ລາວ ໃນການທີ່ຈະພັດທະນາປະເທດໄດ້ຢ່າງໄວວາ, ທັງໃນລະດັບມະຫາພາກ ແລະ ໃນການກະຕຸ້ນການພັດທະນາໃນເຂດທ້ອງຖິ່ນທີ່ຕັ້ງຢູ່ຕາມແລວທາງຂອງເສັ້ນທາງລົດໄຟ. ເຖິງຢ່າງໃດກໍ່ຕາມເມື່ອພິຈາລະນາຫຼາຍປະເດັນລວມທັງລາຍລະອຽດຂອງແຜນງານທີ່ກ່ຽວຂ້ອງຢ່າງຖີ່ຖ້ວນແລ້ວ, ເສັ້ນທາງລົດໄຟບໍ່ມີພຽງແຕ່ດ້ານດີ ແຕ່ມັນກໍ່ມີສິ່ງທ້າທາຍ ແລະ ມີບາງຈຸດທີ່ໜ້າເປັນຫ່ວງຢູ່.




<u>ຂໍ້ທີ 1:</u> ໃນເບື້ອງຕົ້ນ ສປປ ລາວ ຄວນຈັດຕັ້ງປະຕິບັດການປະເມີນກ່ຽວກັບສິນຄ້າທີ່ຕົນ ຫຼື ພາຍໃນປະເທດສາມາດຜະລິດໄດ້ ເພື່ອຕ້ານການນຳເຂົ້າສິນຄ້າປະເພດດຽວກັນນັ້ນເຂົ້າມາໃນປະເທດ. ວິທີການແບບປະສົມປະສານແມ່ນອີກໜຶ່ງວິທີທີ່ຖືກແນະນຳໃຫ້ມີການຈັດຕັ້ງປະຕິບັດ, ວິທີການປະສົມປະສານນີ້ແມ່ນການພິຈາລະນາວ່າພາຍໃນປະເທດມີຄວາມຕ້ອງການສິນຄ້າປະເພດໃດ ແລະ ສິນຄ້າປະເພດໃດທີ່ປະເທດຕົນມີທ່າແຮງ ຕົວຢ່າງເຊັ່ນ: ສປປ ລາວ ມີຄວາມຕ້ອງການສິນຄ້າປະເພດເມັດພືດ, ໝາກໄມ້ ແລະ ເນື້ອສັດ ຈາກ ສປປ ຈີນ ແລະ ໃນຂະນະດຽວກັນຜະລິດຕະພັນຈາກກາເຟ, ຊາ ແລະ ໝາກງາກ ແມ່ນຜະລິດຕະພັນທີ່ຈີນຕ້ອງການນຳເຂົ້າ. ຕໍ່ມາແມ່ນການການວິເຄາະແບບລົງເລິກ ເຊິ່ງຂັ້ນຕອນສຳຫຼວດ-ປະເມີນເບື້ອງຕົ້ນແມ່ນຄວນສຶກສາໃຫ້ຮູ້ໄດ້ເຖິງຄວາມຕ້ອງການ ແລະ ຄວາມມັກຂອງຜູ້ບໍລິໂພກຄົນຈີນທີ່ຢູ່ຕາມແນວຊາຍແດນລາວ-ຈີນ. ວຽກງານນີ້ຈະຊ່ວຍໃຫ້ປະເທດລາວສາມາດກະກຽມຄວາມພ້ອມໃນການຜະລິດສິນຄ້າໃຫ້ໄດ້ຕາມຄວາມຕ້ອງການຂອງຜູ້ບໍລິໂພກໄດ້ຢ່າງມີປະສິດທິພາບ. ວຽກງານການສຳຫຼວດດັ່ງກ່າວນີ້ສາມາດປະຕິບັດພາຍໃຕ້ການນຳພາຮ່ວມກັນລະຫວ່າງກະຊວງແຜນການ ແລະ ການລົງທຶນ ແລະ ກະຊວງອຸດສາຫະກຳ ແລະ ການຄ້າ, ເຊິ່ງການປະຕິບັດນີ້ຈະໃຫ້ໄດ້ຜົນໄດ້ຮັບທີ່ມີຄວາມສອດຄ່ອງກັບຜົນໄດ້ຮັບຂອງແຜນພັດທະນາແຫ່ງຊາດ.

<u>ຂໍ້ທີ 2:</u> ສປປ ລາວ ສາມາດຊຸກຍູ້ສົ່ງເສີມຂະແໜງການສຳຮອງອື່ນໆເຊັ່ນ ການພັດທະນາຂະແໜງໂລຈິສຕິກ ແລະ ໂຄງລ່າງພື້ນຖານ, ເຊິ່ງວຽກງານດັ່ງກ່າວຄວນຊີ້ນຳໂດຍກະຊວງແຜນການ ແລະ ການລົງທຶນ ຮ່ວມກັບກະຊວງຄົມມະນາຄົມ. ເສັ້ນທາງຄົມມະນາຄົມ, ຖະໜົນຫົນທາງທີ່ເປັນໂຄງລ່າງພື້ນຖານຢູ່ບໍລິເວນເສັ້ນທາງລົດໄຟຕ້ອງໄດ້ຖືກພັດທະນາ. ສຳລັບຜູ້ຜະລິດພາຍໃນທີ່ມີທຸລະກິດຕັ້ງຢູ່ເຂດພາກເໜືອ, ເຊິ່ງເປັນເຂດທີ່ມີຜົນຜະລິດກະສິກຳຕ່ຳກວ່າເຂດພາກກາງ ແລະ ພາກໃຕ້ ກໍ່ຈະຖືກເຊື່ອມໂຍງ ແລະ ຖືວ່າມີທີ່ຕັ້ງທີ່ໃກ້ກັບຕ່າງປະເທດຫຼາຍຂຶ້ນ. ທັງນີ້ກໍ່ຈະເປັນໂອກາດອັນດີໃຫ້ແກ່ຄົນທ້ອງຖິ່ນໃນການຄ້າຂາຍ.

ເຂດພັດທະນາໃໝ່ ຫຼື ເຂດເສດຖະກິດພິເສດໃໝ່ສາມາດສ້າງຕັ້ງຂຶ້ນໄດ້ເພື່ອເປັນການໝູນໃຊ້ຄວາມໄດ້ປຽບທາງພູມສັນຖານໃຫ້ເກີດປະໂຫຍດໃນການເຮັດທຸລະກິດ. ການສ້າງໂຄງລ່າງພື້ນຖານທີ່ມີການເຊື່ອມຕໍ່ດ້ານໂລຈິສຕິກທີ່ດີ ລວມໄປເຖິງການມີລະບົບຕ່ອງໂສ້ການສະໜອງຢູ່ໃນບໍລິເວນທີ່ມີເສັ້ນທາງລົດໄຟ ຈະເຮັດໃຫ້ລາວມີ

ສະຖານະພາບທີ່ດີ ຫຼື ມີຄວາມເປັນໄປໄດ້ທີ່ຈະປຸ່ງນປະເທດລາວໃຫ້ກາຍເປັນສູນລວມການຂົນສົ່ງທີ່ບັນດານັກລົງທຶນຕ່າງປະເທດມີຄວາມຕ້ອງການທີ່ຈະນຳໃຊ້ລາວໃນການເປັນຈຸດທີ່ເຂົ້າເຖິງການຄ້າຂາຍກັບປະເທດຈີນໂດຍກົງ. ພ້ອມນີ້, ຖ້າຫາກວ່າມາດຕະຖານການດຳເນີນການດ້ານຄົມມະນາຄົມ-ຂົນສົ່ງຢູ່ປະເທດລາວໄດ້ຮັບການປັງປຸງໃຫ້ດີຂຶ້ນ, ບັນດາທຸລະກິດພາຍໃນປະເທດກໍ່ຈະໄດ້ຮັບຜົນປະໂຫຍດ ເນື່ອງຈາກບັນດາຊາວກະສິກອນພາຍໃນກໍ່ຈະຫັນມາເລືອກໃຊ້ບໍລິການຈາກຄົນລາວ ແລະ ນີ້ກໍ່ຄືການກະຕຸ້ນກົນໄກຂອງການທີ່ຄົນພາຍໃນສ້າງ ແລະ ສະໜັບສະໜູນຄົນພາຍໃນຊາດດ້ວຍກັນ.

ຂໍ້ທີ 3: ອີງຕາມການປະກອບຄຳເຫັນຈາກປະຊາຊົນໃນປະຈຸບັນນີ້ແມ່ນເຫັນວ່າບັນດາທຸລະກິດໃນລາວບໍ່ມີຄວາມອາດສາມາດທີ່ຈະເຮັດການຜະລິດເພື່ອໃຫ້ຕອບສະໜອງໄດ້ຕາມຄວາມຕ້ອງການຂອງຕະຫຼາດປະເທດຈີນ ຫຼື ແມ້ແຕ່ໂອກາດທີ່ຈະຈັດຕັ້ງປະຕິບັດຂະບວນການຜະລິດໄດ້. ພວກເຂົາຍັງຕ້ອງການການຊ່ວຍເຫຼືອເພີ່ມເຕີມຈາກກະຊວງແຜນການ ແລະ ການລົງທຶນ ໃນການທີ່ຈະເອົາຊະນະບັນດາອຸປະສັກທີ່ບໍ່ແມ່ນພາສີ ລວມໄປເຖິງການເອົາຊະນະບັນດາບໍລິສັດຫ້າງຮ້ານທີ່ມີນາຍທຶນຕ່າງປະເທດຢູ່ເບື້ອງຫຼັງ ຫຼື ເປັນເຈົ້າຂອງຢູ່ ທັງນີ້ກໍ່ເພື່ອໃຫ້ປະສົບຜົນສຳເລັດໃນການສົ່ງອອກສິນຄ້າໄປຍັງປະເທດຈີນ. ສິ່ງທ້າທາຍດັ່ງກ່າວນີ້ໄດ້ສ້າງຄວາມວິຕົກກັງວົນໃຫ້ແກ່ລາວກ່ຽວກັບການຈະມີເສັ້ນທາງລົດໄຟ.

ເພື່ອຮັບມືກັບສິ່ງທ້າທາຍດັ່ງກ່າວທີ່ຖືກຍົກຂຶ້ນມານັ້ນ, ສປປ ລາວ ສາມາດຈັດຕັ້ງປະຕິບັດບາງຈຸດພາຍໃຕ້ການຮ່ວມຮ່ວມຢ່າງໃກ້ຊິດກັບກະຊວງແຜນການ ແລະ ການລົງທຶນລວມໄປເຖິງກະຊວງອຸດສາຫະກຳ ແລະ ການຄ້າ ເຊິ່ງລາຍລະອຽດແມ່ນມີດັ່ງນີ້:

(i) ສ້າງຄວາມອາດສາມາດໂດຍການຈັດຝຶກອົບຮົມໃຫ້ແກ່ທຸລະກິດ ແລະ ການສ້າງສະຖານະການຈຳລອງ ແລະ ແຜນຮອງຮັບ. (ii) ສືບຕໍ່ການເຊື່ອມໂຍງກັບບັນດາປະເທດໃນພາກພື້ນພາຍ ແລະ ໃຫ້ສາມາດຄວບຄຸມໄດ້

(iii) ເນັ້ນໃສ່ການຄວບຄຸມຄຸນນະພາບຊາຍແດນ

(iv) ເຊື່ອມຊ່ອງຫວ່າງດ້ານຂໍ້ມູນຂ່າວສານໂດຍການນຳໃຊ້ຖານຂໍ້ມູນ ຫຼື ຈຸດຕິດຕໍ່ປະສານງານ.

ແຜນ ແລະ ໂຕແບບເສດຖະກິດສາມາດສ້າງຂຶ້ນເພື່ອໃຫ້ເຫັນພາບລວມຂອງຜົນປະໂຫຍດທີ່ມີຕໍ່ບັນດາທຸລະກິດພາຍໃນປະເທດ. ການຈັດສຳມະນາ ແລະ ຝຶກອົບຮົມຕ່າງໆແມ່ນສາມາດຈັດຂຶ້ນເພື່ອຊ່ວຍບັນດາທຸລະກິດ ລວມໄປເຖິງປະຊາຊົນໃຫ້ມີຄວາມເຂົ້າໃຈເລິກເຊິ່ງກວ່າເດີມກ່ຽວກັບການນຳໃຊ້ ຫຼື ໝູນໃຊ້ເສັ້ນທາງລົດໄຟດັ່ງກ່າວ. ນອກນີ້, ບັນດາຫົວໜ່ວຍທຸລະກິດ ຍັງຕ້ອງການການຊ່ວຍເຫຼືອໃນການສ້າງຄວາມຮູ້-ຄວາມເຂົ້າໃຈກ່ຽວກັບມາດຕະຖານຂອງຈີນ ເພື່ອທີ່ຈະໄດ້ພັດທະນາຄວາມອາດສາມາດຂອງສິນຄ້າ ແລະ ການຜະລິດຂອງຕົນເພື່ອໃຫ້ຕອບສະໜອງໄດ້ຕາມຄວາມຕ້ອງການ ແລະ ມາດຕະຖານດັ່ງກ່າວ.

**ການຊຸກຍູ້ການເຮັດກະສິກຳ**

ໃນຂະນະທີ່ ສປປ ລາວ ພວມມີການສືບຕໍ່ພັດທະນາໂຄງລ່າງພື້ນຖານທີ່ຈຳເປັນ ແລະ ສ້າງຄວາມອາດສາມາດໃຫ້ແກ່ຊັບພະຍາກອນມະນຸດເພື່ອການສ້າງຕັ້ງບັນດາອຸດສາຫະກຳ-ໂຮງຈັກໂຮງງານ, ສປປ ລາວ ກໍ່ຄວນຈະຍົກສູງຂໍ້ໄດ້ປຽບ ແລະ ຈຸດແຂງຂອງຕົນເພື່ອທີ່ຈະພັດທະນາມັນໃຫ້ໄດ້ດີກວ່າປະເທດເພື່ອນບ້ານ.

ເພື່ອໃຫ້ສອດຄ່ອງກັບການຮັບຮອງແຜນຍຸດທະສາດເຕີບໂຕສີຂຽວແຫ່ງຊາດ (ປີ 2030) ໃນເດືອນ ກຸມພາ 2019 ທີ່ຜ່ານມາ, ສປປ ລາວ ຄວນຈະສຸມໃສ່ສ້າງຂະແໜງການກະສິກຳ ແລະ ໂຄງລ່າງພື້ນຖານທີ່ຍືນຍົງ ແລະ ເຂັ້ມແຂງ ທັງໃນປະຈຸບັນ ແລະ ອະນາຄົດ ແລະ ວຽກງານດັ່ງກ່າວນີ້ກໍ່ຄວນພັດທະນາໂດຍກະຊວງແຜນການ ແລະ ການລົງທຶນ ແລະ ກະຊວງອຸດສາຫະກຳ ແລະ ການຄ້າ ຮ່ວມກັບກະຊວງກະສິກຳ ແລະ ປ່າໄມ້. ບັນດາແຜນພັດທະນາບຸລິມະສິດສະເພາະໃນແຕ່ລະດ້ານຕ້ອງຖືກພັດທະນາໄປຄຽງຄູ່ກັນ ເພື່ອກະຈາຍການພັດທະນາໄປຫຼາຍກວ່າການສ້າງອຸດສາຫະກຳທີ່ອີງຕາມສີມືແຮງງານສະເພາະດ້ານເທົ່ານັ້ນ. ຂະແໜງການກະສິກຳແມ່ນຂະແໜງການທີ່ມີທ່າແຮງສຳລັບການລົງທຶນ, ເຊິ່ງກໍ່ກວມເອົາສ່ວນໃຫຍ່ຂອງອັດຕາສ່ວນການລົງທຶນຈາກຕ່າງປະເທດ ຫຼື ປະມານ 11.6% ຂອງສະຖິຕິການລົງທຶນຈາກຈ່າງປະເທດໃນປີ 1989 ເຖິງ 2019.

| ອາຫານ | |
|---|---|
| | • ສິນຄ້າສົ່ງອອກໃນປະຈຸບັນປະກອບດ້ວຍວັດຖຸດິບເຊັ່ນ: ໝາກໄມ້, ຖົ່ວ, ສາລີ, ເຂົ້າ, ມັນຕົ້ນ,ເຄື່ອງດື່ມ, ກາເຟ ແລະ ຊາ.<br>• ໃນປີ 2017, ການສົ່ງອອກສິນຄ້າດັ່ງກ່າວກວມເອົາອັດຕາສ່ວນເຖິງ 30% ຂອງມູນຄ່າການຄ້າຜະລິດຕະພັນກະສິກຳ.<br>• ປະເທດໄທ, ຈີນ ແລະ ຫວຽດນາມແມ່ນປະເທດຈຸດໝາຍປາຍທາງຂອງການສົ່ງອອກສິນຄ້າອາຫານ, ໃນນັ້ນປະເທດໄທແມ່ນປະເທດອັນດັບ 1 ທີ່ຈະມີການນຳເຂົ້າຜັກປອດສານພິດ ແລະ ຜັກກິນຮາກໄດ້. |

ຂໍ້ທຳອິດ, ສປປ ລາວ ຈະຕ້ອງຕັ້ງເປົ້າໝາຍວ່າຈະເພີ່ມການຜະລິດສິນຄ້າກະສິກຳທີ່ມີຄວາມພິເສດກວ່າປົກກະຕິເຊັ່ນ: ອາຫານປອດສານພິດ, ເມັດທັນຍາພືດທີ່ມີມູນຄ່າສູງ ເພື່ອທີ່ຈະເພີ່ມມູນຄ່າໃຫ້ຕ່ອງໂສ້ການຜະຫຼິດເຊັ່ນ: ກາເຟ (ເບິ່ງ Annex ຫຼື ເອກະສານຊ້ອນທ້າຍທີ 3). ສິນຄ້າປອດສານພິດ ແລະ ມີຄຸນນະພາບດີຂອງລາວເຊັ່ນ: ໃບຊາ ເຊິ່ງແມ່ນຜະລິດຕະພັນກະສິກຳທີ່ນອນຢູ່ໃນລະດັບກາງໄປຖືງລະດັບດີທີ່ສຸດ, ໂດຍໄດ້ເຮັດໃຫ້ ສປປ ລາວ ໄດ້ເພີ່ມມູນຄ່າໃຫ້ແກ່ຕ່ອງໂສ້ການຜະລິດຂອງທຸລະກິດກະສິກຳ ເຊິ່ງກໍ່ໄດ້ສອດຄ່ອງກັບຍຸດທະສາດການເຕີບໂຕສີຂຽວຂອງລັດຖະບານ. ພ້ອມດຽວກັນນີ້, ການຜະລິດສິນຄ້າໃນລັກສະນະດັ່ງກ່າວມັນໄດ້ເຮັດໃຫ້ ສປປ ລາວມີຄວາມແຕກຕ່າງຈາກບັນດາປະເທດຄູ່ແຂ່ງອ້ອມຂ້າງເຊັ່ນ: ປະເທດໄທ ແລະ ປະເທດຫວຽດນາມ. ການມີແຮງງານທີ່ຫຼາຍກວ່າ, ເທັກໂນໂລຢີທີ່ທັນສະໄຫມກວ່າ ແລະ ທ່າແຮງການຂະຫຍາຍຕະຫຼາດທີ່ຫຼາຍກວ່າຂອງປະເທດເພື່ອນບ້ານຂອງ ສປປ ລາວ ໄດ້ເຮັດໃຫ້ປະເທດເລົ່ານັ້ນສາມາດຜະລິດ ແລະ ສົ່ງອອກສິນຄ້າຄຸນນະພາບຕ່ຳໃນບໍລິມາດທີ່ຫຼາຍໆໄດ້. ເຖິງຢ່າງໃດກໍ່ຕາມ, ຖ້າຫາກມີການເປີດນຳໃຊ້ເສັ້ນທາງລົດໄຟລາວ-ຈີນ, ຊາວກະສິກອນຂອງລາວກໍ່ສາມາດປູກພືດທີ່ຕະຫຼາດຈີນຕ້ອງການ ເຊິ່ງການປູກກໍ່ຄວນຢູ່ຕາມແລວເສັ້ນທາງລົດໄຟ. ຕົວຢ່າງ, ສິນຄ້າທີ່ມີມູນຄ່າສູງ ແລະ ທັງມີຄວາມຕ້ອງການສູງສຳລັບແຂວງຢູນນານ ແມ່ນຖົ່ວລຽນ ແລະ ໝາກມ່ວງ. ສະນັ້ນ, ຊາວກະສິກອນກໍ່ຄວນປູກພືດດັ່ງກ່າວເພື່ອສະໜອງໃຫ້ຕາມຄວາມຕ້ອງການຂອງຕະຫຼາດ.

**ກໍລະນີສຶກສາ: ຜະລິດຕະພັນງາຂອງ ສປປ ລາວ**

ການປູກງາຢູ່ທາງແຂວງພາກເໜືອຂອງ ສປປ ລາວ ແມ່ນປູກ ແລະ ເກັບກ່ຽວໂດຍການໃຊ້ແຮງງານຄົນ, ການປູກງາແມ່ນສາມາດເຮັດໄດ້ໃນພື້ນທີ່ບໍ່ກວ້າງຫຼາຍ. ປະຈຸບັນເຫັນວ່າປະລິມານການຜະລິດລວມໄປເຖິງລາຄາຂອງງາແມ່ນນັບມື້ນັບເພີ່ມຂຶ້ນ ເຊິ່ງມັນໄດ້ເຮັດໃຫ້ຊາບວ່າປະລິມານຄວາມຕ້ອງການງາໃນຕະຫຼາດໂລກແມ່ນນັບ

ນີ້ນັບເພີ່ມຂຶ້ນ. ໃນໄລຍະທີ່ຜ່ານມານີ້ເຫັນໄດ້ວ່າປະເທດຈີນ ແລະ ຍີ່ປຸ່ນໄດ້ມີການນຳເຂົ້າງາເພີ່ມຂຶ້ນຫລາຍ, ເຊິ່ງແນ່ນອນວ່າຄວາມຕ້ອງການນີ້ໄດ້ສ້າງໂອກາດໃຫ້ແກ່ຜູ້ສະໜອງຕ່າງປະເທດ ແລະ ໜຶ່ງໃນນັ້ນກໍ່ຄືປະເທດລາວທີ່ຈະມີໂອກາດສົ່ງອອກຜະລິດງາທີ່ມີຄຸນນະພາບອອກຕ່າງປະເທດ ແລະ ທັງເປັນການຂະຫຍາຍຕະຫຼາດ. ພ້ອມນີ້ ການອັດສີດເງິນທຶນຈາກນັກລົງທຶນຕ່າງປະເທດຈະສົ່ງເສີມການພັດທະນາ ແລະ ການເຂົ້າເຖິງຕະຫຼາດຂອງສິນຄ້າລາວອີກດ້ວຍ.

**ກໍລະນີສຶກສາ: ການສ້າງທ່າແຮງໃຫ້ຊາວກະສິກອນໃນປາປົວ ແລະ ປາປົວຕາເວັນຕົກ**

ລັດຖະບານໄດ້ເຊີນບັນດາຫົວໜ່ວຍທຸລະກິດຈາກພາກເອກະຊົນເຂົ້າຮ່ວມວຽກງານການສົ່ງເສີມການລົງທຶນສີຂຽວເພື່ອສ້າງທ່າແຮງໃຫ້ແກ່ຊາວກະສິກອນໃນປາປົວ ແລະ ປາປົວຕາເວັນຕົກ ແລະ ການເຂົ້າຮ່ວມວຽກງານນີ້ກໍ່ເພື່ອຫຼຸດຜ່ອນການຜະລິດທີ່ເອື່ອຍອີງໃສ່ແຕ່ປ່າໄມ້ ແລະ ການປູກຕົ້ນປາມນ້ຳມັນຂອງປະຊາຊົນໃນສອງແຂວງດັ່ງກ່າວ. ວຽກງານດັ່ງກ່າວໄດ້ມີຢ່າງໜ້ອຍ 24 ບໍລິສັດເຂົ້າຮ່ວມ, ເຊິ່ງໜຶ່ງໃນນັ້ນແມ່ນບໍລິສັດກາເຟສະຕາບັກຂອງອາເມລິກາ. ບໍລິສັດດັ່ງກ່າວໄດ້ໃຫ້ຄວາມສົນໃຈທີ່ສຸດໃນການເຂົ້າຮ່ວມໂຄງການການລົງທຶນສີຂຽວໃນເຂດດັ່ງກ່າວ. ລັດຖະບານອິນໂດເນເຊຍທຸ້ມທຶນປະມານ 200 ລ້ານໂດລາສະຫະລັດເຂົ້າໃນໂຄງການດັ່ງກ່າວ , ເຊິ່ງເງິນທຶນແມ່ນໄດ້ຈາກການຊ່ວຍເຫຼືອຈາກພາກເອກະຊົນ, ການລົງທຶນຈາກຕ່າງປະເທດ ແລະ ທຶນຂອງລັດຖະບານ. ສຳລັບຈຸດປະສົງຫຼັກຂອງການສ້າງໂຄງການດັ່ງກ່າວນີ້ແມ່ນເພື່ອຊ່ວຍຊາວກະສິກອນທ້ອງຖິ່ນໃນການປູກພືດເສດຖະກິດເຊັ່ນ: ໝາກກາກາວ, ກາເຟ, ພືດປະເພດຖົ່ວ, ພືດຕະກູນປາມ, ສາລ່າຍ ແລະ ກໍ່ຍັງເປັນການພັດທະນາການທ່ອງທ່ຽວແບບອະນຸລັກສິ່ງແວດລ້ອມໄປໃນໂຕອີກດ້ວຍ.

ອັນທີ2, ການເຂົ້າມາແຊກແຊງຂອງພາກລັດຄວນເຮັດໃຫ້ການລົງທຶນໃນການພັດທະນາເທັກໂນໂລຢີເພີ່ມຂຶ້ນ ພ້ອມກັບການເຮັດໃຫ້ຊັບພະຍາກອນມະນຸດກໍ່ຄືຊາວກະສິກອນມີຄວາມອາດສາມາດ-ຄວາມຮູ້ທີ່ເພີ່ມຂຶ້ນ. ສຳລັບບົດຮຽນໃນການຈັດຕັ້ງປະຕິບັດແມ່ນສາມາດສຶກສາໄດ້ຈາກ ໂຄງການການພັດທະນາເສດຖະກິດພາກພື້ນ ແລະ ທ້ອງຖິ່ນ-ການເຊື່ອມໂຍງເສດຖະກິດຕາເວັນອອກສູ່ຕາເວັນຕົກຂອງອົງການແມ່ນ້ຳຂອງ, ເຊິ່ງມີຈຸດປະສົງເພື່ອການປັບປຸງການດຳລົງຊີວິດຂອງຊາວກະສິກອນລາຍຍ່ອຍ ແລະ ສະຖານະພາບທາງເສດຖະກິດຂອງວິສາຫະກິດຂະໜາດນ້ອຍ ແລະ ກາງໃນ 6 ແຂວງທີ່ຕັ້ງຢູ່ຕາມເສັ້ນທາງເສດຖະກິດຕາເວັນອອກສູ່ຕາເວັນຕົກຂອງເຂດລຸ່ມແມ່ນ້ຳຂອງ. ໃນ ສປປ ລາວ, ໂຄງການດັ່ງກ່າວນີ້ແມ່ນເນັ້ນໃສ່ຂະແໜງການປູກເຂົ້າ ພາຍໃນແຂວງຄຳມ່ວນ ແລະ ເນັ້ນໃສ່ພັດທະນາເທັກນິກການປູກເຂົ້າ ພ້ອມກັບສ້າງຄວາມຮູ້ຄວາມສາມາດໃນການເຂົ້າເຖິງຕະຫຼາດ. ເນື່ອງຈາກໂຄງການດັ່ງກ່າວ, ຜົນຜະລິດຊາວກະສິກອນແມ່ນໄດ້ຮັບໝາກຜົນທີ່ດີຂຶ້ນ ແລະ ປະລິມານການຄ້າຂາຍເຂົ້າກໍ່ຫຼາຍຂຶ້ນ. ພາລະກິດໃນການສ້າງຄວາມອາດສາມາດດັ່ງກ່າວຍັງໄດ້ນຳໄປສູ່ລາຍຮັບທີ່ຫຼາຍຂຶ້ນ, ການບໍລິຫານຈັດການດ້ານການເງິນ ແລະ ອື່ນໆກໍ່ມີປະສິດທິພາບກວ່າເດີມ. ພ້ອມດຽວກັນນັ້ນຍັງມີການຈັດຕັ້ງຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດ. ໂຄງການດັ່ງກ່າວນີ້ແມ່ນໂຄງການແບບຢ່າງ ທີ່ສາມາດນຳໃຊ້ກັບການປູກພືດປະເພດອື່ນໆຢູ່ໃນຂົງເຂດທົ່ວປະເທດ.

ອັນທີ 3, ສປປ ລາວ ຄວນສູ້ຊົນເຮັດວຽກງານການປັບປຸງມາດຕະຖານຄຸນນະພາບ ແລະ ຄວາມປອດໄພຂອງພືດທີ່ຜະລິດທັງນີ້ກໍ່ເພື່ອໃຫ້ໄດ້ຕາມມາດຕະຖານສາກົນ. ການພັດທະນາວຽກງານດັ່ງກ່າວແມ່ນຈະມີທັງການປັບປຸງການພົວພັນກັບຕະຫຼາດ, ການຂາຍ ແລະ ປ້ອງກັນບໍ່ໃຫ້ຜົນຜະລິດເສຍຫາຍ. ຕໍ່ກັບວຽກງານດັ່ງກ່າວນີ້

ໂຄງການການພັດທະນາເສດຖະກິດພາກພື້ນ ແລະ ທ້ອງຖິ່ນ-ການເຊື່ອມໂຍງເສດຖະກິດຕາເວັນອອກສູ່ຕາເວັນຕົກ ກໍ່ໄດ້ກວມລວມເອົາປະເດັນນີ້ດ້ວຍເຊັ່ນກັນ, ໂດຍໂຄງການໄດ້ນຳສະເໜີແນວແນວທາງຂອງການປະຕິບັດກະສິກຳທີ່ດີ, ເຊິ່ງໄດ້ເຮັດໃຫ້ຊາວກະສິກອນມີການປະຕິບັດທີ່ໄດ້ມາດຕະຖານ ແລະ ຍັງຊ່ວຍໃຫ້ພວກເຂົາເຂົ້າໃຈເຖິງຄວາມຕ້ອງການຂອງການປະຕິບັດກະສິກຳທີ່ດີ ລວມໄປເຖິງເຂົ້າໃຈເຖິງຂະບວນການຂອງການສະໝັກ ຫຼື ໄດ້ຮັບໃບຢັ້ງຢືນ. ຂະບວນການປະຕິບັດກະສິກຳທີ່ດີແມ່ນຂຶ້ນກັບ ໂຄງການກົນໄກທາງດ້ານລະບົບເພື່ອການຄ້າທີ່ປອດໄພເຊິ່ງຂຶ້ນກັບສະຫະພາບເອີຣົບ, ກະຊວງກະສິກຳ ແລະ ປ່າໄມ້ ແລະ ສູນການຄ້າສາກົນ ເຊິ່ງໂຄງການດັ່ງກ່າວມີຈຸດປະສົງແມ່ນເພື່ອປັງປຸງ-ຍົກລະດັບຄວາມປອດໄພດ້ານອາຫານ ແລະ ເສີມສ້າງຄວາມເຂັ້ມແຂງດ້ານລະບຽບການເພື່ອການຄວບຄຸມຄວາມປອດໄພຂອງພືດ ແລະ ໝາກໄມ້ຈາກການນຳໃຊ້ຢາປາບສັດຕູພືດເປັນຕົ້ນ. ເພື່ອປະຕິບັດວຽກງານດັ່ງກ່າວ, ສູນປະເມີນຄຸນນະພາບຄວນຖືກສ້າງຕັ້ງຂຶ້ນ ເພື່ອຕິດຕາມຄຸນນະພາບ ແລະ ຫຼຸດຜ່ອນຄວາມເສຍຫາຍຂອງຜົນລະປູກ. ພ້ອມນີ້, ຖ້າເຈົ້າໜ້າທີ່ກ່ຽວຂ້ອງຂອງລາວມີການຮ່ວມມືກັບເຈົ້າໜ້າທີ່ຂອງແຂວງທີ່ມີຊາຍແດນຕິດຈອດກັບລາວຂອງປະເທດເພື່ອນບ້ານເພື່ອຈັດຕັ້ງປະຕິບັດຕາມລະບຽບ ແລະ ມາດຖານ ກໍ່ຈະເຮັດໃຫ້ຂະບວນການສ້າງສູນຄວບຄຸມພະຍາດ ແລະ ປ້ອງກັນພະຍາດໃນສັດລະຫວ່າງຊາຍແດນເປັນໄປໄດ້ໄວຂຶ້ນ.

<u>ອັນທີ 4</u>: ເພື່ອສົ່ງເສີມດ້ານການຄ້າ, ການຊ່ວຍເຫຼືອ ແລະ ສົ່ງເສີມຂອງພາກລັດຖະບານແມ່ນມີຄວາມຈຳເປັນທີ່ສຸດໃນການສ້າງຊ່ອງທາງໃຫ້ມີການພົບປະ ຫຼື ຈັບຄູ່ທຸລະກິດຂອງຫົວໜ່ວຍທຸລະກິດ ແລະ ຊາວກະສິກອນ. ເຖິງຢ່າງໃດກໍ່ຕາມ ປະຈຸບັນນີ້ການເຊື່ອມໂຍງຊາວກະສິກອນກັບການຄ້າແມ່ນຍັງບໍ່ທັນມີຄວາມເຂັ້ມແຂງເທົ່າທີ່ຄວນເນື່ອງຈາກຂໍ້ຈຳກັດດ້ານການເຂົ້າເຖິງແຫຼ່ງທຶນເນື່ອງຈາກບັນດາທະນາຄານທຸລະກິດຍັງບໍ່ມີຄວາມຕ້ອງການ ຫຼື ກ້າທີ່ຈະລົງທຶນໃນຂະແໜງການກະສິກຳເທື່ອ. ໃນໄລຍະຍາວລັດຖະບານຈະຕ້ອງກະຕຸກຊຸກຍູ້ບັນດາຫົວໜ່ວຍທຸລະກິດໂດຍສະເພາະແມ່ນວິສາຫະກິດຂະໜາດກາງໃຫ້ມີການລົງທຶນໃນຂະແໜງກະສິກຳຫຼາຍຂຶ້ນ ແລະ ຕ້ອງເນັ້ນໃສ່ແກ້ໄຂບັນຫາດັ່ງກ່າວໃຫ້ປະກົດຜົນເປັນຈິງ. ສຳລັບທຸລະກິດກະສິກຳທີ່ບັນດາພາກທຸລະກິດເຫັນຄວາມເປັນໄປໄດ້ການສ້າງທຸລະກິດແມ່ນອຸດສາຫະກຳກະສິກຳປອດສານພິດ ເຊິ່ງຢູ່ເໜືອລະດັບຂັ້ນການຜະລິດ (ເບິ່ງເອກະສານຊ້ອນທ້າຍທີ 4).

<u>ຂໍ້ສຸດທ້າຍ:</u> ລັດຖະບານຕ້ອງວາງນະໂຍບາຍການຄໍ້າປະກັນດ້ານສະບຽງອາຫານ ເພື່ອຮັບປະກັນຄວາມພຽງພໍດ້ານສະບຽງອາຫານຕາມຄວາມຕ້ອງການພາຍໃນອັນດັບທຳອິດ ກ່ອນທີ່ຈະມີການສົ່ງອອກ. ການທົບທວນໂຄຕ້າສົ່ງອອກສິນຄ້າກະສິກຳຂອງລາວປະຈຳປີ ເຮັດໃຫ້ມີຄວາມບໍ່ແນ່ນອນ ຫຼື ຄາດການບໍ່ໄດ້ຂອງຄວາມຕ້ອງການຂອງຕະຫຼາດ ເຊິ່ງບັນຫາດັ່ງກ່າວສ້າງຄວາມຫຍຸ້ງຍາກໃຫ້ແກ່ຜູ້ຜະລິດກໍ່ຄືຊາວກະສິກອນໃນການກະກຽມຜົນຜະລິດ ແລະ ຍຸດທະສາດການສົ່ງອອກສິນຄ້າ. ສະນັ້ນເພື່ອແກ້ໄຂບັນຫາດັ່ງກ່າວ, ໂຄຕ້າການສົ່ງອອກຈະຕ້ອງຖືກນຳສະເໜີ ແລະ ກຳນົດໄວ້. ແນວທາງດັ່ງກ່າວຕ້ອງໄດ້ຮັບການຊ່ວຍເຫຼືອ ຫຼື ເຂົ້າມາແຊກແຊງຈາກພາກລັດ, ເຊິ່ງຂະບວນການຊ່ວຍເຫຼືອແມ່ນປະກອບມີດັ່ງນີ້:

(i) ປັບປຸງ ຫຼື ສ້າງຄວາມໂປ່ງໃສກ່ຽວກັບການຕັ້ງລາຄາລະຫວ່າງຜູ້ຄ້າ ແລະ ຊາວກະສິກອນ

(ii) ສ້າງຊ່ອງທາງທີ່ເໝາະສົມໃນການແບ່ງບັນຂໍ້ມູນກ່ຽວກັບການຈັດສັນໂຄຕ້າປະຈຳປີສົ່ງອອກສິນຄ້າປະຈຳປີ ເຊິ່ງໃນນັ້ນບໍລິສັດພາຍໃນຂອງລາວຄວນໄດ້ຮັບຈຳນວນໂຄຕ້າທີ່ຫຼາຍກວ່າ.

### 3) ການສ້າງສະພາບແວດລ້ອມເພື່ອສົ່ງເສີມທຸລະກິດ

ການລະບາດຂອງ Covid-19 ໄດ້ເຮັດໃຫ້ຮູ້ວ່າຄວາມທັນສະໄໝຂອງເທັກໂນໂລຢີສົ່ງຜົນອັນດີຕໍ່ການປັບໂຕຂອງປະຊາຊົນໃຫ້ເຂົ້າກັບວິຖີຊີວິດແບບໃໝ່ ເຊິ່ງເປັນວິຖີຊີວິດທີ່ມີການປະສານງານແຕ່ຫຼີກລ່ຽງການຢູ່ໃກ້ກັນ ເຊິ່ງມີແນວໂນ້ມວ່ານັບມື້ນັບຈະເພີ່ມຂຶ້ນ, ເນື່ອງຈາກພາກລັດເອງກໍ່ໄດ້ເຮັດໃຫ້ເຫັນວ່າຂໍ້ມູນຂ່າວສານສຳຄັນຫຼາຍໆດ້ານກໍ່ໄດ້ຮັບການເຜີຍແຜ່ໄດ້ຢ່າງງ່າຍດາຍ ແລະ ວ່ອງໄວ ພ້ອມກັບການສືບຫາຕິດຕາມກໍ່ເຮັດໄດ້ງ່າຍຜ່ານເທັກໂນໂລຢີໃໝ່ ເຊິ່ງຄວາມສະດວກສະບາຍດັ່ງກ່າວກໍ່ໄດ້ສ້າງແຮງກະຕຸ້ນໃຫ້ຫົວໜ່ວຍທຸລະກິດໃນການເປີດກວ້າງຮັບເທັກໂນໂລຢີທີ່ທັນສະໄໝດັ່ງກ່າວ.

ນອກນີ້ ໃນ ສປປ ລາວ ບັນດາຫົວໜ່ວຍທຸລະກິດແມ່ນມີຄວາມພຶງພໍໃຈໃນການນຳໃຊ້ການເກັບອາກອນແບບອີເລັກໂທຣນິກ ຫຼື E-Tax ທີ່ຫາກໍ່ຈະເລີ່ມນຳໃຊ້ເມື່ອບໍ່ດົນມານີ້. ພ້ອມດຽວກັນນີ້ ສປປ ລາວຈະຕ້ອງສົ່ງເສີມໃຫ້ອັດຕາສ່ວນການນຳໃຊ້ອິນເຕີເນັດເພີ່ມຂຶ້ນ ເຊິ່ງປະຈຸບັນອັດຕາສ່ວນຜູ້ນຳໃຊ້ອິນເຕີເນັດໃນຂອບເຂດທົ່ວປະເທດຂອງ ສປປ ລາວ ແມ່ນຢູ່ໃນອັດຕາທີ່ຕ່ຳທີ່ສຸດໃນປະເທດອາຊີອາຄະເນ ແລະ ຜູ້ໃຊ້ງານສ່ວນໃຫຍ່ແມ່ນຢູ່ໃນກຸ່ມອາຍຸສະເລ່ຍປະມານ 21,6 ປີ. ດັ່ງນັ້ນ, ເພື່ອບໍ່ໃຫ້ ສປປ ລາວເປັນປະເທດທີ່ດ້ອຍທີ່ສຸດໃນວຽກງານດິຈິຕອນ ເທັກໂນໂລຢີ, ລາວຕ້ອງໄດ້ຕັ້ງໜ້າສູ້ຊົນເພື່ອຕີຖອຍຈຸດດ້ອຍດັ່ງກ່າວ.

**ກໍລະນີສຶກສາ: ການໃຊ້ສະຖານະການການລະບາດຂອງ Covid-19 ເພື່ອຫັນປະເທດຫວຽດນາມໄປສູ່ຍຸກດິຈິຕອນ**

ເທັກໂນໂລຢີຂໍ້ມູນຂ່າວສານເຮັດໃຫ້ ການເຜີຍແຜ່ຂໍ້ມູນຂ່າວສານໃນຫວຽດນາມ ແລະ ການຕອບໂຕ້ດ້ານສາທາລະນະສຸກຂອງຫວຽດນາມເປັນໄປຢ່າງມີປະສິດທິພາບ. ຫວຽດນາມມີອັດຜູ້ໃຊ້ອິນເຕີເນັດທີ່ສູງ ເຊິ່ງເຮັດໃຫ້ລັດຖະບານສາມາດປະສານງານ ແລະ ສື່ສານໄປຍັງປະຊາຊົນພາຍໃນປະເທດໄດ້ຢ່າງວ່ອງໄວ ແລະ ເທັກໂນໂລຢີດັ່ງກ່າວຍັງເປັນໂຕຂັບເຄື່ອນໃນການອຳນວຍຄວາມສະດວກໃນການເຮັດວຽກຢູ່ບ້ານຂອງພະນັກງານບັນດາອົງກອນພາກລັດ ແລະ ເອກະຊົນ, ອຳນວຍຄວາມສະດວກໃນການຮຽນທາງໄກຂອງບັນດານັກຮຽນ-ນັກສຶກສາໃນຂະນະທີ່ພະຍາດພວມມີການລະບາດ. ພ້ອມນີ້, ປະຊາຊົນຫວຽດນາມຍັງສາມາດເຮັດທຸລະກິດບາງປະເພດແບບອອນໄລນ໌ ໂດຍນຳໃຊ້ເຄື່ອງມືດັ່ງກ່າວນີ້ເຊິ່ງເປັນຊ່ອງທາງການບໍລິການອິນເຕີເນັດຂອງພາກລັດໃຫ້ແກ່ປະຊາຊົນ. ເຖິງຈະສາມາດພັດທະນາວຽກງານດັ່ງກ່າວໄດ້ສ່ວນໃດໜຶ່ງ, ແຕ່ລັດຖະບານຫວຽດນາມແມ່ນຍັງບໍ່ມີແຜນທີ່ຈະຢຸດການພັດທະນາ ແຕ່ພັດຈະສືບຕໍ່ສູ້ຊົນໃນການຫັນໄປເປັນປະເທດດິຈິຕອນ, ຈະສ້າງໃຫ້ມີຊ່ອງທາງທີ່ສາມາດສົ່ງ-ແລກປ່ຽນເອກະສານອີເລັກໂທຣນິກ. ພ້ອມດຽວກັນນີ້ ຫວຽດນາມພວມສ້າງທ່າແຮງການຊຳລະສິນຄ້າແບບດິຈິຕອນ ເຊິ່ງເປັນສ່ວນໜຶ່ງໃນຍຸດທະສາດການພັດທະນາດ້ານການເງິນແຫ່ງຊາດ ເຊິ່ງຖືກອະນຸມັດໃນ ເດືອນ 01/2020 ທີ່ຜ່ານມາ.

ອີງຕາມກໍລະນີສຶກສາຂອງປະເທດເພື່ອນບ້ານໃນຂ້າງເທິງ, ລັດຖະບານລາວຕ້ອງໄດ້ນຳພາ ແລະ ລິເລີ່ມປະຕິບັດ ໂດຍເລີ່ມຈາກບັນດາກະຊວງທີ່ກ່ຽວຂ້ອງຫຼັກຕ້ອງໄດ້ສ້າງ ແລະ ນຳສະເໜີໂຍບາຍຕ່າງໆ ແລະ ຕ້ອງສະໜອງອຸປະກອນດິຈິຕອນຕ່າງໆເຊັ່ນຄອມພິວເຕີໃຫ້ວຽກງານດັ່ງກ່າວ ແລະ ສົ່ງເສີມໃຫ້ມີການຕິດຕໍ່ປະສານກັນງານຜ່ານອີເມລ.

ການເຂົ້າເຖິງ ແລະ ສາມາດນຳໃຊ້ຄອມພິວເຕີ້ແມ່ນສິ່ງທີ່ຈຳເປັນຕ້ອງເຮັດກ່ອນອື່ນໝົດ, ເຊິ່ງໃນນີ້ກໍ່ຈະເປັນການກະຕຸ້ນ ຫຼື ສົ່ງເສີມຫົວໜ່ວຍທຸລະກິດປະເພດອີເລັກໂທຣນິກ-ຄົມມະນາຄົມໄປນຳ. ພ້ອມນີ້, ເພື່ອຂະຫຍາຍວຽກງານດັ່ງກ່າວໃຫ້ພາກສ່ວນອື່ນນອກຈາກຫົວໜ່ວຍລັດຖະບານ, ລັດຖະບານຕ້ອງສະໜອງຊ່ອງທາງແບບອອນໄລນ໌ ໃຫ້ແກ່ບັນດາຫົວໜ່ວຍທຸລະກິດພາຍໃນໂດຍສະເພາະຂະແໜງການຄ້າ ແລະ ຂະແໜງການທ່ອງທ່ຽວໃຫ້ນຳໃຊ້ ທັງນີ້ກໍ່ເພື່ອສົ່ງເສີມຜະລິດຕະພັນຂອງປະຊາຊົນ ແລະ ການສົ່ງເສີມການຄ້າແບບອີເລັກໂທຣນິກ.
ວຽກງານດັ່ງກ່າວນີ້ບໍ່ພຽງແຕ່ເປັນການຊ່ວຍບັນດາບໍລິສັດຫ້າງຮ້ານໃນການກະກຽມວິຖີຊີວິດໃໝ່ພາຍຫຼັງການລະບາດຂອງພະຍາດ, ແຕ່ມັນຍັງຊ່ວຍໃນການຢັ້ງຢືນວ່າເສດຖະກິດຂອງ ສປປ ລາວໃນອະນາຄົດຈະມີການເຊື່ອມໂຍງໄປສູ່ຕະຫຼາດໂລກ (ເບິ່ງເອກະສານຊ້ອນທ້າຍມີ 5).

**ກໍລະນີສຶກສາ: ບໍລິສັດເສດຖະກິດດິຈິຕອນຂອງມາເລເຊຍ (MDEC)**

ບໍລິສັດເສດຖະກິດດິຈິຕອນຂອງມາເລເຊຍ ແມ່ນໜ່ວຍງານຂອງລັດຖະບານມາເລເຊຍທີ່ຢູ່ພາຍໃຕ້ກະຊວງສື່ສານ ແລະ ຂໍ້ມູນຂ່າວສານ ເຊິ່ງຮັບໜ້າທີ່ໃນການຊີ້ນຳວຽກງານເສດຖະກິດດິຈິຕອນແຫ່ງຊາດ. ທິດທາງ ແລະ ສິ່ງທີ່ MDEC ຈະຕ້ອງໄດ້ຈັດຕັ້ງປະຕິບັດປະກອບດ້ວຍ: ການເປີດໃຈກວ້າງເພື່ອນຳໃຊ້ດິຈິຕອລ, ການພັດທະນາອຸດສາຫະກຳທີ່ມີທ່າແຮງ ແລະ ຄວາມພ້ອມດ້ານດິຈິຕອນ, ການສ້າງນະໂຍບາຍເສດຖະກິດດິຈິຕອນ ແລະ ຄວາມພ້ອມ ເພື່ອເປັນຜູ້ນຳໜ້າລະດັບໂລກ. ເພື່ອພິສູດວ່າໃນອະນາຄົດມາເລເຊຍຈະກ້າວເຂົ້າສູ່ຍຸກດິຈິຕອນ, ບໍລິສັດເສດຖະກິດດິຈິຕອນຈະນຳໃຊ້ທ່າແຮງ, ຄວາມໜ້າເຊື່ອຖື ແລະ ປະສົບການທັງໝົດທີ່ຜ່ານມາໃນການເຊື່ອມຕໍ່, ເລັ່ງໃຫ້ມີການຄ້າແບບດິຈິຕອນ ແລະ ເພື່ອປະສົບຜົນສຳເລັດ ແລະ ມີເສດຖະກິດດິຈິຕອລທີ່ຍືນຍົງເປັນໃຈກາງ.

ດັ່ງນັ້ນ, ຖ້າອີງຕາມຄຳແນະນຳ ແລະ ແນວທາງຂ້າງເທິງ, ວິທີການຈັດຕັ້ງປະຕິບັດຂອງລັດຖະບານຕໍ່ວຽກງານດັ່ງກ່າວ ກໍ່ແມ່ນການສ້າງໜ່ວຍງານສະເພາະກິດທີ່ຈະມີໜ້າທີ່ໃນການຈັດຕັ້ງປະຕິບັດ ແລະ ຕິດຕາມການຈັດຕັ້ງປະຕິບັດວຽກງານ ເຊິ່ງມີຄວາມສຳຄັນ ແລະ ຈຳເປັນທີ່ສຸດ ຖ້າ ສປປ ລາວ ຕ້ອງການຈະປະສົບຜົນສຳເລັດ. ໃນນັ້ນ ຄະນະສະເພາະກິດແມ່ນຄວນປະກອບມີຫຼາຍກະຊວງດ້ວຍກັນເປັນຕົ້ນແມ່ນ ກະຊວງແຜນການ ແລະ ການລົງທຶນ, ກະຊວງອຸດສາຫະກຳ ແລະ ການຄ້າ, ແລະ ກະຊວງໄປສະນີ ແລະ ຄົມມະນາຄົມ.

**ກໍລະນີສຶກສາ: ການຕະຫຼາດແບບອອນໄລນ໌ສຳລັບຜູ້ປະກອບການທຸລະກິດຫັດຖະກຳ**

ກະຊວງການທ່ອງທ່ຽວ, ສິນລະປະ ແລະ ວັດທະນະທຳ (MOTAC) ໄດ້ນຳສະເໜີການຕະຫຼາດຮູບແບບໃໝ່ຄືການຕະຫຼາດແບບອອນໄລນ໌ ເພື່ອຊ່ວຍຜູ້ປະກອບການທຸລະກິດຫັດຖະກຳໃຫ້ສາມາດປະຄັບປະຄອງທຸລະກິດໃນຂະນະທີ່ປະເທດພວມປະເຊີນໜ້າກັບໂລກລະບາດ. ຊ່ອງທາງດັ່ງກ່າວມີຈຸດປະສົງໃນການສົ່ງເສີມ ແລະ ໂຄສະນາສິນຄ້າຫັດຖະກຳພາຍໃນເຊັ່ນ: ແຜ່ນແພ, ເຄື່ອງປັ້ນດິນເຜົາເຊຣາມິກ, ສິນຄ້າຫັດຖະກຳທີ່ເຮັດຈາກ

ການຕີ-ຫຼອມເຫຼັກທີ່ມາຈາກຫຼາບທ້ອງຖິ່ນຂອງປະເທດ. ການຕະຫຼາດແບບນີ້ແມ່ນຮູ້ໃນນາມ "ອີ-ຄຣາຟ ບາຊ່າ" ທີ່ໃຊ້ Facebook ເປັນຊ່ອງທາງໃນການໂຄສະນາ, ການໂຄສະນານີ້ແມ່ນໄດ້ລິເລີ່ມໂດຍ ກຸ່ມ Kraftangan ມາເລເຊຍ.

ລັດຖະບານມາເລເຊຍຫວັງວ່າຊ່ອງທາງດັ່ງກ່າວຈະເຮັດໃຫ້ຂັ້ນຕອນການຊື້ຂາຍລະຫວ່າງຜູ້ຊື້ ແລະ ຜູ້ຂາຍສະດວກສະບາຍຂຶ້ນໂດຍສະເພາະແມ່ນຢູ່ໃນຊ່ວງການຄວບຄຸມການເດີນທາງໄປມາຂອງຄົນໃນສັງຄົມ. ຜ່ານຊ່ອງທາງການຕະຫຼາດດັ່ງກ່າວນີ້, ຜູ້ບໍລິໂພກສາມາດຊື້ສິນຄ້າຈຳເປັນຜ່ານຊ່ອງທາງດັ່ງກ່າວນີ້ໄດ້ໄດ້, ເຊິ່ງສິນຄ້າແມ່ນມີຫຼາກຫຼາຍ ເຊິ່ງພຽງພໍສຳລັບການຈັດງານລ້ຽງດໍ່ຍັງໄດ້. ພາຍຫຼັງການນຳໃຊ້ຊ່ອງທາງການຕະຫຼາດດັ່ງ່າວໃນໄລຍະເວລາອັນສັ້ນ, ອີ-ຄຣາຟບາຊ່າ ມີຄົນສະໝັກເຂົ້າໃຊ້ເຖິງ 3,000 ຄົນ ແລະ ມີຮ້ານຄ້າຫຼາຍກວ່າ 700 ຮ້ານທີ່ເຂົ້າຮ່ວມໂຄງການ.

**ກໍລະນີສຶກສາ: ໂຄງການ Perkhidmatan e-Dagang Setempat ຂອງ ໜ່ວຍງານເສດຖະກິດດິຈິຕອນຂອງມາເລເຊຍໃນວຽກງານການສ້າງທ່າແຮງໃຫ້ທຸລະກິດຂະໜາດນ້ອຍ ແລະ ກາງໃນເຂດຊົນນະບົດສາມາດເຂົ້າເຖິງການຄ້າທາງອີເລັກໂທຣນິກ.**

ໜ່ວຍງານເສດຖະກິດດິຈິຕອນຂອງມາເລເຊຍ ເປີດໂຕ ສູນອິນເຕີເນັດເຂດຫ່າງໄກສອກຫຼີກ (PID) ຈຳນວນ 10 ແຫ່ງເພື່ອໃຫ້ບໍລິການແບບສູນບໍລິການປະຕູດຽວທີ່ຈະເປີດໂອກາດ ແລະ ພື້ນທີ່ໃຫ້ວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນການປັບປຸງທັກສະການຄ້າທາງອີເລັກໂທຣນິກຂອງພວກເຂົາ. ໂຄງການດັ່ງກ່າວນີ້ໄດ້ຊ່ວຍໃຫ້ວິສາຫະກິດຂະໜາດນ້ອຍ ແລະ ກາງໃນການເຂົ້າເຖິງຊ່ອງທາງການຄ້າທີ່ກວ້າງຂຶ້ນຕື່ມເປັນຕົ້ນແມ່ນ ເຂດການຄ້າເສລີທາງດິຈິຕອນ (DFTZ), ທັງນີ້ໂຄງການຍັງໄດ້ຊ່ວຍສົ່ງເສີມຫົວໜ່ວຍທຸລະກິດ ໃຫ້ສາມາດນຳໃຊ້ເຄື່ອງມືດ້ານດິຈິຕອນອື່ນໆໃນການຂະຫຍາຍ ແລະ ປັບປຸງຄວາມມີປະສິດທິພາບໃນການປະກອບທຸລະກິດໃນແຕ່ລະດ້ານອີກດ້ວຍ.

ການບໍລິການທີ່ໂຄງການ Perkhidmatan e-Dagang Setempat ມີໃຫ້ແມ່ນປະກອບມີຄື: ການສ້າງປະຫວັດບໍລິສັດ ຫຼື ທຸລະກິດເພື່ອທີ່ຈະໃຫ້ໜ່ວຍງານເສດຖະກິດດິຈິຕອນຂອງມາເລເຊຍຊ່ວຍໃນດ້ານ ຄວາມສາມາດໃນການສົ່ງເສີມດ້ານການຄະຫຼາດຂອງທຸລະກິດ, ການຝຶກອົບຮົມແນະນຳດ້ານການໂຄສະນາ ຫຼື ເຮັດການຕະຫຼາດສຳລັບການຄ້າທາງອີເລັກໂທຣນິກ ລວມໄປເຖິງການປຶກສາກ່ຽວກັບບັນຫາອື່ນໆເຊັ່ນ: ການບໍລິຫານຈັດການທຸລະກິດ, ການສ້າງແຜນທຸລະກິດ, ການສະໝັກໜັງສືອະນຸຍາດ ແລະ ການລົງທະບຽນສະໝັກ-ຢັ້ງຢືນຍີ່ຫໍ້ສິນຄ້າ.

ໂຄງການ Perkhidmatan e-Dagang Setempat ຫຼຸດຜ່ອນຜູ້ປະກອບການສ່ວນເກີນ ແລະ ຜູ້ປະກອບການດ່ງວ (ໝາຍເຖິງຜູ້ປະກອບການທີ່ບໍ່ສາມາດເຂົ້າເຖິງລະບົບການສົ່ງເສີມຂອງພາກລັດໄດ້, ບໍ່ມີຄວາມຮູ້ຄວາມເຂົ້າໃຈກ່ຽວກັບການຕະຫຼາດແບບດິຈິຕອນ, ການສ້າງຍີ່ຫໍ້ ແລະ ໃບຢັ້ງຢືນຍີ່ຫໍ້ ເຊິ່ງເຮັດໃຫ້ພວກເຂົາບໍ່ປະສົບຜົນສຳເລັດໃນການຄ້າຂາຍແບບອີເລັກໂທຣນິກ). ການອັດສີດເງິນທຶນເຂົ້າໄປຊ່ວຍໃນວຽກງານດັ່ງກ່າວຄັ້ງລ້າ

ສຸດຂອງພາກລັດ ແມ່ນຫວັງທີ່ປັ່ງນສູນອິນເຕີເນັດເຂດຫ່າງໄກສອກຫຼີກໃຫ້ກາຍມາເປັນສູນລວມການຄ້າອີເລັກໂທຣນິກ ເພື່ອໃຫ້ວິສາຫະກິດຂະໜາດນ້ອຍ ແລະ ກາງສາສ້າງພື້ນຖານທາງທຸລະກິດທີ່ຖືກຕ້ອງ ໂດຍການມີລະບົບໃນການດຳເນີນງານຄັກແນ່.

ສຳລັບ ສປປ ລາວ ປະຈຸບັນລັດຖະບານຈະຕ້ອງໄດ້ເບິ່ງຄືນກ່ຽວກັບຮ່າງດຳລັດວ່າດ້ວຍການຄ້າທາງອີເລັກໂທຣນິກທີ່ສ້າງຂຶ້ນໂດຍກົນສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ເພື່ອເປັນການຮັບປະກັນວ່າດຳລັດດັ່ງກ່າວໄດ້ກວມເອົາບັນຫາສຳຄັນຢ່າງຄົບຖ້ວນແລ້ວ, ເຊິ່ງບາງຈຸທີ່ຕ້ອງເບິ່ງຄືນແມ່ນປະກອບດ້ວຍ:

(i) ບັນດາຂອບລະບຽບການຕ່າງໆທີ່ຕິດພັນກັບການສົ່ງເສີມດ້ານການແຂ່ງຂັນ ແລະ ເງື່ອນໄຂດ້ານຕະຫຼາດ ໃນຂະນະດຽວກັນກໍ່ຕ້ອງໄດ້ເບິ່ງໃນດ້ານການປົກປ້ອງຜູ້ບໍລິໂພກ.

(ii) ການລົງທຶນໃນໂຄງລ່າງພື້ນຖານໃຫ້ວຽກງານດິຈິຕອນ ແລະ ການເຊື່ອມຕໍ່.

(iii) ການປັບປຸງຄວາມອາດສາມາດ-ທັກສະຂອງຊັບພະຍາກອນມະນຸດ.

ນອກຈາກການສ້າງດຳລັດດັ່ງກ່າວແລ້ວ, ລະບົບທີ່ສາມາດກວດສອບ ແລະ ວັດລະດັບຄວາມສຳເລັດຕົວຢ່າງເຊັ່ນ: ຕົວຊີ້ວັດການຄວາມຮັ່ງມີຂອງກອງປະຊຸມເສດຖະກິດໂລກ, ແມ່ນສິ່ງທີ່ຈຳເປັນທີ່ສຸດເພື່ອທີ່ຈະວັດລະດັບການປ່ຽນແປງທັງທົ່ວໜ່ວຍລັດຖະບານ ແລະ ເອກະຊົນ. ພ້ອມດຽວກັນນີ້, ປະເດັນກ່ຽວກັບການປົກປ້ອຂໍ້ມູນສ່ວນຕົວແມ່ນຈະຕ້ອງໄດ້ເບິ່ງຄືນ.

ສຸດທ້າຍນີ້, ອີກດ້ານໜຶ່ງທີ່ສຳຄັນຂອງການຫັນເປັນດິຈິຕອນໃນໄລຍະກາງ ແລະ ໄລຍະຍາວກໍ່ຄື ຄວາມສາມາດໃນການຊຳລະຄ່າອິນເຕີເນັດ. ການຊຳລະຄ່າບໍລິການອິນເຕີເນັດອາດຈະເປັນແຫຼ່ງລາຍຮັບອີກທາງໜຶ່ງໃຫ້ແກ່ລັດຖະບານ.

*ບັນຫາດ້ານຄວາມສ່ຽງຜ່ານການອຳນວຍຄວາມສະດວກດ້ານການຄ້າ*

(i) ການຮັບມືກັບອຸປະສັກດ້ານການຄ້າທີ່ບໍ່ແມ່ນພາສີ

ໃນ ສປປ ລາວ ຂໍ້ຂັດແຍ່ງທີ່ຕິດພັນກັບອຸປະສັກທີ່ບໍ່ແມ່ນພາສີ ໄດ້ສົ່ງຜົນກະທົບທາງລົບແກ່ການຄ້າລະຫວ່າງປະເທດຂອງ ສປປ ລາວ ເຊິ່ງກໍ່ໄດ້ມີການໄດ້ກຳນົດຂໍ້ແກ້ແຂ້ ແລະ ຈັດຕັ້ງປະຕິບັດໂດຍຫຼາຍໆກະຊວງທີ່ກ່ຽວຂ້ອງ.

ປະຈຸບັນນີ້, ລະບຽບການທີ່ກ່ຽວຂ້ອງກັບອຸປະສັກດ້ານການຄ້າທີ່ບໍ່ແມ່ນພາສີ ປະຈຸບັນມີທັງໝົດ 70 ລະບຽບ ເຊິ່ງມີທັງໝົດ 301 ອຸປະສັກ ທີ່ລະບຸໂດຍ 12 ສະຖາບັນໃນ ສປປ ລາວ ແລະ ມີຜົນຕໍ່ການຄ້າຂາຍສິນຄ້າປະມານ 9,558 ລາຍການ. ລະບຽບສ່ວນໃຫຍ່ທີ່ຕິດພັນກັບບັນຫາອຸປະສັກທາງການຄ້າທີ່ບໍ່ແມ່ນພາສີແມ່ນນິຕິກຳລະດັບກະຊວງ ເຊິ່ງບໍ່ແມ່ນກົດໝາຍທີ່ສາມາດເຂົ້າເຖິງ ຫຼື ມີໄວ້ໃຫ້ສຶກສາໄດ້ເຊັ່ນດຽວກັບກົດໝາຍ. ດັ່ງນັ້ນ, ຈຶ່ງກໍ່ໃຫ້ເກີດການຊ້ຳຊ້ອນ ແລະ ເນື້ອໃນທີ່ແຕກຕ່າງກັນຂອງແຕ່ລະກະຊວງ. ອຸປະສັກດ້ານການຄ້າທີ່ບໍ່ແມ່ນອາກອນຕ້ອງໄດ້ຮັບການແກ້ໄຂເພື່ອຮັບປະກັນວ່າຜູ້ປະກອບການພາກເອກະຊົນຈະສາມາດເຂົ້າເຖິງຕະຫຼາດສາກົນໄດ້ຢ່າງລາບລື່ນ ແລະ ໃນນັ້ນແມ່ນປະກອບດ້ວຍບັນດາມາດຕະການທີ່ຊ່ວຍປັບປຸງໂປຣໂມຊັນດ້ານການສົ່ງອອກ, ການເຂົ້າໄປມີສ່ວນຮ່ວມຂອງຕ່ອງໂສ້ການຜະລິດ, ການເຮັດໃຫ້ຄຸນນະພາບສິນຄ້າໄດ້ມາດຕະຖານສາກົນ ແລະ ການປະຕິບັດຕາມລະບຽບຕ່າງໆຂອງສາກົນ.

**ຮູບ: ອັດຕາພາສີສຳລັບແຕ່ລະກຸ່ມຜະລິດຕະພັນ ທີ່ຖືກກະທົບໂດຍມາດຕະການທີ່ບໍ່ແມ່ນພາສີ ໃນປີ 2016 (ຫົວໜ່ວຍ %)**




ກະຊວງອຸດສາຫະກຳ ແລະ ການຄ້າຄວນຈະເອົາໃຈໃສ່ສືບຕໍ່ເຮັດໜ້າທີ່ໃນການຫຼຸດຜ່ອນບັນດາອຸປະສັກດັ່ງກ່າວ, ພ້ອມທັງນຳບັນຫາທີ່ກ່ຽວຂ້ອງໄປເຈລະຈາໃນເວລາທີ່ກ່ຽວຂ້ອງເພື່ອເຮັດໃຫ້ພາກສ່ວນ ຫຼື ປະເທດທີ່ກ່ຽວຂ້ອງໄດ້ພິຈາລະນາ ແລະ ມີການຈັດຕັ້ງປະຕິບັດ. ຍິ່ງໄປກວ່ານັ້ນ, ລັດຖະບານລາວເອງກໍ່ຄວນຈັດຕັ້ງປະຕິບັດບັນດາມາດຕະການເພື່ອຕິດຕາມແບບກວ້າງຂວາງ ກ່ຽວກັບອຸປະສັກທາງການຄ້າທີ່ບໍ່ແມ່ນພາສີຂອງ ສປປ ລາວ ເຊັ່ນວ່າ ການຮັບປະກັນວ່າຖານຂໍ້ມູນຂອງອົງການ UNCTAD ຍັງເປັນຂໍ້ມູນທີ່ລ້າສຸດ. ພ້ອມດຽວກັນ ການຝຶກອົບຮົມເພື່ອສ້າງຄວາມຮູ້ ແລະ ຄວາມອາດສາມາດກ່ຽວກັບອຸປະສັກການຄ້າທີ່ບໍ່ແມ່ນພາສີຄວນຖືກຈັດຕັ້ງປະຕິບັດ ເພື່ອພັດທະນາຄວາມເປັນຊ່ຽວຊານສະເພາະດ້ານຂອງຄົນໃນແຕ່ລະຂະແໜງການ.

(ii) ການມີສ່ວນຮ່ວມຂອງຂະແໜງຄົມມະນາຄົມ ແລະ ໂລຈິສຕິກໃນການອຳນວຍຄວາມສະດວກໃຫ້ແກ່ການຄ້າ

ເພື່ອກະກຽມຮັບມືກ່ຽວກັບການປ່ຽນແປງທີ່ເສັ້ນທາງລົດໄຟລາວ-ຈີນຈະນຳມາສູ່ຕ່ອງໂສ້ການຜະລິດຂອງລາວ. ພ້ອມກັບກະກຽມພູມໃຊ້ໂອກາດນີ້ໃນການສ້າງຜົນປະໂຫຍດໃຫ້ໄດ້ຫຼາຍສຸດ, ສປປ ລາວ ຄວນຈະຫຼຸດຜ່ອນຕົ້ນທຶນຂອງການຄ້າກັບພາຍນອກໂດຍການດຶງຂະແໜງການຄົມມະນະຄົມ ແລະ ໂລຈິສຕິກໃຫ້ເຂົ້າມາມີສ່ວນຮ່ວມ. ການເຂົ້າມາມີສ່ວນຮ່ວມຂອງຂະແໜງດັ່ງກ່າວຈະເຮັດໃຫ້ຕົ້ນທຶນການຂົນສົ່ງຫຼຸດລົງ ແລະ ຈະເປັນການດຶງດູດການເຊື່ອມໂຍງກັບບັນດາປະເທດພາກພື້ນ. ທັງນີ້ ບໍລິສັດຂົນສົ່ງໃນ ສປປ ລາວ ກໍ່ຈະມີທ່າແຮງຫຼາຍຂຶ້ນໃນການທີ່ຈະແຂ່ງຂັນກັບບໍລິສັດຂົນສົ່ງຕ່າງປະເທດ ແລະ ບໍລິສັດເລົ່ານັ້ນຍັງຈະສາມາດຮຽນຮູ້ ແລະ ຖອດຖອນບົດຮຽນຈາກ

ບໍລິສັດຕ່າງປະເທດທີ່ຈະເຂົ້າມາໃນລາວ. ພ້ອມດຽວກັນນີ້, ການຫຼຸດຕົ້ນທຶນການຜະລິດ ແລະ ຕົ້ນທຶນການຂົນສົ່ງຈະສົ່ງເສີມໃຫ້ເກີດຄວາມມີປະສິດທິພາບຂອງທົ່ວໜ່ວຍທຸລະກິດທີ່ການສົ່ງອອກສິນຄ້າທີ່ມີລາຄາແພງຂອງ ສປປ ລາວອີກດ້ວຍ.

ອັນທີສອງ, ທີ່ ສປປ ລາວ ຄວນມີກໍ່ຄືການປັບປຸງວຽກງານການວາງແຜນຜັງເມືອງ. ການວາງແຜນຜັງເມືອງທີ່ດີຈະເຮັດໃຫ້ຕາໜ່າງຄົມມະນາຄົມລະຫວ່າງບັນດາແຂວງໃຫຍ່ໆໃນລາວມີການເຊື່ອມຕໍ່ກັນ ເຊິ່ງຈະເຮັດໃຫ້ຫຼຸດຕົ້ນທຶນການຂົນສົ່ງລົງ ແລະ ຈະເຮັດໃຫ້ອຸປະສັກໃນການເດີນທາງຫຼຸດລົງເຊັ່ນກັນ.

ຂໍ້ທີ່ 3, ປະຈຸບັນຂະແໜງການໂລຈິສຕິກເປັນຂະແໜງການທີ່ຍັງອ່ອນນ້ອຍ, ງົບປະມານໃນການທີ່ຈະດໍາເນີນໂຄງການພັດທະນາວຽກງານດັ່ງກ່າວກໍ່ມີລັກສະນະຈໍາກັດ ບວກກັບຄວາມຮູ້ຄວາມສາດ ແລະ ປະສົບການກ່ຽວກັບວຽກງານດັ່ງກ່າວນີ້ກໍ່ມີລັກສະນະຈໍາກັດເຊັ່ນກັນ. ດ້ວຍເຫດນີ້, ເພື່ອແກ້ໄຂບັນຫາທີ່ຕິດພັນ ເປັນຕົ້ນແມ່ນບັນຫາກ່ຽວກັບງົບປະມານແມ່ນມີຄວາມຈໍາເປັນທີ່ຈະຕ້ອງມີການດຶງດູດໃຫ້ນັກລົງທຶນຕ່າງປະເທດທີ່ມີທັງທຶນຮອນ ແລະປະສົບການດ້ານນີ້ເຂົ້າມາລົງທຶນໃນລາວ ດ້ວຍການລົງທຶນສ້າງສູນກະຈາຍສິນຄ້າ ແລະ ຂົນສົ່ງ ພ້ອມກັບການສ້າງໂຄງລ່າງພື້ນຖານເຊັ່ນ ການສ້າງເສັ້ນທາງດ່ວນເປັນຕົ້ນ.

ສປປ ລາວ ຍັງສາມາດນໍາໃຊ້ຂໍ້ໄດ້ປຽບດ້ານຊັບພະຍາກອນທີ່ມີຢູ່ເຊັ່ນ: ທ່າເຮືອ Vung Ang Port ທີ່ໃຫ້ສິດ ສປປ ລາວໃນການຄຸ້ມຄອງ ແລະ ອະນຸຍາດໃຫ້ທຸລະກິດຂອງນໍາໃຊ້ທ່າເຮືອໃນການຂົນສົ່ງສິນຄ້າໄປຕ່າງປະເທດໂດຍຜ່ານເສັ້ນທາງອອກສູ່ທະເລຈີນໃຕ້. ສຸດທ້າຍນີ້, ບັນດາຂໍ້ແນະນໍາຂ້າງເທິງແມ່ນສາມາດຈັດຕັ້ງປະຕິບັດໄດ້ການຮ່ວມມືກັນລະຫວ່າງກະຊວງແຜນການ ແລະ ການລົງທຶນ ແລະ ກະຊວງອຸດສາຫະກໍາ ແລະ ການຄ້າ.

## *ໄລຍະການຂະຫຍາຍຕົວ*

ສະຖານະການຂອງ ສປປ ລາວ ຕໍ່ວຽກງານສູ້ຊົນໃຫ້ ສປປ ລາວ ຫຼຸດພົ້ນອອກຈາກສະຖານະປະເທດດ້ອຍພັດທະນາໃນປີ 2024 ຈະດີຂຶ້ນ ແລະ ຈະມີຄວາມເປັນໄປໄດ້ສູງ ຖ້າຫາດລາວມີການກໍ່ສ້າງໂຄງລ່າງທີ່ດີນັບຈາກນີ້ໄປອີກສອງປີທາງໜ້າ. ນອກນີ້ການຈະສາມາດປະສົບຜົນສໍາເລັດໃນການພັດທະນາແບບຍືນຍົງໃນໄລຍະຍາວກໍ່ຈະມີຄວາມເປັນໄປໄດ້ສູງ.

ການຈັດຕັ້ງປະຕິບັດໃນໄລຍະຍາວໃນທີ່ນີ້ແມ່ນປະກອບດ້ວຍ: (i) ກະຈາຍການຄ້າ ແລະ ການລົງທຶນໃຫ້ຫຼາກຫຼາຍໂດຍການຄ້າຂາຍ ແລະ ລົງທຶນໃສ່ໃນຫຼາຍຂະແໜງການທີ່ແຕກຕ່າງກັນ ແລະ ຫຼາຍໆປະເທດທີ່ແຕກຕ່າງກັນ. (ii) ປັງປຸງຄວາມສະດວກ ແລະ ງ່າຍດາຍໃນການດໍາເນີນທຸລະກິດ. (iii) ຍົກລະດັບການຄົມມະນາຄົມ ແລະ (iv) ການໝູນໃຊ້ນະໂຍບາຍຈາກບັນດາກະຊວງມາປັບປຸງໝູນໃຊ້ໃຫ້ເກີດປະໂຫຍດສູງສຸດ.

### 1. ການສວຍໃຊ້ໂອກາດທາງການຄ້າ ແລະ ການລົງທຶນ

*ຂະແໜງການທີ່ມີທ່າແຮງທີ່ຈະຂະຫຍາຍໂຕ*

ຊັບພະຍາກອນທໍາມະຊາດໃນລາວແມ່ນມີຢ່າງຫຼວງຫຼາຍ ແລະ ໃນປີ 2018 ອັດຕາສ່ວນການສົ່ງອອກແຮ່ທາດແມ່ນກວມເອົາອັດຕາສ່ວນສູງເຖິງ 50% ຂອງຈໍານວນສິນຄ້າສົ່ງອອກທັງໝົດຂອງປະເທດ. ເຖິງວ່າ ການຄ້າຂາຍ

ຊັບພະຍາກອນສິ່ງແວດລ້ອມຂອງ ສປປ ລາວ ຈະໄດ້ຮັບຜົນກະທົບຈາກພາຍນອກກໍ່ຕາມ, ສປປ ລາວ ຄວນມີການຄ້າຂາຍສິນຄ້າປະເພດອື່ນນຳ, ເຊິ່ງຈະເຮັດໃຫ້ ສປປ ລາວມີການພັດທະນາຢ່າງຍືນຍົງ ແລະ ບໍ່ຫຼີກລ່ຽງການເອື່ອຍອີງແບບຫຼາຍເກີນໄປຕໍ່ຊັບພະຍາກອນທຳມະຊາດທີ່ມີຢູ່ຢ່າງຈຳກັດ. ຂະແໜງການຄ້າທີ່ມີທ່າແຮງ ແລະ ສາມາດເຮັດໃຫ້ເສດຖະກິດມີການກະຈາຍການຂະຫຍາຍໂຕໄປໃນຫຼາຍໆຂະແໜງການໃນໄລຍະຍາວ ມີດັ່ງນີ້:

| | |
|---|---|
| ເຄື່ອງນຸ່ງຫົ່ມ ແລະ ເຄື່ອງປະດັບ | • ຜະລິດຕະພັນເຄື່ອງນຸ່ງຮົ່ມຂອງລາວແມ່ນຍັງເປັນທີ່ຕ້ອງການຂອງຕະຫຼາດສະຫະພາຍເອີຣົບ ເຊິ່ງມີປະເທດເຢຍລະມັນເປັນປະເທດທີ່ມີການນຳເຂົ້າຫຼາຍສຸດ ຮອງລົງມາແມ່ນປະເທດອັງກິດ, ສະວີເດັນ ແລະ ປະເທດອາຣັບ<br>• ລາວມີທ່າແຮງກ່ຽວກັບສັນຍາການຄ້າສອງຝ່າຍ, ເຊິ່ງເຮັດໃຫ້ສິນຄ້າລາວໂດຍສະເພາະແມ່ນແຜ່ນແພ ແລະ ເຄື່ອງນຸ່ງຫົ່ມສາມາດສົ່ງອອກໄປສູ່ທະວີບດັ່ງກ່າວກັບສະຫະພາບເອີຣົບ |
| ເຄື່ອງໄຟຟ້າ (ເຄື່ອງຈັກ ແລະ ອຸປະກອນ) | • ຜູ້ຜະລິດປະເທດຍີ່ປຸ່ນໄດ້ຍ້າຍຖານການຜະລິດຈາກຈີນໄປສູ່ປະເທດອື່ນເນື່ອງຈາກຕົ້ນທຶນການຜະລິດທີ່ເພີ່ມຂຶ້ນ, ການຊ່ວຍເຫຼືອຈາກພາກລັດຫຼັງຈາກສະຖານະການ Covid-19, ແລະ ສະພາບທາງການເມືອງທີ່ບໍ່ໝັ້ນຄົງໃນປະເທດໄທ.<br>• ປະເທດລາວແມ່ນໄດ້ປຽບໃນດ້ານການປ່ຽນຖານການຜະລິດ ແລະ ຍັງສືບຕໍ່ໄດ້ຮັບຜົນປະໂຫຍດຈາກການທີ່ລາວຈະຜະລິດ ແລະ ສົ່ງອອກໄປໃຫ້ໄທ. |
| ການທ່ອງທ່ຽວ | • ປະກອບສ່ວນປະມານ 2 ຕື້ ດອນລາສະຫະລັດ ຫຼື 13.7% ຂອງ GDP ໃນປີ 2017. ແລະ ຄາດວ່າຈະເພີ່ມຂຶ້ນເປັນ 3:3 ຕື້ ດອນລາສະຫະລັດ ພາຍໃນປີ 2028<br>• ມີສະຖານທີ່ທ່ອງທ່ຽວທີ່ໄດ້ຮັບລາງວັນລະດັບໂລກ ແລະ ລະດັບພາກພື້ນຫຼາຍແຫ່ງ ເຊິ່ງໜຶ່ງໃນນັ້ນກໍ່ປມ່ນເມືອງມໍລະດົກໂລກ.<br>• ການທ່ອງທ່ຽວແບບອະນຸລັກສິ່ງແວດລ້ອມ, ການທ່ອງທ່ຽວທາງວັດທະນະທຳ ແລະ ການທ່ອງທ່ຽວທາງກະສິກຳ ແມ່ນບັນດາຂະແໜງການທີ່ມີທ່າແຮງຈະຂະຫຍາຍໂຕ. |

ເພື່ອກະຈາຍການລົງທຶນໃນຂະແໜງການອື່ນໆ ທີ່ບໍ່ແມ່ນແຕ່ຂະແໜງອຸດສາຫະກຳທີ່ຂຸດຄົ້ນ ແລະ ນຳໃຊ້ແຕ່ຊັບພະຍາກອນທຳມະຊາດ, ເຊິ່ງບັນດາຂະແໜງການຕ່າງໆທີ່ກວມເອົາອັດຕາສ່ວນຂອງການລົງທຶນຈາກຕ່າງປະເທດໃນຊຸມປີ 1989-2019 ແມ່ນປະກອບດ້ວຍການບໍລິການ (16%), ຫັດຖະກຳ (6%), ໂຮງແຮມ ແລະ ຮ້ານອາຫານ (3%), ການກໍ່ສ້າງ (3%), ການທະນາຄານ ແລະ ການຄ້າ (2.5%) ແລະ ຂະແໜງຄົມມະນາຄົມ (2%). ຂະແໜງການເລົ່ານີ້ຖືວ່າແມ່ນກະດູກສັນຫຼັງຂອງອຸດສາຫະກຳ ແລະ ເປັນຂະແໜງການທີ່ມີທ່າແຮງທີ່ຈະຍົກລະດັບການຜະລິດຂອງລາວ.

ພ້ອມດຽວກັນນີ້, ການສ້າງ ແລະ ພັດທະນາດຳລັດວ່າດ້ວຍການເປັນຮ່ວມມືກັນລະຫວ່າງພາກລັດ ແລະ ເອກະຊົນ ໃນ ສປປ ລາວ ຈະຊ່ວຍໃນການສະໜັບສະໜູນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ. ການຈັດຕັ້ງປະຕິບັດແມ່ນມີຄວາມຈຳເປັນທີ່ສຸດເພື່ອສ້າງຄວາມເຂັ້ມແຂງ ແລະ ເຮັດໃຫ້ສະພາບແວດລ້ອມສຳລັບການຮ່ວມມືກັນຂອງພາກລັດ ແລະ ເອກະຊົນ. ພ້ອມນີ້, ຜົນໄດ້ທາງອ້ອມທີ່ຈະໄດ້ຈາກການສົ່ງເສີມ ການຮ່ວມມືຂອງພາກລັດ ແລະ ເອກະຊົນຜ່ານລະບົບການລົງທຶນນັ້ນແມ່ນຈະຊ່ວຍຫຼຸດຜ່ອນຄວາມກົດດັນດ້ານງົບປະມານຂອງລັດທີ່ຈະນຳໃຊ້ໃນການພັດທະນາໂຄງລ່າງພື້ນຖານຂອງປະເທດ.

ສປປ ລາວ ຕ້ອງໄດ້ຕັ້ງໜ້າຈັດຕັ້ງປະຕິບັດວຽກງານກ່ຽວຂ້ອງເພື່ອໃຫ້ບັນລຸໄດ້ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດຄັ້ງທີ່ 9, ທັງນີ້ການຮ່ວມມືລະຫວ່າງພາກລັດ ແລະ ເອກະຊົນໃນຂະແໜງການຫຼັກຕ່າງໆເຊິ່ງປະກອບດ້ວຍຂະແໜງກະສິກຳ, ສຶກສາທິການ, ພັດທະນາຊຸມຊົນ, ການສະໜອງນ້ຳສະອາດ ແລະ ສຸຂານາໄມ, ສາທາລະນະສຸກ, ພະລັງງານ ແລະ ການທ່ອງທ່ຽວ ແມ່ນສິ່ງສຳຄັນທີ່ຈະປະກອບສ່ວນຊ່ວຍໃນວຽກງານດັ່ງກ່າວ.

ການຜະລິດແມ່ນໝາກຫົວໃຈຂອງການຄ້າ, ສຳລັບປະເທດຍີ່ປຸ່ນແມ່ນສິນຄ້າປະເພດເຄື່ອງໃຊ້ໄຟຟ້າ, ສຳລັບປະເທດໄທແມ່ນລົດຍົນ ແລະ ອາໄຫລ່ລົດຍົນ, ສຳລັບສະຫະພາຍເອີຣົບແມ່ນສິນຄ້າປະເພດເຄື່ອງນຸ່ງຫົ່ມ-ແຜ່ນແພ, ເຊິ່ງສິນຄ້າເລົ່ານີ້ສາມາດສ້າງມູນຄ່າເພີ່ມ ແລະ ສ້າງການຈ້າງງານ. ດັ່ງນັ້ນ, ການທີ່ຈະພັດທະນາ ຫຼື ດຶງດູດການລົງທຶນ

ໄດ້ນັ້ນລັດຖະບານຈະຕ້ອງສ້າງຄວາມໄດ້ປຽບໃນການແຂ່ງຂັນໂດຍປັບປຸງສິ່ງອຳນວຍຄວາມສະດວກດ້ານຕ່າງໆບໍ່ສະເພາະແຕ່ຄ່າແຮງງານ. ໃນອະນາຄົດ, ສປປ ລາວ ສາມາດສ້າງຄວາມໄດ້ປຽບໃນການໝູນໃຊ້ພະລັງງານໄຟຟ້າທີ່ປະເທດລາວມີ ແລະ ເຮັດໃຫ້ຄ່າໄຟຟ້າມີລາຄາຖືກລົງ ເຊິ່ງຈະຊ່ວຍຫຼຸດຕົ້ນທຶນການຜະລິດລົງ. ຖ້າເປັນດັ່ງນັ້ນ, ບັນດາຂະແໜງການຜະລິດ ແລະ ອຸດສາຫະກຳຂອງປະເທດອື່ນອາດຫັນມາລົງທຶນໃນປະເທດລາວຫຼາຍຂຶ້ນ, ຕົວຢ່າງແມ່ນອຸດສາຫະກຳຜະລິດອາໄຫລ່ລົດຍົນ.

**ຂະແໜງການຜະລິດ:** ວຽກງານພັດທະນາສຳລັບຂະແໜງການຜະລິດຂະໜາດໃຫຍ່ເຊິ່ງເປັນຂະແໜງການທີ່ມີການແຂ່ງຂັນສູງແມ່ນຕ້ອງໄດ້ສຸມໃສ່ ທັງນີ້ກໍ່ເພື່ອໃຫ້ສາມາດແຂ່ງຂັນກັບປະເທດເພື່ອນບ້ານເຊັ່ນ ຫວຽດນາມໄດ້. ໃນປະຈຸບັນຫວຽດນາມແມ່ນມີຄວາມໄດ້ປຽບດ້ານແຮງງານ ແລະ ມີຄວາມອາດສາມາດດ້ານເທັກໂນໂລຍີ, ເຊິ່ງໄດ້ເຮັດໃຫ້ປະເທດດັ່ງກ່າວມີສັກກະຍາພາບ ແລະ ມີການຂະຫຍາຍໂຕດ້ານການຜະລິດທີ່ວ່ອງໄວ ແລະ ສາມາດເປັນແຫລ່ງຜະລິດສິນຄ້າທີ່ເປັນສ່ວນປະກອບ ຫຼື ຊິ້ນສ່ວນອຸປະກອນໄອທີປະເພດຕ່າງໆໃຫ້ແກ່ຕ່າງປະເທດໄດ້.

ສຳລັບ ສປປ ລາວ, ປະຈຸບັນເຖິງວ່າປະຊາກອນຈະມີຈຳນວນໜ້ອຍ ແລະ ຍັງຂາດຄວາມສາມາດພຽງພໍທີ່ຈະດຶງດູດນັກລົງທຶນຈາກຕ່າງປະເທດໃຫ້ມາທຳການຜະລິດໃນສິນຄ້າປະເພດດຽວກັບຫວຽດນາມ, ບັນດາຂະແໜງການຜະລິດກໍ່ຕ້ອງໄດ້ສືບຕໍ່ພັດທະນາໃຫ້ມີທ່າແຮງໃຫ້ໄດ້ ເຊິ່ງເບື້ອງຕົ້ນອາດຈະເລີ່ມທີ່ຂະແໜງກະສິກຳເປັນຕົ້ນ. ຕົວຢ່າງ: ຂະແໜງການຜະລິດສິນຄ້າກະສິກຳສາມາດພັດທະນາການຂະບວນການຫຸ້ມຫໍ່ ເພື່ອສ້າງຄວາມດູດີ ແລະ ໜ້າສົນໃຈໃຫ້ຜະລິດຕະພັນພາຍໃນ ເປັນຕົ້ນແມ່ນກາເຟ.
ສະຫຼຸບລວມແລ້ວ ສປປ ລາວ ແມ່ນມີທ່າແຮງໃນຂະແໜງການຜະລິດ ເຊິ່ງຈະນຳຜົນປະໂຫຍດມາສູ່ລາວ, ແຕ່ທັງນີ້ໝາກຫົວໃຈສຳຄັນແມ່ນໃຫ້ສຸມໃສ່ສິນຄ້າທີ່ມີລາຄາແພງ ແລະ ເປັນສິນຄ້າສະເພາະທີ່ບໍ່ແມ່ນສິນຄ້າທົ່ວໄປທີ່ມີການຜະລິດຫຼາຍໆ ເພື່ອການສ້າງຄວາມແຕກຕ່າງຈາກສິນຄ້າທົ່ວໄປຂອງປະເທດເພື່ອນບ້ານ.

**ຂະແໜງການບໍລິການ:** ຂະແໜງບໍລິການກວມເອົາ 16% ຂອງອັດຕາການລົງທຶນໂດຍກົງຈາກຕ່າງປະເທດ. ຂະແໜງດັ່ງກ່າວແມ່ນຂະແໜງການທີ່ບໍ່ໃຊ້ຊັບພະຍາກອນທຳມະຊາດໃນການດຳເນີນງານ,ໃນທາງຂໍ້ມູນແລ້ວ ຂະແໜງດັ່ງກ່າວຕ້ອງໄດ້ມີການລະບຸລະອຽດຕື່ມວ່າການບໍລິການແມ່ນປະກອບມີດ້ານໃດແດ່. ເຖິງຢ່າງໃດກໍ່ດີ ເນື່ອງຈາກການລະບາດຂອງພະຍາດ Covid-19 ເຮັດໃຫ້ຂະແໜງດັ່ງກ່າວໄດ້ຮັບຜົນກະທົບຢ່າງໜັກທີ່ສຸດ ເຊິ່ງມັນໄດ້ຮຽກຮ້ອງໃຫ້ພາກລັດເຂົ້າມາຊ່ວຍເຫຼືອເພື່ອໃຫ້ບັນດາຫົວໜ່ວຍທຸລະກິດດັ່ງກ່າວສາມາດຮັກສາທຸລະກິດໄວ້ໄດ້. .

*ໝູນໃຊ້ການເປີດເສລີດ້ານການຄ້າ*

ສປປ ລາວ ມີຄວາມຈຳເປັນຈະຕ້ອງສືບຕໍ່ປັບປຸງດ້ານການຄ້າ ແລະ ການລົງທຶນແບບປະສົມປະສານເພື່ອຫຼີກລ່ຽງການເອື່ອຍອີງໃສ່ແຕ່ຄູ່ຮ່ວມດ້ານການຄ້າ ແລະ ການລົງທຶນໃດໜຶ່ງ ແລະ ທັງຫຼີກລ່ຽງການຄ້າ ແລະ ການລົງທຶນໃສ່ແຕ່ຂະແໜງການໃດໜຶ່ງ ດັ່ງທີ່ເຫັນໄດ້ຈາກສົງຄາມດ້ານການຄ້າລະຫວ່າງປະເທດຈີນ ແລະ ສະຫະລັດອາເມລິກາ ທີ່ເຮັດໃຫ້ມີຜົນກະທົບທົ່ວໂລກ.

ອີງຕາມສະຖິຕິແລ້ວເຫັນໄດ້ຢ່າງຊັດເຈນວ່າການຄ້າ ແລະ ການລົງທຶນລະຫວ່າງປະເທດຈີນ ແລະ ລາວແມ່ນພວມເພີ່ມຂຶ້ນຢ່າງຕໍ່ເນື່ອງ. ປະເທດຈີນແມ່ນປະເທດຄູ່ຄ້າລາຍໃຫຍ່ ອັນດັບ 2 ຂອງ ສປປ ລາວ ແລະ ເປັນຜູ້ລົງທຶນທັງເປັນຜູ້ໃຫ້ການຊ່ວຍເຫຼືອລາຍໃຫຍ່ທີ່ສຸດຂອງ ສປປ ລາວ. ໃນທາງດຽວກັນນີ້ກໍ່ເຫັນໄດ້ວ່າຈີນໄດ້ນຳມາເຊິ່ງໂອກາດ ແລະ ຄວາມສ່ຽງດ້ານຄວາມສະຖຽນລະພາບຂອງເສດຖະກິດມະຫາພາກຂອງລາວ. ເຖິງຢ່າງໃດກໍ່ຕາມໃນຂະນະທີ່ຈີນແມ່ນແຫຼ່ງທຶນລາຍໃຫຍ່ ແລະ ມີຕະຫຼາດຜູ້ບໍລິໂພກທີ່ໃຫຍ່ເຊິ່ງຈະເປັນໂອກາດໃຫ້ແກ່ການຂະຫຍາຍໂຕທາງດ້ານເສດຖະກິດຂອງລາວ, ສິ່ງທ້າທາຍດ້ານຄວາມຍືນຍົງຂອງເສດຖະກິດກໍ່ເປັນບັນຫາໜຶ່ງທີ່ຕ້ອງໄດ້ເບິ່ງຕື່ມ.

ຮູບ: ກະແສເງິນຈາກການຄ້າຂອງລາວໃນຊຸມປີ 2013-2018




ຮູບ: ກະແສການລົງທຶນໂດຍກົງຈາກຕ່າງປະເທດຂອງ ສປປ ລາວ ໃນປີ 2015-2019




*Source: ASEAN Stats Database*

ພ້ອມດຽວກັນນີ້, ເຂດຍຸດທະສາດ ລວມທັງຂະແໜງຍຸດທະສາດ ຂອງ ສປປ ລາວ ນັບມື້ນັບຖືກຈີນເຂົ້າມາມີອິດທິພົນ. ດັ່ງນັ້ນ ລັດຖະບານລາວຕ້ອງໄດ້ມີການຄຸ້ມຄອງ ແລະ ເອົາໃຈໃສ່ຕິດຕາມບັນຫາດັ່ງກ່າວເພື່ອປົກປ້ອງຜົນປະໂຫຍດຂອງຊາດ ແລະ ຜົນປະໂຫຍດຂອງປະຊາຊົນ. ຕົວຢ່າງທີ່ເຫັນໄດ້ໃນປະຈຸບັນແມ່ນເສັ້ນທາງລົດໄຟລາວ-ຈີນ ທີ່ລັດຖະບານລາວໄດ້ມີການກູ້ຢືມຈາກຈີນເປັນເງິນເຖິງ 1.5 ຕື້ ດອນລາສະຫະລັດ ແມ່ນພວມຢູ່ໃນຂັ້ນຕອນການສ້າງ. ພາຍຫຼັງສ້າງສຳເລັດ ເສັ້ນທາງລົດໄຟດັ່ງກ່າວຈະສາມາດນຳສິນຄ້າທີ່ຈີນຜະລິດຈຳນວນຫຼາຍນັ້ນເຂົ້າມາສູ່ລາວ ແລະ ປະເທດອື່ນດູຈີນໄດ້ຢ່າງສະດວກສະບາຍ. ນອກນີ້, ຈີນຍັງເຂົ້າມາມີສ່ວນຮ່ວມໃນບັນດາເຂື່ອນໄຟຟ້າຂອງລາວ, ເຂື່ອນໄຟຟ້າເກືອບເຄິ່ງໜຶ່ງໃນຈຳນວນເຂື່ອນທັງໝົດແມ່ນລົງທຶນໂດຍຈີນ.
ສະນັ້ນ, ຈຶ່ງມີຄວາມຈຳເປັນທີ່ສຸດທີ່ ສປປ ລາວຈະສວຍໃຊ້ໂອກາດ ແລະ ຜົນປະໂຫຍດຈາກການລົງທຶນຈາກຈີນໃນການສ້າງຄວາມເຂັ້ມແຂງໃຫ້ແກ່ປະເທດຕົນໃນຂະແໜງການຕ່າງໆ ທັງນີ້ກໍ່ເພື່ອໃນອະນາຄົດຖ້າ ສປປ ລາວ ປະສົບກັບອຸປະສັກຈາກຈີນ ກໍ່ຍັງຈະສາມາດປະຄັບປະຄອງປະເທດໄດ້.

ໃນທາງການຄ້າ, ນອກຈາກເນັ້ນໃສ່ວຽກງານການສົ່ງເສີມການສ້າງສາຍພົວພັນທາງການຄ້າກັບຕ່າງປະເທດເຊັ່ນ: ອິນເດຍ, ຍີ່ປຸ່ນ, ອົດສະຕາລີ ແລະ ປະເທດອື່ນໆ ດັ່ງທີ່ລະບຸໄວ້ຢູ່ໃນຮ່າງ “ຫຼັງແຜນງານນະໂຍບາຍການຄ້າ ປີ 2020” ແລ້ວ, ສປປ ລາວ ຍັງຕ້ອງເອົາໃຈໃສ່ສ້າງໂອກາດໃນການພັດທະນາຂະແໜງການ ຫຼື ຫົວໜ່ວຍທຸລະກິດດ້ານອາຫານ, ເຄື່ອງນຸ່ງຫົ່ມ ແລະ ເຄື່ອງປະດັບ, ແລະ ເຄື່ອງໃຊ້ໄຟຟ້າ. ອີງຕາມຕົວເລກສະຖິຕິການຄ້າຂອງລາວ,

ກະແສເງິນຈາກການຄ້າຂອງລາວ ແລະ ອິນເດຍໃນໄລຍະທີ່ຜ່ານມາແມ່ນຢູ່ໃນລະດັບກາງໆ ແລະ ສະຖິຕິປີ 2018 ແມ່ນມີປະມານ 128.7 ລ້ານດອນລາ ແລະ ຍັງມີທ່າແຮງທີ່ຈະເພີ່ມຂຶ້ນ. ສໍາລັບປະເທດຍີ່ປຸ່ນ ກະແສເງິນຈາກການຄ້າແມ່ນມີປະມານ 86.4 ລ້ານດອນລາສະຫະລັດ ແລະ ໃນສອງປີຜ່ານມານີ້ກໍ່ມີລັກສະນະເພີ່ມຂຶ້ນເລື້ອຍໆ. ສຸດທ້າຍແມ່ນການຄ້າລາວ-ອິດສະຕາລີ ເຊິ່ງເຫັນວ່າມີການຫຼຸດລົງຫຼາຍນັບຕັ້ງແຕ່ປີ 2014, ແຕ່ໃນນັ້ນຂະແໜງການບໍ່ແຮ່ ແລະ ກະສິກໍາກໍ່ຍັງມີການຄ້າຂາຍຢູ່.

ຮູບ: ເສັ້ນສະແດງການຄ້າຂອງ ສປປ ລາວ (ປີ 2013-2018)




*Source: ASEAN Stats Database*

ຕໍ່ກັບວຽກງານການລົງທຶນ, ກະຊວງແຜນການ ແລະ ການລົງທຶນໄດ້ມີໂອກາດໃນການຍົກລະດັບ ແລະ ສົ່ງເສີມການລົງທືຍຈາກການລົງທຶນໂດຍກົງຈາກຕ່າງປະເທດເຊັ່ນ: ບັນດາປະເທດໃນສະຫະພາບເອີຣົບ, ຍີ່ປຸ່ນ ແລະ ເກົາຫຼີໃຕ້. ຕິດພັນກັບປະເທດຍີ່ປຸ່ນ ໃນໄລຍະບໍ່ດົນມານີ້ ລັດຖະບານຍີ່ປຸ່ນໄດ້ລົງທຶນປະມານ 2.4 ຕື້ດອນລາສະຫະລັດ ເພື່ອຊ່ວຍຜູ້ປະກອບການໃນການຍ້າຍຖານການຜະລິດຂອງບໍລິສັດຍີ່ປຸ່ນອອກຈາກຈີນກັບສູ່ປະເທດຕົນລວມທັງຍ້າຍໄປສູ່ປະເທດອື່ນໆໃນກຸ່ມປະເທດອາຊຽນ, ເຊິ່ງເຫດຜົນຂອງການປ່ຽນແປງດັ່ງກ່າວແມ່ນເນື່ອງຈາກຕ່ອງໂສ້ການຜະລິດຢູ່ຈີນໄດ້ຢຸດຊະງັກລົງຈາກສະຖານະການໂລກລະບາດ. ຕໍ່ກັບປະເດັນດັ່ງກ່າວ, ສປປ ລາວເອງກໍ່ໄດ້ຮັບຜົນປະໂຫຍດ ແລະ ບໍລິສັດຍີ່ປຸ່ນກໍ່ໄດ້ສົນໃຈມາລົງທຶນຢູ່ລາວໃນຈໍານວນບໍ່ໜ້ອຍ.

ນອກຈາກການເຊື່ອມໂຍງເສດຖະກິດສອງຝ່າຍກັບປະເທດໃດໜຶ່ງ, ສປປ ລາວ ຕ້ອງໄດ້ສ້າງສາຍພົວພັນ ແລະ ການຮ່ວມມືກັບບັນດາປະເທດອາຊຽນດ້ວຍກັນ ເຊັ່ນການຮ່ວມມືໃນການການສ້າງຕັ້ງປະຊາຄົມເສດຖະກິດອາຊຽນ ຫຼື AEC ໃນປີ 2015. ດັ່ງນັ້ນ, ລາວ ແລະ ກຸ່ມປະເທດອາຊຽນຕ້ອງໄດ້ມີການຮ່ວມມືກັນເພື່ອຮັບມື ແລະ ຫາມາດຕະການຮອງຮັບດ້ານເສດຖະກິດພາຍຫຼັງການລະບາດຂອງພະຍາດ Covid-19 ຮ່ວມກັນ. ສໍາຄັນໄປກວ່ານັ້ນແມ່ນກຸ່ມປະເທດອາຊຽນຍັງສາມາດຮັກສາແນວທາງທີ່ຈະເຮັດໃຫ້ອາຊຽນກາຍເປັນປະຊາຄົມເສດຖະກິດທີ່ໃຫຍ່ ເປັນອັນດັບ 4 ຂອງໂລກໃນປີ 2030 ພ້ອມທັງເປັນປະຊາຄົມທີ່ດຶງດູດການລົງທຶນຈາກຕ່າງປະເທດ. ສັນຍາການຄ້າ ແລະ ການລົງທຶນລະຫວ່າງປະເທດໃນອາຊຽນດ້ວຍກັນ ແລະ ສັນຍາການຄ້າ ແລະ ການລົງທຶນຂອງປະເທດອາຊຽນກັບປະເທດຄູ່ຮ່ວມອື່ນໆຈະເຮັດໃຫ້ບັນດາປະເທດໃນອາຊຽນມີຄວາມເຂັ້ມແຂງ ແລະ ສາມາດດຶງດູດການລົງທຶນຈາກຕ່າງປະເທດ. ພ້ອມດຽວກັນນີ້ ສັນຍາວ່າການຮ່ວມມືເສດຖະກິດພາກພື້ນແບບຮອບດ້ານ ໃນທ້າຍປີ 2020 ຈະເປັນ

ການສ້າງໂອກາດໃຫ້ ສປປ ລາວ ໃນການໝູນໃຊ້ ແລະ ສ້າງຜົນປະໂຫຍດໃນລາວໃນການທີ່ຈະຟື້ນຟູເສດຖະກິດໄດ້ໄວຂຶ້ນ. ນອກນີ້, ສປປ ລາວຍັງໄດ້ຮັບຂໍ້ຍົກເວັ້ນວ່າດ້ວຍການໃນການແກ້ໄຂຂໍ້ຂັດແຍ່ງດ້ານການລົງທຶນ ເນື່ອງຈາກ ສປປ ລາວ ຍັງຢູ່ໃນສະຖານະປະເທດດ້ອຍພັດທະນາ . ຕໍ່ກັບຂໍ້ໄດ້ປຽບດັ່ງກ່າວນີ້ບັນດານັກລົງທຶນສາມາດອາໄສຊ່ອງຫວ່າງນີ້ໃນການດຳເນີນທຸລະກິດໃນລາວ.

ສິ່ງທີ່ກ່າວມາຂ້າງເທິງນັ້ນຄວນມີການຈັດຕັ້ງປະຕິບັດ ແລະ ຊີ້ນຳໂດຍລັດຖະບານ ສປປ ລາວ, ພ້ອມກັບຄວນລະບຸເຂົ້າໄປໃນຮ່າງແຜນທົບທວນນະໂຍບາຍຫຼັງການຄ້າ (ປີ 2020) ທີ່ມີຈຸດມີປະສົງຫຼັກໃນສ້າງ ແລະ ລະບຸຂັ້ນຕອນການຈັດຕັ້ງປະຕິບັດໃຫ້ຊັດເຈນຕໍ່ກັບວຽກງານການປັບປຸງນະໂຍບາຍດ້ານການຄ້າໃຫ້ມີປະສິດທິພາບ. ສຳລັບນະໂຍບາຍແມ່ນຄວນເນັ້ນໃສ່ການຍົກລະດັບ ແລະ ສ້າງຄວາມອາດສາມາດໃຫ້ແກ່ພະນັກງານກ່ຽວຂ້ອງ ໂດຍສະເພາະແມ່ນການສ້າງທັກສະໃນການເຈລະຈາ ແລະ ໃຫ້ມີຄວາມຮູ້ຄວາມເຂົ້າໃຈຢ່າງເລິກເຊິ່ງຕໍ່ກັບການຈັດຕັ້ງປະຕິບັດບັນດາລະບຽບ-ກົດໝາຍທີ່ກ່ຽວຂ້ອງ. ສຸດທ້າຍ, ສິ່ງທີ່ໄດ້ນຳສະເໜີມາທັງໝົດນີ້, ການທັນເປັນເສລີດ້ານການຄ້າ ແລະ ສັນຍາທາງການຄ້າຫຼາຍໆສະບັບ ແມ່ນຄວນສ້າງຜົນໄດ້ຮັບທີ່ເປັນປະໂຫຍດໃຫ້ສ່ວນລວມ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ.

**ກໍລະນີສຶກສາ: ຫວຽດນາມໝູນໃຊ້ສັນຍາການຄ້າເສລີໃນການສ້າງຜົນປະໂຫຍດໃຫ້ປະເທດ**

ຜົນປະໂຫຍດທີ່ໄດ້ຮັບຈາກສັນຍາການຄ້າເສລີເຮັດໃຫ້ການພັດທະນາດ້ານເສດຖະກິດຂອງຫວຽດນາມເປັນໄປຢ່າງຕໍ່ເນື່ອງ ແລະ ເຮັດໃຫ້ມີບາດກ້າວໃນການຫຼຸດພົ້ນອອກຈາກປະເທດທີ່ມີຄວາມຫຼ້າຫຼັງດ້ານເທັກໂນໂລຍີນັ້ນດີຂຶ້ນ, ຫຼຸດຜ່ອນການຜະລິດສິນຄ້າທີ່ບໍ່ທັນສະໄໝ ແຕ່ມີການຜະລິດສິນຄ້າທີ່ມີຄວາມທັນສະໄໝດ້ານເທັກໂນໂລຍີທີ່ຫຼາຍຂຶ້ນ. ຕໍ່ກັບຜົນປະໂຫຍດແມ່ນສາມາດອະທິບາຍໃຫ້ເຫັນຢ່າງຊັດເຈນໄດ້ 2 ທາງເຊັ່ນ:

- **ດຶງດູດຄູ່ຮ່ວມທຸລະກິດຈາກຫຼາກຫຼາຍຂະແໜງ**, ໂດຍຜ່ານເຄືອຂ່າຍທາງດ້ານການຄ້າທີ່ກວ້າງກວ່າເດີມ ແລະ ຍັງສາມາດນຳເຂົ້າສິນຄ້າທີ່ມີລາຄາຖືກກວ່າຈາກປະເທດຄູ່ຄ້າ. ພ້ອມທັງສາມາດສົ່ງອອກສິນຄ້າທີ່ເປັນທີ່ຕ້ອງການຂອງຕະຫຼາດ.

- **ສ້າງຄູ່ຮ່ວມທຸລະກິດກັບບໍລິສັດຕ່າງປະເທດ** ເຊິ່ງເຮັດໃຫ້ແຮງງານໃນຫວຽດນາມສາມາດເຫັນ ແລະ ຖອດຖອນບົດຮຽນຈາກຜູ້ທີ່ມີຄວາມຊ່ຽວຊານ ແລະ ເຮັດໃຫ້ເທັກໂນໂລຍີໃນການຜະລິດກໍ່ໄດ້ຮັບການພັດທະນາຂຶ້ນຕື່ມ. ຕົວຢ່າງ: ການອອກຈຳໜ່າຍຂອງໂທລະສັບ *VSmar*, ເຊິ່ງສ້າງ ແລະ ຜະລິດທີ່ປະເທດຫວຽດນາມ ກຸ່ມ *Vingroup*

ຖ້າຫາກວ່ານະໂຍບາຍຂອງລັດຖານບານລາວມີເປົ້າໝາຍເນັ້ນໃສ່ການອຳນວຍຄວາມສະດວກດ້ານການຄ້າ, ລັດຖະບານຄວນໃຫ້ບັນດາຫົວໜ່ວຍທຸລະກິດພາຍໃນໄດ້ຮັບຜົນປະໂຫຍດຈາກສັນຍາການຄ້າເສລີ. ນອກນີ້, ການສ້າງຄວາມອາດສາມາດໃຫ້ແກ່ຊັບພະຍາກອນມະນຸດແມ່ນສິ່ງທີ່ຕ້ອງໄດ້ຈັດຕັ້ງປະຕິບັດ ເຊິ່ງສາມາດເຮັດໄດ້ໂດຍຜ່ານສະຖານບັນວິຊາຊີບ ລວມທັງການແລກປ່ຽນບົດຮຽນຈາກບໍລິສັດຄູ່ຮ່ວມຈາກທຸລະກິດຕ່າງປະເທດ.

## 2. ການສືບຕໍ່ປະຕິບັດຕາມແຜນທີ່ຜ່ານມາ

*ປັບປຸງຄວາມສະດວກໃນການດໍາເນີນທຸລະກິດ*

ໃນປີ 2020, ຄວາມສະດວກໃນການດໍາເນີນທຸລະກິດຂອງປະເທດລາວແມ່ນຢູ່ໃນອັນດັບທີ 154 ຈາກທັງໝົດ 190 ທົ່ວໂລກ, ເຊິ່ງຕົກລົງມາ 13 ອັນດັບເມື່ອທຽບກັບປີ 2018. ເມື່ອທຽບກັບມາດຖານຂອງປະເທດເພື່ອນບ້ານແລ້ວເຫັນວ່າ ສປປ ລາວ ຍັງມີຄວາມຫຍຸ້ງຍາກຫຼາຍດ້ານ ແລະ ບໍ່ມີຄວາມໜ້າສົນໃຈເທົ່າທີ່ຄວນ. ພາກເອກະຊົນປະຈຸບັນແມ່ນມີຄວາມຮັບຮູ້ກ່ຽວກັບຄວາມພະຍາຍາມຂອງລັດຖະບານທີ່ຈະເຮັດໃຫ້ແວດລ້ອມຂອງການປະກອບທຸລະກິດມີຄວາມສະດວກຂຶ້ນ. ໃນນັ້ນ, ກະຊວງອຸດສາຫະກໍາ ແລະ ການຄ້າໄດ້ອອກແຈ້ງການໃນເດືອນມັງກອນ ປີ 2020 ທີ່ຜ່ານມາໃນການທີ່ຈະຫຼຸດຂັ້ນຕອນການອອກທະບຽນ ຫຼື ໃບອະນຸສາດສ້າງຕັ້ງວິສາຫະກິດ. *ຂັ້ນຕອນການເລີ່ມຕົ້ນທຸລະກິດ* ໄດ້ຖືກທົບທວນໃໝ່ເພື່ອປັບປຸງ, ແກ້ໄຂ ແລະຫຼຸດຂັ້ນຕອນທີ່ບໍ່ຈໍາເປັນອອກ. ທັງນີ້ໄດ້ເຮັດໃຫ້ຂັ້ນຕອນລິເລີ່ມທຸລະກິດຖືກປັບຈາກຢ່າງຕໍ່າ 10 ຂັ້ນຕອນມາເປັນ 3 ຂັ້ນຕອນ. ເຖິງຢ່າງໃດກໍ່ຕາມ, ຄວາມຫຍຸ້ງຍາກຍາກຍັງມີຢູ່ ເຊິ່ງປະກອບດ້ວຍ ການອອກໜັງສືອະນຸຍາດເຮັດວຽກ, ການສະໝັກຂໍວີຊ່າເຂົ້າ-ອອກປະເທດແບບຫຼາຍຄັ້ງ, ຂັ້ນຕອນການນໍາເຂົ້າ ແລະ ສົ່ງອອກ ລວມໄປເຖິງການອອກໜັງສືຢັ້ງຢືນກໍາມະສິດຊັບສິນ. ອີງຕາມການປະກອບຄໍາເຫັນຂອງຫຼາຍຝ່າຍເຮັດໃຫ້ຮູ້ວ່າຂັ້ນຕອນຫຼາຍໆຢ່າງທີ່ຕິດພັນກັບການຂົນສົ່ງສິນຄ້າໄດ້ເຮັດໃຫ້ຕົ້ນທຶນການຂົນສົ່ງມີມູນຄ່າສູງ ແລະ ຍັງເປັນບັນຫາໜຶ່ງຂອງ ສປປ ລາວ. ຕໍ່ກັບບັນຫານີ້, ກະຊວງແຜນການ ແລະ ການລົງທຶນສາມາດໝູນໃຊ້ຄວາມຊ່ຽວຊານໃນວຽກງານການອໍານວຍຄວາມສະດວກໃນການດໍາເນີນທຸລະກິດມາປັບປຸງ-ແກ້ໄຂວຽກງານດັ່ງກ່າວ.

ຮູບ: ແຜນວາດສະແດງຄວາມສະດວກໃນການດໍາເນີນທຸລະກິດໃນ ສປປ ລາວ ປີ 2020




*Source: World Bank Doing Business Report (2020)*

ອີງຕາມ ຄໍາສັ່ງນາຍົກລັດຖະມົນຕີ ເລກທີ 02/ນຍ ວ່າດ້ວຍການປັບປຸງບັນດາລະບຽບການ ແລະ ກົນໄກປະສານງານໃນການດໍາເນີນທຸລະກິດຢູ່ ສປປ ລາວ (ອອກໃນເດືອນ ກຸມພາ 2018), ແລະ ຄໍາສັ່ງ

ນາຍົກລັດຖະມົນຕີ ເລກທີ 03/ນຍ ວ່າດ້ວຍການປັບປຸງວຽກງານການບໍລິການ, ການອອກໃບອະນຸຍາດລົງທຶນ ແລະ ການອອກໃບອະນຸຍາດໃນການດຳເນີນທຸລະກິດ (ອອກໃນເດືອນ ມັງກອນ 2020) ຈະເຮັດໃຫ້ຂັ້ນຕອນການເຮັດທຸລະກິດໃນລາວສະດວກສະບາຍຂຶ້ນ ແລະ ເປົ້າໝາຍທີ່ຈະເຮັດໃຫ້ການຈັດອັນດັບຄວາມງ່າຍດາຍໃນການດຳເນີນທຸລະກິດຂອງ ສປປ ລາວ ຫຼຸດລົງຈາກ 3 ຕົວເລກ ເປັນ 2 ຕົວເລກໃນປີ 2021 ກໍ່ຈະມີຄວາມເປັນໄປໄດ້, ເຊິ່ງລາຍລະອຽດມີດັ່ງນີ້:

| ຕົວຊີ້ວັດໃນຄວາມສະດວກໃນການດຳເນີນທຸລະກິດ | ຍ້ອນຫຍັງປະເທດລາວຈຶ່ງຍັງປະຕິບັດບໍ່ໄດ້ | ຂັ້ນຕອນທີ່ຈະໃຊ້ໃນການແກ້ໄຂ |
|---|---|---|
| ການເລີ່ມທຸລະກິດ | ມີຂະບວນການລິເລີ່ມທຸລະກິດມີຄວາມສັບສົນທີ່ສຸດ ແລະ ນະໂຍບາຍ-ລະບຽບກ່ຽວຂ້ອງກໍ່ບໍ່ຈະແຈ້ງເທົ່າທີ່ຄວນ. | ສືບຕໍ່ປະຕິບັດຕາມແຈ້ງການກ່ຽວກັບການອຳນວຍຄວາມສະດວກໃຫ້ພາກທຸລະກິດຂອງ ຂອງກະຊວງອຸດສາຫະກຳ ແລະ ການຄ້າ, ພ້ອມກັບສືບຕໍ່ປັບປຸງດ້ານຕ່າງໆຕາມການຕຳໜິສິ່ງຂ່າວຈາກພາກເອກະຊົນ. |
| ການຊຳລະອາກອນ | ທຸລະກິດທີ່ບໍ່ໄດ້ຂຶ້ນທະບຽນມີຫຼາຍ ແລະ ນັບມື້ນັບເພີ່ມຂຶ້ນ, ການເກັບພັນທະອາກອນກໍ່ມີຊ່ອງຫວ່າງ, ການເກັບພັນທະອາກອນສຳລັບທຸລະກິດຂອງຄົນຕ່າງປະເທດແມ່ນບໍ່ສະເໝີພາບ. | ສ້າງບ່ອນລວມສູນປະຫວັດການຊຳລະອາກອນຂອງພາກທຸລະກິດ ແລະ ບັນທຶກການຊຳລະອາກອນຂອງທຸກຫົວໜ່ວຍ.<br>ນຳໃຊ້ລະບົບການຊຳລະອາກອນແບບອີເລັກໂທຣນິກ ແລະ ນຳໃຊ້ລະບົບການເກັບກຳຂໍ້ມູນການຊຳລະອາກອນ. |
| ການຄ້າຂ້າມແດນ | ມີຂອດເອກະສານຫຼາຍຂອດ ແລະ ແຕ່ລະຂອດຕ້ອງປະຕິບັດຕາມລະບຽບ-ຕາມຂັ້ນຕອນຫຼາຍເກີນໄປ, ເຊິ່ງເຮັດໃຫ້ພາກທຸລະກິດຕ້ອງໄດ້ລໍຖ້າເຊິ່ງເສຍທັງເວລາ ແລະ ທັງມີຄ່າໃຊ້ຈ່າ. | ເຮັດໃຫ້ຂອດເອກະສານ,ຄວາມຕ້ອງການດ້ານເອກະສານ ແລະ ການປະຕິບັດລະບຽບງ່າຍດາຍຂຶ້ນ. |

ການປັບປຸງຄວາມສະດວກໃນການດຳເນີນທຸລະກິດແມ່ນມີຄວາມຕ້ອງການຈຳເປັນທີ່ຈະຕ້ອງນຳໃຊ້ຊັບພະຍາກອນມະນຸດຈຳນວນຫຼາຍ. ແຕ່ເຖິງຢ່າງໃດກໍ່ຕາມໃນເບື້ອງຕົ້ນ ຫຼື ຢູ່ໃນຂັ້ນຕອນການແກ້ໄຂບັນຫາແບບດ່ວນນັ້ນ ແມ່ນບໍ່ໄດ້ປັບປຸງຫຍັງຫຼາຍ, ອາດຈະປັບປຸງກ່ຽວກັບວຽກງານການຄຸ້ມຄອງບໍລິຫານແບບເລັກນ້ອຍເທົ່ານັ້ນ ແລະ ການຈັດອັນດັບທີຂອງຄວາມງ່າຍດາຍໃນການດຳເນີນທຸລະກິດກໍ່ອາດຈະດີຂຶ້ນ ແຕ່ບໍ່ຫຼາຍ.

**ກໍລະນີສຶກສາ: ປະເທດອິນໂດເນເຊຍ ແລະ ການຈັດອັນດັບຂອງຄວາມສະດວກໃນການດຳເນີນທຸລະກິດຂອງປະເທດດັ່ງກ່າວ.**

ກ່ອນການເຂົ້າຮັບຕຳແໜ່ງປະທານນາທິບໍດີຂອງທ່ານ ໂຈໂກ ວິໂດໂດ ໄດ້ຕັ້ງເປົ້າວ່າອັນດັບຄວາມສະດວກໃນການດຳເນີນທຸລະກິດຂອງປະເທດອິນໂດເນເຊຍຈະປັ່ງນຈາກອັນດັບທີ 106 ໃນປີ 2016 ມາຢູ່ທີ່ອັນດັບທີ 40 ໃນປີຕໍ່ມາ.

ໃນການກະຕຸກຊຸກຍູ້ພະນັກງານພາກລັດ, ທ່ານປະທານນາທິບໍດີໄດ້ເນັ້ນຢ້ຳກັບພະນັກງານລັດຖະກອນ ແລະ ອົງກອນຂອງລັດທົ່ວປະເທດວ່າ ປະເທດອິນໂດເນເຊຍຈະຕ້ອງມີການປະຕິຮູບດ້ານແນວຄິດຈິດໃຈ, ຕ້ອງມີການປັ່ງນແປງ ແລະ ສ້າງຕັ້ງລະບອບຫ້ອງການສຳນັກງານທີ່ມີຄວາມຮັບຜິດຊອບຕໍ່ສັງຄົມ ແລະ ມີຄວາມໂປ່ງໃສ, ເຊິ່ງຄຸນສົມບັດເລົ່ານີ້ແມ່ນສິ່ງທີ່ສາມາດຕອບສະໜອງຄວາມຕ້ອງການຂອງປະຊາຊົນ ແລະ ບັນດາຫົວໜ່ວຍທຸລະກິດ.

ພາຍຫຼັງການດຳລົງຕຳແໜ່ງໄດ້ປະມານ 3 ປີ, ທ່ານໄດ້ສະແດງໃຫ້ເຫັນເຖິງຄວາມເອົາຈິງເອົາຈັງ ແລະ ບໍ່ລັງເລທີ່ຈະປັບປຸງ. ກໍລະນີທີ່ພາກສ່ວນໃດບໍ່ສາມດປັບປຸງສະພາບແວດລ້ອມດ້ານການລົງທຶນໄດ້ກໍ່ຈະຖືກຍົກຍ້າຍ. ນອກນີ້, ທ່ານ ໂຈໂກ ຍັງໄດ້ອະນຸຍາດ ແລະ ລົບລ້າງລະບຽບບາງລະບຽບທີ່ຈະຊ່ວຍໃນການປັບປຸງ ຫຼື ເຮັດໃຫ້ສະພາບແວດລ້ອມໃນການລົງທຶນດີຂຶ້ນ, ພ້ອມທັງເນັ້ນໃສ່ເບິ່ງຄືນຫຼາຍໆລະບຽບທີ່ອາດຈະທັບຊ້ອນກັນ. ດ້ວຍເຫດນີ້, ປະຈຸບັນອິນໂດເນເຊຍຖືກຈັດອັນດັບຄວາມສະດວກໃນການດຳເນີນທຸລະກິດຢູ່ໃນອັນດັບທີ 73 ໃນປີ 2020. ປະທານນາທິບໍດີ ໂຈໂກ້ ວິໂດໂດ້ ຕັ້ງໃຈຈະສືບຕໍ່ເຮັດໃຫ້ອິນໂດຖືກຈັດອັນດັບທີ 40 ໃຫ້ໄດ້ ທັງນີ້ກໍ່ເພື່ອສືບຕໍ່ດຶງດູດນັກລົງທຶນຕ່າງປະເທດໃຫ້ເຂົ້າມາລົງທຶນທີ່ອິນໂດເນເຊຍ.

## 3. ການປັບປຸງ-ຜັນຂະຫຍາຍຄຳຄິດເຫັນຕ່າງໆຮ່ວມກັບພາກເອກະຊົນ, ຜູ້ໃຫ້ການຊ່ວຍເຫຼືອດ້ານທຶນຮອນ ແລະ ພາກສ່ວນຜູ້ສ້າງນະໂຍບາຍ.

ເພື່ອຮັບປະກັນວ່າບັນດາມາດຕະການຕ່າງໆທີ່ໄດ້ຖືກແນະນຳໃຫ້ປະຕິບັດນັ້ນຈະສາມາດຈັດຕັ້ງປະຕິບັດໄດ້ຈິງ, ສປປ ລາວ ນອກຈາກຈະມີການສ້າງກົດໝາຍ, ດຳລັດ ຫຼື ນະໂຍບາຍຕ່າງໆທີ່ຊັດເຈນແລ້ວ, ລັດຄວນລະບຸໃນແຜນນະໂຍບາຍຫຼັງການຄ້າວ່າ ທຸກຂະບວນການຄວນໃຫ້ມີການປະກອບຄຳເຫັນ ຫຼື ຕຳໜິສິ່ງຂ່າວຈາກພາກເອກະຊົນ ເຊັ່ນ: ບັນດາຫົວໜ່ວຍທຸລະກິດພາຍໃນ ແລະ ຕ່າງປະເທດ. ນອກຈາກການປະກອບຄຳເຫັນຢູ່ໃນກອງປະຊຸມທຸລະກິດລາວ ແລະ ການສົ່ງຂ່າວຜ່ານສະພາອຸດສາຫະກຳ ແລະ ການຄ້າແຫ່ງຊາດລາວ, ລັດຖະບານຄວນພິຈາລະນາ ຫຼື ອະນຸຍາດໃຫ້ພາກເອກະຊົນສາມາດປະກອບຄຳໄດ້ແບບໂດຍກົງຕໍ່ກັບການສ້າງນະໂຍບາຍ ແລະ ກົນໄກການຄຸ້ມຄອງທີ່ຕິດພັນກັບການຄ້າຕ່າງໆ. ການປະກອບຄຳເຫັນຄວນຈະມາຈາກຕົວແທນຫຼັກຂອງແຕ່ລະພາກສ່ວນ ຫຼື ຂະແໜງການ ນັ້ນກໍ່ເພື່ອເປັນການປະສານງານລະຫວ່າງພາກລັດ ແລະ ເອກະຊົນ. ຕົວຢ່າງເຊັ່ນ: ຖ້ານະໂຍບາຍແມ່ນຕິດພັນກັບການກະສິກຳ, ບໍລິສັດ ຫຼື ຫົວໜ່ວຍທີ່ມີຂະໜາດໃຫຍ່, ຜູ້ປະກອບການລາຍນ້ອຍ, ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ, ຜູ້ດຳເນີນການທີ່ກ່ຽວຂ້ອຍ, ພໍ່ຄ້າຊາວຂາຍ, ຜູ້ສະໜອງ ແລະ ຜູ້ບໍລິໂພກຄົນຕ່າງປະເທດ ຄວນຈະເປັນຕົວແທນ ແລະ ຖືກສອບຖາມຄຳຄິດເຫັນ ເພື່ອໃຫ້ໄດ້ມາເຊິ່ງການປະກອບຄຳເຫັນແບບຮອບດ້ານ ແລະ ສາມາດພິຈາລະນາບັນຫາໃນແງ່ມຸມຂອງທັງຜູ້ສະໜອງ ແລະ ຜູ້ບໍລິໂພກ.

ເພື່ອຍົກລະດັບ ຫຼື ພັດທະນາກົນໄກການປະກອບຄໍາເຫັນລະຫວ່າງພາກລັດ ແລະ ເອກະຊົນ, ພາກສ່ວນກ່ຽວຂ້ອງຈະມີການຍົກຈຸດທີ່ຕ້ອງການປັບປຸງ, ຈຸດທີ່ຕ້ອງໄດ້ຕິດຕາມ ແລະ ຈຸດທີ່ຕ້ອງໄດ້ປັບຈະສາມາດລະບຸໄດ້ນະເວລານັ້ນ. ພ້ອມດຽວກັນນີ້, ການປະກອບຄໍາຄິດທີ່ຖືກຕ້ອງ ແລະ ສ້າງສັນຍັງຈະຊ່ວຍໃນວຽກງານການທົບທວນ ແລະ ການສ້າງຍຸດທະສາດ, ນະໂຍບາຍ ແລະ ວິໄສທັດຂອງປະເທດອີກດ້ວຍ. ໃນໄລຍະທີ່ຜ່ານມາເຫັນໄດ້ວ່າ ຄໍາຄິດເຫັນຈາກພາກເອກະຊົນກໍ່ມີມາຕະຫຼອດ ແລະ ສະມາຄົມທຸລະກິດໄດ້ມີສ່ວນຮ່ວມປະຕິບັດວຽກງານກັບພາກລັດຖະບານຢ່າງກວ້າງຂວາງ ດ້ວຍການໃຫ້ຄໍາຄິດເຫັນຜ່ານຊ່ອງທາງຕ່າງໆເຊັ່ນ ກອງປະຊຸມທຸລະກິດແຫ່ງຊາດທີ່ຈັດຂຶ້ນເປັນປະຈໍາທຸກປີ ໂດຍທີ່ຜ່ານມາການຈັດກອງປະຊຸມດັ່ງກ່າວແມ່ນປະສົບຜົນສໍາເລັດ ແລະ ມີປະສິດທິພາບສູງ. ແຕ່ເຖິງຢ່າງໃດກໍ່ຕາມ, ກອງປະຊຸມດັ່ງກ່າວຄວນຈະເປັນສື່ກາງລະຫວ່າງຊ່ອງທາງອື່ນໆກັບພາກລັດຖະບານນໍາ. ອີກທາງໜຶ່ງແມ່ນຄວນມີການຈັດກອງປະຊຸມແລກປ່ຽນຄໍາຄິດເຫັນລະຫວ່າງພາກລັດ ແລະ ເອກະຊົນຂຶ້ນ ໂດຍໃນນັ້ນຄວນມີການເຊີນຜູ້ເຂົ້າຮ່ວມຮັບຟັງເຊິ່ງມາຈາກຫົວໜ່ວຍທຸລະກິດ ແລະ ບັນດາກະຊວງທີ່ກ່ຽວຂ້ອງ. ກອງປະຊຸມຈະມີປະສິດທິພາບ ແລະ ກົງໄປກົງມາຫຼາຍຂຶ້ນ ເຊິ່ງຈະເຮັດໃຫ້ໄດ້ຮັບໝາກຜົນດີ.

ນອກຈາກນີ້ແລ້ວ ຍັງມີບັນຫາອື່ນໆກ່ຽວກັບການປະສານງານ ແລະ ຕິດຕໍ່ສື່ສານກັນລະຫວ່າງຜູ້ສະໜັບສະໜຸນທຶນ ເຊັ່ນ: ທະນາຄານພັດທະນາອາຊີ ແລະ ບັນດາກະຊວງທີ່ກ່ຽງຂ້ອງເຊັ່ນ: ກະຊວງແຜນການ ແລະ ການລົງທຶນ, ກະຊວງອຸດສາຫະກໍາ ແລະ ການຄ້າ, ແລະ ບັນດາກະຊວງ ຫຼື ຫ້ອງການສໍານັກງານພາກລັດທີ່ກ່ຽວຂ້ອງເຊັ່ນ: ຫ້ອງການຄຸ້ມຄອງເຂດເສດຖະກິດພິເສດ ແລະ ບັນດາຫົວໜ່ວຍທຸລະກິດທີ່ຕິດພັນກັບການຄ້າ ແລະ ການລົງທຶນ ທີ່ມີຄວາມຈໍາເປັນທີ່ສຸດທີ່ຈະຕ້ອງປັບປຸງ. ທີ່ຜ່ານມາຢູ່ໃນຂອດຂອງການວາງແຜນງານແມ່ນມັກຈະມີຊ່ອງຫວ່າງ ແລະ ຄວາມສັບສົນໃນຫຼາຍໆບໍ່ວ່າຈະກ່ຽວກັບພາລະບົດບາດ, ໜ້າທີ່ຮັບຜິດຊອບ ແລະ ບັນດາຂໍ້ມູນອື່ນໆທີ່ຕິດພັນກັບກິດຈະກໍາທາງການຄ້າ ແລະ ການລົງທຶນ, ເຊິ່ງສຸດທ້າຍແລ້ວກໍ່ເຮັດໃຫ້ເກີດມີຂໍ້ຈໍາກັດ ແລະ ການປະຕິບັດວຽກທີ່ບໍ່ມີປະສິດທິພາບເທົ່າທີ່ຄວນ. ຕົວຢ່າງເຊັ່ນ: ນັກລົງທຶນພວມປະສົບບັນຫາທີ່ຕິດພັນກັບການບໍລິການຂອງຫ້ອງການບໍລິການປະຕູດຽວ ທີ່ບໍ່ສາມາດສະໜອງຂໍ້ມູນໃຫ້ນັກລົງທຶນໄດ້, ເຊິ່ງເຫດການດັ່ງກ່າວແມ່ນເປັນຜົນເນື່ອງມາຈາກການທີ່ຂໍ້ມູນທີ່ນັກລົງທຶນຕ້ອງການນັ້ນບໍ່ມີ ຫຼື ມີແຕ່ບໍ່ຄົບ ຫຼື ອາດຈະເປັນຂໍ້ມູນເກົ່າທີ່ບໍ່ໄດ້ຮັບການປັບປຸງໂດຍກະຊວງກ່ຽວຂ້ອງ.

ຕໍ່ກັບປະເດັນດັ່ງກ່າວ ສຸດທ້າຍແລ້ວບັນຫາດັ່ງກ່າວແມ່ນມາຕົກເປັນຄວາມຮັບຜິດຊອບຂອງພະນັກງານປ້ອມດ້ານໜ້າກໍ່ຄືຫ້ອງການບໍລິການປະຕູດຽວທີ່ຕ້ອງຮັບທຸກຢ່າງ ແລະ ນໍາໃຊ້ຂໍ້ມູນທີ່ຕົນມີສະໜອງໃຫ້ນັກລົງທຶນ, ເຊິ່ງແນ່ນອນວ່າເປັນຂໍ້ມູນທີ່ບໍ່ຊັດເຈນເທົ່າທີ່ຄວນ. ເພື່ອແກ້ໄຂບັນຫາດັ່ງກ່າວພາກລັດຖະບານຄວນເອົາໃຈໃສ່ໃນການເກັບກໍາຂໍ້ມູນ ແລະ ສະໜອງຂໍ້ມູນທີ່ຖືກຕ້ອງໃຫ້ແກ່ນັກລົງທຶນ, ພ້ອມນີ້ກໍ່ຕ້ອງໄດ້ພັດທະນາຊັບພະຍາກອນມະນຸດເພື່ອປັບປຸງຂອດການດໍາເນີນງານ ແລະ ການບໍລິການທີ່ກ່ຽວຂ້ອງ.

ດັ່ງນັ້ນ, ຄວາມສາມາດໃນການເຂົ້າເຖິງຂໍ້ມູນທີ່ແຕ່ລະກະຊວງມີນັ້ນແມ່ນມີຄວາມສໍາຄັນ. ການເກັບກໍາບົດສົນທະນາສໍາຄັນໆລະຫວ່າງພາກສ່ວນກ່ຽວຂ້ອງ, ຄໍາຕັດສິນ, ບົດລາຍງານ ແລະ ບົດສະເໜີຕ່າງໆຄວນຈະຖືກເກັບກໍາ ແລະ ເຮັດໃຫ້ພາກສ່ວນທີ່ກ່ຽວຂ້ອງສາມາດເຂົ້າເຖິງໄດ້ຢ່າງງ່າຍດາຍ. ພ້ອມນີ້ຂໍ້ມູນຕ່າງໆຄວນຈະມີການອັບເດດໃຫ້ມີຄວາມຖືກຕ້ອງຢູ່ຕະຫຼອດເວລາ. ສຸດທ້າຍນີ້, ນອກຈາກການທີ່ມີນະໂຍບາຍທີ່ມີປະສິດທິພາບ ແລະ ການຈັດຕັ້ງປະຕິບັດທີ່ມີປະສິດທິພາບ, ລັດຖະບານຄວນສະໜອງຂໍ້ມູນ ຫຼື ອະນຸຍາດໃຫ້ຜູ້ໃຫ້ທຶນເຂົ້າເຖິງຂໍ້ມູນກ່ຽວກັບມາດຕະການຕ່າງໆທີ່ລັດຖະບານໄດ້ຈັດຕັ້ງປະຕິບັດໃນໜ້າວຽກນັ້ນໆ. ທັງນີ້ກໍ່ເພື່ອໃຫ້ພາກສ່ວນຜູ້ຊ່ວຍເຫຼືອສາມາດຮູ້ໄດ້ວ່າຈະຊ່ວຍເຫຼືອລັດຖະບານໃນດ້ານໃດເພີ່ມເຕີມ.

ໃນລະດັບມະຫາພາກ, ການລາຍງານ-ປະສານງານກ່ຽວກັບສິ່ງທີ່ລັດຖະບານໄດ້ປະຕິບັດນັ້ນ ລັດຖະບານຄວນເອົາໃຈໃສ່ໃນການລາຍງານຕໍ່ສະພາແຫ່ງຊາດ. ນອກຈາກຈະມີການລາຍງານກ່ຽວກັບການປ່ຽນແປງ ຫຼື ຂັ້ນຕອນປະຕິບັດວຽກແລ້ວ, ຄວາມຄືບໜ້າຕ່າງໆຕ້ອງໄດ້ຖືກລາຍງານເປັນສະຖິຕິທີ່ຊັດເຈນ. ການປະຕິບັດໃນຮູບແບບນີ້ແມ່ນຈະເຮັດໃຫ້ເຫັນວ່າບັນຫານັ້ນໆໄດ້ຮັບການແກ້ໄຂແນວໃດ. ສະນັ້ນ, ກະຊວງອຸດສາຫະກຳ ແລະ ການຄ້າ ພ້ອມດ້ວຍກະຊວງແຜນການ ແລະ ການລົງທຶນຄ້ອງໄດ້ເອົາໃຈໃສ່ເຮັດວຽກຮ່ວມກັນໃຫ້ຫຼາຍຂຶ້ນເພື່ອເຮັດໃຫ້ຊ່ອງຫວ່າງທາງຂໍ້ມູນ ແລະ ຊ່ອງຫວ່າງດ້ານການປະຕິບັດວຽກຫຼຸດໜ້ອຍຖອຍລົງ.

## 4. ການຮ່ວມມືດ້ານນະໂຍບາຍ

ໃນການພັດທະນາ ສປປ ລາວ ໃຫ້ເປັນປະເທດທີ່ໜ້າລົງທຶນ ຫຼື ເປັນຢີ່ຫໍ້ສິນຄ້າໃດໜຶ່ງໃຫ້ຜູ້ບໍລິໂພກມີຄວາມສົນໃຈນັ້ນ, ການຮ່ວມມືກັນ ແລະ ການປະກອບຄຳຄິດຄຳເຫັນຂອງບັນດາພາກສ່ວນທີ່ກ່ຽວຂ້ອງແມ່ນມີຄວາມຈຳເປັນທີ່ສຸດ. ພ້ອມນີ້, ການສ້າງຄວາມແຕກຕ່າງທີ່ເປັນຜົນດີໃຫ້ແກ່ນັກລົງທຶນຈະເຮັດໃຫ້ ສປປ ລາວ ມີຄວາມໜ້າສົນໃຈສຳລັບນັກລົງທຶນຕ່າງປະເທດ. ຕໍ່ກັບສິ່ງດັ່ງກ່າວ, ການປະສານງານ ແລະ ຮ່ວມມືກັນລະຫວ່າງບັນດາກະຊວງແມ່ນມີຄວາມສຳຄັນທີ່ສຸດໂດຍສະເພາະແມ່ນການເຊື່ອມໂຍງ ແລະ ການປະສານງານຂອງກະຊວງແຜນການ ແລະ ການລົງທຶນ ແລະ ກະຊວງອຸດສາຫະກຳ ແລະ ການຄ້າ. ທັງນີ້ບັນດາກະຊວງມທີ່ລ້ວນແຕ່ມີເປົ້າໝາຍ ແລະ ໜ້າທີ່ແຕກຕ່າງກັນກໍ່ຈະຕ້ອງໄດ້ຜິດຊອບໃຫ້ວຽກງານຂອງກະຊວງຕົນສຳເລັດ. ສະນັ້ນ, ເພື່ອໃຫ້ສາມາດຫຼຸດຜ່ອນການເຮັດວຽກຊ້ຳຊ້ອນກັນຂອງແຕ່ລະພາກສ່ວນ ແລະ ການຂາດການປະສານງານທີ່ດີ, ກະຊວງດັ່ງກ່າວຄວນມີພະນັກງານ ຫຼື ໜ່ວຍງານປະສານງານລະຫວ່າງກະຊວງ, ເຊິ່ງໜ່ວຍງານດັ່ງກ່າວແມ່ນຈະຊ່ວຍໃນການເຊື່ອມໂຍງກັນລະຫວ່າງວຽກງານຂອງສອງກະຊວງ ລວມໄປເຖິງການປະສານວຽກທີ່ຕິດພັນກັບການຄ້າ ແລະ ການລົງທຶນ.

ແນວຄິດກ່ຽວກັບໜ່ວຍງານປະສານງານຂອງພາກສ່ວນກ່ຽວຂ້ອງແມ່ນຖືກຮັບຮູ້ ແລະ ຍອມຮັບວ່າມີຄວາມສຳຄັນ. ອີງຕາມແຜນງານການອຳນວຍຄວາມສະດວກດ້ານການຄ້າຂອງ ສປປ ລາວສຳລັບປີ 2017-2022, ສອງກະຊວງດັ່ງກ່າວແມ່ນຖືກມອບໝາຍໃຫ້ຊີ້ນຳ ແລະ ຄຸ້ມຄອງກ່ຽວກັບການພັດທະນາດ້ານການອຳນວຍຄວາມສະດວກດ້ານການຄ້າໃນທົ່ວທຸກກະຊວງ. ຂໍ້ທຳອິດ, *ໜ່ວຍງານຈັດຕັ້ງປະຕິບັດແຜນງານອຳນວຍຄວາມສະດວກທາງດ້ານການຄ້າ (TIU)* ຈະຖືກສ້າງຂຶ້ນໃນທົ່ວຂະແໜງການ ຫຼື ພາກສ່ວນທີ່ກ່ຽວຂ້ອງ ຈຸດປະສົງແມ່ນເພື່ອໃຫ້ທຸກພາກສ່ວນມີຄວາມຮັບຜິດຊອບ ແລະ ມີສ່ວນຮ່ວມໃນວຽກງານການອຳນວຍຄວາມສະດວກດ້ານການຄ້າ. ໃນນີ້ TIU ຈະຮັບຜິດຊອບກ່ຽວກັບວຽກງານອຳນວຍຄວາມສະດວກດ້ານການຄ້າ ເຊິ່ງຈະລວມມີການກະກຽມແຜນປະຕິບັດງານຂອງຂະແໜງການ (DAP). ໃນເບື້ອງຕົ້ນ, TIU ຈະຖືກສ້າງຂຶ້ນໃນທ້າຍປີ 2018, ແຕ່ກໍ່ບໍ່ມີພາກສ່ວນໃດເປັນເຈົ້າການລາຍງານ ຫຼື ຢືນຢັນກ່ຽວກັບການຈັດຕັ້ງປະຕິບັດ.

ນອກຈາກນີ້, ອີກໜຶ່ງກົນໄກແມ່ນຄະນະກຳມະການລະດັບຊາດເພື່ອການພັດທະນາການຄ້າ ແລະ ພາກເອກະຊົນ *(NCTPSD)*. ຄະນະກຳມະການດັ່ງກ່າວແມ່ນຢູ່ພາຍໃຕ້ການຊີ້ນຳຂອງນາຍົກລັດຖະມົນຕີ, ເຊິ່ງຄະນະກຳມະການດັ່ງກ່າວສ້າງຂຶ້ນເພື່ອນຳເອົາອະນຸກຳມະການຂອງວຽກງານອຳນວຍຄວາມສະດວກດ້ານການຄ້າມາເຮັດວຽກຮ່ວມກັນ. ເຊັ່ນກັນກັບຄະນະກຳມະການອື່ນໆ, *NCTPSD* ກໍ່ບໍ່ມີພາກສ່ວນໃດເປັນເຈົ້າການລາຍງານ ຫຼື ຢືນຢັນກ່ຽວກັບການຈັດຕັ້ງປະຕິບັດ.

**ກໍລະນີສຶກສາ: ໜ່ວຍງານປະສານງານຂອງວຽກງານການຄ້າໃນມາເລເຊຍ ແລະ ສິງກະໂປ**

**ໜ່ວຍງານການຮ່ວມມືເພື່ອການພັດທະນາດ້ານການຄ້າຕ່າງປະເທດຂອງມາເລເຊຍ (MATRADE)**: ຢູ່ພາຍໃຕ້ການຄຸ້ມຄອງຂອງກະຊວງການຄ້າຕ່າງປະເທດ ແລະ ອຸດສາຫະກຳແຫ່ງຊາດ. ໜ່ວຍງານດັ່ງກ່າວມີໜ້າທີ່ໃນການສົ່ງເສຣມ ແລະ ຈັດຕັ້ງປະຕິບັດການລິເລີ່ມດ້ານການຄ້າພາຍໃນປະເທດ,ພ້ອມດຽວກັນນັ້ນກໍ່ມີໜ້າທີ່ໃນການຊ່ວຍ-ໃຫ້ຄຳປຶກສາບັນດາບໍລິສັດ ແລະ ວິສາຫະກິດພາຍໃນໃຫ້ປະສົບຜົນສຳເລັດໃນຕະຫຼາດຕ່າງປະເທດ.

**ວິສາຫະກິດສິງກະໂປ (ESG):** ຢູ່ພາຍໃຕ້ກະຊວງການຄ້າ ແລະ ອຸດສາຫະກຳແຫ່ງຊາດ. ໜ່ວຍງານດັ່ງກ່າວມີໜ້າທີ່ໃນການອຳນວຍຄວາມສະດວກໃຫ້ແກ່ບໍລິສັດຕ່າງຊາດທີ່ມີສຳນັກງານຕັ້ງຢູ່ປະເທດສິງກະໂປ ແລະ ມີໜ້າທີ່ກ່ຽວກັບການສົ່ງເສີມການຄ້າສາກົນ. ໜ່ວຍງານນີ້ ຍັງມີໜ້າທີ່ຮັບຜິດຊອບໃນການອຳນວຍຄວາມສະດວກດ້ານການຄ້າ, ພ້ອມກັບມີໜ້າທີ່ທົບທວນນະໂຍບາຍດ້ານການຕະຫຼາດທີ່ຍັງມີຜົນບັງຄັບໃຊ້ໃນປະຈຸບັນ, ຍຸດທະສາດ ແລະ ເທັກນິກທາງການຄ້າ.

ນອກຈາກນີ້, ໜ່ວຍງານທັງສອງໜ່ວຍງານຂ້າງເທິງນີ້ຍັງມີໜ້າທີ່ໃນການທົບທວນ ແລະ ປະສານງານກ່ຽວກັບບັນດານະໂຍບາຍທາງການຄ້າ ພ້ອມກັບຊ່ວຍວິສາຫະກິດຂະໜາດນ້ອຍ ແລະ ກາງໃນການຄ້າຂາຍກັບຕ່າງປະເທດ ລວມໄປເຖິງບໍລິສັດຕ່າງປະເທດທີ່ພວມສຶກສາ ແລະ ມອງຫາໂອກາດໃນການລົງທຶນທີ່ປະເທດດັ່ງກ່າວ. ໜ່ວຍງານທີ່ກ່າວມານັ້ນສາມາດຕິດຕາມທຸກການເຄື່ອນໄຫວຂອງນັກລົງທຶນ, ພ້ອມດຽວກັນນີ້ບັນດານັກລົງທຶນຕ່າງປະເທດສາມາດເຂົ້າເຖິງຂໍ້ມູນຕ່າງໆທີ່ໜ່ວຍງານດັ່ງກ່າວໄດ້ກະກຽມໄວ້ຜ່ານຊ່ອງທາງ online. ເຖິງຢ່າງໃດກໍ່ຕາມ, ໜ່ວຍງານປະສານງານດ້ານການຄ້າອາດຈະມີຈຸດປະສົງທີ່ບໍ່ຄົງທີ່ຕະຫຼອດໄປ, ທຸກຢ່າງແມ່ນອາດມີການປ່ຽນແປງໃນແຕ່ລະຊ່ວງໄລຍະ. ການປະສານງານໃນໄລຍະຂອງລິເລີ່ມຂອງ MATRADE, ຈຸດປະສົງຂອງໜ່ວຍງານທັງສອງແມ່ນເນັ້ນໃສ່ການເປັນຜູ້ນຳດ້ານລົງທຶນ ແລະ ການຜະລິດການໂຄສະນາເພື່ອການສົ່ງອອກ, ເຊິ່ງ MATRADE ຕໍ່ມາກໍ່ໄດ້ເນັ້ນໃສ່ການສົ່ງເສີມບໍລິສັດພາຍໃນໃຫ້ມີການຂະຫຍາຍໄປສູ່ຕະຫຼາດຕ່າງປະເທດ. ໃນທາງດຽວກັນນີ້, ESG ປະຈຸບັນໄດ້ພະຍາມໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງທີ່ເປັນທຸລະກິດຂອງຄົນສິງກະໂປ.

**ກໍລະນີສຶກສາ: ການເນັ້ນໃສ່ສ້າງຄວາມເຂັ້ມແຂງໃຫ້ບັນດາກະຊວງຂອງປະເທດກຳປູເຈຍ**

ວຽກງານດັ່ງກ່າວຊີ້ນຳໂດຍທ່ານ ນາຍົກລັດຖະມົນຕີ ຮຸນເຊັນ ແລະ ສະພາສຳລັບການພັດທະນາກຳປູເຈຍ (CDC), ເຊິ່ງເປັນໜ່ວຍງານທີ່ເນັ້ນໃສ່ໜ້າວຽກການບໍລິການປະຕູດຽວ ແລະ ເປັນຈຸດປະສານງານລະຫວ່າງບັນດາກະຊວງ ແລະ ສະຖາບັນຕ່າງໆ. ພ້ອມນີ້, ຂອບວຽກ ຫຼື ພາລະບົດບາດຂອງບັນດາກະຊວງແມ່ນສາມາດປັບປຸງໄດ້ຕະຫຼອດ ເພື່ອໃຫ້ສະພາບໍລິຫານຂອງ CDC ສາມາດຄວບຄຸມການພັດທະນາຮອບດ້ານຂອງຂະແໜງອຸດສາຫະກຳ ແລະ ການລົງທຶນໄດ້. ຕົວຢ່າງ: ວຽກງານການວາງແຜນເພື່ອສ້າງຄວາມອາດສາມາດໃຫ້ແກ່ສະພາການຟື້ນຟູ ແລະ ການພັດທະນາຂອງກຳປູເຈຍ ໄດ້ຖືກປ່ຽນເພື່ອໃຫ້ມາຂື້ນກັບສະພາສຳລັບການພັດທະນາກຳປູເຈຍ ທັງນີ້ກໍ່ເພື່ອໃຫ້ສະພາສາມາດຊີ້ນຳການພັດທະນາກ່ຽວກັບຂະແໜງການອຸດສາຫະກຳໄດ້ໂດຍກົງ.

ການຮ່ວມມືດ້ານນະໂຍບາຍແມ່ນມີຄວາມສຳຄັນຫຼາຍສຳລັດລັດຖະບານລາວທີ່ຈະຕີຖອຍບັນຫາການຂາດການເຊື່ອມໂຍງຂອງຂໍ້ມູນ ແລະ ການເຮັດວຽກຊ້ຳຊ້ອນລະຫວ່າງກະຊວງ, ເຊິ່ງສາມອົງປະກອບຫຼັກທີ່ຈະສາມາດປະຕິບັດວຽກງານດັ່ງກ່າວໃຫ້ສຳເລັດໄດ້ແມ່ນມີຄື:

(i) ອອກແບບນະໂຍບາຍທີ່ເຂັ້ມແຂງ ແລະ ມີຂັ້ນຕອນການປະຕິບັດວຽກທີ່ຊັດເຈນ

(ii) ຄຳແນະນຳໃນການຈັດຕັ້ງປະຕິບັດທີ່ຊັດເຈນ

(iii) ສ້າງແຜນປະຕິບັດງານ.




ວຽກງານການສ້າງຄວາມອາດສາມາດແມ່ນມີຜົນຕໍ່ການເພີ່ມຄວາມອາດສາມາດໃຫ້ແກ່ຊັບພະຍາກອນມະນຸດ. ຂໍ້ຫຍຸ້ງຍາກດ້ານວຽກງານບໍລິການ ຫຼື ການໃຫ້ຄວາມຊ່ວຍເຫຼືອແກ່ນັກລົງທຶນແມ່ນເນື່ອງມາຈາກການປ່ຽນແປງຢ່າງໄວວາຂອງບັນດານິຕິກໍາ, ລະບຽບ-ກົດໝາຍ ແລະ ໃນທີ່ນີ້ພະນັກງານປ້ອນດ້ານໜ້າທີ່ເປັນຜູ້ໃຫ້ບໍລິການດ້ານຂໍ້ມູນແກ່ນັກລົງທຶນພັດບໍ່ມີຄວາມເຂົ້າໃຈທີ່ພຽງພໍຕໍ່ທັງລະບຽບ ແລະ ໜ້າທີ່ຂອງຕົນ. ສະນັ້ນ, ນອກຈາກການປັບປຸງກ່ຽວກັບການສະໜອງຂໍ້ມູນຂ່າວສານຈາກຜູ້ສ້າງນະໂຍບາຍສູ່ພະນັກງານບໍລິການແລ້ວ, ວຽກງານການສ້າງທັກສະ ແລະ ຍົກລະດັບໃຫ້ແກ່ພະນັກງານບໍລິການແມ່ນມີຄວາມສໍາຄັນເຊັ່ນກັນ. ເພື່ອແກ້ໄຂຂໍ້ຫຍຸ້ງຍາກດັ່ງກ່າວ, ວິທີແກ້ໄຂແມ່ນມີຄື: ການສ້າງຄູ່ມື-ຄໍາແນະນໍາດ້ານການບໍລິການ, ສ້າງຫຼັກສູດການຝຶກອົບຮົມ ແລະ ສ້າງທັກສະໃຫ້ແກ່ພະນັກງານເລົ່ານັ້ນ

ເພື່ອການຕິດຕາມຂະບວນການຮ່ວມມືດ້ານນະໂຍບາຍ, ການສ້າງຕັ້ງ ໜ່ວຍຂ່າວກອງດ້ານເສດຖະກິດ ແລະ ແຜນຍຸດທະສາດ, ເຊິ່ງເປັນໜ່ວຍງານຜູ້ຊ່ຽວຊານສະເພາະດ້ານໃນການສຶກສາລົງເລິກກ່ຽວກັບຜົນການຈັດຕັ້ງປະຕິບັດວຽກງານຂອງບັນດາຂະແໜງການຫຼັກ ແລະ ຕິດຕາມຄູ່ແຂ່ງ ຄວນຖືກສ້າງຕັ້ງຂຶ້ນ. ໜ່ວຍງານດັ່ງກ່າວຈະຊ່ວຍລາວໃນການຕິດຕາມການພັດທະນາຂອງປະເທດຄູ່ແຂ່ງ ,ຄາດການສິ່ງທ້າທາຍ ລວມທັງໂອກາດທີ່ລາວຈະພົບພໍ້. ໃນຂະນະດຽວກັນ,ໜ່ວຍງານນີ້ກໍ່ຈະຊ່ວຍລາວໃນການວາງແຜນລ່ວງໜ້າດ້ານນະໂຍບາຍເສດຖະກິດ.

ສໍາລັບລາຍລະອຽດກ່ຽວກັບໜ້າວຽກ ແລະ ແນວທາງການປະສານງານລະຫວ່າງກະຊວງແຜນການ ແລະ ການລົງທຶນ ກັບ ກະຊວງອຸດສາຫະກໍາ ແລະ ການຄ້າ ແມ່ນມີຢູ່ໃນເອກະສານຊ້ອນທີ 6.

## *ແຜນວາດຄວາມສໍາເລັດ*

ໃນສະຖານະການທີ່ບໍ່ທຸກປະເທດໃນໂລກມີຄວາມຫຍຸ້ງຍາກເນື່ອງຈາກການລະບາດຂອງ Covid-19, ຄວາມບໍ່ແນ່ນອນໃນແຕ່ລະດ້ານໄດ້ກາຍມາເປັນໜຶ່ງໃນວິຖີຊີວິດໃໝ່ຂອງຄົນຍຸກປະຈຸບັນ.

ສະຖານະການຂອງການລະບາດຂອງ Covid-19 ໃນປະຈຸບັນນີ້ແມ່ນເຫັນໄດ້ຢ່າງຈະແຈ້ງວ່າລະບົບເສດຖະກິດພາຍໃນຂອງປະເທດ, ເສດຖະກິດພາກພື້ນ ແລະ ລະດັບໂລກ ລ້ວນແຕ່ໄດ້ຮັບຜົນກະທົບຢ່າງຖ້ວນໜ້າ. ສຳລັບ ສປປ ລາວ ທີ່ນັບມື້ນັບມີການພົວພັນກັບສາກົນເພີ່ມຂຶ້ນ ໄດ້ເຮັດໃຫ້ ສປປ ລາວ ຮູ້ວ່າປະເທດຕົນບໍ່ມີເຂັ້ມແຂງພຽງພໍໃນການທີ່ຈະຮັບມືກັບຄວາມບໍ່ແນ່ນອນຂອງສະພາບຕະຫຼາດ, ການຢຸດຊະງັກຂອງຕ່ອງໂສ້ການຜະລິດ ແລະ ການຂາດແຄນດ້ານສະບຽງອາຫານ. ປະເທດລາວມີການເອື່ອຍອີງປະເທດເພື່ອນບ້ານຫຼາຍເກີນໄປ ເປັນຕົ້ນແມ່ນປະເທດຈີນ, ເຊິ່ງເມື່ອບັນດາປະເທດເລົ່ານັ້ນປະສົບບັນຫາ ປະເທດລາວກໍ່ໄດ້ຮັບຜົນກະທົບ ເຮັດໃຫ້ເສດຖະກິດລາວຖົດຖອຍ, ມີອັດຕາການວ່າງງານທີ່ເພີ່ມຂຶ້ນສູງ ແລະ ລາຍຮັບທີ່ເຄີຍໄດ້ຈາກຂະແໜງການທ່ອງທ່ຽວກໍ່ຫາຍໄປ.

ຕໍ່ກັບບັນຫາດັ່ງກ່າວນັ້ນ, ສິ່ງທີ່ດີທີ່ສຸດທີ່ຈະຊ່ວຍ ສປປ ລາວ ໃຫ້ສືບຕໍ່ກ້າວໄປທາງໜ້າ ແລະ ເອົາຊະນະສິ່ງທ້າທາຍໄດ້ກໍ່ຄື: ການປະເມີນ-ຕີລາຄາ ບັນດາຈຸດແຂງ ແລະ ຈຸດອ່ອນທັງໝົດຂອງປະເທດ, ພ້ອມທັງມີການສະດຸ້ງໄວໃນການຫາວິທີປ້ອງກັນລວມທັງວິທີແກ້ໄຂບັນຫາ. ການສ້າງແຜນຟື້ນຟູຈະຊ່ວຍປະເທດລາວໃນການແກ້ໄຂບັນຫາ ແລະ ສິ່ງທ້າທາຍທີ່ພວມພົບພໍ້ໃນປະຈຸບັນ ເຊິ່ງຈະນຳໄປສູ່ການຂະຫຍາຍຕົວຂອງເສດຖະກິດໃນທີ່ສຸດ. ທັງນີ້, ແຜນຟື້ນຟູຈະເຮັດໃຫ້ລາວຍັງສາມາດປະຕິບັດໄດ້ຕາມແຜນພັດທະນາປະເທດໃນການຫຼຸດພົ້ນອອກຈາກປະເທດດ້ອຍພັດທະນາ. ວຽກງານການຟື້ນຟູສາມາດປະຕິບັດໄດ້ໂດຍການເນັ້ນໃສ່ປັບປຸງຂະບວນດຳເນີນງານ, ການກະຕຸ້ນເສດຖະກິດ ແລະ ການສ້າງຄວາມເຂັ້ມແຂງ. ເພື່ອໃຫ້ການຈັດຕັ້ງປະຕິບັດມີປະສິດທິພາບ ແລະ ປະສິດທິຜົນ ວຽກງານທີ່ກ່າວມານັ້ນຄວນຈະມີການເບິ່ງຄືນຄວາມເຊື່ອມໂຍງກັນລະຫວ່າງຜົນໄດ້ຮັບ, ການສ້າງນະໂຍບາຍ ແລະ ວຽກງານການຕິດຕາມສິ່ງທີ່ໄດ້ຈັດຕັ້ງປະຕິບັດດ້ານວຽກງານເສດຖະກິດທີ່ກ່ຽວຂ້ອງ.

ສປປ ລາວ ເປັນປະເທດທີ່ບໍ່ມີຊາຍແດນຕິດຈອດກັບທະເລແຕ່ກໍ່ສາມາດເຊື່ອມຕໍ່ປະເທດຕົນກັບປະເທດອື່ນເຊິ່ງການຂົນສົ່ງຈະແມ່ນການຂົນສົ່ງທາງບົກທັງໝົດ ແລະ ໄປຜ່ານທາງທະເລທີ່ປະເທດເພື່ອນບ້ານ. ທັງນີ້ ກໍ່ມີທັງໂອກາດ ແລະ ສິ່ງທ້າທາຍຕໍ່ລາວ ໂດຍສະເພາະແມ່ນຊ່ວງວິກິດການຂອງໂລກເນື່ອງຈາກການແຜ່ລະບາດຂອງ Covid-19 ທີ່ບໍ່ມີຄວາມແນ່ນອນ. ສະນັ້ນ, ສປປ ລາວ ປະຈຸບັນຕ້ອງໄດ້ມີການຈັດບຸລິມະສິດຂອງແຜນ ແລະ ຂັ້ນຕອນການຈັດຕັ້ງປະຕິບັດວຽກຕ່າງໆ ລວມທັງແຜນສຳຮອງທີ່ກ່ຽວຂ້ອງ. ພ້ອມດຽວກັນນັ້ນ, ການຮ່ວມມື-ປະສານງານທີ່ມີປະສິດທິພາບລະຫວ່າງກະຊວງແຜນການ ແລະ ການລົງທຶນ ແລະ ກະຊວງອຸດສາຫະກຳ ແລະ ການຄ້າ ພ້ອມກັບແຕ່ລະພາກສ່ວນທີ່ກ່ຽວຂ້ອງໃນສັງຄົມແມ່ນເປັນສິ່ງທີ່ຈຳເປັນທີ່ສຸດທີ່ຈະຕ້ອງໄດ້ເອົາໃຈໃສ່ປັບປຸງ.

ເຖິງວ່າປະຈຸບັນປະເທດລາວຈະພົບກັບສະຖານະການທີ່ຫຍຸ້ງຍາກເນື່ອງຈາກ Covid-19, ແຕ່ໂດຍລວມແລ້ວ ຍັງຖືວ່າຢູ່ໃນສະຖານະທີ່ສາມາດຄວບຄຸມໄດ້ ເຊິ່ງ ສປປ ລາວກໍ່ຍັງສາມາດເດີນໜ້າໃນການພັດທະນາປະເທດໃຫ້ບັນລຸເປົ້າໝາຍທີ່ວາງໄວ້ໄດ້. ພ້ອມນີ້, ສປປ ລາວ ແມ່ນມີພື້ນຖານທີ່ດີ, ມີເປົ້າໝາຍທີ່ແນ່ນອນ, ມີເຄື່ອງມືທີ່ດີ ແລະ ມີການສະໜັບສະໜູນຊ່ວຍເຫຼືອຈາກບັນດາປະເທດຄູ່ຮ່ວມໃນພາກພື້ນ ແລະ ສາກົນ. ສະນັ້ນ, ອະນາຄົດທີ່ສົດໃສ ແລະ ຈະເລີນຮຸ່ງເຮືອງໃນຕໍ່ໜ້າແມ່ນຖືວ່າບໍ່ໄກເກີນເອື້ອມ.

## *ເອກະສານຊ້ອນທ້າຍ 1: ແຜນວາດຄຳແນະນຳ*

| ແຜນວາດຄຳແນະນຳ | | | | | |
|---|---|---|---|---|---|
| | 1.1 ສືບຕໍ່ປັບປຸງເຊັ່ງຂໍ້ມູນຂ່າວສານເພື່ອໃຫ້ເຂົ້າເຖິງຂໍ້ມູນຂ່າວສານທີ່ເປັນມາດຕະຖານດຽວກັນ<br>1.3 ໜູນໃຊ້ລະບົບສົ່ງກົນອອນໄລນ໌ ແລະ ເຄື່ອງມືຄົ້ນຫາຂໍ້ມູນໃຫ້ເປັນປະໂຫຍດ<br>1.2 ກະຊວງເຕັກໂນ-ຄຳຕອບທີ່ກົງສ່ວນໃຫ້ໝັ້ນໃຈ | | 2.1 ສ້າງທັກສະໃຫ້ແຮງງານ<br>2.2 ສ້າງຂະບວນການພິຈາລະນາຂະບຸມັດເອກະສານຕ່າງໆໃນຈຸດດຽວ<br>2.3 ສ້າງໜ່ວຍງານເບີ່ງແຍງນັກລົງທຶນຕ່າງປະເທດຫຼັງການລົງທຶນ | | |
| | **ການແກ້ໄຂເພື່ອຢືນຕົວ** | | **ການຟື້ນຟູເສດຖະກິດ** | **ການຂະຫຍາຍຕົວຂອງເສດຖະກິດ** | |
| ນິຕິຈຳນັນ | <u>ຕົ້ນທຶນການດຳເນີນ</u><br>'- ມອບເງິນສົດເພື່ອຊ່ວຍເຫຼືອ<br>'- ຫຼຸດອັດຕາອາກອນ<br>'- ຫາວຽກເຮັດງານທຳໃຫ້<br>'- ລະດົມພາກທຸລະກິດໃຫ້ສືບຕໍ່ຈ້າງແຮງງານ ແລະ ຊ່ວຍພາກທຸລະກິດໃນສິ່ງທີ່ຈຳເປັນ | 1. ການຂະຫຍາຍໄຕແບບປົກປ້ອງຂອງທຸລະກິດ SMEs<br>2. ໜູນໃຊ້ເຂດເສດຖະກິດພິເສດ<br>3. ການກະສິກຳ<br>4. ການສ້າງເສດຖະກິດດີຈີຕອນ<br>5. ຂະແໜງໄລຈິສຕິກ | 1.1 ສ້າງຂະມາຄົມທຸລະກິດ<br>2.1 ໂຄສະນາລະດົມໃຫ້ນັກລົງທຶນໃນປະເທດໃຫ້ຄຽງເຂົ້າມາລົງທຶນໃນລາວ<br>3.1 ຝຶກອົບຮົມໃຫ້ຊາວກະສິກອນມີຄວາມສາມາດໃນການຜະລິດ ແລະ ສາມາດສ້າງມາດຕະຖານຄວາມປອດໄພດ້ານອາຫານ<br>4.1 ສົ່ງເສີມໃຫ້ມີການຫັນເປັນເສດຖະກິດດີຈີຕອນ ແລະ ຊຸກຍູ້ໃຫ້ການຄ້າທາງອີເລັກໂທຣນິກ<br>5.1 ສ້າງຄວາມອາດສາມາດໃຫ້ບໍລິສັດຂົນສົ່ງພາຍໃນໃຫ້ສາມາດແຂ່ງຂັນ | 1. ການຂະຫຍາຍໄຕຂອງປັນຕາຂະແໜງການທີ່ມີທ່າແຮງ<br>2. ລົງທຶນໃນການສ້າງຄວາມອາດສາມາດໃຫ້ແກ່ຊັບພະຍາກອນມະນຸດ | 1.1 ກະຊວງແຮງງານເພື່ອໃຫ້ເປັນໄຕໄດ້<br>2.1 ລົງທຶນໃສ່ການຝຶກອົບຮົມສ້າງຄວາມອາດສາມາດ (ສ້າງທັກສະສະເພາະ, ໃຊ້ KPI ມາຊ່ວຍ, ປັບປຸງຫຼັກສູດໃຫ້ແທດເໝາະກັບຕົວຈິງ) |
| ຂະບວນການ | <u>ສົ່ງເສີມທຸລະກິດ</u><br>'- ລະບຸອຸດສາຫະກຳທີ່ໄດ້ຮັບຜົນກະທົບທາງກົງເພື່ອຊ່ວຍຈະຊ່ວຍເຫຼືອໄດ້ດ້ານໃດ<br>'- ສົ່ງເສີມໃຫ້ຫຼຸດອັດຕາອາກອນລາຍໄດ້ທຸລະກິດ ແລະ ອາກອນທີ່ດິນ, ເລື່ອນເວລາການຊຳລະອາກອນຕ່າງໆໃຫ້ພາກທຸລະກິດ | 1. ການຂະຫຍາຍໄຕແບບປົກປ້ອງຂອງທຸລະກິດ SMEs<br>2. ໜູນໃຊ້ເຂດເສດຖະກິດພິເສດ<br>3. ເສັ້ນທາງລົດໄຟລາວ-ຈີນ<br>4. ການກະສິກຳ<br>5. ການສ້າງເສດຖະກິດດີຈີຕອນ<br>6. ອຸປະສັກດ້ານການຄ້າທີ່ບໍ່ແມ່ນພາສີ<br>7. ຂະແໜງການໄລຈິສຕິກ | 1.1 ເພີ່ມການສ້າງຄວາມສະດວກໃນການເຂົ້າຫາແຫຼ່ງທຶນ<br>1.2 ປັບປຸງການປະສານງານກັບສະມາຄົມການເງິນຈຸລະພາກແຫ່ງຊາດ<br>2. ເພີ່ມການຈັດງານໃຫ້ແກ່ແຮງງານພາຍໃນ<br>3.1 ປະເມີນຄືນດ້ານຄວາມຕ້ອງການຕໍ່ສິນຄ້າ<br>3.2 ສ້າງໂມເດວການຄາດການດ້ານເສດຖະກິດ<br>4.1 ເນັ້ນໃສ່ພຶດ ແລະ ສະໜູນໃນທີ່ມີລາຄາສູງ<br>4.2 ຜະລິດໃຫ້ໄດ້ເກີນກຳນົດທີ່ຕ່າງປະເທດຄາດວ່າຈະຊື້<br>5.1 ສ້າງຄະນະສະເພາະກິດດ້ານການຄ້າແບບອີເລັກໂທຣນິກ<br>6.1 ສືບຕໍ່ຫຼຸດຜ່ອນອຸປະສັກດ້ານການຄ້າທີ່ບໍ່ແມ່ນພາສີ<br>7.1 ປັບປຸງຂະບວນການປະສານງານ | 1. ການຂະຫຍາຍໄຕຂອງປັນຕາຂະແໜງການທີ່ມີທ່າແຮງ<br>2. ການນຳໃຊ້ການຫັນເປັນເສລີດ້ານການຄ້າ<br>3. ສ້າງຄວາມສະດວກໃນການດຳເນີນທຸລະກິດ<br>4. ປົກສູງ ແລະ ປະຕິບັດຕາມການປະກອບຄຳເຫັນຂອງພາກສ່ວນກ່ຽວຂ້ອງ<br>5. ສົ່ງເສີມການຮ່ວມມືກັນດ້ານນະໂຍບາຍ | 1.1 ຂະບຸຂັ້ນຕອນການປະຕິຮູບດ້ານການຜະລິດຂອງ ສປປ ລາວ<br>2.1 ໜູນໃຊ້ພັນທະສັນຍາຈາກ ASEAN/ACIA/FTA ໃຫ້ເປັນປະໂຫຍດ<br>2.2 ອັກສາລາຍສຳພັນກັບປະເທດຄູ່ຄ້າທີ່ດີ ແລະ ສ້າງຄວາມເຂັ້ມແຂງດ້ານການຮ່ວມມືໃນອົງການລຸ່ມແມ່ນ້ຳຂອງ<br>3.1 ເອີດໃຫ້ການຄ້າຂາຍຂ້າມແດນງ່າຍຂື້ນ<br>4.1 ລາຍງານທາລະພາແຫ່ງຊາດປະຈຳ<br>4.2 ສ້າງຄວາມສອດຄ່ອງແລະເຂົ້າໃຈກ່ຽວກັບນະໂຍບາຍໃຫ້ແກ່ກະຊວງສຳຄັນທີ່ກ່ຽວຂ້ອງ<br>4.3 ລາຍງານການປະຕິບັດງານ<br>4.4 ປະສານງານກັບພາກເອກະຊົນ<br>4.5 ທົບທວນຄຳຄິດເຫັນ, ການຈັດຕັ້ງປະຕິບັດນະໂຍບາຍ, ບຸກຄະລາກ ແລະ ວິໄສທັດຂອງລັດ<br>5.1 ທົບທວນຄຳຄິດເຫັນ, ການຈັດຕັ້ງປະຕິບັດນະໂຍບາຍ, ບຸກຄະລາກ ແລະ ວິໄສທັດຂອງລັດ |
| ໂຄງລ່າງພື້ນຖານ | <u>ຄວາມສະຖຽນລະພາບຂອງຫ່ວງໂສ້ການຜະລິດ</u><br>'- ເຂົ້າໄປມີສ່ວນຮ່ວມກັບຜູ້ສະໜອງປະຈຸບັນ ແລະ ຜູ້ສະໜອງລາຍໃໝ່<br><u>ການສົ່ງເສີມດ້ານຄົວເຮືອນ</u><br>'- ອຳນວຍຄວາມສະດວກດ້ານຄ່າທຳນຽມຕ່າງໆຂອງພາກລັດ, ອາກອນ ແລະ ສິນເຊື່ອ<br>'- ຫຼຸດລາຄາຄ່າໄຟຟ້າ | 1. ການຂະຫຍາຍໄຕແບບປົກປ້ອງຂອງທຸລະກິດ SMEs<br>2. ເສັ້ນທາງລົດໄຟລາວ-ຈີນ<br>3. ການກະສິກຳ<br>4. ການສ້າງເສດຖະກິດດີຈີຕອນ<br>5. ອຸປະສັກດ້ານການຄ້າທີ່ບໍ່ແມ່ນພາສີ<br>6. ຂະແໜງການໄລຈິສຕິກ | 1.1 ສ້າງຄະນະສະເພາະກິດເພື່ອການປັບປຸງນິຕິກຳລະດັບ SMEs<br>2.1 ສົ່ງເສີມອຸດສາຫະກຳຜະລິດອຸປະກອນອີງປະກອບ ຫຼື ອາໄຫລ່ຕ່າງໆ<br>3.1 ນຳໃຊ້ເຕັກໂນໂລຢີເພື່ອຜະລິດໃຫ້ສິນຄ້າກະສິກຳໄດ້ມາດຕະຖານ ແລະ ປອດໄພ<br>3.2 ສ້າງຊ່ອງທາງໃຫ້ທຸລະກິດແລະຊາວກະສິກອນໄດ້ພົບກັນ<br>4.1 ຈັດຕັ້ງປະຕິບັດຂອບລະບຽບເພື່ອປ້ອງກັນການແຂ່ງຂັນ ແລະ ປົກປ້ອງຜູ້ບໍລິໂພກ<br>5.1 ສ້າງ ແລະ ອັກສາຖານຂໍ້ມູນກ່ຽວກັບອຸປະສັກການຄ້າທີ່ບໍ່ແມ່ນພາສີ ແລະ ແບ່ງປັນຂໍ້ມູນເພື່ອແກ້ໄຂບັນຫາ<br>6.1 ສ້າງໂຄງລ່າງພື້ນຖານທີ່ສຳຄັນ ແລະ ອຸດສາຫະກຳອາໄຫລ່ຕາມເສັ້ນທາງລົດໄຟລາວ-ຈີນ | 1. ການຂະຫຍາຍໄຕຂອງປັນຕາຂະແໜງການທີ່ມີທ່າແຮງ<br>2. ສ້າງຄວາມສະດວກໃນການດຳເນີນທຸລະກິດ<br>3. ເພີ່ມການຮ່ວມມືດ້ານນະໂຍບາຍ | 1.1 ສືບຕໍ່ສ້າງຄວາມເຂັ້ມແຂງໃນການພັດທະນາດ້ານໂຄງລ່າງພື້ນຖານ ແລະ ສົ່ງເສີມການທ່ອງທ່ຽວ<br>2.1 ລວມສູນຂໍ້ມູນຜູ້ຊຳລະອາກອນ<br>2.2 ນຳໃຊ້ການເກັບກຳຂໍ້ມູນແບບອີເລັກໂທຣນິກ ແລະ ລະບົບການຊຳລະອາກອນ<br>3.1 ສ້າງໜ່ວຍງານປະສານງານ<br>3.2 ສ້າງໜ່ວຍງານຂ່າວກອງດ້ານເສດຖະກິດ<br>3.3 ສ້າງ TFIU ແລະ NCTPSD |

# ເອກະສານຊ້ອນທ້າຍ 2: ແຜນວາດຄຳແນະນຳໂດຍແບ່ງຕາມກະຊວງ

## Recommendation Matrix

Potential ministries to explore collaboration with are highlighted

Strengthen local businesses · Building an edge · Building an enabling environment · Trade & investment opportunities · Cultivating existing efforts

| | Recovery | Quick wins | | Resilience | | Growth | |
|---|---|---|---|---|---|---|---|
| **MPI** | Support businesses<br>- Provide stimulus to directly-hit industries<br>- Tax relief<br><br>Manage unemployment<br>- Provide cash grants<br>- Tax relief<br>- Job matching<br>- Encourage businesses to retain employees and support immediate capacity building needs<br><br>Supply chain stabilisation<br>- Engage existing and new suppliers<br><br>Support households<br>- Greater flexibility of government fees, taxes and loans<br>- Relief on electricity<br><br>Communicate support available<br>- To investors [MPI] and business owners [MOIC] through a COVID-19 helpdesk/ FAQ | 1. Provision of information<br><br>2. Revitalising OSS Centres | 1.1 Revamping sites to standardise information<br>1.2 Develop FAQs<br>1.3 Direct traffic via social media, and search engine optimisation<br>2.1 Upskill staff<br>2.2 Conduct simple approvals in-house<br>2.3 Investor aftercare teams | 1. Maximising SEZs<br>2. NTBs<br><br>3. Logistics sector [Ministry of Transport]<br><br>4. Lao-China Railway [Ministry of Transport]<br><br>5. Agriculture | 1.1 Promote Lao PDR to investors in bordering countries<br>1.2 Present a compelling story i.e. "Savan Park"<br>2.1 Continue reducing vast number of NTBs<br>2.2 Build and maintain database on NTBs to be shared<br>3.1 Domestic transport companies to compete and cooperate<br>3.2 Improving the coordination mechanism<br>3.3 Key infrastructure and ancillary industries along the Lao-China Railway<br>4.1 Demand assessment for goods specialisation<br>4.2Economic projections and models can be created<br>4.3 Demand assessment to determine goods specialisation<br>4.4 Economic projections and models can be created<br>4.5Boost ancillary industries<br>5.1 Training workshops for businesses to attract more investors<br>5.2 Link businesses with potential investors<br>5.3 Provide financial grants and certifications for Lao-brand coffee | 1. Leveraging on trade liberalisation<br>2. Other potential sectors of growth<br>3. EODB<br><br>4. *Enhance feedback loop<br><br>5. *Enhance policy synergies | 1.1 Conduct a scan of current trade agreements, plans and provide a country strategy<br>2.1 Identify key steps to transition Lao PDR towards manufacturing<br>2.2 Prepare workforce to adapt<br>3.1 Simplify requirements for trading across borders<br>3.2 Keep centralised records of businesses and tax profiles<br>3.3 Adopt e-filing and payment systems<br>4.1 Proactive whole-of-government communication [National Assembly]<br>4.2 Review of feedback and recalibration of national strategies, policies and visions<br>4.3 Repository of decisions & reports<br>5.1 Establish a coordinating authority<br>5.2 Invest in Capacity Building (specific skills, KPIs, update training resources)<br>5.3 Establish an Economic intelligence unit in conjunction with MOIC |
| **MOIC** | | Coordination between MOIC and MPI is crucial with * indicating the proposed leaders | | 1. Sustainable growth of SMEs<br><br>2. Economic digitalisation [Ministry of post and tele-communication]<br><br>3. Agriculture [Ministry of Agriculture and Forestry] | 1.1 Form collective business associations<br>1.2Increase bank loan flexibility<br>1.3 Improve coordination with Lao Microfinance Association (LMA)<br>1.4 Create dedicated task force for SME improvement<br>2.1 In view of COVID, encourage digitalisation & e-commerce platforms<br>2.2 Form dedicated e-commerce task force<br>2.3 Design a tracking system to measure success<br>2.4 Implement regulatory framework to protect competition & consumers<br>3.1 Training to meet standards of crop quality & safety<br>3.2 Target higher priced agricultural crops and herbs<br>3.3 Beyond yearly reviews of Laos' agricultural export quotas<br>3.4 Platform to match suitable businesses to farmers | 1. *Leveraging on trade liberalisation<br><br>2. *Other potential sectors of growth<br>3. Enhance feedback loop<br><br>4. *Enhance policy synergies | 1.1 Conduct a scan of current trade agreements, plans and provide a country strategy<br>1.2 Maximise ties in ASEAN/ the region<br>2.1 Continue to strengthen infrastructure development to support potential sectors of growth<br>3.1 Establish regular and meaningful communication with private sectors<br>3.2 Review of feedback and recalibration of national strategies, policies and visions<br>4.1 Establish a coordinating authority<br>4.2 Establish an Economic intelligence unit in conjunction with MPI<br>4.3 Establish TFIU and NCTPSD |

## *ເອກະສານຊ້ອນທ້າຍ 3: ແຜນຊີ້ນຳທຸລະກິດກາເຟຂອງກະຊວງແຜນການ ແລະ ການລົງທຶນ*



## *ເອກະສານຊ້ອນທ້າຍ 4: ກໍລະນີສຶກສາກ່ຽວກັບການສົ່ງເສີມການຂະຫຍາຍຕົວຂອງຈຸນລະວິຫາທະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນອຸດສາຫະກຳກະສິກຳປອດສານພິດ*

ກະສິກຳ ແມ່ນຂະແໜງໜຶ່ງທີ່ມີຄວາມສຳຄັນຫລາຍໃນທັງສອງຂົງເຂດການຄ້າ ແລະ ການລົງທຶນ. ສປປ ລາວ ຄວນນຳໃຊ້ປະໂຫຍດການແຂ່ງຂັນທີ່ໄດ້ປຽກດ້ານທຳມະຊາດ ແລະ ກຳນົດເປົ້າໝາຍໃນການຂະຫຍາຍການຜະລິດ ແລະ ສົ່ງອອກ**ຜະລິດຕະພັນກະສິກຳປອດສານພິດ**. ທ່າແຮງບົ່ງຊ້ອນຂອງການຂະຫຍາຍໂຕຜະລິດຕະພັນເຫລົ່ານີ້ ໄດ້ໄປເກີນກວ່າຕ່ອງໂສ້ອາຫານພາຍໃນ ແຕ່ມີທ່າແຮງບົ່ງຊ້ອນໃນການສະໜັບສະໜູນອັນໃຫຍ່ຫລວງຕໍ່ການເພີ່ມຂຶ້ນຄວາມຕ້ອງການຜະລິດຕະພັນກະສິກຳປອດສານພິດຂອງໂລກ. ສິ່ງເຫລົ່ານີ້ ໄດ້ເປັນແຮງຈູງໃຈໃຫ້ແກ່ຂະແໜງການຄ້າ ແລະ ການລົງທຶນ ຢູ່ ສປປ ລາວ. ເຖິງຢ່າງໃດກໍຕາມ, ສິ່ງທ້າທາຍໃນຂະແໜງການນີ້ ແມ່ນການປະສານງານທີ່ຈຳເປັນ ແລະ ການມີສ່ວນຮ່ວມທີ່ສຳຄັນຈາກຫລາຍພາກສ່ວນແຕກຕ່າງກັນ ລະຫວ່າງຜູ້ປະກອບການ, ລັດຖະບານ ລວມໄປເຖິງອົງກອນສາກົນ.

ກໍລະນີສຶກສານີ້ ໄດ້ສຸມໃສ່ການສົ່ງເສີມການຂະຫຍາຍຕົວຂອງຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນຂະແໜງການຜະລິດກະສິກຳປອດສານພິດ ທີ່ມີເປົ້າໝາຍສະແດງໃຫ້ເຫັນການແກ້ໄຂສິ່ງຄຸມເຄືອ ແລະ ການເຊື່ອມສານກັນ. ສິ່ງສຳຄັນກວ່ານີ້, ກໍລະນີສຶກສານີ້ ຍັງຈະສະແດງໃຫ້ເຫັນເຖິງໝາກຜົນທີ່ດີ ແລະ ວິທີການທີ່ຈະນຳໄປສູ່ຜົນສຳເລັດທັງໃນສະຖານະການ ແລະ ບົດບາດທີ່ຫລາຍຂຶ້ນຂອງເປົ້າໝາຍການພັດທະນາເສດຖະກິດ ສປປ ລາວ.

ສະເພາະສະພາບການນີ້, ພາບຄວາມສຳເລັດສາມາດຂະຫຍາຍຈາກແຜນຍຸດທະສາດທີ່ມີຢູ່ສຳລັບການພັດທະນາກະສິກຳປອດສານພິດແຫ່ງຊາດ 2025 ແລະ ວິໄສທັດຮອດປີ 2030 ທີ່ໄດ້ວ່າງເປົ້າ ໝາຍການເພີ່ມຂຶ້ນສ□າລັບອຸດສາຫະກ□າ. ແຜນສ່ວນໃຫຍ່ຂຶ້ນກັບການປ່ຽນແປງທີ່ຈ□າເປັນໃນການປັບປຸງນິຕິກ□າທີ່ມີຢູ່ ແລະ ຄວາມສາມາດຂອງກຳລັງຄົນໃນໄລຍະຕົ້ນຂອງການຜະລິດ. ນີ້ແມ່ນຊ່ອງວ່າງນະໂຍບາຍທີ່ລະບຸໂດຍພາກເອກະຊົນຈາກການປຶກສາຫາລື ແລະ ໄດ້ສະແດງໃຫ້ເຫັນເຖິງທ່າແຮງໃນການກຳນົດເປົ້າໝາຍຂອງຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ໂດຍສະເພາະພາຍຫລັງໄລຍະຕົ້ນຂອງການຜະລິດ.

ປະຈຸບັນ, ບໍລິສັດຕ່າງປະເທດ ແມ່ນໃຫ້ຄວາມສົນໃຈຫລາຍໃນການເຂົ້າຮ່ວມໃນຂະແໜງທີ່ມີຜົນກຳໄລຫລາຍຂຶ້ນ ເນື່ອງຈາກຄວາມສາມາດທີ່ຈຳກັດຂອງບໍລິສັດພາຍໃນປະເທດ. ການນຳສະເໜີຈຸລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງພາຍໃນປະເທດ ໃນຂະແໜງນີ້ ຈະຊ່ວຍໃຫ້ທຸລະກິດພາຍໃນໄດ້ຮັບຜົນປະໂຫຍດໃນການເພີ່ມຂຶ້ນຂອງການຄ້າຜະລິດຕະພັນກະສິກຳປອດສານພິດໃນລະດັບໂລກ. ຜ່ານການນຳສະເໜີດັ່ງກ່າວ, ພາບຂອງຄວາມສຳເລັດ ສາມາດຂະຫຍາຍຕື່ມພາຍຫລັງການເພີ່ມຂຶ້ນຂອງຜະລິດຕະພັນ, ເພື່ອກ້າວໄປສູ່ການສົ່ງເສີມມູນຄ່າການຄ້າຂອງຜະລິດຕະພັນກະສິກຳປອດສານພິດພາຍໃນປະເທດ.

| ຜູ້ມີສ່ວນຮ່ວມທີ່ສຳຄັນ | ຊ່ອງວ່າງ | ການແກ້ໄຂ | ແຜນວາດຜົນສຳເລັດ |
|---|---|---|---|
| | | **Production** | |
| *ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ*<br>• ຊາວກະສິກອນລາຍຍ່ອຍ<br><br>*ອື່ນໆ*<br>• ຜູ້ປ້ອນຂໍ້ມູນ<br>• ຟາມຂະໜາດໃຫຍ່<br><br>*ລັດຖະບານ/ອົງການຈັດຕັ້ງສາກົນ*<br>• ກົມກະສິກຳ<br><br>ອົງການພັດທະນາ (ເຊັ່ນ: ທະນາຄານພັດທະນາອາຊີ) | ຜະລິດບໍ່ໄດ້ຄຸນນະພາບ ຫລື ມາດຕະຖານຄວາມປອດໄພ<br><br>*ຜູ້ມີສ່ວນຮ່ວມທີ່ສຳຄັນ*<br>• ຊາວກະສິກອນລາຍຍ່ອຍ<br>• ກົມກະສິກຳ<br>• ອົງການພັດທະນາ | 1. ເສີມສ້າງການຖ່າຍທອດຄວາມຮູ້ ແລະ ການໄຫລວຽນຂອງຂໍ້ມູນ ເພື່ອໃຫ້ຜູ້ມີສ່ວນຮ່ວມ ໄດ້ຮັບຊາບ ແລະ ປະຕິບັດຕາມມາດຕະການ.<br><br>2. ສ້າງອົງການພັດທະນາ ເພື່ອສ້າງຕັ້ງສະມາຄົມກະສິກຳ ເພື່ອເພີ່ມການແລກປ່ຽນຂໍ້ມູນ | ຫລຸດຜົນຜະລິດລົງ 20% ທີ່ບໍ່ໄດ້ຄຸນນະພາບ ຫລື ມາດຕະຖານຄວາມປອດໄພ ຮອດປີ 2025 ໂດຍມີເປົ້າໝາຍປີຕໍ່ປີ |
| | | **ການປຸງແຕ່ງ ແລະ ການຫຸ້ມຫໍ່** | |
| *ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ*<br>• ຊາວກະສິກອນລາຍຍ່ອຍ (ການປຸງແຕ່ງເບື້ອງຕົ້ນເປັນສ່ວນໃຫຍ່)<br>• ບໍລິສັດປຸງແຕ່ງພາຍໃນ<br><br>*ອື່ນໆ*<br>• ຜູ້ສະໜອງເຄື່ອງຈັກ | ທຸລະກິດລາຍຍ່ອຍຂາດຄວາມສາມາດໃນການຜະລິດ ໂດຍສະເພາະໃນລະດັບທີສອງຂອງການປຸງແຕ່ງ<br><br>*ຜູ້ມີສ່ວນຮ່ວມທີ່ສຳຄັນ*<br>• ຊາວກະສິກອນລາຍຍ່ອຍ | ປັບປຸງຄວາມຮູ້ດ້ານເຕັກນິກ ແລະ ຄວາມສາມາດລະຫວ່າງຜູ້ທີ່ມີສ່ວນຮ່ວມລາຍຍ່ອຍພາຍໃນ | ເພີ່ມການປຸງແຕ່ງເບື້ອງຕົ້ນໂດຍຜູ້ມີສ່ວນຮ່ວມລາຍຍ່ອຍໃຫ້ໄດ້ 20% ໃນປີ 2025 ໂດຍຕັ້ງເປົ້າໝາຍປີຕໍ່ປີ ແລະ ການປຸງແຕ່ງຂັ້ນທີສອງຂອງຜົນຜະລິດຂອງຜູ້ມີສ່ວນຮ່ວມລາຍຍ່ອຍໃຫ້ໄດ້ 10% ໃນປີ 2025 ໂດຍຕັ້ງເປົ້າໝາຍປີຕໍ່ປີ |

| | | | |
|---|---|---|---|
| • ບໍລິສັດປຸງແຕ່ງຕ່າງປະເທດ<br>• ຟາມຂະໜາດໃຫຍ່<br><br>*ລັດຖະບານ/ ອົງການຈັດຕັ້ງສາກົນ* | • ກະຊວງອຸດສາຫະກຳ ແລະ ການຄ້າ<br>• ອົງການພັດທະນາ | | |
| • ກະຊວງອຸດສາຫະກຳ ແລະ ການຄ້າ<br>• ອົງການພັດທະນາ (ເຊັ່ນ: ທະນາຄານພັດທະນາ ອາຊີ) | ບໍລິສັດປຸງແຕ່ງພາຍໃນຂາດການຫຸ້ມຫໍ່ທີ່ເໝາະສົມ ແລະ ບໍ່ປະຕິບັດຕາມມາດຕະຖານສາກົນ<br><br>*ຜູ້ມີສ່ວນຮ່ວມທີ່ສຳຄັນ*<br>• ບໍລິສັດປຸງແຕ່ງພາຍໃນ<br>• ກະຊວງອຸດສາຫະກຳ ແລະ ການຄ້າ<br>• ອົງການພັດທະນາ | 1. ເສີມສ້າງການຖ່າຍທອດຄວາມຮູ້ ແລະ ການໄຫລວຽນຂອງຂໍ້ມູນ ເພື່ອໃຫ້ຜູ້ມີສ່ວນຮ່ວມ ໄດ້ຮັບຊາບ ແລະ ປະຕິບັດຕາມມາດຕະການ<br><br>2. ປັບປຸງການອອກແບບ ແລະ ການຕະຫລາດຂອງການຜະລິດກະສິກຳທອດສານພິດໃນ ສປປ ລາວ | 1. ຮັບປະກັນການຫຸ້ມຫໍ່ຂອງການຜະລິດກະສິກຳປອດສານພິດໃຫ້ໄດ້ຕາມມາດຕະຖານດ້ານຄວາມປອດໄພຂອງໂລກ 100% ໃນປີ 2030<br>2. ເພີ່ມການຍອມຮັບໃບຢັ້ງຢືນປອດສານພິດຂອງປະເທດລາວຈາກສະພາສາກົນ |
| **ການເກັບຮັກສາ ແລະ ໂລຈິສຕິກ** | | | |

| | | | |
|---|---|---|---|
| *ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ*<br>• ບໍລິສັດຫຸ້ມຫໍ່ພາຍໃນ<br>• ບໍລິສັດໂລຈິສຕິກພາຍໃນ<br>• ຜູ້ຂາຍຍ່ອຍ/ຜູ້ຂາຍສົ່ງພາຍໃນ<br><br>*ອື່ນໆ*<br>• ບໍລິສັດຫຸ້ມຫໍ່ຕ່າງປະເທດ<br>• ບໍລິສັດໂລຈິສຕິກຕ່າງປະເທດ<br><br>*ລັດຖະບານ/ອົງການຈັດຕັ້ງສາກົນ*<br>• ກະຊວງອຸດສາຫະກໍາ ແລະ ການຄ້າ<br>ອົງການພັດທະນາ (ເຊັ່ນ: ທະນາຄານພັດທະນາອາຊີ) | ຂາດສາງເຢັນ ແລະ ສິ່ງອໍານວຍຄວາມສະດວກໃນການສົ່ງອອກ<br><br>*ຜູ້ມີສ່ວນຮ່ວມທີ່ສໍາຄັນ*<br>• ບໍລິສັດເກັບຮັກສາ ແລະ ໂລຈິສຕິກພາຍໃນ<br>• ກະຊວງອຸດສາຫະກໍາ ແລະ ການຄ້າ<br>• ອົງການພັດທະນາ | 1. ປັບປຸງຄວາມຮູ້ດ້ານເຕັກນິກ ແລະ ຄວາມສາມາດລະຫວ່າງບໍລິສັດເກັບຮັກສາ ແລະ ໂລຈິສຕິກພາຍໃນ<br><br>2. ສົ່ງເສີມທຸລະກິດພາຍໃນລົງທຶນໃນການເຮັດສາງເຢັນ ແລະ ອໍານວຍຄວາມສະດວກໃນການສົ່ງອອກ | ຮັບປະກັນການເຂົ້າເຖິງສາງເຢັນ ແລະ ອໍານວຍຄວາມສະດວກການສົ່ງອອກທີ່ສົມບູນໃນປີ 2030 |
| | ນໍາສະເໜີວິທີແກ້ໄຂຕ່ອງໂສ້ການສະໜອງແບບດີຈິຕໍ<br><br>*ຜູ້ມີສ່ວນຮ່ວມທີ່ສໍາຄັນ*<br>• ຜູ້ຂາຍຍ່ອຍ/ຜູ້ຂາຍສົ່ງພາຍໃນ<br>• ກະຊວງອຸດສາຫະກໍາ ແລະ ການຄ້າ<br>• ອົງການພັດທະນາ | ນໍາໃຊ້ເຕັກໂນໂລຍີ ເຂົ້າໃນການປັບປຸງຕ່ອງໂສ້ການສະໜອງຜູ້ຂາຍຍ່ອຍ/ຜູ້ຂາຍຍົກພາຍໃນ ເພື່ອປັບປຸງການຂົນສົ່ງໃຫ້ມີປະສິດທິຜົນ | ຫລຸດຜ່ອນໄລຍະເວລາການຂົນສົ່ງຂອງສິນຄ້າກະສິກໍາປອດສານພິດໃນປີ 2030 |

| End-market use | | | |
|---|---|---|---|
| *ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ*<br>• ຜູ້ຂາຍຍ່ອຍ/ຜູ້ຂາຍຍົກພາຍໃນ<br>• ການບໍລິການອາຫານ<br><br>*ອື່ນໆ*<br>• ຜູ້ນຳເຂົ້າ ແລະ ຂາຍຍົກຕ່າງປະເທດ<br><br>*ລັດຖະບານ/ອົງການຈັດຕັ້ງສາກົນ*<br>• ກະຊວງອຸດສາຫະກຳ ແລະ ການຄ້າ | ຂໍ້ມູນ ກ່ຽວກັບ ຕະຫລາດພາຍໃນ ແລະ ຕະຫລາດຕ່າງປະເທດ ເພື່ອຜູ້ສົ່ງອອກພາຍໃນ ຍັງບໍ່ພຽງພໍ<br><br>*ຜູ້ມີສ່ວນຮ່ວມທີ່ສຳຄັນ*<br>• ຜູ້ຂາຍຍ່ອຍ/ຜູ້ຂາຍສົ່ງພາຍໃນ<br>• ກະຊວງອຸດສາຫະກຳ ແລະ ການຄ້າ<br>• ອົງການພັດທະນາ | 1. ເພີ່ມຄວາມຮັບຮູ້ ແລະ ການເຂົ້າເຖິງສັນຍາການຄ້າທີ່ມີ ແລະ ຂໍ້ມູນຂອງຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ<br><br>2. ນຳສະເໜີ ແລະ ສ້າງແຮງຈູງໃຈໃນການນຳໃຊ້ຄ້າຂາຍອອນລາຍ ເພື່ອເຮັດໃຫ້ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງພາຍໃນ ເຂົ້າຮ່ວມໃນເສດຖະກິດໂລກ | ເພີ່ມຍອດຂາຍສູ່ຕະຫລາດໂລກຂອງຜູ້ຂາຍຍ່ອຍ/ຜູ້ຂາຍສົ່ງພາຍໃນຮອດ 20% ໃນປີ 2025 |
| ອົງການພັດທະນາ (ເຊັ່ນ: ທະນາຄານພັດທະນາອາຊີ) | ປັບປຸງການຕະຫລາດ ແລະ ຍີ່ຫໍ້ສິນຄ້າປອດສານພິດ ສປປ ລາວ<br><br>*ຜູ້ມີສ່ວນຮ່ວມທີ່ສຳຄັນ*<br>• ຜູ້ຂາຍຍ່ອຍ/ຜູ້ຂາຍສົ່ງພາຍໃນ | ຍີ່ຫໍ້ ແລະ ການຕະຫລາດຜະລິດຕະພັນກະສິກຳປອດສານພິດຈາກ ສປປ ລາວ ທີ່ເໝາະສົມຜ່ານການວາງສະແດງສິນຄ້າໄປສູ່ເວທີອອນລາຍ | 1. ເພີ່ມການຍອມຮັບໃບຢັ້ງຢືນຜະລິດຕະພັນປອດສານພິດຂອງປະເທດລາວຈາກສະພາສາກົນ<br>2. ເພີ່ມຄວາມຕ້ອງການຂອງໂລກຕໍ່ຜະລິດຕະພັນກະສິກຳປອດສານພິດ ສປປ ລາວ 10% |

| | | | |
|---|---|---|---|
| | • ກະຊວງ ອຸດສາຫະກຳ ແລະ ການຄ້າ<br>• ອົງການພັດທະນາ | | |

ມັນໝາຍເຖິງຄວາມເປັນເຈົ້າຂອງຫລາຍຂື້ນໃນຂັ້ນຕອນການຜະລິດ ແລະ ຫຸ້ມຫໍ່, ການເກັບຮັກສາ ແລະ ໂລຈິສຕິກ ລວມທັງການຕະຫລາດຂອງຜະລິດຕະພັນ. ໂດຍທັງໝົດແລ້ວ ມັນຈະເປີດເຜີຍທ່າແຮງທີ່ແທ້ຈິງຂອງອຸດສາຫະກຳ ແລະ ການປະກອບສ່ວນຕໍ່ກັບເສດຖະກິດຂອງປະເທດລາວ.

ຜູ້ມີສ່ວນຮ່ວມຫລັກກັບຕ່ອງໂສ້ມູນຄ່າໄດ້ຖືກລະບຸໄວ້. ນີ້ຈະຊ່ວຍໃນການລະບຸຊ່ອງວ່າງ (ໂດຍສະເພາະຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ແລະ ພາກລັດ), ຂໍ້ສະເໜີຂອງການກຳນົດການແກ້ໄຂ ແລະ ໝາກຜົນຂອງພາບຄວາມສຳເລັດ. ສຳລັບຈຸດປະສົງຂອງກໍລະນີສຶກສາ ແມ່ນເພື່ອສະແດງໃຫ້ເຫັນເຖິງວິທີການເຊື່ອມສານໃນການແກ້ໄຂບັນຫາ, ການໃຫ້ຄວາມສົນໃຈ ໜ້ອຍລົງຂອງບັນຊີຊ່ອງວ່າງ ຫລື ລາຍລະອຽດຂອງຂໍ້ສະເໜີໃນການແກ້ໄຂບັນຫາ. ພາບຂອງຜົນສຳເລັດ ກໍຍັງຈະເປັນແບບຄ້າວໆ ແລະ ບໍ່ມີຂໍ້ຜູກມັດ. ແຕ່ວ່າ, ມັນສະແດງໃຫ້ເຫັນເຖິງປະເພດຂອງເປົ້າໝາຍທີ່ບັນດາກະຊວງສາມາດມອງເຫັນເມື່ອຕັ້ງເປົ້າໝາຍສຳລັບການຂະຫຍາຍຕົວຂອງຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ໂດຍສະເພາະພາຍຫລັງການຜະລິດຂອງຜະລິດຕະພັນກະສິກຳປອດສານພິດ.

ໃນຂະນະທີ່ບໍ່ທັນພ້ອມ, ຕາຕະລາງໄດ້ສະແດງໃຫ້ພວກເຮົາເຫັນເຖິງສິ່ງທີ່ຕ້ອງເຮັດໃນການສ້າງນະໂຍບາຍໃຫ້ມີປະສິດທິຜົນ. ໂດຍການລະບູຜູ້ທີ່ມີສ່ວນຮ່ວມທີ່ສຳຄັນ, ຊ່ອງວ່າງໃນລະບົບປະຈຸບັນ ສາມາດຢຶດຢຸ່ນກັບການແກ້ໄຂເປົ້າໝາຍທີ່ໄດ້ກຳນົດ ແລະ ປະກອບສ່ວນໃນພາບແຫ່ງຜົນສຳເລັດກວ້າງຕື່ມອີກ. ສິ່ງນີ້ ຍັງຈະຮັບປະກັນວ່າ ນະໂຍບາຍສາມາດວາງຄຸນຄ່າ ແລະ ທ່າແຮງຂອງອຸດສາຫະກຳໄດ້ຢ່າງເຕັມສ່ວນ. ໃນຂອບການຈັດຕັ້ງປະຕິບັດວິທີແກ້ໄຂ, ມີການຢັ້ງຢືນວ່າ ການແກ້ໄຂແບບມີສ່ວນຮ່ວມ ບໍ່ພຽງແຕ່ມີຄວາມຈຳເປັນ ແຕ່ມີຄວາມສຳຄັນຕໍ່ກັບຜົນສຳເລັດຂອງການສົ່ງເສີມການຂະຫຍາຍຕົວຂອງຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນອຸດສາຫະກຳກະສິກຳປອດສານພິດ.

ຜູ້ມີສ່ວນຮ່ວມທີ່ຕ່າງກັນ ກໍຈະມີຈຸດເສຍ ທີ່ແຕກຕ່າງກັນທີ່ຕ້ອງນໍາໃຊ້ໃນວິທີການກໍານົດເປົ້າໝາຍ. ເປົ້າໝາຍທີ່ຈໍາເປັນ ຈະຖືກກໍານົດສະເພາະໃນຂະແໜງການ ແລະ ປະສານສົມທົບເພື່ອປັບປຸງນະໂຍບາຍດັ່ງກ່າວໃຫ້ໄດ້. ສະຫລຸບລວມແລ້ວ, ສິ່ງທີ່ຕ້ອງການ ແມ່ນຢາກໃຫ້ລັດຖະບານເອົາໃຈໃສ່ໃນການແກ້ໄຂແບບປະສານສົມທົບ ເພື່ອສ້າງມູນຄ່າສໍາລັບຜູ້ທີ່ມີສ່ວນຮ່ວມສໍາຄັນ ແລະ ຂະແໜງການທີ່ໄດ້ລະບຸຂ້າງເທິງ.

. . . . .

## *ເອກະສານຊ້ອນທ້າຍ 5: ແຜນພັດທະນາວິສາຫະກິດໂດຍກະຊວງອຸດສາຫະກຳ ແລະ ການຄ້າ*



## *ເອກະສານຊ້ອນທ້າຍ 6: ການປະສານງານ ລະຫວ່າງກະຊວງອຸດສາຫະກຳ ແລະ ການຄ້າ ແລະ ກະຊວງແຜນການ ແລະ ການລົງທຶນ*



# *ເອກະສານຄັດຕິດ A:*

### ສປປ ລາວ: ນະໂຍບານສົ່ງເສີມເສດຖະກິດລາວ ເພື່ອເພີ່ມຜະລິດຕະພາບການຜະລິດ ແລະ ວຽກເຮັດງານທຳ
### ໝາກຜົນ **1:** ໄດ້ຮັບການປັບປຸງນະໂຍບາຍຂົງເຂດການລົງທຶນ

---

ກອງປະຊຸມໃຫຍ່ພັກປະຊາຊົນ ປະຕິວັດລາວ ຄັ້ງທີ 10 ປີ 2016, ປະເທດລາວ ໄດ້ຮັບຮອງເອົາວິໄສທັດ 2030 ທີ່ສູ້ຊົນ ແລະ ເປັນແຮງບັນດານໃຈ ເພື່ອເພີ່ມລາຍຮັບຕໍ່ຫົວຄົນຈາກປີ 2015 ເປັນ 4 ເທົ່າ. ນັບແຕ່ນັ້ນເປັນຕົ້ນມາ, ການຈັດຕັ້ງປະຕິບັດໄດ້ຮັບຜົນດີໃນຫລາຍໆດ້ານທີ່ໄດ້ຮັບການສະໜັບສະໜູນຢ່າງເຂັ້ມແຂງຂອງໂຄງລ່າງພື້ນຖານ ເສດຖະກິດ. ໃນການກວດກາເຖິງວິທີການທີ່ຊ່ວຍປັບປຸງຂອບນະໂຍບາຍການລົງທຶນ, ສິ່ງທີ່ເຮັດໃຫ້ໝັ້ນໃຈ ແມ່ນ ການປ່ຽນແປງຈາກນະໂຍບາຍສະຖາປັດກຳ ມາເປັນນະໂຍບາຍຈັດຕັ້ງປະຕິບັດ. ຈຸດປະສົງ ແມ່ນເພື່ອສ້າງຂອບ ການລົງທຶນແບບຍືນຍົງ ຊຶ່ງບໍ່ພຽງແຕ່ຈະກະຕຸ້ນຄວາມສາມາດຂອງເສດຖະກິດລາວ ແຕ່ຍັງຈະຮັບປະກັນວ່າມັນ ຈະຢືດຢຸ່ນ ແລະ ວ່ອງໄວ.

### **ປະເທດລາວ ໃນປະຈຸບັນ: ຄວາມສຳເລັດ ແລະ ຈຸດແຂງ**

## **1)** ຄວາມຄືບໜ້າດ້ານເສດຖະກິດທີ່ໝັ້ນຄົງ

ປະເທດລາວ ໄດ້ດຳເນີນການເປັນຢ່າງດີໃນການຮັກສາການຂະຫຍາຍຕົວວເສດຖະກິດທີ່ດີໃນຊ່ວງໄລຍະ 2 ທົດສະ ວັດ. ນັບແຕ່ປີ 1996 ເຖິງ 2016, ການຂະຫຍາຍຕົວຂອງຍອດຜະລິດຕະພັນພາຍໃນຕໍ່ຫົວຄົນ ສະເລັ່ຍ 5,65% ເຊັ່ນດຽວກັນກັບການເພີ່ມຂຶ້ນຂອງຍອດລາຍຮັບແຫ່ງຊາດຕໍ່ຫົວຄົນ. ໃນປີ 2016, ການເພີ່ມຂຶ້ນຖືກຂັບເຄື່ອນໂດຍ ການປະກອບສ່ວນຂອງຂະແໜງການບໍລິການ 39,8%, ຕໍ່ມາແມ່ນຂະແໜງອຸດສາຫະກຳ 28,8%. ມໍ່ໆນີ້, ໃນປີ 2017 ການຂະຫຍາຍຕົວຂອງຍອດຜະລິຕະພັນພາຍໃນຫລຸດລົງຈາກເປົ້າໝາຍ 7,5% ພຽງເລັກໜ້ອຍ, ແຕ່ມີຄວາມ ເຂັ້ມແຂງຢູ່ທີ່ 6,9%. ການທົບທວນກາງສະໄໝຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ 8 (2016-2020) ໄດ້ສະແດງໃຫ້ເຫັນວ່າ ເຖິງວ່າການຂະຫຍາຍຕົວຂອງຍອດຜະລິດຕະພັນພາຍໃນຈະຫລຸດລົງຈາກເປົ້າໝາຍ 7,5% ໃນປີ 2017, ແຕ່ມັນກໍຍັງສາມາດປະຕິບັດໄດ້ຕາມແຜນການລົງທຶນພາຍໃນ ແລະ ຕ່າງປະເທດ; ນອກນີ້, ໃນປີ 2016 ເປັນປີທຳອິດທີ່ບັນທຶກເປັນປີທີ່ໄດ້ດຸນການຄ້າ 1,15 ຕື້ໂດລາສະຫາລັດ ທີ່ຂັບເຄື່ອນໂດຍການສ້າງ ສຳເລັດໂຄງການຂະໜາດໃຫຍ່. ທ່າມກາງຄຳໝັ້ນສັນຍາຂອງລັດຖະບານລາວ ເພື່ອຄວາມໝັ້ນຄົງຂອງເສດຖະກິດ ແລະ ຫລຸດຜ່ອນຄວາມກົດກັນດ້ານງົບປະມານ, ກອງທຶນການເງິນສາກົນໄດ້ສົ່ງສັນຍານຄວາມເຊື່ອໝັ້ນຕໍ່ເສດຖະກິດ ລາວຄາດຄະເນການເພີ່ມຂຶ້ນຂອງຍອດຜະລິດຕະພັນພາຍໃນເພີ່ມຂຶ້ນ 6,8% ໃນປີ 2018 ແລະ ຈັດເປັນປະເທດ ອັນດັບທີ 2 ທີ່ມີການຂະຫຍາຍຕົວສູງໃນອາຊີຕາເວັນອອກຊຽງໃຕ້ ຖັດຈາກມຽນມາ ແລະ ກຳປູເຈຍ ທີ່ມີອັດຕາສູງ ທີ່ 6,9%.




ແຫລ່ງຂໍ້ມູນ: ບັນຊີທະນາຄານໂລກແຫ່ງຊາດ

## 2) ຄູ່ຮ່ວມທີ່ເຂັ້ມແຂງ ແລະ ລະບົບນິເວດໃນພາກພື້ນ

ຄວາມຄືບໜ້າທາງດ້ານເສດຖະກິດໃນ ສປປ ລາວ ແມ່ນໄດ້ຮັບການສະໜັບສູນຈາກການຄ້າ ແລະ ລົງທຶນໃນຂອບສອງຝ່າຍທີ່ເຂັ້ມແຂງ ເຊື່ອມກັນທັງຂອບສອງຝ່າຍ ແລະ ພາກພື້ນ ຜ່ານການເຊື່ອມໂຍງກັນຫລາຍຂັ້ນຂອງອາຊຽນ.

ທາງດ້ານການຄ້າ, ໄທຈັດຢູ່ໃນອັນດັບທີ 1 ແລະ ຈີນ ອັນດັບທີ 2 ຂອງຄູ່ຄ້າຫລັກຂອງ ສປປ ລາວ, ຊຶ່ງກວມເອົາ 87,77%ຂອງຍອດມູນຄ່າການຄ້າໃນປີ 2016. ການຄ້າກັບໄທ, ມູນຄ່າການຄ້າຍັງຮັກສາໃນລະດັບທີ່ໝັ້ນຄົງລະຫວ່າງປີ 2012 ແລະ 2016 ສະເລ່ຍ 3,18 ຕື້ໂດລາສະຫາລັດ. ໃນຊ່ວງໄລຍະດຽວກັນ, ການຄ້າກັບຈີນ, ມູນຄ່າການຄ້າໄດ້ເພີ່ມຂຶ້ນຢ່າງຕໍ່ເນື່ອງຈາກ 625 ລ້ານໂດລາສະຫາລັດ ມາເປັນ 1,87ຕື້ໂດລາສະຫາລັດ, ອັດຕາເພີ່ມຂຶ້ນ 7,1% ຕໍ່ປີ. ກົງກັນຂ້າມກັບຕົວເລກທີ່ໝັ້ນຄົງດັ່ງກ່າວ, ມູນຄ່າການຄ້າຍັງມີທ່າແຮງຈະເພີ່ມຂຶ້ນກັບໄທ ແລະ ຈີນ: ການຄ້າກັບໄທ, ມູນຄ່າສົ່ງອອກເພີ່ມຂຶ້ນປີຕໍ່ປີ ໄດ້ສົ່ງສັນຍາທາງບວກໃນຕໍ່ໜ້າ; ການຄ້າກັບຈີນ, ຂໍ້ລິເລີ່ມໜຶ່ງແລວໜຶ່ງເສັ້ນທາງຂອງຈີນ ໄດ້ວາງແລວທາງສໍາລັບຊຸດຂອງໂຄງການຮ່ວມມື ເປັນຕົ້ນແມ່ນໂຄງການທາງລົດໄຟລາວ-ຈີນ , ເຂື່ອນພະລັງງານໄຟຟ້ານ້□າອູ, ເຂດພັດທະນາໄຊເສດຖາກວມລວມ ແລະ ເຂດເສດຖະກິດພິເສດບໍ່ເຕັນ-ບໍ່ຫານ.

### ການຄ້າດ້ານສິນຄ້າຂອງ ສປປ ລາວ: ເສັ້ນສະແດງການຄ້າ (2012 - 2016)




ແຫລ່ງຂໍ້ມູນ.ຖານຂໍ້ມູນອາຊຽນແຫ່ງລັດ

ເຊັ່ນດຽວກັນກັບການຄ້າ, 2 ອັນດັບການລົງທຶນຕ່າງປະເທດຂອງລາວທີ່ຫລາຍກວ່າໝູ່ ຈີນຈັດຢູ່ໃນອັນດັບທີ 1 ແລະ ໄທ ອັນດັບທີ 2. ການລົງທຶນກັບຈີນ, ການໄຫລເຂົ້າທີ່ເພີ່ມຂື້ນຂອງການລົງທຶນ 45,5 ລ້ານໂດລາໃນປີ 2010 ມາເປັນ 709,9 ລ້ານໂດລາ ໃນປີ 2016; ເຖິງວ່າມີການສະລໍຕົວຂອງການລົງທຶນ, ແຕ່ການລົງທຶນຂອງຈີນ ຍັງກວມເອົາເຖິງ 65%ຂອງການລົງທຶນຕ່າງປະເທດທັງໝົດໃນປີ 2016. ການລົງທຶນກັບໄທ, ການໄຫລເຂົ້າທີ່ເພີ່ມຂື້ນຂອງການລົງທຶນ ຈາກ 90,3 ລ້ານໂດຍລາໃນປີ 2010 ມາເປັນ 157,8 ລ້ານໂດລາສະຫາລັດ ໃນປີ 2016 ກວມເອົາ 14% ຂອງການລົງທຶນຕ່າງປະເທດທັງໝົດໃນປີ 2016.

### ເສັ້ນສະແດງການລົງທຶນຕ່າງປະເທດຂອງລາວ : ຈັດເປັນປະເທດ (2015, 2016)




ແຫລ່ງຂໍ້ມູນ: ຖານຂໍ້ມູນອາຊຽນແຫ່ງລັດ

ນອກຈາກການເຊື່ອມຕໍ່ເສດຖະກິດສອງຝ່າຍ, ສປປ ລາວ ຍັງເຊື່ອມຕໍ່ກັບພາກພື້ນໃນອາຊຽນ ໂດຍສະເພາະກັບການສ້າງປະຊາຄົມເສດຖະກິດອາຊຽນ ໃນປີ 2015. ອາຊຽນ ຈະເຕີບໂຕເປັນອັນດັບທີ 4 ຂອງເສດຖະກິດທີ່ໃຫຍ່ທີ່ສຸດໃນໂລກໃນປີ 2030 ຖືເປັນແຮງດຶງດູດສໍາລັບນັກລົງທຶນເຂົ້າມາໃນບັນດາປະເທດອາຊຽນ. ຄຽງຄູ່ກັບສັນຍາການຄ້າ ແລະ ການລົງທຶນພາຍໃນອາຊຽນ ແລະ ອາຊຽນບວກ, ຜົນກະທົບຂອງລັດສະໝີອາຊຽນ ໄດ້ສ້າງຄວາມເຊື່ອໝັ້ນຕໍ່ກັບຕ່າງປະເທດໃຫ້ປະເທດລາວກາຍເປັນຄູ່ຄ້າ ແລະ ເປັນຈຸດ ໝາຍຂອງການລົງທຶນ. ການເຊື່ອມໂຍງທີ່ວ່ອງໄວພາຍໃນອາຊຽນ ແລະ ອາຊຽນບວກ ເປັນການກະຕຸ້ນໃຫ້ປະເທດລາວຍຸດຕິການໄດ້ຮັບສິດທິພິເສດ ແລະ ແຕກຕ່າງຈາກອາຊຽນ ໂດຍສະເພາະໃນສັນຍາການລົງທຶນຮອບດ້ານອາຊຽນ ຊຶ່ງປະເທດລາວໄດ້ຮັບການຍົກເວັ້ນກົນໄກການຮ້ອງຟ້ອງຂອງນັກລົງທຶນຕໍ່ກັບລັດຖະບານ ໃນຖານະເປັນປະເທດດ້ອຍພັດທະນາ ແລະ ການຮັບສິດທິພິເສດ ແລະ ແຕກຕ່າງ. ປະຈຸບັນ, ເຖິງວ່າລະບົບການລົງທຶນຂອງປະເທດລາວໄດ້ມີຫລາຍອົງກອນເພີ່ມຂື້ນ ແລະ ເຂັ້ມແຂງ, ແຕ່ກໍເຮັດໃຫ້ຄວາມໜ້າເຊື່ອຖືອອກຈາກລະບົບການຮ້ອງຟ້ອງຂອງນັກລົງທຶນຕໍ່ກັບລັດຖະບານຍິ່ງໜ້ອຍລົງ. ນອກນີ້, ນັກລົງທຶນກໍຍິ່ງຮຽກຮ້ອງໃຫ້ມີການປົກປ້ອງການລົງທຶນເຊັ່ນດຽວກັບບັນດາປະເທດສະມາຊິກອາຊຽນອື່ນທີ່ໄດ້ປະຕິບັດ.

### 3) ການປັບປຸງກົດໝາຍສົ່ງເສີມການລົງທຶນ ແລະ ການຟື້ນຄືນກົນໄກກອງປະຊຸມທຸລະກິດລາວ

ສະເພາະຂະແໜງການລົງທຶນ, ລັດຖະບານລາວ ໄດ້ໃຫ້ຄໍາໝັ້ນສັນຍາໃນການເປີດກວ້າງເສດຖະກິດ ແລະ ເປີດຮັບນັກລົງທຶນຕ່າງປະເທດໂດຍການປັບປຸງກົດໝາຍສົ່ງເສີມການລົງທຶນໃນເດືອນເມສາ 2017, ຕໍ່ໄປນີ້ເອີ້ນວ່າ ກົດໝາຍການລົງທຶນສະບັບປັບປຸງ. ກົດໝາຍການລົງທຶນສະບັບປັບປຸງ ໄດ້ຖືກປັບປຸງໃນລັກສະນະແບບລວມໆ ແລະ ການປຶກສາຫາລື ໂດຍການມີສ່ວນຮ່ວມຂອງພາກເອກະຊົນ ແລະ ນັກລົງທຶນຕ່າງປະເທດຜູ້ທີ່ຮັບຮູ້ ແລະ ຍິນດີຕໍ່ກັບຮູບແບບການປັບປຸງນີ້. ການປ່ຽນແປງເຫັນໄດ້ຢ່າງຊັດເຈນຈາກກົດໝາຍສົ່ງເສີມການລົງທຶນປີ 2009 ລວມມີ:

(a) ການສ້າງຄະນະກໍາມະການຊີ້ນໍາ ແລະ ສົ່ງເສີມການລົງທຶນ ໂດຍມີຈຸດປະສົງໃນການໂຈະການອະນຸຍາດການລົງທຶນ ແລະ ການຈັດຕັ້ງປະຕິບັດນະໂຍບາຍ ເພື່ອເລັ່ງຂະບວນການຂອງພາກລັດ. ຄະນະກໍາມະການຊີ້ນໍາ ແລະ ສົ່ງເສີມການລົງທຶນ ເປັນປະທານໂດຍ ທ່ານ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ແລະ ຮອງປະທານ ແມ່ນລັດຖະມົນຕີກະຊວງອຸດສາຫະກໍາ ແລະ ການຄ້າ ແລະ ບັນດາກະຊວງ ເປັນຄະນະ.

(b) ການຍົກເລີກຄວາມຮຽກຮ້ອງຂອງທຶນຈົດທະບຽນ (1 ຕື້ກີບ ຫລື 120,000 ໂດລາສະຫາລັດ) ສໍາລັບທຸລະກິດທົ່ວໄປ ແລະ ການຫລຸດເງື່ອນໄຂຂອງການສໍາປະທານເຂດເສດຖະກິດພິເສດ ຈາກ 99 ປີ ມາເປັນ 50 ປີ ແລະ ສາມາດຕໍ່ອາຍຸໄດ້ ບົນພື້ນຖານການຮັບຮອງຈາກສະພາແຫ່ງຊາດ.

(c) ການປັບປຸງຮູບແບບກົງຈັກ ແລະ ເນື້ອໃນຂອງແຮງຈູງໃຈຄືນໃໝ່ ເພື່ອຮອງຮັບການປັບປ່ຽນ ເປັນຕົ້ນແມ່ນພາກທຸລະກິດ, ເຂດພູມສັນຖານ ແລະ ປະເພດຂອງແຮງຈູງໃຈ (ຕົວຢ່າງ: ອາກອນ ແລະ ພາສີ ແລະ ອື່ນໆ). ນອກນີ້, ລັກສະນະຂອງທຸລະກິດທີ່ຕ້ອງການ (ຕົວຢ່າງ: ນະວັດຕະກໍາ, ເຕັກໂນໂລຍີສູງ, ຄວາມຍືນຍົງ, ທັນສະໄໝ) ແມ່ນສາມາດເຂົ້າກັບຂະ ແໜງສະເພາະ (ຕົວຢ່າງ: ຊັບພະຍາກອນທໍາມະຊາດ ແລະ ພະລັງງານ, ຫັດຖະກໍາ, ການທ່ອງທ່ຽວ, ກະສິກໍາ) ໃນການປັບປ່ຽນຂະແໜງເຫລົ່ານັ້ນ ເປັນໄປໃນແລວທາງສະເພາະ. ອາກອນກໍາໄລ ແລະ ແຮງຈູງໃຈດ້ານພາສີ ກໍໄດ້ຮັບການປັບປຸງໂດຍການສ້າງແຮງຈູງໃຈ ເພື່ອລົງທຶນຄືນໃໝ່.

(d) ການປັບປຸງກົງຈັກຂອງສູນບໍລິການປະຕູດຽວ ໃຫ້ເປັນໜຶ່ງດຽວພາຍໃຕ້ກະຊວງແຜນການ ແລະ ການລົງທຶນໃນຂະນະທີ່ຍັງຮັກສາບາງວຽກງານໃຫ້ແກ່ສູນບໍລິການປະຕູດຽວຂອງແຂວງ ເພື່ອຕອບສະໜອງພື້ນທີ່ຂອງຂົງເຂດພາກພື້ນ.

ສິ່ງທີ່ສອດຄ່ອງກັບການປັບປຸງກົດໝາຍສົ່ງເສີມການລົງທຶນ ແມ່ນການປຶກສາຫາລືລະຫວ່າງລັດຖະບານລາວ ແລະ ພາກເອກະຊົນຜ່ານກອງປະຊຸມທຸລະກິດລາວປະຈໍາປີ. ທະນາຄານໂລກ ແມ່ນອົງກອນທໍາອິດທີ່ເລີ່ມໃນຂະແໜງການລົງທຶນຂອງປະເທດລາວໃນປີ 2005, ປະຈຸບັນ ກອງປະຊຸມທຸລະກິດລາວ ໄດ້ກາຍເປັນເສັ້ນທາງຂອງເວທີໃນການອໍານວຍຄວາມສະດວກ ແລະ ແລກປ່ຽນຂໍ້ມູນ ລະຫວ່າງລັດຖະບານ, ພາກເອກະຊົນພາຍໃນ ແລະ ຕ່າງປະເທດ. ໃນປີຜ່ານມາ, ກອງປະຊຸມທຸລະກິດລາວ ໄດ້ຮັບການຟື້ນຟູໂດຍສັງຄົມທຸລະກິດລາວ ທີ່ເປັນເຈົ້າການຂອງກອງປະຊຸມທຸລະກິດລາວ ນໍາໂດຍສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ.

### 4) ການເຕີມເຕັມເງື່ອນໄຂການຫລຸດພົ້ນອອກຈາກສະຖານະປະເທດດ້ອຍພັດທະນາ

ໃນເດືອນມີນາ 2018, ສປປ ລາວ ໄດ້ເຕີມເຕັມເງື່ອນໄຂການຫລຸດພົ້ນອອກຈາກບັນຊີສະຖານະປະເທດດ້ອຍພັດທະນາຂອງອົງການສະຫະປະຊາຊາດ. ໄດ້ຜ່ານເງື່ອນໄຂຂັ້ນຕໍ່າ 2 ໃນ 3 - ຕົວຊີ້ວັດຍອດແຫ່ງຊາດຕໍ່ຫົວຄົນ (ບັນລຸ), ຕົວຊີ້ວັດຊັບສິນມະນຸດ (ບັນລຸ), ແລະ ຕົວຊີ້ວັດເສດຖະກິດທີ່ບອບບາງ (ຕ້ອງໃຫ້ບັນລຸ) - ແຕ່ຕ້ອງໄດ້ຮັກສາການພັດທະນາ ແລະ ບັນລຸເງື່ອນໄຂເຫລົ່ານີ້ອີກຄັ້ງໃນປີ 2021 ກ່ອນຈະທີ່ຫລຸດພົ້ນອອກຈາກສະຖານະປະເທດດ້ອຍພັດທະນາຢ່າງເປັນທາງການໃນປີ 2024. ມາຮອດຂັ້ນຕອນນີ້, ປະເທດລາວປະຕິບັດຕາມເງື່ອນໄຂຕົວຊີ້ວັດເສດຖະກິດທີ່ບອບບາງ ເປັນທີ່ເພິ່ງພໍໃຈ ແລະ ບັນລຸ 1,7 ຈຸດທີ່ສູງກວ່າມາດຖານຕໍ່າສຸດ 32 ຈຸດ. ຖ້າ ສປປ ລາວ ຍັງຄົງຮັກສາການພັດທະນາໄປຕາມແຜນ ຄາດຄະເນການຫລຸດພົ້ນຈະເປັນໄປໃນທາງບວກ ແລະ ຈະເພີ່ມໃຫ້ປະເທດລາວ ກາຍເປັນທາງເລືອກຂອງການລົງທຶນ.

## ເສັ້ນທາງສູ່ການຫລຸດພົ້ນອອກຈາກປະເທດດ້ອຍພັດທະນາ:
## ຂົງເຂດສຳລັບການປັບປຸງ

ດ້ວຍພື້ນຖານທີ່ມີເຫລົ່ານີ້, ປະເທດລາວ ແມ່ນກຽມພ້ອມທີ່ດີທີ່ຈະແກ້ໄຂບັນຫາເປັນລະບົບ ບໍ່ດັ່ງນັ້ນ ມັນຈະສົ່ງຜົນກະທົບໃນການຫລຸດອອກຈາກທ່າແຮງເສດຖະກິດທີ່ສົມບູນ. ໃນໄລຍະອັນຮີບດ່ວນນີ້, ຄວາມຕັ້ງໃຈໃນການປັບປຸງຈັດອັນດັບຄວາມງ່າຍຂອງການດຳເນີນທຸລະກິດຂອງທະນາຄານໂລກ ຕ້ອງຖືກຈັດຕັ້ງປະຕິບັດ, ສ້າງຄວາມເຂັ້ມແຂງທີ່ສອດຄ່ອງກັບນະໂຍບາຍ ແລະ ການທວນຄືນຄຳຄິດເຫັນລະຫວ່າງລັດຖະບານ ແລະ ພາກເອກະຊົນ. ການປັບປຸງເຫລົ່ານີ້ ຈະຖືກສະໜັບສະໜູນໂດຍການສ້າງກົດໝາຍສົ່ງເສີມການລົງທຶນສະບັບປັບປຸງໃຫ້ດີຂຶ້ນ. ໃນໄລຍະຍາວ, ປະເທດລາວ ຍັງຕ້ອງໄດ້ປັບປຸງການປະສົມປະສານ ລະຫວ່າງການຄ້າ ແລະ ການລົງທຶນ ເພື່ອຮັບປະກັນເສດຖະກິດມີຄວາມເຂັ້ມແຂງ ແລະ ຍືດຢຸ່ນ ແລະ ລົງທຶນໃສ່ການສ້າງບຸກຄະລາກອນ ເພື່ອຮັບປະກັນວ່າວິຊາການທີ່ຊີ້ນຳນະໂຍບາຍທີ່ກ່ຽວຂ້ອງໃຫ້ໄດ້ມາດຕະຖານສູງສຸດ.

ຂ້າງລຸ່ມນີ້ ແມ່ນພາບລວມຂອງຂໍ້ສະເໜີ ເພື່ອບັນລຸເປົ້າໝາຍເຫລົ່ານີ້ ດັ່ງທີ່ໄດ້ລະບຸໃນລາຍລະອຽດໃນພາກທີ່ໄດ້ຮັບຜົນສຳເລັດ. ຕາຕະລາງຂໍ້ສະເໜີໄດ້ເພີ່ມເຂົ້າໃນເອກະສານຄັດຕິດ 1 ແລະ 2.

<u>ການສັງລວມຂໍ້ສະເໜີ</u>




### A) ປັບປຸງຄວາມງ່າຍຂອງການດຳເນີນທຸລະກິດ ຂັບເຄື່ອນໂດຍຫ້ອງການສູນບໍລິການປະຕູດຽວ ແລະ ສົ່ງເສີມຍີ່ຫໍ້ການລົງທຶນ ລາວ

ຕາມພາລະບົດບາດຂອງຕົວຊີ້ວັດທີ່ວ່ອງໄວ ແລະ ບໍ່ຊັດເຈນຂອງການດຶງດູດການລົງທຶນຂອງປະເທດ, ດັດສະນີຂອງຄວາມງ່າຍຂອງການດຳເນີນທຸລະກິດ ຈະໄດ້ຮັບຄວາມສົນໃຈໂດຍທັນທີ. ໃນປີ 2018, ປະເທດລາວ ໄດ້ຖືກຈັດຢູ່ໃນອັນດັບທີ 141 ຂອງຈຳນວນ 190 ປະເທດ, ໄດ້ສ້າງຜົນເສຍຫາຍອັນໃຫຍ່ຫລວງໃນການດຶງດູດການລົງທຶນ ໂດຍສະເພາະເມື່ອປຽບທຽບເກນມາດຖານກັບປະເທດພື້ອນບ້ານ:




ແຫລ່ງຂໍ້ມູນ: ບົດລາຍງານການດຳເນີນທຸລະກິດຂອງທະນາຄານໂລກ (2018)

ການປັບປຸງຄວາມງ່າຍໃນການດຳເນີນທຸລະກິດ ຮຽກຮ້ອງໃຫ້ມີຊັບພະຍາກອນທີ່ກວ້າງຂວາງ ແລະ ການປ່ຽນແປງທີ່ສັບຊ້ອນ, ແຕ່ໃນໄລຍະນີ້ໆນີ້, ຂະແໜງການໃດທີ່ຈະໄດ້ຮັບຜົນໄວ ກໍອາດເປັນເປົ້າໝາຍທີ່ຈະເລີ່ມຈັດຕັ້ງປະຕິບັດກ່ອນ. ສິ່ງເຫລົ່ານີ້ ຮຽກຮ້ອງໃຫ້ມີການປ່ຽນແປງດ້ານການບໍລິຫານເລັກໜ້ອຍ ແຕ່ຍັງສາມາດຂັບເຄື່ອນໃຫ້ປະເທດລາວກ້າວຂຶ້ນອີກຂັ້ນໃນຫລາຍຕົວຊີ້ວັດຄວາມງ່າຍໃນການດຳເນີນທຸລະກິດ:

| ຕົວຊີ້ວັດຄວາມງ່າຍໃນການດຳເນີນທຸລະກິດ | ເປັນຫຍັງປະເທດລາວຈຶ່ງເຮັດຍັງບໍ່ທັນໄດ້ດີ | ບາດກ້າວທີ່ຈະເຮັດໂດຍທັນທີ |
|---|---|---|
| ການເລີ່ມຕົ້ນທຸລະກິດ | ຂັ້ນຕອນມີຄວາມສັບສົນ ແລະ ຂາດຄວາມຊັດເຈນໃນດ້ານນະໂຍບາຍທີ່ນຳໃຊ້ກັບນັກລົງທຶນທີ່ມີທ່າແຮງ | ຫລຸດຕົວເລກ ແລະ ການດຳເນີນແຕ່ລະຂັ້ນຕອນ |
| ການຊຳລະອາກອນ | ການຂະຫຍາຍຕົວເປັນຈຳນວນຫລາຍຂອງທຸລະກິດທີ່ບໍ່ໄດ້ຈົດທະບຽນຖືກຕ້ອງຕາມກົດໝາຍ ຄຽງຄູ່ກັບ | ຮັກສາການລວມສູນການບັນທຶກຂໍ້ມູນທຸລະກິດ ແລະ ອາກອນ |

| | | |
|---|---|---|
| | ການເກັບກຳຄວາມແຕກຕ່າງ ແລະ ສ້າງມາດຖານ ທີ່ບໍ່ສະໝ່ຳສະເໝີໃຫ້ແກ່ທຸລະກິດຕ່າງປະເທດ | ຮັບຮອງລະບົບການເກັບ ເອກະສານ ແລະ ການຈ່າຍແບບ ອີເລັກໂທລນິກ |
| ການຄ້າຂ້າມ ຊາຍແດນ | ການປະຕິບັດຕາມຂໍ້ກຳນົດ ແລະ ຂັ້ນຕອນຂອງ ເອກະສານ ເຮັດໃຫ້ເພີ່ມເວລາ ແລະ ຕົ້ນທຶນໃຫ້ກັບ ທຸລະກິດຕ່າງປະເທດ | ຄວາມງ່າຍດາຍຂອງຂໍ້ກຳນົດ ແລະ ຂັ້ນຕອນຂອງເອກະສານ |

ອີງຕາມຄວາມເປັນຈິງຂອງສາມຕົວຊີ້ວັດເຫລົ່ານີ້, ສິ່ງສຳຄັນໃນການຈັດຕັ້ງປະຕິບັດບັນດາຂັ້ນຕອນດັ່ງກ່າວ ແມ່ນຜ່ານການຟື້ນຟູຫ້ອງການບໍລິການປະຕູດຽວທີ່ໄດ້ສ້າງຕັ້ງຂຶ້ນໃນຂອບເຂດທົ່ວປະເທດລາວ.

### ການປັບປຸງຫ້ອງການບໍລິການປະຕູດຽວ: ການອະນຸມັດ, ການບໍລິການຈັດສົ່ງ ແລະ ດູແລຫລັງການບໍລິການ




ຂໍ້ຍົກເວັ້ນຂອງຫ້ອງການບໍລິການປະຕູດຽວຂອງອົງກອນເຂດເສດຖະກິດພິເສດ ແມ່ນຫ້ອງການບໍລິການປະຕູດຽວຂອງພາກສ່ວນອື່ນໃນປະເທດລາວ ເຮັດໜ້າທີ່ເປັນຂັ້ນຕອນ ແລະ ຂະບວນການຂອງຂໍ້ມູນ ລະຫວ່າງນັກລົງທຶນ ແລະ ບັນດາກະຊວງ ແທນທີ່ຈະເປັນຫ້ອງການບໍລິການປະຕູດຽວ ໃນການແກ້ໄຂຂໍ້ສົງໃສ ແລະ ການອະນຸມັດຄຳຮ້ອງຂໍ. ນອກຈາກເປັນອົງກອນທີ່ເປັນສູນກາງສະໜອງຂໍ້ມູນຂ່າວສານ ຫລື ການອະນຸມັດ, ການກຳນົດໄລຍະເວລາພາຍໃນອົງກອນ ກາຍເປັນການແກ່ເວລາ ແລະ ເກີນກຳນົດທີ່ໄດ້ກຳນົດໄວ້ໃນກົດໝາຍ; ການກໍໃຫ້ເກີດມີບັນຫາແມ່ນຍ້ອນການຕີຄວາມໝາຍທີ່ແຕກຕ່າງກັນຂອງກົດໝາຍ ແລະ ລະບຽບການ ລະຫວ່າງກະຊວງ ແລະ ພາຍໃນກະຊວງດ້ວຍກັນ.

ຕົວຢ່າງຄືການທີ່ສາມາດນຳສິ່ງຈູງໃຈໃນການລົງທຶນ ໂດຍສະເພາະແມ່ນກົດໝາຍສົ່ງເສີມການລົງທຶນສະບັບປັບປຸງທີ່ສະເໜີແຮງຈູງໃຈຕໍ່ກັບທຸລະກິດ ບົນພື້ນຖານລະດັບການພັດທະນາຂອງຂົງເຂດ, ກິດຈະກຳຂອງວິສາຫະກິດ ແລະ ຮູບແບບອື່ນໆ. ຕົວຢ່າງ, ພາຍໃຕ້ກົດໝາຍສົ່ງເສີມການລົງທຶນສະບັບປັບປຸງ, ທຸລະກິດທີ່ເປັນມິດຕໍ່ກັບສິ່ງແວດລ້ອມ

ແລະ ຍືນຍົງ, ວັດທະນະທຳ ແລະ ອຸດສາຫະກຳພັດທະນາການທ່ອງທ່ຽວທາງປະຫວັດສາດ ແມ່ນຢູ່ໃນເງື່ອນໄຂຂອງການໃຫ້ສິ່ງຈູງໃຈ. ເຖິງຢ່າງໃດກໍຕາມ, ການຈັດປະເພດທຸລະກິດດັ່ງກ່າວ ເປັນເລື່ອງອັດຕະວິໄສ ເນື່ອງຈາກຂາດນິຍາມທີ່ຊັດເຈນຂອງຂໍ້ກຳນົດ ແລະ ລະບົບ ໃນການກຳນົດວ່າ ທຸລະກິດໄດ້ປະຕິບັດຕາມການສະເໜີ ເພື່ອພິຈາລະນາວ່າ ທຸລະກິດເປັນມິດກັບສິ່ງແວດລ້ອມ ແລະ ຍືນຍົງ ແລະ ທີ່ຈິງແລ້ວ ແມ່ນສິ່ງເສີມໃນຂະແໜງການທ່ອງທ່ຽວແບບທຳມະຊາດ, ວັດທະນະທຳ ແລະ ປະຫວັດສາດ. ໃນຂະນະທີ່ແຮງຈູງໃຈມີເປົ້າໝາຍທີ່ຈະຕອບແທນການລົງທຶນແບບຍືນຍົງ, ການຄຸມເຄືອຂອງບົດບັນຍັດທີ່ສົ່ງຜົນກະທົບຕໍ່ຄວາມຊັດເຈນຂອງນະໂຍບາຍຕໍ່ກັບນັກລົງທຶນ. ຜົນທີ່ໄດ້ຮັບ ແມ່ນທຸລະກິດບໍ່ໝັ້ນໃຈວ່າພວກເຂົາມີເງື່ອນໄຂທີ່ຈະໄດ້ຮັບແຮງຈູງໃຈບໍ ແລະ ນັກລົງທຶນຕ້ອງໄດ້ຈັດປະຊຸມປຶກສາຫາລືແບບໜ້າຕໍ່ໜ້າກັບຜູ້ຕາງໜ້າຂອງພາກລັດຜູ້ທີ່ຕ້ອງໄດ້ປຶກສາຫາລືພາຍໃນເຊັ່ນກັນ ກ່ອນທີ່ຈະມີຄຳຕອບ.

ຫ້ອງການບໍລິການປະຕູດຽວຂອງເຂດເສດຖະກິດພິເສດທີ່ຕັ້ງຢູ່ນເຂດເສດຖະກິດພິເສດສະຫວັນ-ເຊໂນ ໄດ້ຕັ້ງກຳແພງສຳລັບຫ້ອງການບໍລິການປະຕູດຽວຂອງເຂດອື່ນ. ເຂດດັ່ງກ່າວ ໄດ້ຮັບການມອບສິດຈາກດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 177/ນຍ ທີ່ບໍ່ໄດ້ໃຫ້ພຽງແຕ່ສິດໃນການດຳເນີນກິດຈະການ ແຕ່ຍັງໃຫ້ສິ່ງຈູງໃຈນັບຕັ້ງແຕ່ມື້ທີ່ໄດ້ອອກດຳລັດສະບັບນີ້ໃນປີ 2003. ຜົນທີ່ໄດ້ຮັບ ແມ່ນຫ້ອງການບໍລິການປະຕູດຽວນີ້ ສາມາດສະໜອງການອະນຸມັດກັບທີ່ ສຳລັບໃບອະນຸຍາດ ແລະ ໃບດຳເນີນທຸລະກິດ ແລະ ການອຳນວຍຄວາມສະດວກຂັ້ນຕອນການລົງທຶນອື່ນໆ. ໃນຈຳນວນ 11 ເຂດເສດຖະກິດພິເສດອື່ນໆໃນຂອບເຂດທົ່ວປະເທດ ບໍ່ໄດ້ຮັບການໃຫ້ບູລິມະສິດແບບດຽວກັນ ແລະ ຜົນທີ່ໄດ້ຮັບກໍຄື ທ່າແຮງຂອງເຂດດັ່ງກ່າວບໍ່ໄດ້ຖືກນຳໃຊ້ຢ່າງເຕັມສ່ວນ ແລະ ການດຶງດູດນັກລົງທຶນ ກໍປະສົບຜົນສຳເລັດໜ້ອຍລົງ.

ກໍລະນີສຶກສາ: ຫ້ອງການບໍລິການປະຕູດຽວຂອງເຂດເສດຖະກິດພິເສດສະຫວັນເຊໂນ

<u>ໄລຍະເວລາຂອງການອອກໃບອະນຸຍາດ</u>

| | ຫ້ອງການບໍລິການປະຕູດຽວສະຫວັນເຊໂນ | ຫ້ອງການບໍລິການປະຕູດຽວອື່ນໆ |
|---|---|---|
| ໃບອະນຸຍາດທູລະກິດຫລັກ | ພາຍໃນ 5 ວັນລັດຖະການ | 1 ຫາ 2 ອາທິດ |
| ໃບອະນຸຍາດເຮັດວຽກ | ພາຍໃນ 1 ວັນລັດຖະການ | 8 ວັນລັດຖະການ |
| ໃບອະນຸຍາດນຳເຂົ້າ-ສົ່ງອອກ | ພາຍໃນ 2 ຊົ່ວໂມງ | ຢ່າງໜ້ອຍ 5 ວັນລັດຖະການ |

| | |
|---|---|
| ຫ້ອງການບໍລິການປະຕູດຽວ | ແມ່ນຫ້ອງການດຽວເທົ່ານັ້ນທີ່ໄດ້ຮັບການມອບສິດຜ່ານດຳລັດສະບັບເລກທີ 177/ນຍ. |

ນອກຈາກການອະນຸມັດ, ການໃຫ້ບໍລິການ ແມ່ນປັດໃຈສຳຄັນທີ່ຮັບປະກັນວ່າ ການດຳເນີນງານຂອງຫ້ອງການບໍລິການປະຕູດຽວ ແມ່ນມີປະສິດທິຜົນ ແລະ ປະສົບຜົນສຳເລັດໃນການດຶງດູດນັກລົງທຶນຕ່າງປະເທດ. ວິທີການສະເພາະໃນການປັບປຸງການໃຫ້ບໍລິການ ລວມມີ: ການມອບວຽກທີ່ຖືກຕ້ອງກັບບຸກຄົນຂອງຫ້ອງການບໍລິການປະຕູດຽວ, ການພັດທະນາຂີດຄວາມສາມາດ ແລະ ການສ້າງລະບົບທີ່ມີຢູ່ໃນປະຈຸບັນ:

| ການມອບວຽກທີ່ຖືກຕ້ອງ | ການພັດທະນາຄວາມສາມາດ | ສ້າງໃນລະບົບ |
|---|---|---|
| • ແຫລ່ງບຸກຄະລາກອນທີ່ຖືກຕ້ອງ ຄວນເລີ່ມຈາກຂັ້ນຕອນການຈັດຈ້າງ.<br>• ນອກຈາກຄຸນວຸດທິ (ຕົວຢ່າງ: ໃບປະກາດ, ປະສົບການ), ບຸກຄະລິກກະພາບ ແລະ ລັກສະນະສະເພາະ ແມ່ນປັດໃຈສຳຄັນໃນການສ້າງຄວາມໝັ້ນໃຈຕໍ່ນັກລົງທຶນ ແລະ ເປັນພາບລັກຂອງປະເທດລາວໃນການເປັນປາຍທາງຂອງການລົງທຶນ.<br>• ການປະສານງານ ແມ່ນປັດໃຈສຳຄັນໃນບົດບາດທີ່ນັກລົງທຶນພົບພໍ້. | • ການຝຶກອົບຮົມຈະຊ່ວຍສະໜັບສະໜູນໃນໜ້າວຽກ ແລະ ເພີ່ມຄວາມຊຳນານໃນວຽກງານ.<br>• ຕົວຊີ້ວັດປະສິດທິພາບຂອງວຽກງານ ຈະຊ່ວຍລະບຸຄວາມເໝາະສົມພາຍຫລັງສິ້ນສຸດໜ້າວຽກ ແລະ ຊ່ວຍລະບຸຈຸດແຂງ ແລະ ຈຸດອ່ອນ.<br>• ຊັບພະຍາກອນ ເຊັ່ນ ຄູ່ມື, ຫລັກປະກັນ ແລະ ຂໍ້ມູນການລົງທຶນອື່ນໆຂອງຫ້ອງການບໍລິການປະຕູດຽວ ຕ້ອງປັບປຸງ. | • ແບບສອບຖາມສາມາດດຳເນີນການໂດຍຜ່ານການຖາມຄຳຖາມເປັນເຈ້ຍ ຫລື ເກັບກຳຄຳຕອບ.<br>• ລະບົບ (ເຊັ່ນ: ລະບົບຕິດຕາມຂໍ້ມູນ) ສາມາດຂະຫຍາຍໄປຍັງບັນດາກະຊວງໄດ້ຢ່າງມີປະສິດທິພາບ.<br>• ໃຊ້ປະໂຫຍດເວທີໃນປະຈຸບັນເພື່ອຕັດເວລາທຸລະກຳດີຈໍຕໍທີ່ສະດວກສະບາຍ.<br>• ແຫລ່ງຂໍ້ມູນທົ່ວໄປ ແລະ ຂໍ້ມູນຈາກບັນດາກະຊວງ ຈະຫລຸດຂອດການປະສານງານ ແລະ ໄລຍະເວລາລໍຄຳຕອບຂອງຂໍ້ສົງໃສ. |

ອັນທີໜຶ່ງ, ໃນລະດັບບຸກຄົນ ບຸກຄົນທີ່ເໝາະສົມສາມາດເຮັດໄດ້ໂດຍການຈັດວາງຕຳແໜ່ງບຸກຄົນທີ່ມີການອະທິບາຍພາລະບົດບາດ ແລະ ໜ້າວຽກທີ່ຊັດເຈນ. ສິ່ງນີ້ສາມາດສົ່ງເສີມເພີ່ມເຕີມໂດຍຜ່ານການຝຶກອົບຮົມໃນທັກສະສະເພາະດ້ານ ໄດ້ແກ່ ການບໍລິການລູກຄ້າ, ການສື່ສານ ແລະ ການບໍລິຫານບັນຊີ.

ອັນທີສອງ, ໃນການຈັດການປະສິດທິພາບວຽກງານຂອງຫ້ອງການບໍລິການປະຕູດຽວດ້ານບຸກຄະລາກອນ, ແຕ່ງຕັ້ງຜູ້ບໍລິຫານບັນຊີພິເສດ, ສ້າງການຕັ້ງເປົ້າໝາຍເກັບລາຍຮັບທີ່ຊັດເຈນໃນລະດັບບຸກຄົນ ແລະ ຫ້ອງການ, ແລະ ສ້າງຕັ້ງຕົວຊີ້ວັດປະສິດທິພາບຂອງວຽກງານ ຈະປູກຈິດສຳນຶກໃຫ້ບຸກຄົນຮັບຜິດຊອບແນະນຳນັກລົງທຶນຢ່າງໃກ້ສິດ

ຜ່ານຂັ້ນຕອນການລົງທຶນ ແລະ ໃນທີ່ສຸດ ກໍສາມາດຮັກສາຄວາມປອດໄພຂອງການລົງທຶນຫລາຍຂື້ນ.

ອັນທີສາມ, ໃນລະດັບອົງການ, ການປັບປຸງກົງຈັກການຈັດຕັ້ງ ສາມາດນຳໄປສູ່ຜົນໄດ້ຮັບຫລາຍຂື້ນໂດຍການປັບປຸງການເຜີຍແຜ່ຂໍ້ມູນຂ່າວສານ ແລະ ການບໍລິການນັກລົງທຶນ. ການພິຈາລະນາລະບົບແມັດທຣິກ (matrix system) ທີ່ຈັດແບ່ງເປັນອັນສະເພາະໂດຍປະເທດ ຫລື ຂົງເຂດ ເຊັ່ນດຽວກັບອຸດສາຫະກຳ ສາມາດຊ່ວຍໃນການອອກແບບຄວາມຮັບຜິດຊອບສຳລັບບຸກຄົນທີ່ຄວນຈະຮູ້ ແລະ ຢາກໄດ້ຄຳຕອບຫຍັງ ແລະ ຍັງຊ່ວຍໃນການສ້າງຊ່ອງຊານພາຍໃນປະເທດ.

ອັນສຸດທ້າຍ, ການນຳສະເໜີຫລັງການບໍລິການ ຈະຮັບປະກັນໄດ້ວ່າຫ້ອງການບໍລິການປະຕູດຽວເຮັດບົດບາດທຸກຂົງເຂດນອກ ເໜືອຈາກການໃຫ້ບໍລິການ. ເນື່ອງຈາກນັກລົງທຶນມີການນຳສະເໜີທຸລະກິດໃໝ່ ແລະ ຂະຫຍາຍທຸລະກິດທີ່ມີຢູ່, ການສະໜອງຫລັງການບໍລິການໃຫ້ນັກລົງທຶນ ຈະຮັບປະກັນຄວາມຕໍ່ເນື່ອງໃນການສົ່ງເສີມການລົງທຶນ ແລະ ການອຳນວຍຄວາມສະດວກ ເຊັ່ນ: ກໍລະນີຂອງປະເທດຟີລິບປິນ:

**ກໍລະນີສຶກສາ: ຫລັງການບໍລິການນັກລົງທຶນຂອງປະເທດຟີລິບປິນ**

**ສະພາການລົງທຶນຂອງປະເທດຟີລິບປິນ ໄດ້ກໍ່ຕັ້ງສູນການຊ່ວຍເຫລືອດ້ານການລົງທຶນສະເພາະດ້ວຍການໃຫ້ບໍລິການຫລັງການລົງທຶນ. ການໃຫ້ບໍລິການຫລັງການລົງທຶນ ສະໜອງການຊ່ວຍເຫລືອຫລັງການລົງທຶນ ເພື່ອແກ້ໄຂອຸປະສັກທີ່ຕິດພັນກັບການດຳເນີນທຸລະກິດແບບວ່ອງໄວ. ສິ່ງເຫລົ່ານີ້ ລວມເອົາທັງໃບອະນຸຍາດສະເໜີດຳເນີນທຸລະກິດທີ່ຍັງຄົງຄ້າງ, ໃບອະນຸມັດ, ໃບດຳເນີນທຸລະກິດ, ຂໍ້ສົງໃສທີ່ບໍ່ມີຄຳຕອບ ຫລື ຂໍ້ສະເໜີ ແລະ ການຊີ້ແຈງດ້ານນະໂຍບາຍ ແລະ ຂັ້ນຕອນຂອງການດຳເນີນທຸລະກິດໃນປະເທດໃນປະຈຸບັນ ໂດຍສະເພາະອົງການພາກລັດ (ລວມທັງພາກລັດຂັ້ນທ້ອງຖິ່ນ). ການໃຫ້ບໍລິການຫລັງການລົງທຶນ ຍັງໃຫ້ບໍລິການການແນະນຳເປັນປະຈຳ ແລະ ປັບປຸງຂໍ້ມູນດ້ານນະໂຍບາຍການລົງທຶນ ແລະ ລະບຽບການ.**

ໃນມໍ່ໆນີ້, ຂໍ້ສອບຖາມຈາກສາກົນ ໄດ້ຮຽກຮ້ອງໃຫ້ມີການຕັດສິນໃຈວ່າຈະລົງທຶນ, ຈະຊີ້ນຳຂັ້ນຕອນການຮັບຮອງ ແລະ ການອະນຸມັດ ຈົນກ້າວໄປເຖິງຫລັງການລົງທຶນວ່າ ການປົກປ້ອງໃບອະນຸຍາດດຳເນີນທຸລະກິດ ແລະ ການສົ່ງເສີມການລົງທຶນ ແມ່ນໄດ້ມີການດຳເນີນການແລ້ວ. ດ້ວຍການຊຸກຍູ້ຫ້ອງການບໍລິການປະຕູດຽວຂອງເຂດເສດຖະກິດພິເສດທີ່ມີຢູ່ ແລະ ການຈຳລອງຜົນສຳເລັດຂອງຫ້ອງການດັ່ງກ່າວ ໃນອີກ 11 ເຂດທົ່ວປະເທດລາວ, ຫ້ອງການບໍລິການປະຕູດຽວເຫລົ່ານີ້ ສາມາດເປັນແຮງອັນນຶ່ງຂັບເຄື່ອນໃນການປັບປຸງບາງເປົ້າໝາຍທີ່ສາມາດບັນລຸໄດ້ໄວພາຍໃຕ້ຂອບຂອງຄວາມງ່າຍດາຍໃນການດຳເນີນທຸລະກິດ. ໃນໄລຍະກາງ ແລະ ຍາວ, ການປັບປຸງເຫລົ່ານີ້ສາມາດຂັບເຄື່ອນຕໍ່ໄປຜ່ານຂະບວນການດ້ານດີຈີຕໍທີ່ສາມາດແບ່ງປັນຂໍ້ມູນຂ້າມກະຊວງ, ສາມາດເຂົ້າເຖິງຂໍ້ມູນໄດ້ງ່າຍສຳລັບນັກລົງທຶນ ແລະ ສາມາດຕິດຕາມຂະບວນການໂອນຂໍ້ມູນໄດ້ທຸກເວລາ.

## ສົ່ງເສີມ ຍີ່ຫໍ້ການລົງທຶນລາວ: ເລີ່ມຈາກນ້ອຍຂຶ້ນໄປ

ການແນະນຳປະເທດລາວໃຫ້ກັບນັກລົງທຶນທີ່ມີທ່າແຮງ ແມ່ນຂັ້ນຕອນທຳອິດໃນການສົ່ງເສີມເປັນປະເທດແຫ່ງປາຍທາງຂອງການລົງທຶນ. ການສ້າງຍີ່ຫໍ້ຂອງປະເທດທີ່ເຂັ້ມແຂງ ສາມາດຊຸກຍູ້ການແຂ່ງຂັນໃນລະດັບໂລກ ແລະ ສ້າງໃຫ້ປະເທດຢູ່ເໜືອປະເທດອື່ນໃນສາຍຕາຂອງນັກລົງທຶນ. ສ້າງຄວາມເຂັ້ມແຂງ ຍີ່ຫໍ້ ການລົງທຶນລາວ ຮຽກຮ້ອງໃຫ້ມີຄວາມສອດຄ່ອງກັບເອກະລັກທີ່ສຳຄັນຂອງຊາດ ເພື່ອສ້າງເອກະລັກ ແລະ ພາບລັກຕໍ່ສາກົນ. ພາບລັກນີ້ ຕ້ອງໄດ້ຮັບການສື່ສານຢ່າງມີປະສິດທິພາບ ຈຶ່ງຈະສາມາດຕີຄວາມ ໝາຍຕາມທີ່ຄາດໄວ້ ແລະ ຢູ່ໃນເປົ້າສາຍຕາຂອງນັກລົງທຶນ.

ໃນການຂະຫຍາຍຍີ່ຫໍ້ ການລົງທຶນລາວ, ລັດຖະບານລາວ ສາມາດເລີ່ມຈາກນ້ອຍຂຶ້ນໄປໂດຍການປັບປຸງແວັບໄຊການລົງທຶນລາວ. ໂດຍພື້ນຖານແລ້ວ, ພາບລັກຂອງປະເທດລາວທີ່ເປັນປາຍທາງຂອງການລົງທຶນ ຄວນປະກົດຢູ່ໃນແວັບໄຊ.

ເພື່ອການຊົມໃຊ້ເວທີນີ້ໃຫ້ເຕັມສ່ວນ, (1) ຈຸດປະສົງຂອງແວັບໄຊ ຕ້ອງຊັດເຈນ, ເປັນຕົ້ນແມ່ນພາລະບົດບາດດ້ານການຕະຫລາດ, ການເຜີຍແຜ່ຂໍ້ມູນ, ຊ່ອງສະແດງໃຫ້ເຫັນຫ້ອງການບໍລິການປະຕູດຽວ ຫລື ການຕິດຕໍ່ຫາແວັບໄຊອື່ນ; (2) ເນື້ອໃນຕ້ອງຈັດວາງໃຫ້ເໝາະສົມທີ່ສອດຄ່ອງກັບເປົ້າໝາຍ, ການລົງສີສັນ, ການນຳໃຊ້ຮູບພາບ, ຈຸດສຸມ, ການຈັດວາງຄວາມສະດວກຂອງເອກະສານ ແລະ ຂໍ້ມູນຂ່າວສານ; (3) ຄວນໄດ້ຮັບການອອກແບບຮ່ວມກັບແວັບໄຊອື່ນ ແລະ ສາມາດເຊື່ອມຕໍ່ກັບແວັບໄຊຂອງລັດຖະບານທີ່ມີຢູ່ ຫລື ແວັບໄຊທີ່ສຳຄັນສຳລັບນັກລົງທຶນ; ແລະ (4) ຄວນນຳການເຂົ້າຊົມແວັບໄຊຜ່ານສື່ສັງຄົມອອນລາຍ, ການເພີ່ມປະສິດທິພາບຂອງການຊອກຫາ ແລະ ຄຳສັບຫລັກ.

ຄຸນສົມບັດທີ່ສຳຄັນຂອງແວັບໄຊລົງທຶນລາວ ຄວນລວມມີ: (1) ຄຳຖາມທີ່ຖືກຖາມເປັນປະຈຳ ເພື່ອຫລຸດຜ່ອນເວລາທີ່ຕ້ອງຕອບຕາມແບບສອບຖາມອອນລາຍ; (2) ແນະນຳແຫລ່ງຂໍ້ມູນ ກ່ຽວກັບເປັນຫຍັງນັກລົງທຶນ ຄວນຈະເລືອກປະເທດລາວ ແລະ ປະເທດລາວມີຂໍ້ສະເໜີຫຍັງແດ່; (3) ການເຂົ້າເຖິງນະໂຍບາຍ ແລະ ລະບຽບການ ສະບັບແປເປັນອັງກິດ ເພື່ອຊ່ວຍໃນການປະສານງານ ແລະ ຫລຸດຜ່ອນຄວາມສັບສົນ; ແລະ (4) ລະບົບອອນລາຍທີ່ໜ້າເຊື່ອຖື ແລະ ສະດວກສະບາຍ ສຳລັບການລົງທະບຽນວິສາຫະກິດ ເພື່ອຫລຸດຜ່ອນພາລາດ້ານບຸກຄະລາກອນ.

<u>ຂໍ້ສະເໜີຄຸນສົມບັດທີ່ສຳຄັນສຳລັບແວັບໄຊການລົງທຶນລາວ</u>




ໂດຍລວມແລ້ວ, ບົດຮຽນຂອງປະເທດອິນໂດເນເຊຍ ໃນການຮັບຮອງເອົາວິທີການຈັດຕັ້ງປະຕິບັດທີ່ຄ້າຍຄືກັນ, ການກຳນົດເປົ້າ ໝາຍການປະຕິບັດທີ່ງ່າຍດາຍ ເພື່ອບັນລຸການປັບປຸງທີ່ໄວຂຶ້ນໃນການຈັດອັນດັບຄວາມງ່າຍດາຍການດຳເນີນທຸລະກິດໃນຊ່ວງເວລາອັນສັ້ນ ຊຶ່ງເປັນແບບຢ່າງທີ່ດີສຳລັບປະເທດລາວ.

**ກໍລະນີສຶກສາ: ອິນໂດເນເຊຍ ແລະ ການຈັດອັນດັບຄວາມງ່າຍດາຍໃນການດຳເນີນທຸລະກິດ**

ໃນຊ່ວງໄລຍະຕົ້ນຂອງການເປັນປະທານາທິບໍດີປະເທດອິນໂດເນເຊຍ, ທ່ານ ໂຈໂຄ ວີໂດໂດ ປະທານາທິບໍດີ ໄດ້ຕັ້ງເປົ້າ ໝາຍທີ່ທະເຍີທະຍານໃນການຂັບເຄື່ອນປະເທດຈາກອັນດັບທີ 106 ມາຢູ່ພາຍໃນອັນດັບທີ 40 ຕົ້ນໆຂອງການຈັດອັນດັບຄວາມງ່າຍດາຍໃນການດຳເນີນທຸລະກິດຂອງທະນາຄານໂລກ. ໃນການສົ່ງເສີມ ວິຊາການຂອງອິນໂດເນເຊຍ, ລາວ ໄດ້ເນັ້ນເຖິງຄວາມຈຳເປັນສຳລັບ “ການປະຕິຮູບທາງຈິດ” ໃນກຸ່ມ ລັດຖະກອນ ເພື່ອສ້າງລະບົບລັດຖະກອນທີ່ມີຄວາມຮັບຜິດຊອບ ແລະ ໂປ່ງໃສ ທີ່ສາມາດໃຫ້ບໍລິການ ປະຊາຊົນ ແລະ ທຸລະກິດ. ລາວ ໄດ້ປັບປຸງກົງຈັກການບໍລິຫານ 3 ຄັ້ງ ໃນ 3 ປີ, ຊຶ່ງສະແດງໃຫ້ເຫັນເຖິງ ຄວາມບໍ່ລັງເລໃນການຍົກຍ້າຍສິ່ງທີ່ບໍ່ສາມາດປະຕິບັດໄດ້ໃນການປັບປຸງແວດລ້ອມການລົງທຶນຂອງອິນໂດເນ ເຊຍ. ນອກນີ້, ລາວ ຍັງໄດ້ປັບປຸງໃບອະນຸຍາດ ແລະ ໄດ້ອອກມາດຕະການຜ່ອນລົງທີ່ຄົບຊຸດດ້ານ ເສດຖະກິດ ເພື່ອປັບປຸງແວດລ້ອມການລົງທຶນ ທີ່ສະແດງໃຫ້ເຫັນເຖິງຄວາມຕ້ອງການທີ່ຈະຫລີກລ່ຽງຄວາມ ຊໍ້າຊ້ອນດ້ານລະບຽບການທີ່ໄປກົດໜ່ວງການດຳເນີນທຸລະກິດ. ຜົນໄດ້ຮັບໃນປີ 2017 ເຮັດໃຫ້ອິນໂດເນເຊຍ

## B) ສົ່ງເສີມການປະສານງານດ້ານນະໂຍບາຍ

ການປັບປຸງການຈັດອັນດັບຄວາມງ່າຍດາຍໃນການດຳເນີນທຸລະກິດຂອງປະເທດລາວ ຕ້ອງໄດ້ຮັບການສະໜັບສະໜູນໂດຍທັນທີ ເພື່ອແກ້ໄຂບັນຫາທີ່ໄດ້ລະບຸໃນກົດໝາຍສົ່ງເສີມການລົງທຶນສະບັບປັບປຸງ ແລະ ເສີມສ້າງການປະສານງານດ້ານນະໂຍບາຍໃນທຸກກະຊວງ ແລະ ລະດັບຜູ້ບໍລິຫານ.

### ການປັບປຸງກົດໝາຍສົ່ງເສີມການລົງທຶນສະບັບປັບປຸງ ເພື່ອສົ່ງເສີມການປະສານງານດ້ານນະໂຍບາຍ

ນັບຕັ້ງແຕ່ການປັບປຸງກົດໝາຍສົ່ງເສີມການລົງທຶນໃນເດືອນເມສາ ປີ 2017, ຖືວ່າໄດ້ມີເວລາພຽງພໍສໍາລັບການແກ້ໄຂບັນຫາທີ່ຈະເກີດຂຶ້ນ ແລະ ຄວາມເປັນໄປໄດ້ທີ່ຈະປັບປຸງໄດ້ຮັບການລະບຸແລ້ວ. ໂດຍພື້ນຖານແລ້ວ, ຍັງມີບາງປະເດັນທີ່ບໍ່ແນ່ນອນ ລະຫວ່າງ ນັກລົງທຶນວ່າ ກົດໝາຍສົ່ງເສີມການລົງທຶນສະບັບປັບປຸງ ແລະ ກົດໝາຍ ແລະ ລະບຽບການທີ່ໄດ້ຮັບຜົນກະທົບຈາກການປັບປຸງກົດໝາຍນັ້ນ ຈະຖືກນໍາໃຊ້ຍ້ອນຫລັງ ແລະ ຄວາມຂັດແຍ່ງທີ່ມີຢູ່ລະຫວ່າງກົດໝາຍທີ່ມີໃນປະຈຸບັນ ແລະ ກົດໝາຍສົ່ງເສີມການລົງທຶນສະບັບປັບປຸງ. ບັນຫາໃນທາງຈັດຕັ້ງປະຕິບັດ ເຊັ່ນ ບັນຊີຄອບຄຸມຂອງກົດໝາຍສົ່ງເສີມການລົງທຶນປີ 2009 ຈະຖືກລວມຕົວເຂົ້າກັບບັນຊີທີ່ຕ້ອງຂໍອະນຸຍາດ; ຂໍ້ຮຽກຮ້ອງຕໍ່າສຸດດ້ານທຶນຮອນໃນການຄືນໃບອະນຸຍາດ ແລະ ການຍົກເລີກດໍາເນີນທຸລະກິດ ຂອງບໍລິສັດ; ອໍານາດການປົກຄອງຂັ້ນທ້ອງຖິ່ນ ແລະ ຂັ້ນເມືອງ ດໍາເນີນຂັ້ນຕອນຕາມກົດໝາຍສົ່ງເສີມການລົງທຶນປີ 2009 ແຕ່ບໍ່ແມ່ນກົດໝາຍສົ່ງເສີມການລົງທຶນສະບັບປັບປຸງ ເນື່ອງຈາກມີບາງເງື່ອນໄຂທີ່ຫລຸດຜ່ອນ ແລະ ສ້າງຄວາມສົນໃຈຕໍ່ນັກລົງທຶນ ເມື່ອທຽບໃສ່ກົດໝາຍສົ່ງເສີມການລົງທຶນສະບັບປັບປຸງ.

### ສົ່ງເສີມການຈັດຕັ້ງປະຕິບັດນະໂຍບາຍ

ໃນການສະເໜີທີ່ບໍ່ແມ່ນສະເພາະແຕ່ກົດໝາຍສົ່ງເສີມການລົງທຶນສະບັບປັບປຸງ ແຕ່ແມ່ນກົດໝາຍ ແລະ ລະບຽບການໂດຍລວມ ການຈັດຕັ້ງປະຕິບັດນະໂຍບາຍທີ່ເຂັ້ມແຂງ ຖືເປັນປັດໃຈສໍາຄັນທີ່ຈະເຮັດໃຫ້ທຸລະກິດມີຄວາມເຊື່ອໝັ້ນຕໍ່ກັບແວດລ້ອມການລົງທຶນຂອງປະເທດລາວ. ໃນປະຈຸບັນ, ມີຈຸດອຸດຕັນທີ່ເກີດຂື້ນກັບກະຊວງທີ່ກ່ຽວຂ້ອງ ທີ່ຕິດພັນກັບ (1) ຮຽກຮ້ອງໃຫ້ມີຂໍ້ມູນທີ່ຕິດພັນກັບການລົງທຶນ; (2) ຄວາມສອດຄ່ອງໃນການຈັດຕັ້ງປະຕິບັດກົດໝາຍສົ່ງເສີມການລົງທຶນສະບັບປັບປຸງ ກ່ຽວກັບການຈົດທະບຽນທຸລະກິດ, ການຈັດປະເພດ ແລະ ແຮງຈູງໃຈ; ແລະ (3) ໄລຍະເວລາ ແລະ ຂັ້ນຕອນໃນການອອກໃບອະນຸຍາດ. ນອກນີ້, ຄວາມເຂົ້າໃຈບໍ່ຕົງກັນລະຫວ່າງລະດັບການນໍາ ແລະ ພະນັກງານວິຊາການ ໂດຍສະເພາະຂັ້ນວິຊາການ ຍັງບໍ່ສາມາດທີ່ຈະຈັດຕັ້ງນະໂຍບາຍການລົງທຶນໄດ້ຢ່າງພຽງພໍ. ແມ່ນແຕ່ພາຍໃນກົມດຽວກັນ ໃນອົງກອນ ແລະ ກະຊວງດຽວກັນ, ຂໍ້ມູນຂ່າວສານ ແລະ ຕໍາ ແໜ່ງງານ ລະຫວ່າງວິຊາການ ກັບ ວິຊາການ ກໍຍັງມີຄວາມແຕກຕ່າງກັນ ກໍ່ໃຫ້ເກີດຄວາມສັບສົນໃນການຕັດສິນບັນຫາໃນເວລາຖືກສະເໜີ.

**ກໍລະນີສຶກສາ: ການສົ່ງເສີມການຈັດຕັ້ງປະຕິບັດຜ່ານຄວາມຮັບຜິດຊອບໃນປະເທດຟີລິບປິນ**

**ຟີລິບປິນ ໄດ້ລົງນາມໃນກົດໝາຍຄວາມງ່າຍໃນການດຳເນີນທຸລະກິດສະບັບໃໝ່ ໃນວັນທີ 28 ພຶດສະພາ 2018. ການບັງຄັບໃຊ້ສອດຄ່ອງກັບຂັ້ນຕອນການດ□າເນີນທຸລະກິດ ແລະ ປະສິດທິຜົນຂອງໄລຍະເວລາ ໃນການຂໍໃບຢັ້ງຢືນ ແລະ ໃບອະນຸຍາດດຳເນີນທຸລະກິດ ທີ່ອອກໃຫ້ໂດຍອົງການທີ່ຫລຸດຜ່ອນຂອດເອກະສານພາຍໃຕ້ສຳນັກງານປະທານາທິບໍດີ ເພື່ອຊີ້ນຳການຈັດຕັ້ງປະຕິບັດ. ຍິ່ງໄປກວ່ານັ້ນ, ການຈັດຕັ້ງປະຕິບັດຍັງລວມເອົາມາດຕະການລົງໂທດ ເພື່ອຮັບປະກັນພະນັກງານວິຊາການມີພັນທະທີ່ຈະປະຕິບັດຕາມບົດບັນຍັດກ່ຽວກັບໄລຍະເວລາທີ່ກວ້າງອອກໄປຂອງການດຳເນີນທຸລະກຳ ແລະ ການອອກໃບອະນຸຍາດ. ກໍລະນີຄັ້ງທຳອິດຂອງການລະເມີດ ກໍໃຫ້ເກີດຄວາມຮັບຜິດຊອບດ້ານການບໍລິຫານ ແລະ ການໂຈະໃນໄລຍະເວລາ 6 ເດືອນ ໃນຂະນະທີ່ຄວາມຜິດຄັ້ງທີສອງຈະສົ່ງຜົນໃຫ້ມີຄວາມຮັບຜິດຊອບທາງດ້ານບໍລິຫານ**

ເພື່ອຄວາມໝັ້ນໃຈ, ການນຳປະເທດລາວໄດ້ພະຍາຍາມເອົາຊະນະຊ່ອງວ່າງດ້ານນະໂຍບາຍ ດ້ວຍການອອກຄຳສັ່ງຂອງນາຍົກລັດຖະມົນຕີ ກ່ຽວກັບການປັບປຸງບັນດາລະບຽບການ ແລະ ກົນໄກປະສານງານ ໃນການດຳເນີນທຸລະກິດຢູ່ ສປປ ລາວ, ເລກທີ 02/ນຍ, ລົງວັນທີ 1 ກຸມພາ 2018. ຈຸດປະສົງຂອງຄຳສັ່ງດັ່ງກ່າວ ແມ່ນເພື່ອປັບປຸງຄວາມງ່າຍໃນການດຳເນີນທຸລະກິດ ຜ່ານການຫລຸດຂອດຂັ້ນ ແລະ ເວລາ. ຄຳສັ່ງດັ່ງກ່າວ ໄດ້ແນະນຳເປັນອັນສະເພາະໃຫ້ແຕ່ລະກະຊວງ ແລະ ອົງການ ດຳເນີນການປັບປຸງຕົວຊີ້ວັດຂອງຄວາມງ່າຍໃນການດຳເນີນທຸລະກິດ ໂດຍການຕັ້ງເປົ້າໝາຍໃນປີ 2018 ແລະ 2019. ນອກນີ້, ກົດໝາຍສົ່ງເສີມການລົງທຶນສະບັບປັບປຸງປີ 2017 ໄດ້ສະໜອງຄວາມເຂັ້ມແຂງດ້ານນິຕິກຳແຫ່ງຊາດ, ບົດບັນຍັດ ແລະ ການມອບໝາຍຄວາມຮັບຜິດຊອບ. ເພື່ອຈັດຕັ້ງປະຕິບັດມາດຕະການເຫລົ່ານີ້ຂຶ້ນໄປອີກລະດັບໜຶ່ງ, ການຈັດຕັ້ງປະຕິບັດ ອາດພິຈາລະນາດັ່ງຕໍ່ໄປນີ້:

| | |
|---|---|
| **ຮັບຂໍ້ມູນພື້ນຖານທີ່ຖືກຕ້ອງ** | •ຮັບປະກັນພະນັກງານວິຊາການ ມີຄວາມເຂົ້າໃຈຕໍ່ກັບຈຸດປະສົງ ແລະ ແນວທາງຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ 8 |
| **ກຳນົດແນວທາງສຳລັບການຈັດຕັ້ງປະຕິບັດ** | •ສິ່ງເຫລົ່ານີ້ ຄວນລະບຸຂະແໜງການ, ສິ່ງຈູງໃຈ, ເງື່ອນໄຂ ແລະ ໄລຍະເວລາທີ່ຊັດເຈນ |
| **ອອກແຜນຈັດຕັ້ງປະຕິບັດຄວບຄູ່ກັນ** | •ສິ່ງເຫລົ່ານີ້ ຄວນແນະນຳໃຫ້ບັນດາກະຊວງກຳນົດຂັ້ນຕອນທີ່ເປັນຮູບປະທຳ ໂດຍການຕັ້ງຄ່າ ແລະ ເຫດການທີ່ສຳຄັນໃນຊ່ວງໄລຍະເວລາດຳເນີນງານ |
| **ສົ່ງເສີມລັດແຫ່ງກົດໝາຍ** | •ນີ້ແມ່ນພາລະກິດໄລຍະຍາວທີ່ກຳລັງດຳເນີນການຢູ່ ຊຶ່ງຈະເສີມສ້າງຄວາມສອດຄ່ອງກັບນິຕິກຳ ແລະ ລະບຽບການ |

ໃນຂັ້ນແຂວງ, ການຈັດຕັ້ງປະຕິບັດນະໂຍບາຍແຫ່ງຊາດ ຄວນຖືກບັງຄັບໃຊ້ຜ່ານມາດຕະການທີ່ເປັນໄປໄດ້ ລວມທັງຂໍ້ຮຽກຮ້ອງທີ່ເປັນແຮງຈູງໃຈ, ສົ່ງເສີມການລົງທຶນ ແລະ ການພັດທະນາເຂດຫ່າງໄກ ເພື່ອຄວາມດຸ່ນດ່ຽງຂອງການຂະຫຍາຍຕົວເສດຖະກິດ, ສ້າງ ແລະ ສົ່ງເສີມເຂດເສດຖະກິດພິເສດ ເພື່ອດຶງດູດການລົງທຶນ, ຕິດຕາມຄວາມງ່າຍໃນການດໍາເນີນທຸລະກິດ ແລະ ຮັບຟັງຂໍ້ສະ ເໜີຂອງນັກລົງທຶນ ລວມເຖິງການນໍາສະເໜີອົງປະກອບຂອງການແຂ່ງຂັນ ລະຫວ່າງ ແຂວງດ້ວຍກັນ ຜ່ານຕົວຊີ້ວັດການແຂ່ງຂັນຂັ້ນແຂວງ ຄືກັບກໍລະນີສຶກສາຂອງຕົວຊີ້ວັດການແຂ່ງຂັນຂັ້ນແຂວງຂອງຫວຽດນາມ:

**ກໍລະນີສຶກສາ: ຕົວຊີ້ວັດການແຂ່ງຂັນຂອງຂັ້ນແຂວງ ຫວຽດນາມ**

ຕົວຊີ້ວັດການແຂ່ງຂັນຂັ້ນແຂວງຂອງຫວຽດນາມ ໄດ້ມີການຈັດພິມປະຈໍາປີ ນັບຕັ້ງແຕ່ປີ 2005 ເພື່ອປະເມີນຄວາມງ່າຍໃນການດໍາເນີນທຸລະກິດ, ການປົກຄອງດ້ານເສດຖະກິດ ແລະ ການປະຕິຮູບດ້ານການບໍລິຫານເພື່ອສົ່ງເສີມການພັດທະນາພາກເອກະຊົນ. ການຈັດອັນດັບຕົວຊີ້ວັດການແຂ່ງຂັນຂັ້ນແຂວງ ແມ່ນອີງໃສ່ຄວາມສາມາດດ້ານການແຂ່ງຂັນ ບົນພື້ນຖານການເຂົ້າເຖິງຕົ້ນທຶນ, ການເຂົ້າເຖິງທີ່ດິນ, ຄວາມໂປ່ງໃສ, ຕົ້ນທຶນໄລຍະເວລາ, ຄ່າໃຊ້ຈ່າຍທີ່ບໍ່ເປັນທາງການ, ຄວາລໍາອຽງດ້ານນະໂຍບາຍ, ຄວາມຫ້າວຫັນຂອງການນໍາ, ການໃຫ້ບໍລິການສະໜັບສະໜູນທຸລະກິດ, ການຝຶກອົບຮົມດ້ານແຮງງານ ລວມທັງກົດໝາຍ ແລະ ຄໍາສັ່ງ. ນັກລົງທຶນຕ່າງປະເທດສາມາດອີງໃສ່ຕົວຊີ້ວັດໃນການຕັດສິນໃຈລົງທຶນໃນແຂວງໃດ ຫລື ການຍ້າຍທີ່ຕັ້ງ ແລະ ການຂະຫຍາຍສະຖານທີ່ລົງທຶນ. ຕົວຊີ້ວັດດັ່ງກ່າວ ແມ່ນມີຄວາມໂປ່ງໃສ ແລະ ມີການແຂ່ງຂັນລະຫວ່າງແຂວງດ້ວຍກັນ ເພື່ອປັບປຸງການດໍາເນີນທຸລະກິດ. ນອກນີ້, ຍັງໃຫ້ຂໍ້ມູນໃນລວງເລິກຕື່ມວ່າ ການລົງທຶນຂອງພາກເອກະຊົນຄວນຈະລົງທຶນໃນທ້ອງຖິ່ນໃດ ຈຶ່ງຈະເໝາະສົມ.

ໂດຍລວມແລ້ວ, ວິທີການ ແລະ ຮູບແບບທີ່ແຕກຕ່າງກັນໃນການເຕີມຊ່ອງວ່າງຂອງກົນໄກການປະສານງານພາກລັດ ສາມາດເຫັນໄດ້ໃນປະເທດອື່ນໆ ເຊັ່ນ ສິງກະໂປ ແລະ ຫວຽດນາມ. ລັດຖະບານລາວ ສາມາດພິຈາລະນາມາດຕະການທີ່ດຶງດູດ ແລະ ມີປະສິດທິຜົນ ໃນບັນດາຕົວຢ່າງດັ່ງກ່າວ ເພື່ອຂ້າມຜ່ານຄວາມບໍ່ສະເໝີພາບທີ່ມີຢູ່.

**ກໍລະນີສຶກສາ: ກົນໄກປະສານງານຢູ່ ສິງກະໂປ ແລະ ຫວຽດນາມ**

ຢູ່ ສິງກະໂປ, ມີ 3 ລັດຖະມົນຕີ, ຄວາມໝັ້ນຄົງແຫ່ງຊາດ, ນະໂຍບາຍເສດຖະກິດ ແລະ ສັງຄົມ, ແລະ ໂຄງລ່າງພື້ນຖານ ທີ່ເຮັດໜ້າທີ່ປະສານງານໃນທົ່ວກົນໄກຂອງລັດຖະບານ. ການຮ່ວມມືລະຫວ່າງກະຊວງດ້ວຍກັນ ແລະ ການປະສານງານໃນທົ່ວລະບົບຂອງລັດຖະບານ ແມ່ນນໍາໃຊ້ເພື່ອການແບ່ງປັນດ້ານຂໍ້ມູນ ແລະ ນະໂຍບາຍທີ່ຕົງກັນ.

ຢູ່ ຫວຽດນາມ, ຫລາຍແຂວງ ໄດ້ມີຂໍ້ລິເລີ່ມໃນການສ້າງນິຕິກໍາພາຍໃນແຂວງ ເພື່ອປັບປຸງກົນໄກປະສານງານລະຫວ່າງຂະແໜງການຂອງແຂວງດ້ວຍກັນ. ນິຕິກໍາພາຍໃນ ປະກອບດ້ວຍລະບຽບການທີ່ລະບຸແຈ້ງຄວາມຮັບຜິດຊອບຂອງອົງການ, ກົມ ຫລື ຫ້ອງການ ແລະ ພະນັກງານວິຊາການ; ໃຊ້ວິທີການ ເຊັ່ນ ການປຶກສາຫາລື, ການສໍາຫລວດ, ກອງປະຊຸມ ແລະ ການສ້າງຕັ້ງກົກໄກປະສານງານລະຫວ່າງບັນດາອົງກອນດ້ວຍກັນ (ເຊັ່ນ ຄະນະກ□າມະການ ຫລື ໜ່ວຍງານສະເພາະກິດ).

ການພິຈາລະນາສິ່ງທ້າທາຍໃນການຈັດຕັ້ງປະຕິບັດໃນກໍລະນີຂອງ ສປປ ລາວ ແມ່ນບົດບາດຂອງບັນຫາ ທັງໃນຂະບວນການ ແລະ ການໃຫ້ແຮງຈູງໃຈ. ໃນເບື້ອງຂະບວນການ, ຍັງຂາດກົນໄກສະຖາບັນທີ່ປັບປຸງນະໂຍບາຍສັງຄົມ ແລະ ສ້າງໂອກາດໃນການຈັດວາງແນວທາງຮ່ວມທັງພາຍໃນ ແລະ ພາຍນອກກະຊວງ ແລະ ຂັ້ນສູນກາງ ແລະ ທ້ອງຖິ່ນ. ສະນັ້ນ, ການເຂົ້າມາມີບົດບາດຕ້ອງເຮັດໃນ 2 ດ້ານນີ້. ອາດພິຈາລະນາ ເວທີປຶກສາຫາລື ແລະ ການປະສານງານແບບປົກະຕິ ທີ່ໄດ້ຮັບແຮງບັນດາໃຈຈາກ ສິງກະໂປ ແລະ ຫວຽດນາມ. ໃນມູມມອງຂອງແຮງຈູງໃຈ ການເສີມກໍາລັງທັງດ້ານບວກ ແລະ ດ້ານລົບ ກໍອາດມີປະໂຫຍດ.

### C) ການສົ່ງເສີມການເຊື່ອມໂຍງລະຫວ່າງການວາງແຜນ ແລະ ການສົ່ງເສີມ

ສະຫລຸບແລ້ວ, ນະໂຍບາຍການລົງທຶນ ແລະ ການຊີ້ນໍາ ຄວນເຊື່ອມກັບການບັນລຸເປົ້າໝາຍເສດຖະກິດ-ສັງຄົມແຫ່ງຊາດ. ອັນນີ້, ໄດ້ຮຽກຮ້ອງໃຫ້ທັງຝ່າຍວາງແຜນ ແລະ ຝ່າຍສົ່ງເສີມ ຈັບມືກັນກ້າວໄປໃນແລວດຽວກັນ ຈຶ່ງຈະສາມາດນໍາໃຊ້ຊັບພະຍາກອນໄດ້ຢ່າງເຕັມສ່ວນ ແລະ ສຸມໃສ່ການມີສ່ວນຮ່ວມໃນການສ້າງແຮງບັນດານໃຈໃນການສ້າງສາປະເທດຊາດ.




ຜູ້ວາງແຜນນະໂຍບາຍ ຕ້ອງມີມູນມອງພູມີທັດເສດຖະກິດໃນທົ່ວປະເທດ ແລະ ມີຈຸດສຸມໃນການພັດທະນາ. ດ້ວຍເຫດນັ້ນ, ພວກເຂົາຈຶ່ງກຳນົດທິດທາງນະໂຍບາຍຝັງໃນການລົງທຶນໃນຍຸດທະສາດການເຕີບໂຕໂດຍລວມຂອງປະເທດຊາດ. ພວກເຂົາອອກແບບການລົງທຶນ ເພື່ອຄວາມຮັບຜິດຊອບ ແລະ ຍືນຍົງໃນໄລຍະຍາວ. ເພື່ອບັນລຸເປົ້າໝາຍນີ້, ການວາງແຜນສາມາດລະບຸພື້ນທີ່ເປັນອັນສະເພາະໄດ້ (ເຊັ່ນ ຂະແໜງການ, ອຸດສາຫະກຳ ແລະ ແຂວງ) ເປັນຈຸດສຸມການລົງທຶນ. ຂໍ້ຄວນພິຈາລະນາໃນການເຮັດແບບນີ້ ແມ່ນ (1) ຄວາມໄດ້ປຽບປຽບທຽບໃນລະດັບໂລກຂອງ ສປປ ລາວ, (2) ທ່າແຮງທີ່ຈະຮື່ອໄຫລເຂົ້າສູ່ເສດຖະກິດທ້ອງຖິ່ນ ແລະ (3) ຜົນປະໂຫຍດສູ່ສັງຄົມ. ແຮງຈູງໃຈແບບຄົບຊຸດ ແມ່ນການລວມຕົວ ເພື່ອອຳນວຍຄວາມສະດວກໃນການໄຫລເຂົ້າພື້ນທີ່ຍຸດທະສາດເຫລົ່ານີ້. ເພື່ອໃຫ້ເປັນໄປຕາມຍຸດທະສາດນີ້ ການກຳນົດເປົ້າໝາຍການລົງທຶນ ສາມາດສະໜອງໃຫ້ອົງການສົ່ງເສີມການລົງທຶນ ດ້ວຍທິດທາງ ແລະ ຈຸດປະສົງທີ່ຊັດເຈນ. ໃນລັກສະນະດຽວກັນ ກໍຄວນກຳນົດຄວາມຮັບຜິດຊອບເພື່ອບັນລຸເປົ້າໝາຍເຫລົ່ານີ້.

ໃນຂະນະດຽວກັນ, ດ້ານການສົ່ງເສີມຈະຕ້ອງສະທ້ອນໃຫ້ເຫັນເຖິງຄວາມຕັ້ງໃຈຂອງການວາງແຜນທີ່ຈະສວຍໃຊ້ໂອກາດການລົງທຶນ ເພື່ອການພັດທະນາເສດຖະກິດ-ສັງຄົມ. ດັ່ງນັ້ນ, ການຕັ້ງເປົ້າໝາຍນັກລົງທຶນ, ສົ່ງເສີມກິດຈະກຳ ແລະ ຄ້ຳປະກັນການຕະຫລາດ ແລະ ການສື່ສານ ຈະຕ້ອງຕິດຕາມ ແລະ ອອກແບບໄປຕາມເປົ້າໝາຍທີ່ຈະບັນລຸ. ການຈັດສັນຊັບພະຍາກອນ ເພື່ອການສົ່ງເສີມ ແລະ ການພັດທະນາຂີດຄວາມສາມາດພາຍໃນ ແລະ ຄວາມສາມາດເຫລົ່ານີ້ ຕ້ອງເປັນຂະແໜງເຫລົ່ານີ້ ຫລື ຕະຫລາດສະເພາະ ແລະ ຄວນຈະຕົງກັບບູລິມະສິດເຊັ່ນກັນ. ນອກຈາກນີ້, ຜ່ານເວທີປຶກສາຫາລືລະຫວ່າງແຜນການ ແລະ ການສົ່ງເສີມ, ການຕິດຕາມ ແລະ ປະເມີນຜົນຂອງຍຸດທະສາດທຽບກັບຜົນໄດ້ຮັບ ແມ່ນມີຄວາມເປັນໄປໄດ້. ສິ່ງນີ້ ແມ່ນເຮັດໄດ້ໂດຍການເຊື່ອມກັນລະຫວ່າງດ້ານອອກແບບນະໂຍບາຍ ກັບ ການບໍລິການຈັດສົ່ງ ແລະ ຄຳຄິດເຫັນຂອງລູກຄ້າ ເພື່ອຄວາມເຂົ້າໃຈຫລາຍຂຶ້ນຂອງຜົນສຳເລັດ ແລະ ຊ່ອງວ່າງຂອງບັນຊີ.

ການເຊື່ອມໂຍງທີ່ໜາແໜ້ນ ລະຫວ່າງການວາງແຜນ ແລະ ການສົ່ງເສີມນຳໃຊ້ຊັບພະຍາກອນຢ່າງມີປະສິດທິພາບ ແລະ ປະສິດທິຜົນ, ສົ່ງເສີມການບັນລຸເປົ້າໝາຍໄວຂຶ້ນ, ແລະ ຫລຸດຜ່ອນກໍລະນີທີ່ການລົງທຶນປະກອບສ່ວນຕິດຕາມທີ່ໜ້ອຍລົງ ຫລື ແມ່ນແຕ່ໃຊ້ຕົວນັບ ເພື່ອເປົ້າໝາຍການພັດທະນາ.

ເພື່ອຮັດແໜ້ນສາຍພົວພັນລະຫວ່າງການວາງແຜນ ແລະ ການສົ່ງເສີມ, ຂັ້ນຕອນດຳເນີນງານ ແລະ ກົນໄກປະສານງານ ແມ່ນສາມາດເສີມສ້າງໃຫ້ເຂັ້ມແຂງໄດ້. ອັນທີໜຶ່ງ, ອາດລວມເຖິງການສົ່ງເສີມຄວາມເຂົ້າໃຈພາຍໃນ ແລະ ຄວາມຮັບຮູ້ຂອງກິດຈະການສົ່ງເສີມການລົງທຶນໃນຂັ້ນຮາກຖານ ຄວນຈະຮັດຄືນຕໍ່ກັບການພັດທະນາເສດຖະກິດຂອງ ສປປ ລາວ ແລະ ແຫ່ງຊາດເວົ້າລວມ.ອັນທີສອງ, ແຜນພັດທະນາຂະແໜງສັງຄົມສາດ ແລະ ເປົ້າໝາຍການລົງທຶນ ຕ້ອງຮັບປະກັນວ່າພະນັກງານວາງແຜນ ແລະ ສົ່ງເສີມ ແມ່ນເຮັດວຽກເພື່ອຈຸດປະສົງຮ່ວມກັນ ແລະ ສາມາດເພີ່ມທ່າບຸກ ເພື່ອປະສານສົມທົບ. ອັນທີສາມ, ໃນຂັ້ນວິຊາການອາວຸໂສ ການປຶກສາຫາລືຮ່ວມກັນໃນວຽກງານບູລິມະສິດການລົງທຶນ, ຂໍ້ລິເລີ່ມດ້ານນະໂຍບາຍ ແລະ ການຕັ້ງເປົ້າໝາຍ ຈະຊ່ວຍເສີມສ້າງ ແລະ ເປັນໄປຕາມທັງການສ້າງນະໂຍບາຍ ແລະ ການບໍລິຫານ.

**ກໍລະນີສຶກສາ: ການວາງແຜນ ແລະ ການສົ່ງເສີມການລົງທຶນຢູ່ ສິງກະໂປ**

**ເພື່ອອຳນວຍຄວາມສະດວກໃນການວາງແຜນ ແລະ ການບໍລິຫານ, ສິງກະໂປ ນຳໃຊ້ສະພາກົດໝາຍ ເພື່ອຈັດຕັ້ງປະຕິບັດຄວາມຫລາກຫລາຍຂອງນະໂຍບາຍທີ່ກະຊວງເຈົ້າພາບສ້າງຂຶ້ນ. ສະພາການພັດທະນາເສດຖະກິດສິງກະໂປ ແມ່ນນຶ່ງໃນບັນດາສະພາກົດໝາຍທີ່ຢູ່ພາຍໃຕ້ກະຊວງການຄ້າ ແລະ ອຸດສາຫະກຳ ແລະ ເຮັດໜ້າທີ່ສຳລັບການບໍລິຫານນະໂຍບາຍການລົງທຶນຕ່າງປະເທດຂອງກະຊວງ ໂດຍການສົ່ງເສີມໃຫ້ສິງກະໂປເປັນປະເທດທີ່ມີຄວາມໜ້າເຊື່ອຖືຂອງປາຍທາງການລົງທຶນ. ອີງຕາມແຜນການພັດທະນາຂະແໜງການ ແລະ ເສດຖະກິດໂດຍລວມຂອງກະຊວງການຄ້າ ແລະ ອຸດສາຫະກຳ, ການອອກແບບຍຸດທະສາດຄວາມສະດວກງ່າຍໃນການດຳເນີນທຸລະກິດ ແລະ ການບໍລິຫານເປົ້າໝາຍການລົງທຶນຜ່ານຫ້ອງການອອກສູ່ພາຍນອກ. ໃນມູມມອງຂອງຄວາມໜ້າເຊື່ອຖື, ຫົວໜ້າຫ້ອງການຂອງຄວາມສະດວຍງ່າຍໃນການດຳເນີນທຸລະກິດ ບໍ່ພຽງແຕ່ຈະລາຍງານຫາລັດຖະມົນຕີກະຊວງການຄ້າ ແລະ ອຸດສາຫະກຳໂດຍກົງ ແຕ່ຍັງລາຍງານດ້ານງົບປະມານຂອງສະພາກົດໝາຍທີ່ຖືກຈັດສັນຈາກກະຊວງເຈົ້າພາບ.**

## D) ຊຸກຍູ້ການທວນຄືນຂໍ້ສະເໜີຂອງພາກເອກະຊົນ

ການໄດ້ຮັບດ້ານນະໂຍບາຍ, ກົດໝາຍ ແລະ ລະບຽບການ ເປັນແຫລ່ງຂອງການລົງທຶນ, ພາກເອກະຊົນ ແມ່ນເຄິ່ງນຶ່ງຂອງຈຳນວນທີ່ຈະຕ້ອງບັນລຸ. ນອກຈາກຂອບຂອງກອງປະຊຸມທຸລະກິດລາວ, ຂໍ້ສະເໜີໂດຍກົງຈາກພາກເອກະຊົນ ຕ້ອງໄດ້ຮັບການພິຈາລະນາ ແລະ ເອົາເຂົ້າໃນກົນໄກການສ້າງນະໂຍບາຍທີ່ເຫັນວ່າເໝາະສົມ. ຂໍ້ສະເໜີນີ້ຄວນຖືເປັນຕົວແທນຂອງຂະ ແໜງການ. ຕົວຢ່າງ: ນະໂຍບາຍທີ່ກ່ຽວຂ້ອງກັບກະສິກຳ, ບໍລິສັດກະສິກຳ

ຂະໜາດໃຫຍ່, ຜູ້ຄ້າຂາຍລາຍຍ່ອຍ, ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ, ຜູ້ປຸງແຕ່ງ, ຊາວຄ້າຂາຍ, ຜູ້ສະໜອງ ແລະ ຜູ້ຮັບຊື້ຕ່າງປະເທດ ຄວນມີສ່ວນຮ່ວມໃນການປຶກສາຫາລືເທົ່າທີ່ເປັນໄປໄດ້ ເພື່ອໃຫ້ການປ້ອນຂໍ້ມູນໄດ້ຮັບຢ່າງເຕັມສ່ວນ ລວມທັງການພິຈາລະນາມູມມອງຈາກທົ່ວທັງຕ່ອງໂສ້ມູນຄ່າ ແລະ ຮັບພິຈາລະນາຂໍ້ສະເໜີທັງດ້ານຄວາມຕ້ອງການ ແລະ ການສະໜອງ.

ໃນປີ 2016, ຂໍ້ສະເໜີຈຳນວນ 395 ຂໍ້ ແລະ 22 ຂໍ້ຈາກນັກທຸລະກິດຢູໂຣບ ຊີ້ໃຫ້ເຫັນວ່າ ພວກເຂົາມີຄວາມຄາດຫວັງກ່ຽວກັບການພັດທະນາທຸລະກິດໃນທາງບວກ ແລະ ມອງໂລກໃນແງ່ດີ ໃນຊ່ອງວ່າງລະຫວ່າງການພັດທະນາຕົວຈິງ ແລະ ຄວາມຄາດຫວັງແຄບລົງ. ສິ່ງນີ້ ໝາຍເຖິງການໄຫລເຂົ້າທີ່ເພີ່ມຂຶ້ນຂອງການລົງທຶນທັງທຸລະກິດພາຍໃນ ແລະ ຕ່າງປະເທດ ໃນປີ 2016 ໃນຄວາມຄາດຫວັງທີ່ເປັນໄປໄດ້ຂອງກົດໝາຍສົ່ງເສີມການລົງທຶນສະບັບປັບປຸງ. ຄວາມບໍ່ແນ່ນອນຫລັກທີ່ໄດ້ມາຈາກຂໍ້ສະເໜີທີ່ຕິດພັນກັບຜົນກະທົບທີ່ອາດຈະເກີດຂຶ້ນຂອງການສ້າງຕັ້ງປະຊາຄົມເສດຖະກິດອາຊຽນໃນປີ 2015 ຊຶ່ງຫລີກລ່ຽງທຸລະກິດຈາກການເລັ່ງການລົງທຶນທີ່ຖືກຕ້ອງ.

ໃນມໍ່ໆນີ້, ບົດສຶກສາພາກສະໜາມ ໄດ້ດຳເນີນໃນຕົ້ນປີ 2018 ຮ່ວມກັບສະພາການຄ້າພາຍໃນ ແລະ ຕ່າງປະເທດໃນປະເທດລາວ ໄດ້ໃຫ້ຂໍ້ສະເໜີທີ່ເປັນຮູບປະທຳຈາກການແຈ້ງໃນການສັງເກດການຂອງພວກເຂົາວ່າ ການປ່ຽນແປງບັນຍາກາດການລົງທຶນຕາມດ້ວຍການສະຫລຸບກົດໝາຍສົ່ງເສີມການລົງທຶນສະບັບປັບປຸງເດືອນເມສາ ປີ 2017. ຂໍ້ສະເໜີໂດຍລວມຂອງພວກເຂົາໄດ້ຫລຸບດັ່ງລຸ່ມນີ້:

ບັນຊີຄວາມຕ້ອງການຂອງພາກເອກະຊົນ 1: ບັນຍາກາດການລົງທຶນໂດຍລວມ




ນອກນີ້, ຂໍ້ສະເໜີທີ່ເປັນຮູບປະທຳດ້ານນະໂຍບາຍ ປະກອບມີ:

ບັນຊີຄວາມຕ້ອງການພາກເອກະຊົນ 2: ຂໍ້ສະເໜີດ້ານນະໂຍບາຍ




ໃນຂະນະທີ່ມີຄວາມລະອຽດຮອບດ້ານ ແຕ່ກໍຮັບຮູ້ວ່າ ເສດຖະກິດປະເທດລາວ ອາດຈະຍັງບໍ່ທັນພ້ອມທີ່ຈະຮັບຮອງເອົາທຸກຂໍ້ສະເໜີເຫລົ່ານັ້ນໄດ້ເທື່ອ. ຕົວຢ່າງ ຂໍ້ສະເໜີເຫລົ່ານີ້ ສ້າງບັນຊີປະເພດຄວາມຕ້ອງການທີ່ຈະແນະນຳໃຫ້ລັດຖະບານລາວເດີນໜ້າໃນການປັບປຸງແວດລ້ອມການລົງທຶນ.

### E) ການປັບປຸງການປະສົມປະສານການຄ້າ ແລະ ການລົງທຶນ

ໃນສະພາບທີ່ປະເທດລາວຮັບຮອງເອົາວິທີການທາງຍຸດທະສາດໂດຍການຈັດລຳດັບບູລິມະສິດຂ້າງເທິງ ມັນກໍຍັງຮຽກຮ້ອງໃຫ້ມີການກຳນົດການປັບປຸງໃນໄລຍະຍາວເຊັ່ນກັນ. ສິ່ງທີ່ສຳຄັນທີ່ສຸດ ແມ່ນການປັບປຸງການປະສົມປະສານການຄ້າ ແລະ ການລົງທຶນ ເພື່ອຫລີກລ່ຽງການເອື່ອຍອີງບາງຄູ່ຄ້າ/ລົງທຶນ ຫລື ຂະແໜງການ.

**ການກະຈາຍດ້ານການຄ້າ**

ດ້ານການຄ້າ, ປະເທດລາວອາດຈະຊອກວິທີທາງໃນການຮັດແໜ້ນການພົວພັນການຄ້າກັບ ອິນເດຍ ແລະ ອິດສະຕາລີ ແລະ ຊອກຫາກາລະໂອກາດໃນດ້ານອາຫານ, ເຄື່ອງນຸ່ງຫົ່ມ ແລະ ຂະແໜງໄຟຟ້າ.

- ການຄ້າກັບອິນເດຍ, ໃນຂະນະທີ່ມູນຄ່າການຄ້າໃນປີ 2016 ບັນລຸ 100,8 ລ້ານໂດລາ ເພີ່ມຂຶ້ນ 110,9% ທຽບໃສ່ 2 ປີຜ່ານມາ, ການປະກອບສ່ວນໃນການເພີ່ມຂຶ້ນຂອງການສົ່ງອອກໄປຍັງອິນເດຍ ປະກອບມີຊັບພະຍາກອນທຳມະຊາດ ເຊັ່ນ ຫີນ ແລະ ໂລຫະມີຄ່າເຄິ່ງສຳເລັດຮູບ ຊຶ່ງຄາດວ່າໄດ້ມາຈາກບໍ່ແຮ່.

- ເຖິງວ່າການຄ້າກັບອິດສະຕາລີ ໄດ້ມີການຫລຸດລົງນັບແຕ່ປີ 2014, ແຕ່ກໍຍັງຮັກສາຢູ່ໃນລະດັບ 10 ຄູ່ຄ້າຫລັກຂອງປະເທດລາວ. ໂອກາດທີ່ຈະຟື້ນຟູກິດຈະການດ້ານການຄ້າກັບອິດສະຕາລີ ອາດຈະຊອກຊ່ອງທາງໃນຂົງເຂດທີ່ບໍ່ແມ່ນຊັບພະຍາກອນທຳມະຊາດ. ອີງຕາມຂໍ້ສະເໜີຂອງສະພາການຄ້າອິດສະຕາລີປະຈຳລາວ, ນັກລົງທຶນອິດສະຕາລີ ໄດ້ປຸ່ງນໄປເປັນການສະໜອງການບໍລິການພັດທະນາແບບຍືນຍົງ ລວມເອົາທັງຂະແໜງຊັບພະຍາກອນທຳມະຊາດ ເຊັ່ນ ບໍ່ແຮ່ ແລະ ກະສິກຳ.

ມີແຫລ່ງຂໍ້ມູນຜ່ານເສັ້ນສະແດງການຄ້າຂອງລາວວ່າ ການສົ່ງອອກໄປຍັງປະເທດຄູ່ຄ້າຫລັກຍັງປີ່ນອ້ອມຜະລິດຕະພັນຊັບພະຍາກອນທຳມະຊາດເປັນສ່ວນໃຫຍ່ ເຊັ່ນ ແຮ່ທາດ ແລະ ໄຟຟ້າ. ການສົ່ງອອກໄຟຟ້າ ກວມເອົາ 23% ຂອງມູນຄ່າສົ່ງອອກໃນປີ 2017 ເມື່ອທຽບກັບຕົວເລກກ່ອນໜ້ານີ້ໃນປີ 2010 ມີພຽງແຕ່ 13%. ໃນຂະນະທີ່ແຫລ່ງຊັບພະຍາກອນທຳມະຊາດມີຢ່າງອຸດົມສົມບູນໃນປະເທດລາວ, ແຕ່ການເພິ່ງພາການສົ່ງອອກແຮ່ທາດເປັນຫລັກ ບໍ່ແມ່ນການພັດທະນາທີ່ຍືນຍົງ. ແນວໂນ້ມຂອງຂະ ແໜງການຄ້າທີ່ຈະຊ່ວຍໃນຄວາມຫລາກຫລາຍດ້ານເສດຖະກິດ ມີ:

- ອາຫານ: ສປປ ລາວ ສົ່ງອອກນັບຕັ້ງແຕ່ໝາກໄດ້ກິນໝາກ, ຜັກ, ໝາກຖົ່ວ, ເຄື່ອງດື່ມ ແລະ ເຫລົ້າ, ກາເຟ ແລະ ຊາປຸງແຕ່ງ. ໃນປີ 2017, ຍອດມູນຄ່າລວມຂອງຜະລິດຕະພັນເຫລົ່ານີ້ ກວມເອົາ 30% ຂອງມູນຄ່າການຄ້າດ້ານຜະລິດຕະພັນສິນຄ້າກະສິກຳ ເພີ່ມຂຶ້ນຢ່າງຕໍ່ເນື່ອງນັບແຕ່ປີ 2012. ຈີນ, ໄທ ແລະ ຫວຽດນາມ ຍັງຄົງຮັກສາເປັນປະເທດທີ່ນຳເຂົ້າຜະລິດຕະພັນອາຫານອັນດັບຕົ້ນໆຈາກປະເທດລາວຕະຫລອດຫລາຍປີຜ່ານມາ. ຈີນ ແມ່ນປາຍທາງອັນດັບຕົ້ນສຳລັບໝາກໄມ້ກິນໝາກ ແລະ ໝາກຖົ່ວ, ໃນຂະນະທີ່ ໄທ ແມ່ນປາຍທາງອັນດັບຕົ້ນສຳລັບຜັກປອດສານພິດ ແລະ ຜັກກິນຮາກ. ການສົ່ງອອກຂອງປະເທດລາວ ລວມມີ ເຄື່ອງດື່ມ ແລະ ເຫລົ້າ ເພີ່ມຂຶ້ນໃນຊ່ວງ 3 ປີຜ່ານມາ ສ່ວນໃຫຍ່ສົ່ງອອກໄປຫວຽດນາມ.

**ກໍລະນີສຶກສາ: ການສົ່ງອອກກາເຟຂອງ ສປປ ລາວ**

**ກາເຟ ແມ່ນພືດເສດຖະກິດທີ່ເກົ່າແກ່ ແລະ ນໍາໜ້າໃນການສົ່ງອອກ ຊຶ່ງມີມູນຄ່າສົ່ງອອກປະມານ 74 ລ້ານໂດລາ (ໃນ 6 ເດືອນຕົ້ນປີ 2017) ແລະ ຄ່ອຍໆເປັນທີ່ຍອມຮັບໃນຕະຫລາດສະເພາະຂອງໂລກ. ເພື່ອບັນລຸຜົນສໍາເລັດຂອງການເຕີບໂຕການສົ່ງອອກກາເຟໃນຕໍ່ໜ້າ, ການເພີ່ມການລົງທຶນ ແມ່ນປັດໃຈສໍາຄັນທີ່ຈະເພີ່ມກໍາລັງການຜະລິດທີ່ມີຢູ່, ໂຄງລ່າງພື້ນຖານ ແລະ ເທັກໂນໂລຍີ. ການອັດສີດທຶນຮອນຈາກນັກລົງທຶນພາຍໃນ ແລະ ການລົງທຶນໂດຍກົງຂອງຕ່າງປະເທດ ຈະບໍ່ພຽງແຕ່ສົ່ງເສີມການພັດທະນາຂະແໜງກາເຟ ແຕ່ຍັງຈະຊ່ວຍການເຂົ້າເຖິງຕະຫລາດຕ່າງປະເທດຫລາຍຂຶ້ນ.**

- **ເຄື່ອງນຸ່ງຫົ່ມ ແລະ ອຸປະກອນເສື້ອຜ້າ:** ສິນຄ້າເຫລົ່ານີ້ ມີທ່າແຮງທີ່ຈະຊ່ວຍຍົກມູນຄ່າຕ່ອງໂສ້ ແລະ ການສ້າງວຽກເຮັດງານທໍາຂອງປະເທດລາວຂຶ້ນ. ຜະລິດຕະພັນເສື້ອຜ້າຂອງປະເທດລາວ ແມ່ນມີຄວາມຕ້ອງການຈາກຕະຫລາດຢູໂຣບ[1], ເຢຍລະມັນຊຶ່ງແມ່ນປາຍທາງອັນດັບຕົ້ນ, ຖັດມາແມ່ນສະຫະຣາດຊະອານາຈັກ, ອາຣັບອີມີເຣດ ແລະ ສະວີເດັນ. ລາວ ຍັງຈະເຮັດໄດ້ດີຕື່ມອີກ ເພື່ອຂະຫຍາຍສັນຍາການຄ້າສອງຝ່າຍກັບຢູໂຣບ ແລະ ອະນຸຍາດໃຫ້ຜະລິດຕະພັນລາວ ໂດຍລວມແມ່ນແຜ່ນແພ ແລະ ເສື້ອຜ້າ ສາມາດສົ່ງອອກໄປທົ່ວປະເທດສະມາຊິກຢູໂຣບ.

- **ໄຟຟ້າ (ເຄື່ອງກົນຈັກ ແລະ ອຸປະກອນ):** ນັບແຕ່ປີ 2014, ປະເທດລາວ ຍັງສາມາດເດີນຕາມແນວໂນ້ມການເພີ່ມຂຶ້ນຂອງການສົ່ງອອໄຟຟ້າ (ເຄື່ອງກົນຈັກ ແລະ ອຸປະກອນ) ໄປຍັງປະເທດໄທ. ຜົນດັ່ງກ່າວນີ້ເກີດຈາກການຍ້າຍຖານການຜະລິດຂອງຍີ່ປຸ່ນອອກຈາກປະເທດຈີນ ເນື່ອງຈາກມີຄ່າແຮງງານທີ່ເພີ່ມຂຶ້ນ ແລະ ເນື່ອງຈາກໄພນໍ້າຖ້ວມຢູ່ປະເທດໄທໃນປີ 2011 ແລະ ຄວາມວຸ້ນວາຍທາງການເມືອງ.

[1] ຜະລິດຕະພັນເສື້ອຜ້າປະເທດລາວ ມີຄວາມຕ້ອງການຈາກຕະຫລາດຢູໂຣບ, ແຫລ່ງຂໍ້ມູນແຫ່ງຊາດ: "http://www.nationmultimedia.com/news/business/aec/30313117"

*ການກະຈາຍດ້ານການລົງທຶນ*

ນອກຈາກ ຈີນ ແລະ ໄທ, ລາວ ສາມາດພິຈາລະນາຊຸກຍູ້ການລົງທຶນຈາກນັກລົງທຶນ 10 ປະເທດອັນດັບຕົ້ນ. ໃນບັນດາປະເທດດັ່ງກ່າວ, ສ ເກົາຫລີ ໄດ້ຖືກບັນທຶກທີ່ມີການລົງທຶນເພີ່ມຂຶ້ນຢ່າງວ່ອງໄວໃນຫລາຍປີຜ່ານມານີ້, ສະເລັ່ຍ 217% ຕໍ່ປີ ບັນລຸໄດ້ 80 ລ້ານໂດລາໃນປີ 2016.







ແຫລ່ງ: ຖານຂໍ້ມູນແຫ່ງລັດ ອາຊຽນ

ສໍາລັບການກະຈາຍຂະແໜງລົງທຶນທີ່ນອກເໜືອຈາກອຸດສາຫະກໍາຊັບພະຍາກອນທໍາມະຊາດ, ຂະແໜງທີ່ມີທ່າແຮງທີ່ລະບຸຈາກສັດສ່ວນທີ່ໄດ້ຮັບຂອງການລົງທຶນຕ່າງປະເທດ ລວມມີ ການບໍລິການ (11%), ທັດຖະກໍາ (8%), ໂຮງແຮມ ແລະ ຮ້ານອາຫານ (4%), ກໍ່ສ້າງ (4%), ທະນາຄານ ແລະ ການຄ້າ (3%), ແລະ ໂທລະຄົມະນາຄົມ (3%). ຂະແໜງເຫລົ່ານີ້ ເຮັດໜ້າທີ່ເປັນແກນຫລັກຂອງອຸດສາຫະກ□າແບບດັ່ງເດີມ ແລະ ເປັນອຸດສາຫະກ□ານໍາໜ້າ ທີ່ຈະປະກອບສ່ວນໃນການຍົກລະດັບຕ່ອງໂສ້ມູນຄ່າຂອງລາວ.

*ການຂະຫຍາຍເຂດເສດຖະກິດພິເສດ ເພື່ອຄວາຫລາກຫລາຍ*

ການສົ່ງເສີມການລົງທຶນໃນເຂດເສດຖະກິດພິເສດ ສາມາດເລັ່ງການພັດທະນາ ແລະ ການກະຈາຍອຸດສາຫະກໍາ. ສປປ ລາວ ສາມາດໃຊ້ປະໂຫຍດຂໍ້ດີຂອງເຂດເສດຖະກິດພິເສດ ເພື່ອດຶງດູດການລົງເຂົ້າໄປໃນເຂດ. ຂໍ້ທີນຶ່ງ, ເປັນປະເທດເຊື່ອມຈອດ ແລະ ມີຊາຍແດນຕິດກັບ ຈີນ, ໄທ, ຫວຽດນມ ແລະ ກໍາປູເຈຍ ທີ່ສາມາດດຶງດູດທຸລະກິດທີ່ໄດ້ດໍາເນີນທຸລະກິດຢູ່ໃນບັນດາປະເທດເຫລົ່ານີ້ແລ້ວ ຫລື ສົ່ງອອກໄປຍັງຕະຫລາດປະເທດເຫລົ່ານີ້ ແລະ

ຕ້ອງການທີ່ຈະກໍ່ຕັ້ງການຜະລິດທີ່ມີຕົ້ນທຶນຕໍ່າທີ່ສາມາດເຂົ້າເຖິງສະຖານທີ່ໃນຂົງເຂດພາກພື້ນ. ຕົວແບບ ເຊັ່ນ ໄທ + 1[2] ຕ່ອງໂສ້ການສະໜອງ ຖືເປັນບ່ອນອີງຂອງຕົວແບບນີ້.

ຂໍ້ທີສອງ, ພະນັກງານສົ່ງເສີມການລົງທຶນ ຄວນຈະບອກວ່າ ເປັນຫຍັງຈຶ່ງຕ້ອງລົງທຶນໃນເຂດເສດຖະກິດພິເສດ ມີຂໍ້ດີ ແລະ ຄວາມແຕກຕ່າງ ແລະ ຄວາມຄ້າຍຄືງ ລະຫວ່າງເຂດດ້ວຍກັນໃນທາງທີ່ເທົ່າທຽມ ແລະ ເປັນມິດກັບທຸລະກິດ. ການສົ່ງເສີມປະເພດນີ້ ຄວນໄປໄກກວ່າການສະເໜີແຮງຈູງໃຈທາງດ້ານການເງິນ ເພື່ອເນັ້ນການສະໜັບສະໜູນໂຄງລ່າງພື້ນຖານ, ການເຂົ້າເຖິງຜູ້ສະໜອງ ແລະ ເຊື່ອມຕໍ່ກັບຕະຫລາດທີ່ມີຄວາມໄດ້ປຽບປຽບທຽບ ແລະ ເປັນຈຸດຕັດສິນທີ່ສໍາຄັນສໍາລັບນັກລົງທຶນ. ການເຜີຍແຜ່ ຄວນມີເປົ້າໝາຍນັກລົງທຶນ ໂດຍອີງໃສ່ບູລິມະສິດດ້ານເສດຖະກິດ ແລະ ການພັດທະນາຂະແໜງການ ແລະ ສອດຄ່ອງກັບການສະໜັບສະໜູນຄວາມຫລາກຫລາຍຂອງການຄ້າ ແລະ ການລົງທຶນ.

ຂໍ້ທີສາມ, ປະສົບຜົນສໍາເລັດໃນການຂະຫຍາຍ ໂດຍສະເພາະສະຫວັນເຊໂນ ເຂດ C ຫລື ນິຄົມສະຫວັນ ຊຶ່ງມີ (1) ຫ້ອງການບໍລິການປະຕູດຽວທີ່ມີປະສິດພາບ ສາມາດລັດຂັ້ນຕອນທາງລັດຖະການ; (2) ໃກ້ກັບເຂດບໍລິການໂລຈີສຕິກທີ່ເປັນທ່າບົກແຫ່ງດຽວຂອງປະເທດທີ່ຢູ່ດ້ານໜ້າ; ແລະ (3) ມີຄວາມເພິ່ງພໍໃຈຂອງນັກລົງທຶນ (ລວມທັງຂະແໜງທີ່ເພີ່ມມູນຄ່າສູງ) ທີ່ມາລົງທຶນໃນເຂດທີ່ເປັນຕົວແທນຂອງເຂດເສດຖະກິດພິເສດ. ກົມສົ່ງເສີມການລົງທຶນ ແລະ ຫ້ອງການຄຸ້ມຄອງເຂດເສດຖະກິດພິເສດ ຄວນມີຍຸດທະສາດໃນເຜີຍແຜ່ຜົນສໍາເລັດຂອງກໍລະນີດັ່ງກ່າວ ເພື່ອເປັນຈຸດດຶງດູດສໍາລັບນັກລົງທຶນທີ່ມີທ່າແຮງ.

ຂໍ້ສຸດທ້າຍ, ເພື່ອການແຂ່ງຂັນທີ່ແທ້ຈິງຂອງ ສປປ ລາວ ຄວາມສອດຄ່ອງຂອງກິດຈະການສົ່ງເສີມການລົງທຶນກັບຍຸດທະສາດ ແລະ ບູລິມະສິດ ຕ້ອງມີການສົມທົບກັນ. ສະນັ້ນ, ຂະແໜງການລົງທຶນ ແມ່ນປັດໃຈສໍາຄັນໃນການກ້າວເດີນດ້ານວຽກງານທີ່ຈະຫຍັບຂຶ້ນໃນຕ່ອງໂສ້ມູນຄ່າ ແລະ ການນໍາໃຊ້ເຂດເສດຖະກິດພິເສດ ເພື່ອການກະຈາຍການສົ່ງອອກ. ໃນທາງກັບກັນ, ການລະບຸເປົ້າໝາຍດ້ານຍຸດທະສາດໃນເຂດເສດຖະກິດພິເສດ ຈະຊ່ວຍສົ່ງເສີມການຄ້າກັບສາກົນ, ມີວຽກເຮັດງານທໍາ ແລະ ສ້າງການເຊື່ອມໂຍງຍ້ອນກັບທີ່ມີຄວາມໝາຍໄຫລເຂົ້າສູ່ເສດຖະກິດລາວ.

## F) ລົງທຶນໃນການສ້າງຂີດຄວາມສາມາດ

ນະໂຍບາຍສົ່ງເສີມການລົງທຶນຂອງລັດຖະບານລາວ ແມ່ນພະນັກງານວິຊາການເປັນຜູ້ຮັບຜິດຊອບ ແລະ ເປັນຜູ້ທີ່ໃຫ້ບໍລິການເຊິ່ງໜ້າໃນການລົງທຶນ, ລົງທຶນໃນຄວາມອາດສາມາດຂອງພວກເຂົາຕໍ່ກັບຄວາມເຂົ້າໃຈດ້ານນະໂຍບາຍ, ການໃຫ້ຄ□າແນະນ□າ ແລະ ການຜັນຂະຫຍາຍນະໂຍບາຍທີ່ຕິດພັນ ຖືເປັນປັດໃຈສ□າຄັນ. ເລີ່ມຈາກຂັ້ນ

[2] ບໍລິສັດທີ່ດໍາເນີນທຸລະກິດອຸດສາຫະກໍາໃນປະເທດໄທ ສາມາດຂະຫຍາຍຕ່ອງໂສ້ການສະໜອງໂດຍການສົ່ງອາໄຫລ່ຂອງຜະລິດຕະພັນໄປຜະລິດຢູ່ປະເທດເພື່ອນບ້ານໄດ້.

ພື້ນຖານ, ລັດຖະບານລາວ ສາມາດພິຈາລະນາການເປີດຊຸດຝຶກອົບຮົມ ເພື່ອການພັດທະນາທັກສະລະຫວ່າງບັນດາພະແນກຂອງແຂວງດ້ວຍກັນ, ຜູ້ຕາງໜ້າຈາກສະຖານທູດລາວ, ພະນັກງານຫ້ອງການບໍລິການປະຕູດຽວ ແລະ ພະນັກງານກົມສົ່ງເສີມການລົງທຶນ ເພື່ອໂຄສະນາ ແລະ ຍົກບົດບາດລາວເປັນຕະຫລາດທີ່ໜ້າສົນໃຈສໍາລັບນັກລົງທຶນ. ອາດໃຊ້ວິທີການຫລາຍຮູບແບບ ລວມມີ (1) ການຕະຫລາດ ແລະ ສື່ສານຢ່າງມີປະສິດທິຜົນ; (2) ການເຂົ້າມາຂອງນັກລົງທຶນທີ່ຢູ່ໃນເປົ້າໝາຍ; (3) ການຄຸ້ມຄອງບັນຊີ; ແລະ (4) ການບໍລິການລູກຄ້າ.

## *<u>ແຜນວາດການສ້າງຂີດຄວາມສາມາດ ເພື່ອກະຕຸ້ນການລົງທຶນ</u>*

<u>ຂໍ້ທີນຶ່ງ,</u> ການຕະຫລາດທີ່ມີສ່ວນຮ່ວມຂອງການສື່ສານຢ່າງມີປະສິດທິຜົນຂອງຍີ່ຫໍ້ລົງທຶນລາວ ເນັ້ນໃສ່ການແຂ່ງຂັນທີ່ໄດ້ປຽບຂອງປະເທດ ແລະ ຈຸດຂາຍທີ່ເປັນເອກະສານໃຫ້ກັບນັກລົງທຶນຜ່ານຂໍ້ຄວາມທີ່ມີເປົ້າໝາຍ, ຂະຫຍາຍການເຂົ້າເຖິງຂໍ້ຄວາມໂດຍການເກັບກ່ຽວຈາກສື່ສັງຄົມອອນລາຍ, ກິດຈະກໍາໂຄສະນາ, ການຂັບເຄື່ອນຜູ້ເຂົ້າຊົມແວັບໄຊລົງທຶນລາວ ແລະ ການຕະຫລາດທີ່ໃຫ້ລູກຄ້າເຂົ້າມາມີສ່ວນຮ່ວມ ລວມທັງການພັດທະນາເນື້ອຫາ ແລະ ຫລັກຄໍ້າປະກັນທີ່ນັກລົງທຶນສົນໃຈ.

<u>ຂໍ້ຕໍ່ມາ,</u> ວາລະກ່ຽວກັບການເຂົ້າມາຂອງນັກລົງທຶນ ຄວນແນະນໍາການຕັ້ງເປົ້າໝາຍ (ຕົວຢ່າງ, ລາຍຮັບ, ບູລິມະສິດອຸດສາຫະກໍາ ຫລື ຄວາມຍືນຍົງ), ການລວມກັນ ເພື່ອເຂົ້າກັບເປົ້າໝາຍ; ຝຶກອົບຮົມຜູ້ເຂົ້າຮ່ວມ ເພື່ອວັດແທກຂອດການຂາຍ ແລະ ຂໍ້ສະເໜີທີ່ມີຄຸນຄ່າ; ລວມທັງການຂາຍເປັນຊຸດ (ຕົວຢ່າງ, ການປ້ອນຕົ້ນທຶນທີ່ໄດ້ປຽບ, ແຮງຈູງໃຈ, ຄູ່ຄ້າຫລັກ ແລະ ຕະຫລາດ) ທີ່ເໝາະຕໍ່ກັບບູລິມະສິດນັກລົງທຶນ.

<u>ຂໍ້ທີສາມ,</u> ການແນະນໍາກ່ຽວກັບການຄຸ້ມຄອງບັນຊີ ຄວນກວມເອົາເຖິງຈະຈັດວາງກົມສົ່ງເສີມການລົງທຶນ ກໍ່ຕັ້ງຈຸດຕິດຕໍ່ສະເພາະພາຍໃນກົມສົ່ງເສີມການລົງທຶນຕໍ່ຂໍ້ສົງໃສ ແລະ ຄໍາຖາມຂອງນັກລົງທຶນ; ການວາງບັນຊີ ແລະ



ຮັບປະກັນວ່ານັກລົງທຶນໄດ້ຮັບການແນະນຳແຕ່ກົກຈົນເຖິງປາຍ; ທັກສະການສ້າງຄວາມສຳພັນ; ແລະ ການສ້າງກົນລະຍຸດ ເພື່ອການເຕີບໂຕດ້ານການລົງທຶນ.

<u>ຂໍ້ສຸດທ້າຍ,</u> ການຝຶກອົບຮົມການບໍລິການລູກຄ້າ ຄວນມີການກະກຽມໂດຍການມີສ່ວນຮ່ວມຂອງແຕ່ລະຝ່າຍ ເພື່ອຈັດການກັບການຮ້ອງຮຽນ, ການແກ້ໄຂບັນຫາ, ການດູແລ ແລະ ການຊ່ວຍເຫລືອນັກລົງທຶນ ແລະ ສະເໜີນະໂຍບາຍ ແລະ ລະບຽບການທີ່ຕິດພັນ.

ການສ້າງຂີດຄວາມສາມາດ ສາມາດເຮັດໄດ້ຕະຫລອດຜ່ານຊຸດແນະນຳຝຶກອົບຮົມ 2 ຊຸດ. ໃນຊຸດທຳອິດ, ພື້ນຖານການສົ່ງເສີມການລົງທຶນ ຄວນສຸມໃສ່ຂະໜາດໂຄງລ່າງທີ່ຈຳເປັນຂອງການລົງທຶນ. ໃນນີ້ ລວມມີ (1) ປະສິດທິພາບຂອງອົງກອນ; ແລະ (2) ການຄຸ້ມຄອງບັນຊີ ແລະ ຫລັງບໍລິການ. ກ່ອນອື່ນຕ້ອງຮັບປະກັນວ່າ ໂຄງລ່າງທີ່ເຂັ້ມແຂງທີ່ຈັດວາງໃຫ້ອົງກອນສົ່ງເສີມການລົງທຶນ ເພື່ອໃຫ້ປະສົບຜົນສຳເລັດນັ້ນ ແມ່ນການຈັດວາງກົງຈັກ ແລະ ພະນັກງານໃຫ້ເໝາະສົມ. ອັນທີສອງ ແມ່ນການມີລະບົບທີ່ມີປະສິດທິພາບໃນອົງກອນ ຊຶ່ງເຮັດໜ້າທີ່ບໍລິຫານທີ່ດີໃນການຝຶກອົບຮົມຄວາມສາມາດຂອງພະນັກງານນັບຕັ້ງແຕ່ໄລຍະການຕອບຂໍ້ສົງໃສຂອງນັກລົງທຶນທີ່ມີທ່າແຮງຕະຫລອດເຖິງການຂະຫຍາຍການລົງທຶນ.

ໃນຊຸດທີສອງ, ການປັບປຸງທັກສະ ແມ່ນແນໃສ່ສ້າງຄວາມສາມາດຂອງພະນັກງານສົ່ງເສີມການລົງທຶນ ເພື່ອດຶງດູດການລົງທຶນທີ່ເພີ່ມຂຶ້ນ. ຊຸດທີສອງນີ້ ຍັງຈະຊ່ວຍໃຫ້ພະນັກງານມີຍຸດທະວິທີຕື່ມໃນຕົກລົງສັນຍາ. ຫລັກສູດທີ່ຈະຖ່າຍທອດ ເນັ້ນໃສ່ (1) ການຕະຫລາດ ແລະ ການສື່ສານ; ແລະ (2) ການເຂົ້າມາຂອງການລົງທຶນ. ໃນເມື່ອກ່ອນ , ພະນັກງານຈະຮຽນຮູ້ການຈະເປັນຜູ້ໂຄສະນາປະເທດລາວທີ່ດີໃນການເປັນປາຍທາງແຫ່ງການລົງທຶນ ຜ່ານຫລາຍເວທີ ລວມທັງການພົບປະໜ້າຕໍ່ໜ້າ, ການນຳໃຊ້ສື່ອອນລາຍ ແລະ ການພັດທະນາແຜ່ນພັບ. ຕໍ່ມາ, ພະນັກງານ ຈະຮຽນຮູ້ການໃຊ້ຍຸດທະວິທີກັບນັກລົງທຶນທີ່ເປັນເປົ້າໝາຍ, ເຈລະຈາຕໍ່ລອງ ເພື່ອພວກເຂົາຈະສາມາດໃຊ້ໂອກາດໃຫ້ໄດ້ຫລາຍທີ່ສຸດ.

ໃນສະພາບທີ່ປະເທດລາວ ຕັ້ງເປົ້າເລັ່ງໄປຂ້າງໜ້າ, ເປົ້າໝາຍການສ້າງຂີດຄວາມສາມາດ ອາດຈະຂະຫຍາຍໄປເຖິງການຄຸ້ມຄອງການເງິນມະຫາພາກ, ການຮ່ວມມືພາກລັດ-ພາກເອກະຊົນ, ການພັດທະນາແບບຍືນຍົງ ແລະ ບູລິມະສິດອື່ນໆ.

### ອະນາຄົດໃນຕໍ່ໜ້າຂອງປະເທດລາວ: ແຜນອາດຜົນສຳເລັດແມ່ນຫຍັງ?

ໃນການວາງແຜນໃນຕໍ່ໜ້າເພື່ອບັນລຸເປົ້າໝາຍວິໄສທັດ 2030 ໃນການເພີ່ມລາຍຮັບຕໍ່ຫົວຄົນເປັນສອງເທົ່າ, ປະເທດລາວ ໄດ້ພິຈາລະນາຢ່າງຮອບຄອບໃນການວາງໝາກຜົນຂອງແຜນ 5 ປີ ແລະ 10 ປີ ຜ່ານແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ 8 (2016-2020) ແລະ ຍຸດທະສາດພັດທະນາເສດຖະກິດ-ສັງຄົມ 10 ປີ

(2016-202) ຕາມລ□າດັບ. ດ້ວຍແຜນການອັນລະອຽດເຫລົ່ານີ້ ແລະ ໂຄງລ່າງພື້ນຖານທີ່ເຂັ້ມແຂງທີ່ມີ, ສປປ ລາວ ແມ່ນພ້ອມທີ່ຈະຫັນແຜນເຫລົ່ານີ້ ມາເປັນການຈັດຕັ້ງປະຕິບັດໂດຍມີການນໍາພາຂອງພັກ, ພະນັກງານ ແລະ ພາກເອກະຊົນ.

ເນື່ອງຈາກການລົງທຶນພາຍໃນ ແລະ ຕ່າງປະເທດ ເປັນປັດໃຈສໍາຄັນໃນການຟື້ນຟູເສດຖະກິດ ແລະ ການກ້າວກະໂດດຂອງການເຕີບໂຕ, ປະເທດລາວ ຕ້ອງສວຍໃຊ້ສະພາບການປ່ຽນແປງໃນປະຈຸບັນທີ່ໄດ້ເປີດໃນຂະແໜງການລົງທຶນ ເພື່ອຮັກສາຜົນປະໂຫຍດ ແລະ ຄວາມເຊື່ອໝັ້ນຂອງພາກທຸລະກິດ. ການຈັດຕັ້ງປະຕິບັດທີ່ເປັນຮູບປະທໍາຕ້ອງໄດ້ຮັບການປັບປຸງຢ່າງຮີບດ່ວນໃນການຈັດລໍາດັບຄວາມສະດວກງ່າຍໃນການດໍາເນີນທຸລກິດ; ສົ່ງເສີມຄວາມສອດຄ່ອງດ້ານນະໂຍບາຍໃນຂອບເຂດທົ່ວປະເທດ; ສະແດງໃຫ້ເຫັນເຖິງຄວາມຈິງໃຈໃນການຮັບເອົາຂໍ້ສະເໜີຂອງພາກເອກະຊົນເຂົ້າໃນການສ້າງນະໂຍບາຍ; ແລະ ສ້າງຄວາມເຂັ້ມແຂງໃນກົດ ໝາຍສົ່ງເສີມການລົງທຶນສະບັບປັບປຸງ. ການວາງແຜນໄລຍະຍາວຂອງວິໄສທັດ 2030 ຕ້ອງເດີນຕາມທິດຄວາມຫລາກຫລາຍຂອງການປະສົມປະສານດ້ານການຄ້າ ແລະ ການລົງທຶນ ໂດຍສະເພາະນອກຈາກປະເທດຈີນ ທີ່ກວມເອົາສ່ວນໃຫຍ່ຂອງເສດຖະກິດປະເທດລາວ ຕ້ອງຮັບປະກັນວ່າ ເສດຖະກິດໂດຍລວມຍັງຄົງມີຄວາມຍືດຢຸ່ນ ແລະ ເຂັ້ມແຂງ; ແລະ ຄວາມພະຍາຍາມຢ່າງຈິງຈັງ ຕ້ອງສຸມໃສ່ການສ້າງຂີດຄວາມສາມາດ ເພື່ອຮັບປະກັບວ່າ ອົງກອນ ແລະ ພະນັກງານ ແມ່ນຈັດວາງທີ່ຖືກຕ້ອງກັບຈຸດປະສົງ ແລະ ອື່ນໆ. ໃນຂະນະດຽວກັນ, ຄວາມຫຍຸ້ງຍາກໃນໜ້າວຽກທີ່ຖືກມອບໝາຍ ຍິ່ງມີຄວາມສໍາຄັນທີ່ຈະຕ້ອງຮັກສາຄວາມເຂັ້ມງວດ ແລະ ຄວາມຍືດຢຸ່ນ; ໃນສ່ວນທີ່ມີການພົວພັນກັນ, ບາງຄັ້ງອາດມີແນວໂນ້ມທີ່ຈະຮັບຮອງເອົາເນື້ອໃນຈິດໃຈຂອງກົດໝາຍ ດີກວ່າຈະລໍຖ້າການຂຽນເປັນກົດໝາຍ.

ເມື່ອເບິ່ງໄປຂ້າງໜ້າ, ປະເທດລາວ ຍັງຕ້ອງປ່ຽນທັດສະນະທີ່ເນັ້ນໃສ່ແຕ່ພາຍໃນປະເທດໄປສູ່ການເຊື່ອມຈອດກັບລະບົບນິເວດທີ່ກວ້າງຂຶ້ນຂອງພາກພື້ນ, ສວຍໃຊ້ກາລະໂອກາດໃນການລິເລີ່ມເທັກໂນໂລຍີ, ດີຈີຕໍ, ນະວັດຕະກໍາ ແລະ ຜູ້ປະກອບການ ຈະສາມາດເຮັດໃຫ້ປະເທດລາວ ກ້າວກະໂດດໄປສູ່ເສດຖະກິດທີ່ທັນສະໄໝ. ແຕ່ກໍຕ້ອງເບິ່ງປະເທດອ້ອມຂ້າງເປັນພື້ນຖານ ເພື່ອຈະສວຍໃຊ້ເອກະລັກອັນສະເພາະ ແລະ ການປະຕິບັດທີ່ດີເຂົ້າມານໍາໃຊ້. ເນື່ອງຈາກພາກພື້ນໄດ້ສືບຕໍ່ການເຊື່ອມໂຍງເສດຖະກິດຢ່າງຕໍ່ເນື່ອງ, ສະນັ້ນ ປະເທດລາວ ບໍ່ສາມາດທີ່ຈະຢຸດການພັດທະນາຕົນເອງ, ແຕ່ຍັງຕ້ອງໄດ້ຄໍານຶງເຖິງກາລະໂອກາດຂອງຕົ້ນທຶນຖ້າບໍ່ມີການປ່ຽນແປງ ໃນເມື່ອປະເທດອ້ອມຂ້າງ ແລະ ຜູ້ແຂ່ງຂັນຍັງສືບຕໍ່ເດີນໜ້າ.

<u>ແຜນວາດຜົນສຳເລັດ: ວິທີການຮອບດ້ານໃນການດຶງດູດການລົງທຶນ</u>




ໃນແຜນວາດຂອງຜົນສຳເລັດ, ສປປ ລາວ ຄວນຈະກຳນົດການສ້າງຂອບການລົງທຶນທີ່ຍືນຍົງ ໂດຍການຮັບຮອງເອົາວິທີການຮອບດ້ານໃນການດຶງດູດການລົງທຶນ. ວິທີການແບບນີ້ ໄດ້ມີສ່ວນຮ່ວມຂອງລະບົບ ແລະ ການຕິດຕາມໂດຍຜ່ານການຈັດຕັ້ງປະຕິບັດ. ຍ້□າຄືນຂະບວນການທີ່ມີສ່ວນຮ່ວມຂອງການກ□ານົດນະໂຍບາຍ ແລະ ການຈັດຕັ້ງປະຕິບັດ, ການບໍລິການແຕ່ຕົ້ນຈົນເຖິງປາຍ ແລະ ຫລັງບໍລິການ, ແລະ ການແກ້ໄຂບັນຫາ ແລະ ຂໍ້ສະເໜີໃນແວດລ້ອມການດຳເນີນງານ ຈະຮັບປະກັນໄດ້ວ່າ ແວດລ້ອມການລົງທຶນວ່ອງໄວ ແລະ ຕອບສະໜອງຕໍ່ກັບການປ່ຽນແປງຕໍ່ພາຍນອກ ແລະ ຄວາມຕ້ອງການຂອງພາກເອກະຊົນ.

ປະຈຸບັນ, ສປປ ລາວ ແມ່ນຢູ່ໃນບາດກ້າວທີ່ສຳຄັນ ເພື່ອຈະບັນລຸຄວາມປາດຖະໜາຂອງປະເທດຊາດ ແລະ ປະຊາຊົນ. ພື້ນຖານໂຄງລ່າງທີ່ເຂັ້ມແຂງ, ມີຄວາມພ້ອມເພື່ອບັນລຸຈຸດປະສົງ, ແລະ ໄດ້ຮັບການສະໜັບສະໜູນຢ່າງເຂັ້ມແຂງຈາກຄູ່ຮ່ວມໃນພາກພື້ນ ແລະ ສາກົນ, ນຳພາ ສປປ ລາວ ບັນລຸວິໄສທັດ 2030 ທີ່ຄາດຫວັງໄວ້ ໃນອີກບໍ່ດົນນີ້.

. . . . .